волн|ова́ть, -у́ю, -у́ешь, -у́ют *несов.*; **взволн|ова́ть**, -у́ю, -у́ешь, -у́ют *сов.*; *кого* ເຮັດໃຫ້ ຫົນຫວາຍ (ສະທ້ານໃຈ , ຕື່ນເຕັ້ນໃຈ , ກັງວົນ ໃຈ) ; больно́го нельзя́ волнова́ть ຢ່າໃຫ້ຄົນ ເຈັບໃຈເຕັ້ນ ; моя́ телегра́мма взволнова́ла роди́телей ໂທລະເລກຂອງຂ້ອຍເຮັດໃຫ້ພໍ່ແມ່ ຕື່ນເຕັ້ນໃຈ (ສະທ້ານໃຈ) ; вы взволнова́ли всех свои́м сообще́нием ຂ່າວຄາວເຈົ້າເຮັດໃຫ້ທຸກ ຄົນກະວົນກະວາຍ

волн|ова́ться, -у́юсь, -у́ешься, -у́ются *несов.* ກັງວົນໃຈ , ສົນລະວົນໃຈ , ຕື່ນ [ເຕັ້ນ] ໃຈ ; ເປັນຫ່ວງ [ເປັນໄຍ] ; волнова́ться пе́ред экза́менами ຮູ້ສຶກຕື່ນເຕັ້ນໃຈກ່ອນຈະສອບເສັງ



во́лосы

во́лосы, воло́с, волоса́м *мн.* (*ед.* во́лос, -а *м*) ຜົມ , ຂົນ ; све́тлые (седы́е, чёрные) во́лосы ຜົມສີທອງ (ຫງອກ , ດຳ) ; стричь во́лосы ຕັດຜົມ ◇ до седы́х воло́с ຈົນເຖົ້າແລ້ວ

во́л|я, -и (*мн. нет*) *ж* 1 ນ້ຳໃຈ , ຈິດໃຈ , ມານະຈິດ ; си́ла во́ли ກຳລັງໃຈແຮງກ້າ , ພະ ລັງໃຈແຂງ ; воспи́тывать во́лю ຫລໍ່ຫລອມ ຈິດໃຈກ້າແກ່ນ ; у него́ нет во́ли ຜູ້ນັ້ນຂາດ ນ້ຳໃຈ (ມານະຈິດ) 2 ຄວາມມຸ່ງມາດ , ປາດຖະ ຫນາ ; вы́полнить во́лю дру́га ປະຕິບັດຕາມ ເຈດຈຳນົງຂອງຫມູ່ຄູ່ ; сде́лать что́-нибудь про́тив во́ли роди́телей ຝືນຕໍ່ເຈດຈຳນົງ ຂອງພໍ່ແມ່ ◇ дава́ть (дать) во́лю *чему* ປ່ອຍ, ບໍ່ອົດ ; дать во́лю свои́м чу́вствам ປ່ອຍອາລົມ; дать во́лю слеза́м ບໍ່ອົດໄຫ້

вон *частица* [ຢູ່] ພູ້ນ ; вон мой дом ເຮືອນ ເຮົາຢູ່ພູ້ນ ; вон тот челове́к ຄົນນັ້ນຢູ່ພູ້ນ ; вон идёт парохо́д ກຳປັ່ນແລ່ນຢູ່ພູ້ນເດ

вообража́|ть, -ю, -ешь, -ют *несов.*; **вообра|зи́ть**, -жу́, -зи́шь, -зя́т *сов.*; *кого-что* ຄິດ ຝັນ , ໄຝ່ຝັນ , ຄິດເຫັນ

воображе́ни|е, -я (*мн. нет*) *с* ຈິນຕະນາການ, ຄວາມໄຝ່ຝັນ ; тво́рческое воображе́ние писа́теля ຈິນຕະນາການປະດິດແຕ່ງຂອງນັກປະພັນ

вообрази́ть *см.* вообража́ть

вообще́ *нареч.* ເວົ້າລວມ , ທົ່ວໆໄປ ; вообще́ э́то ве́рно ເວົ້າລວມອັນນີ້ແມ່ນຖືກ ; говори́ли о лю́дях вообще́ ເວົ້າລວມທຸກຄົນ ; он вообще́

не жела́ет разгова́ривать ລາວບໍ່ຢາກລົມກັບເລີຍ ; он вообще́ не пришёл ລາວໂລດບໍ່ມາຈັ່ງ

вооружа́|ть, -ю, -ешь, -ют *несов.*; **вооруж|и́ть**, -у́, -и́шь, -а́т *сов.*; *кого-что* ປະກອບ [ອາວຸດ] ; вооружи́ть а́рмию совреме́нной те́хникой ເອົາເຕັກນິກທັນສະໄຫມປະກອບເຂົ້າໃນກອງທັບ

вооруже́ни|е, -я *с* 1 ການປະກອບອາວຸດ ; вооруже́ние а́рмии ການປະກອບອາວຸດເຂົ້າໃນກອງທັບ 2 ອາວຸດ [ຍຸດໂທປະກອນ], ລັດສະຕະອາວຸດ ; ограниче́ние вооруже́ний ການຈຳກັດອາວຸດ

вооружённ|ый, -ая, -ое, -ые ທີ່ປະກອບອາວຸດ ; вооружённое восста́ние ການລຸກຮືຂຶ້ນດ້ວຍອາວຸດ ; вооружённое нападе́ние ການຮຸກຮານດ້ວຍອາວຸດ ; вооружённые си́лы страны́ (госуда́рства) ກຳລັງປະກອບອາວຸດແຫ່ງຊາດ

вооружи́ть *см.* вооружа́ть

во-пе́рвых *вводн. сл.* ທີຫນຶ່ງ, [ປະການທີ] ຫນຶ່ງ ; мы должны́, во-пе́рвых, сходи́ть в музе́й, во-вторы́х, встре́титься с друзья́ми ທຳອິດ ພວກເຮົາຕ້ອງໄປຊົມຫໍພິພິດທະພັນ, ສອງ ຕ້ອງພົບກັບຫມູ່

вопро́с, -а *м* 1 ຄຳຖາມ ; задава́ть (зада́ть) вопро́с ຕັ້ງຄຳຖາມ ; обрати́ться с вопро́сом ຖາມ ; получи́ть отве́т на вопро́с ໄດ້ຮັບຄຳຕອບຕໍ່ຄຳຖາມ ; отве́тить на все вопро́сы преподава́теля ຕອບທຸກຄຳຖາມຂອງຄູສອນ 2 ບັນຫາ, ຂໍ້ ; национа́льный вопро́с ບັນຫາຊົນຊາດ ; изучи́ть вопро́с ຄົ້ນຄ້ວາບັນຫາ ; занима́ться вопро́сом о возникнове́нии жи́зни на Земле́ ຄົ້ນຄ້ວາບັນຫາການກຳເນີດຊີວິດໃນໂລກນີ້

вопроси́тельн|ый, -ая, -ое, -ые ມີລັກສະນະຖາມ ; вопроси́тельный взгляд ສາຍຕາຢ່າງຖາມ ; вопроси́тельный знак [ເຄື່ອງ] ຫມາຍຖາມ ; вопроси́тельное предложе́ние ປະໂຫຍກຖາມ

вор, во́ра (*мн.* во́ры, воро́в) *м* ຂະໂມຍ, ຄົນຂີ້ລັກ

вороб|е́й, -ья́ *м* ນົກຈອກ ; воробьи́ никуда́ не улета́ют зимо́й ຍາມຫນາວນົກຈອກບໍ່ບິນຫນີໄປໃສ



воробе́й

вор|ова́ть, -у́ю, -у́ешь, -у́ют *несов.*, *что* ລັກ ; ворова́ть де́ньги ລັກເງິນ

ворон|а, -ы *ж* ກາ (ນົກ)



воро́на

воро́та, воро́т *мн.* ປະຕູ [ໂຂງ] ; воро́та кре́пости ປະຕູປ້ອມ ; откры́ть (закры́ть) воро́та ໄຂ (ອັດ) ປະຕູ ; подъе́хать к воро́там заво́да ເຂົ້າມາໃກ້ປະຕູໂຮງງານ

воротни́к, воротника́ *м* ຄໍເສື້ອ ; бе́лый (наря́дный, большо́й) воротни́к ຄໍເສື້ອສີຂາວ (ງາມ,

ใหย่) ; пла́тье с воротнико́м (без воротника́) ເສື້ອກະໂປງແບບມີຄໍ (ແບບບໍ່ມີຄໍ) ; пальто́ с меховы́м воротнико́м ເສື້ອກັນຫນາວທີ່ມີຄໍຂົນສັດ ; подня́ть воротни́к пальто́ ຕັ້ງຄໍເສື້ອກັນຫນາວ ; опусти́ть воротни́к плаща́ ປົ້ນຄໍເສື້ອກັນຝົນລົງ



воротни́к

восемна́дцат|ый, -ая, -ое, -ые *числ.* ທີສິບແປດ ; сего́дня восемна́дцатое ма́я ມື້ນີ້ວັນທີສິບແປດເດືອນພຶດສະພາ

восемна́дцат|ь, -и *числ.* ສິບແປດ ; восемна́дцать лет ສິບແປດປີ ; ка́сса рабо́тает с восемна́дцати до двадцати́ часо́в ບ່ອນຂາຍປີ້ໄຂແຕ່ສິບແປດຮອດຊາວໂມງ

во́семь, восьми́ *числ.* ແປດ ; во́семь челове́к ແປດຄົນ ; во́семь рубле́й ແປດລູບ ; до восьми́ часо́в ве́чера ຈົນຮອດແປດໂມງແລງ

во́семьдесят, восьми́десяти *числ.* ແປດສິບ; во́семьдесят рубле́й ແປດສິບລູບ

восемьсо́т, восьмисо́т *числ.* ແປດຮ້ອຍ ; восемьсо́т лет ແປດຮ້ອຍປີ ; в восьмиста́х киломе́трах от Москвы́ ຫ່າງຈາກມົດສະກູແປດຮ້ອຍຫລັກ

воскресе́нь|е, -я *с* ວັນອາທິດ ; в воскресе́нье мы пойдём в музе́й ໃນວັນອາທິດພວກເຮົາຈະໄປຊົມຫໍພິພິດທະພັນ ; по воскресе́ньям студе́нты е́здили за́ город ໃນວັນອາທິດນັກຮຽນມັກໄປນອກເມືອງ

воспале́ни|е, -я *с* ອາການອັກເສບ ; воспале́ние у́ха ອັກເສບຫູ; боле́ть воспале́нием лёгких ເປັນພະຍາດອັກເສບປອດ , ປອດບວມ , ປອດໄຄ່

воспита́ни|е, -я (*мн. нет*) *с* 1 ການສຶກສາອົບຮົມ ; иде́йное воспита́ние молодёжи ການສຶກສາອົບຮົມຊາວຫນຸ່ມທາງດ້ານແນວຄິດ ; роль шко́лы в воспита́нии дете́й ບົດບາດຂອງໂຮງຮຽນໃນການສຶກສາອົບຮົມເດັກນ້ອຍ 2 *чего в ком* ການເຝິກຝົນ , ການຫລໍ່ຫລອມ

воспита́ть *см.* воспи́тывать

воспи́тыва|ть, -ю, -ешь, -ют *несов.*; **воспита́|ть**, -ю, -ешь, -ют *сов.* 1 *кого* [ຫລໍ່] ລ້ຽງ , ຊຸບລ້ຽງ , [ສຶກສາ] ອົບລົມ , ສັ່ງສອນ ; воспи́тывать ребёнка ລ້ຽງ (ສອນ) ເດັກນ້ອຍ ; воспита́ть дете́й ສຶກສາອົບລົມເດັກນ້ອຍ 2 *что в ком* ປູກ , ຊຸບ [ຫລໍ່] , ບຳລຸງ , ເຝິກຝົນ , ຫລໍ່ຫລອມ ;воспи́тывать в де́тях любо́вь к Ро́дине ປູກນ້ຳໃຈຮັກຊາດເຂົ້າເດັກນ້ອຍ , ສຶກສາອົບລົມຄວາມຮັກຊາດໃຫ້ເດັກນ້ອຍ ; воспи́тывать му́жество в солда́тах ເຝິກຝົນ (ບຳລຸງ) ນ້ຳໃຈກ້າຫານໃຫ້ທະຫານ

воспомина́ни|е, -я *с* ການຫວນຄຶດ, ຄວາມຈື່ຈຳ, ຄວາມຊົງຈຳ; воспомина́ние де́тства ການຫວນລະນຶກເຖິງໄວເດັກ; воспомина́ния о про́шлом ການຫວນຄຶດຄືນຫລັງ

восстана́влива|ть, **-ю**, -ешь, -ют *несов.*; **восстанов|и́ть**, -лю́, восстано́в|ишь, -ят *сов.*; *что* ຟື້ນຟູ, ບຸລະນະ, ສ້າງຄືນໃຫມ່, ຈັດຄືນ; восстанови́ть го́род по́сле войны́ ຟື້ນຟູຕົວເມືອງພາຍຫລັງສົງຄາມ; восстанови́ть заво́д ຟື້ນຟູໂຮງງານ, ສ້າງໂຮງງານຄືນໃຫມ່; восстанови́ть ста́рую кре́пость ຟື້ນຟູປ້ອມເກົ່າ

восста́ни|е, -я *с* ການລຸກຮືຂຶ້ນ; Октя́брьское вооружённое восста́ние ການລຸກຮືຂຶ້ນດ້ວຍອາວຸດເດືອນຕຸລາ; подня́ть восста́ние ລຸກຮືຂຶ້ນ, ພາໃຫ້ລຸກຮືຂຶ້ນ

восстанови́ть *см.* восстана́вливать

восстановле́ни|е, -я *с* ການຟື້ນຟູ [ບຸລະນະ]

восто́к, -а (*мн. нет*) *м* ຕາເວັນອອກ, ບູລະພາ, ທິດ (ທາງ) ຕາເວັນອອກ, ພາກຕາເວັນອອກ; ве́тер с восто́ка ລົມທີ່ພັດມາແຕ່ທາງຕາເວັນອອກ; плыть на восто́к ໄປທາງຕາເວັນອອກ; на восто́ке о́бласти дождь ຢູ່ພາກຕາເວັນອອກຂອງແຂວງຝົນຕົກ

восто́рг, -а *м* ຄວາມ [ປິຕິ] ຊົມຊື່ນ, ຄວາມປິຕິຍິນດີ, ຄວາມງຶດງໍ້; с восто́ргом слу́шать му́зыку ຟັງດົນຕີດ້ວຍຄວາມຊົມຊື່ນຍິນດີ; испы́тывать восто́рг ຮູ້ສຶກປິຕິຍິນດີ; прийти́ в восто́рг от пое́здки ການເດີນທາງເຮັດໃຫ້ຮູ້ສຶກປິຕິຍິນດີ; быть в восто́рге от чего́-нибудь ງຶດງໍ້ເຊີນຊື່ນຍິນດີຕໍ່ອັນໃດອັນຫນຶ່ງ

восто́чн|ый, -ая, -ое, -ые ທາງຕາເວັນອອກ; восто́чный ве́тер ລົມທາງຕາເວັນອອກ; восто́чные грани́цы госуда́рства ເຂດແດນທາງຕາເວັນອອກຂອງປະເທດ

востре́бовани|е, -я (*мн. нет*) *с*: до востре́бования ຢູ່ໂຮງສາຍ; письмо́ до востре́бования ຈົດຫມາຍຄອຍຮັບ(ຈົດຫມາຍທີ່ປະໄວ້ກັບໂຮງສາຍ, ຕ້ອງໄປຮັບເອົາເອງ)

восхити́ться *см.* восхища́ться

восхища́|ться, -юсь, -ешься, -ются *несов.*; **восхи|ти́ться**, -щу́сь, -ти́шься, -тя́тся *сов.*; *кем-чем* ຊົມຊື່ນຍິນດີ, ປາບປື້ມໃຈ; восхища́ться стиха́ми (красото́й) ຊົມຊື່ນຍິນດີຕໍ່ກາບກອນ (ຄວາມງາມ)

восхище́ни|е, -я (*мн. нет*) *с* ຄວາມຊົມຊື່ນຍິນດີ, ຄວາມປາບປື້ມໃຈ; вызыва́ть восхище́ние ພາໃຫ້ເກີດຄວາມຊົມຊື່ນຍິນດີ; испы́тывать восхище́ние ຮູ້ສຶກປິຕິຍິນດີ, ຮູ້ສຶກປາບປື້ມໃຈ

восхо́д, -а *м* ການອອກ, ການຂຶ້ນ; восхо́д со́лнца [ດວງ] ຕາເວັນອອກ, [ດວງ] ຕາເວັນຂຶ້ນ; восхо́д луны́ ເດືອນຂຶ້ນ; на восхо́де со́лнца ໃນຍາມຕາເວັນອອກ, ໃນຍາມອາລຸນ

восьмидеся́т|ый, -ая,-ое, -ые *числ.* ທີ່ແປດສິບ

восьмисо́т|ый, -ая, -ое, -ые *числ.* ທີ່ແປດຮ້ອຍ

восьм|о́й, -а́я, -о́е, -ы́е *числ.* ທີ່ແປດ; восьмо́е ма́рта ວັນທີ່ແປດເດືອນມີນາ

вот *частица* ນີ້, ພົ້; вот мой дом ເຮືອນຂ້ອຍຢູ່ພົ້ເດ; вот э́ту кни́гу на́до взять с собо́й ປຶ້ມຫົວນີ້ເດ ຕ້ອງເອົາໄປນຳ; вот на́ши биле́ты ປີ້ຂອງເຮົາຢູ່ພົ້ເດ

впервы́е *нареч.* [ເປັນເທື່ອ]ທຳອິດ; впервы́е прие́хать в столи́цу ມາຢາມນະຄອນຫລວງ [ເປັນເທື່ອ]ທຳອິດ; впервы́е в жи́зни лете́ть на самолёте ຂຶ້ນເຮືອບິນ [ເປັນເທື່ອ]ທຳອິດໃນຊີວິດ; мы впервы́е встре́тились в Москве́ ພວກເຮົາພົບກັນທຳອິດໃນມົດສະກູ

вперёд *нареч.* (*куда?*) ທາງໜ້າ, ກ່ອນໜູ່, ລ່ວງໜ້າ; идти́ (дви́гаться) вперёд ໄປ(ແລ່ນໄປ)ທາງໜ້າ; посмотре́ть вперёд ຫລຽວເບິ່ງທາງໜ້າ; сде́лать шаг вперёд ຍ່າງໄປທາງໜ້າກ້າວໜຶ່ງ

впереди́ *нареч. и предлог с род.* (*где?*) ທາງໜ້າ, ເບື້ອງໜ້າ, ຂ້າງໜ້າ, ກ່ອນໜູ່; впереди́ ви́дны го́ры ເບື້ອງໜ້າເຫັນສາຍພູ; впереди́ кругово́й поворо́т ທາງໜ້າມີທາງລ້ຽວ; он шёл впереди́ ລາວຍ່າງໄປທາງໜ້າ; он шёл впереди́ меня́ ລາວຍ່າງໄປທາງໜ້າຂ້ອຍ

впечатле́ни|е, -я *с* ຄວາມຮູ້ສຶກ, ຄວາມຄິດເຫັນ, ຄວາມປະທັບໃຈ; си́льное впечатле́ние ຄວາມປະທັບໃຈຫລາຍ; быть под впечатле́нием прочи́танной кни́ги ອ່ານປຶ້ມແລ້ວ ຈັບໃຈຂ້ອຍຫລາຍ, ປຶ້ມນີ້ເຮັດໃຫ້ຂ້ອຍຊອບໃຈ; дели́ться впечатле́ниями о пое́здке в Москву́ ເລົ່າຄວາມຮູ້ສຶກກ່ຽວກັບການໄປຢ້ຽມຢາມນະຄອນມົດສະກູ

вполне́ *нареч.* ຢ່າງຄົບຖ້ວນ, ທຸກປະການ, ເຕັມທີ, ພໍແຮງ; я с ва́ми вполне́ согла́сен ຂ້ອຍເຫັນດີນຳເຈົ້າທຸກຢ່າງ (ຢ່າງເຕັມທີ); рабо́та вполне́ удала́сь ວຽກງານສຳເລັດຜົນເປັນຢ່າງດີ

впосле́дствии *нареч.* ຕໍ່ມາ, ທີຫລັງ, ພາຍລຸນ; впосле́дствии он стал врачо́м ຕໍ່ມາລາວກາຍເປັນແພດ

впро́чем *союз* [ເກົ່າ] ຢ່າງນັ້ນກໍ່ຕາມ, ຫາກ; фильм хоро́ший, впро́чем ты сам уви́дишь ຮູບເງົາເລື່ອງນີ້ພໍ່ວນ ເຈົ້າຫາກຊິເຫັນເອງດອກ

враг, -а́ *м* **1** ສັດຕູ, ອະລິ; не име́ть враго́в ບໍ່ມີສັດຕູ; быть чьим-нибудь врагом ເປັນສັດຕູຂອງເຂົາ; стать врага́ми ເປັນປໍລະປັກກັນ; у него́ мно́го враго́в ລາວມີສັດຕູຫລາຍ; язы́к мой — враг мой *посл.* ປາກຫລາຍ ເສຍສິນ **2** ຂ້າເສິກ, ສັດຕູ; разби́ть врага́ в бою́ ພາບແພ້ສັດຕູໃນການສູ້ຮົບ

враждебно *нареч.* ເປັນປໍລະປັກ; враждебно относи́ться к кому́-нибудь ເປັນປໍລະປັກຕໍ່

вражде́бн|ый, -ая, -ое, -ые; вражде́б|ен, -на, -но, -ны ເປັນປໍລະປັກ; вражде́бное отноше́ние ທ່າທີອັນເປັນປໍລະປັກ; вражде́бные де́йствия ການກະທຳນ້າງເພທຳລາຍ

вра́жеск|ий, -ая, -ое, -ие ຂອງສັດຕູ; вра́жеский кора́бль ກຳປັ່ນຂອງສັດຕູ

врач, -а́ *м* ແພດ, ຫມໍ; о́пытный врач ແພດທີ່ມີຄວາມຊຳນິຊຳນານ; врач по де́тским боле́зням ແພດ[ປິ່ວພະຍາດ]ເດັກນ້ອຍ; обрати́ться к врачу́ ໄປຫາແພດ; вы́звать к больно́му врача́ ເອີ້ນແພດມາຫາຄົນເຈັບ



врач

враща́|ться, -юсь, -ешься, -ются *несов.* ປິ່ນ, ຫມຸນ(ອ້ອມ); колесо́ бы́стро враща́ется ກົງລໍ້ປິ່ນໄວ; Земля́ враща́ется вокру́г свое́й оси́ ຫນ່ວຍໂລກຫມຸນອ້ອມຕົວມັນເອງ

вред, -а́ (*мн. нет*) *м* ພິນຮ້າຍ, ພິນເສຍຫາຍ, ພິດໄພ; моро́зы причини́ли большо́й вред урожа́ю ອາກາດຫນາວນຳພິນເສຍຫາຍມາໃຫ້ແກ່ພືນລະປູກຫລາຍ; мно́го вреда́ здоро́вью прино́сит непра́вильный режи́м ການດຳລົງຊີວິດແບບບໍ່ຖືກຕ້ອງນຳພິນຮ້າຍມາສູ່ສຸຂະພາບຢ່າງຫລວງຫລາຍ

вре́дно *нареч.* (*часто безл. в знач. сказ.*) ເປັນພິນຮ້າຍ, ເປັນອັນຕະລາຍ; кури́ть вре́дно ດູດຢາເປັນອັນຕະລາຍ; вам вре́дно мно́го ходи́ть ຍ່າງຫລາຍເປັນອັນຕະລາຍສຳລັບເຈົ້າ

вре́дн|ый, -ая, -ое, -ые; вре́ден, вредна́, вре́дн|о, -ы ມີພິນຮ້າຍ, ອັນປະໂຫຍດ, ພິດ; вре́дные вещества́ ສານມີພິດ; вре́дная тео́рия ທິດສະດີອັນປະໂຫຍດ; тако́й о́браз жи́зни вре́ден для здоро́вья ການດຳລົງຊີວິດແບບນີ້ມີພິນຮ້າຍຕໍ່ສຸຂະພາບ

вре́менно *нареч.* ຊົ່ວຄາວ, ຊາມຊາ; я живу́ здесь вре́менно ຂ້ອຍເຊົ່າຢູ່ພື້ຊາມຊາ

вре́менн|ый, -ая, -ое, -ые ຊົ່ວຄາວ, ຊາມຊາ; вре́менное жили́ще ເຮືອນຢູ່ຊົ່ວຄາວ; вре́менное удостовере́ние ບັດປະຈຳຕົວຊົ່ວຄາວ; вре́менные затрудне́ния ຄວາມຫຍຸ້ງຍາກຊົ່ວຄາວ

вре́мя, вре́мени (*мн.* времена́, времён, временам) *с* **1** (*мн. нет*) ເວລາ, ໂມງ; ско́лько вре́мени? ຈັກໂມງແລ້ວ?; вре́мя идёт бы́стро ເວລາໄປໄວ; вре́мя тя́нется ме́дленно ເວລາຊັກຊ້າ; прошло́ мно́го вре́мени ເວລາຜ່ານໄປດົນນານແລ້ວ; вре́мя не ждёт ເວລາມັນບໍ່ລໍ້ຖ້າ **2** (*мн. нет*) ໂມງ, ຍາມ; вре́мя прие́зда (отъе́зда) ໂມງເຂົ້າ(ອອກ); вре́мя обе́да ໂມງ(ຍາມ)ກິນເຂົ້າງາຍ; встре́чу назна́чили на по́здее вре́мя ນັດພົບໃນຕອນດຶກ; позвони́те мне в любо́е вре́мя ຕິສາຍຫາຂ້ອຍຍາມໃດກໍໄດ້ **3** (*мн. нет*) [ໄລຍະ]ເວລາ; хорошо́ провести́ вре́мя ໃຊ້ເວລາມ່ວນຊື່ນ; мно́го сде́лать за ко-

ро́ткое вре́мя ເຮັດໄດ້ຫລາຍໃນໄລຍະສັ້ນໆ; отдохну́ть во вре́мя кани́кул ພັກຜ່ອນໃນຍາມພັກຮຽນ; э́та рабо́та тре́бует мно́го вре́мени ເຮັດວຽກນີ້ຕ້ອງໃຊ້ເວລາຫລາຍ 4 (*мн. нет*) *какое или чего* ຍາມ, ຕອນ; дневно́е (у́треннее) вре́мя ຕອນບ່າຍ (ເຊົ້າ); тёплое (дождли́вое) вре́мя ຍາມຮ້ອນ (ຝົນ) 5 (*мн. употр. в одном знач. с ед.*) *какое или чего* ຍາມ, ສະໄຫມ, ປາງ, ເປີງ; ми́рное вре́мя ຍາມສັນຕິພາບ; вое́нное вре́мя ເປີງສົງຄາມ; тяжёлое вре́мя, тяжёлые времена́ ຍາມຫຍຸ້ງຍາກ; вре́мя бу́рного разви́тия нау́ки ເວລາທີ່ວິທະຍາສາດຂະຫຍາຍຕົວຢ່າງວ່ອງໄວ; наступи́ло но́вое вре́мя [ມາ] ຮອດເວລາໃຫມ່; прошли́ ста́рые времена́ ເວລາເກົ່າໄດ້ຜ່ານພົ້ນໄປແລ້ວ 6 (*мн. нет*) ເວລາ; найти́ вре́мя для прогу́лки ຫາເວລາເພື່ອໄປຫລິ້ນ; у меня́ нет вре́мени ຂ້ອຍບໍ່ມີເວລາ; позвони́те мне, е́сли бу́дет вре́мя ໂທລະສັບຫາຂ້ອຍ ຖ້າມີເວລາ 7 *грам.*: настоя́щее вре́мя ປະຈຸບັນການ; проше́дшее вре́мя ອາດີດການ; бу́дущее вре́мя ອະນາຄົດການ ◇ вре́мя го́да (*мн.* времена́ го́да) ຍາມ, ລະດູ; вре́мя от вре́мени, по времена́м ເປັນຄັ້ງຄາວ; вре́мя от вре́мени ходи́ть в го́сти ໄປຫາຫມູ່ເປັນຄັ້ງຄາວ; всё вре́мя ຕະຫລອດເວລາ, ຕະຫລອດການ; всё вре́мя молча́ть ມິດ (ບໍ່ປາກ) ຕະຫລອດໄປ; [в] пе́рвое вре́мя ໃນເບື້ອງຕົ້ນ; ທຳອິດ; пе́рвое вре́мя бы́ло тру́дно ທຳອິດຫຍຸງຍາກຫລາຍ; [в] после́днее вре́мя, за после́днее вре́мя ຫວ່າງຫລັງໆນີ້, ຫວ່າງແລ້ວນີ້; за после́днее вре́мя мы мно́го сде́лали ໃນຕອນສຸດທ້າຍນີ້ພວກເຮົາເຮັດວຽກໄດ້ຫລາຍ; после́днее вре́мя он ча́сто боле́ет ຫວ່າງຫລັງໆນີ້ລາວມັກເຈັບ; в ско́ром вре́мени ໃນມໍ່ໆນີ້, ໃນບໍ່ດົນນີ້, ໃນບໍ່ນານນີ້; в ско́ром вре́мени начну́тся экза́мены ໃນມໍ່ໆນີ້ການສອບເສັງຈະເລີ່ມຕົ້ນ; на вре́мя ຊົ່ວຄາວ, ຊາມຊາ; взять кни́гу на вре́мя ຂໍຍືມປຶ້ມຊາມຊາ; ра́ньше вре́мени ກ່ອນເວລາກຳນົດ; зако́нчить рабо́ту ра́ньше вре́мени ເຮັດວຽກແລ້ວກ່ອນເວລາກຳນົດ; со вре́менем ໃນຕໍ່ຫນ້ານີ້; э́та боле́знь пройдёт со вре́менем ດົນໄປ ພະຍາດຈະຫາຍດີ; с тече́нием вре́мени ຄ່ອຍໆ, ດົນໆ; с тече́нием вре́мени он привы́к к но́вому го́роду ລາວຄ່ອຍໆລົ້ງເຄີຍກັບຕົວເມືອງໃຫມ່

вруча́|ть, -ю, -ешь, -ют *несов.*; **вруч|и́ть**, -у́, -и́шь, -а́т *сов.*; *что кому-чему* ມອບ, ໃຫ້, ຍື່ນ, ແຈກ; вруча́ть кому́-нибудь телегра́мму ຍື່ນໂທລະເລກໃຫ້ເຂົາ; вруча́ть кому́-нибудь награ́ду ປະດັບຫລຽນໄຊ; зна́мя вручи́ли передово́му предприя́тию ມອບຄັນທຸງໃຫ້ໂຮງງານດີເດັ່ນ

вручи́ть *см.* вруча́ть

вря́д ли *нареч.* ເບິ່ງຊິ...ບໍ່; вря́д ли они́ прие́дут сего́дня ເບິ່ງຊິ ພວກເຂົາຄືຊິບໍ່ມາມື້ນີ້

все *см.* весь

всё I *см.* весь

всё II *частица* ແຮ່ງ, ຍິ່ງ, ຍັງຄົງ; всё вы́ше ແຮ່ງສູງ; всё да́льше ແຮ່ງໄກ; всё лу́чше ແຮ່ງດີ; температу́ра всё повыша́ется ອຸນຫະພູມຍັງຄົງສູງຂຶ້ນທີລະກ້າວຄືເກົ່າ ◇ всё ещё ຍັງ [ຄົງ]; он всё ещё боле́ет ລາວຍັງເຈັບຢູ່

всегда́ *нареч.* ທຸກຍາມ, ທຸກເວລາ, ຍາມໃດກໍ່, ເລື້ອຍໆ; всегда́ гото́в ກຽມພ້ອມທຸກເວລາ; на у́лице всегда́ мно́го наро́да ຕາມຖະຫນົນມີຄົນຫລາຍທຸກຍາມ; мы всегда́ гуля́ем по́сле обе́да ຕາມປົກກະຕິພວກເຮົາໄປຫລິ້ນຫລັງຈາກກິນເຂົ້າງາຍແລ້ວ

всего́ 1 *нареч.* ທັງຫມົດ, ທັງຫມວນ, ລວມທັງຫມົດ; всего́ он получи́л две́сти рубле́й ລວມທັງຫມົດລາວໄດ້ຮັບສອງຮ້ອຍຣູບ **2** *частица* ພຽງແຕ່; прошёл всего́ оди́н год ເວລາຜ່ານໄປພຽງແຕ່ປີດຽວ

всеми́рн|ый, -ая, -ое, -ые ທົ່ວໂລກ, ສາກົນ; всеми́рный конгре́сс ກອງປະຊຸມໃຫຍ່ສາກົນ (ທົ່ວໂລກ)

всесою́зн|ый, -ая, -ое, -ые ທົ່ວສະຫະພາບ; всесою́зное о́бщество ສະມາຄົມທົ່ວສະຫະພາບ; всесою́зный съезд писа́телей ກອງປະຊຸມນັກປະພັນທົ່ວສະຫະພາບ

всё-таки *союз и частица* (*обычно с союзами* «и», «а», «но») ເຖິງຢ່າງໃດກໍ່ຕາມ; бы́ло уже́ по́здно, но всё-таки мы пошли́ из теа́тра пешко́м ເຖິງແມ່ນວ່າເດິກແລ້ວກໍ່ຕາມພວກເຮົາອອກຈາກໂຮງລະຄອນແລ້ວຍ່າງເມືອເຮືອນ; от всё-таки верну́лся ເຖິງຢ່າງໃດກໍ່ຕາມ ໃນທີ່ສຸດລາວໄດ້ກັບມາ

вска́кива|ть, -ю, -ешь, -ют *несов.*; **вскоч|и́ть**, -у́, вско́ч|ишь, -ат *сов.* **1** ໂດດຂຶ້ນ, ເດັ້ນຂຶ້ນ; вскочи́ть на коня́ ໂດດຂຶ້ນມ້າ; ко́шка вскочи́ла на стул ແມວໂດດຂຶ້ນເທິງຕັ່ງອີ້ **2** ຜຸດລຸກຂຶ້ນ; вскочи́ть на́ ноги ຜຸດລຸກຢືນຂຶ້ນ; вскочи́ть со сту́ла ລຸກຂຶ້ນຈາກຕັ່ງອີ້; вскочи́ть с посте́ли ລຸກຂຶ້ນຈາກບ່ອນນອນ; все вскочи́ли со свои́х мест ທຸກຄົນໄດ້ລຸກຂຶ້ນຈາກບ່ອນນັ່ງ

вскипяти́ть *см.* кипяти́ть

вско́ре *нареч.* ບໍ່ດົນ, ບໍ່ເທົ່າ, ບໍ່ຊ້າ, ບໍ່ດົນນານ; вско́ре по́сле ва́шего отъе́зда ພາຍຫລັງທີ່ເຈົ້າຈາກໄປບໍ່ເທົ່າ; э́то бы́ло вско́ре по́сле войны́ ເລື່ອງນີ້ເກີດຂຶ້ນບໍ່ດົນພາຍຫລັງສົງຄາມ; вско́ре они́ расста́лись ບໍ່ດົນພວກເຂົາລາຈາກກັນ

вскочи́ть *см.* вска́кивать

вслед *нареч.* (*за кем-чем*) *и предлог с дат.* ຕາມຫລັງ; бежа́ть вслед за ке́м-нибудь ແລ່ນຕາມຫລັງຜູ້ໃດຜູ້ຫນຶ່ງ; посмотре́ть вслед ແນມ

ตามหลัง; он посмотре́л вслед това́рищу ลาวแลมตามหลังหมู่

вслéдствие *предлог с род.* ย้อน, เพาะ, เบื่องจาก; самолёты опа́здывали вслéдствие си́льного тума́на เรือบินฉักช้า ย้อนว่าหมอกหลาย

вслух *нареч.* ออกสง; чита́ть вслух อ่านออกสง

вспаха́ть *см.* паха́ть

вспомина́|ть, -ю, -ешь, -ют *несов.*; **вспо́м|нить**, -ю, -ишь, -ят *сов.*; *кого-что и о ком-чём* ทวบคิด, ละนึก, จื่, คิดฮอด, คิดหา, คิดพั้; вспомина́ть про́шлое (о про́шлом) ทวบคิดถึงหลัง; вспомина́ть де́тство (о де́тстве) ทวบละนึกเก๋าไอเด็ก; вспо́мнить друзе́й (о друзья́х) ทวบละนึกเก๋าหมู่เพื่อน, คิดฮอดหมู่คู่; вспо́мнить ста́рую пе́сню คิดพั้เพงเก่า; вспо́мнить о ва́жном де́ле คิดเซับองกอันสำคัน; я не могу́ вспо́мнить его́ а́дрес ข้อยบ่จื่บ่อนยู่ของเขา

вспо́мнить *см.* вспомина́ть

вспомога́тельн|ый, -ая, -ое, -ые สำลอง, อะนุเกาะ, ฉ่วยองก; вспомога́тельный цех พะแนกฉ่วยองก; вспомога́тельные рабо́ты องกางานสำลอง ◇ вспомога́тельный глаго́л คำกำมะอะนุเกาะ

вспы́хива|ть, -ет, -ют *несов.*; **вспы́хн|уть**, -ет, -ут *сов.* 1 ลุก; вспы́хнул ого́нь ไฟลุกขึ้น; спи́чка вспы́хнула и пога́сла ไม้ขีดไฟลุกแล้วมอด 2 เกิดขึ้น, ละเบิดขึ้น; вспы́хнула война́ สงครามละเบิดขึ้น; вспы́хнула ссо́ра ความผิดกันเกิดขึ้น

вспы́хнуть *см.* вспы́хивать

вста|ва́ть, -ю, -ёшь, -ю́т *несов.*; **встать**, вста́н|у, -ешь, -ут *сов.* 1 ลุกขึ้น; встать на́ ноги ลุกยืนขึ้น; встать со сту́ла ลุกขึ้นจากก้าอี้; встать с ме́ста ลุกขึ้นจากบ่อนั่ง; встать из-за стола́ ลุกออกจากโต๊ะ; ра́но встава́ть ตื่นเด็ก, ลุกแต่เด็ก; он встал в семь часо́в утра́ ลาวลุกแต่เจ๊กโมงเช้า 2 (*куда-н.*) ยืน, ตั้ง; встать ря́дом ยืนหยับเข้างกัน; встать на ступе́ньку ปีนขึ้นยืนเทิงขั้นใด 3 (*1 и 2 л. не употр.*) ปะสบ, ปะเฉิบหน้า; пе́ред на́ми встаю́т но́вые зада́чи พวกเราปะสบบันหาใหม่

вста́вить *см.* вставля́ть

вставля́|ть, -ю, -ешь, -ют *несов.*; **вста́в|ить**, -лю, -ишь, -ят *сов.*; *что во что* เอา... เข้า, เอา... ใส่, สอด, บ่อน, แหย่; вставля́ть стёкла в о́кна เอาแว่นใส่บ่องย้วม

встать *см.* встава́ть

встрево́жить *см.* трево́жить

встре́тить(ся) *см.* встреча́ть(ся)

встре́ч|а, -и *ж* 1 การพบปะ, การต้อนรับ; случа́йная (неожи́данная, прия́тная) встре́ча การพบปะโดยบังเอิน (อย่างบ่คาดฝัน, ที่เพิ่งพ้อใจ); поздоро́ваться при встре́че ทาม สะบายในเวลาพั้กัน; торже́ственная встре́ча

делега́ции ການຕ້ອນຮັບຄະນະຜູ້ແທນຢ່າງຄຶກ ຄຶ້ນ; встре́ча прошла́ в дру́жеской обстано́вке ການພົບປະກັນໄດ້ດຳເນີນໄປໃນບັນຍາກາດທີ່ ສະຫນິດສະຫນົມ (ແຫ່ງໄມຕີຈິດມິດຕະ ພາບ) 2 ການພົບປະສັງສັນ, ການຊຸມນຸມ, ການຊຸມ ແຊວ; ве́чер встре́чи ງານ [ລາຕີ] ພົບປະສັງ ສັນ, ງານຊຸມນຸມ; встре́ча депута́тов с изби-ра́телями ການພົບປະສັງສັນລະຫວ່າງຜູ້ແທນ ກັບຜູ້ເລືອກຕັ້ງ; встре́ча студе́нтов с писа́те-лями ການພົບສັງສັນລະຫວ່າງນັກສຶກສາກັບ ນັກປະພັນ 3 ການແຂ່ງຂັນ, ການ່ອງເສັ ກັນ; встре́ча двух спорти́вных кома́нд ການ ແຂ່ງຂັນລະຫວ່າງນັກກິລາສອງຄະນະ

встреча́|ть, -ю, -ешь, -ют *несов.*; **встре́|тить**, -чу, -тишь, -тят *сов.* **1** *кого-что* ພົບ, ພໍ້, ພົບພໍ້; встре́тить кого́-нибудь на у́лице ພໍ້ເຂົາ ຢູ່ກາງຖະຫນົນ; встре́тить кого́-нибудь у па́-мятника Пу́шкину ພົບເຂົາຢູ່ຂ້າງອະນຸສາວະລີ ປຸດຊະກິນ **2** *кого-что* ຮັບ, ຮັບຕ້ອນ; хозя́йка встреча́ет госте́й ແມ່ເຮືອນອອກໄປຮັບແຂກ; роди́тели встре́тили сы́на на вокза́ле ພໍ່ແມ່ຕ້ອນ ຮັບລູກທີ່ສະຖານີລົດໄຟ; в аэропорту́ делега́-цию встреча́ли рабо́чие ຢູ່ເດີ່ນບິນມີພວກກຳ ມະກອນຕ້ອນຮັບຄະນະຜູ້ແທນ **3** *кого-что чем* ຕ້ອນຮັບ; встреча́ть проти́вника огнём ຍິງຕ້ານ ສັດຕູ; встре́тим пра́здник Октября́ но́выми ус-пе́хами в труде́ ສ້າງ (ເອົາ) ຜົນງານໃຫມ່ຕ້ອນ ຮັບວັນບຸນເດືອນຕຸລາ **4** *что* ໄດ້ຮັບ, ປະສົບ; встреча́ть подде́ржку (понима́ние, сочу́вствие) ໄດ້ຮັບການສະຫນັບສະຫນຸນ (ຄວາມເຂົ້າອົກ ເຂົ້າໃຈ, ຄວາມເຫັນອົກເຫັນໃຈ); встре́тить упо́рное сопротивле́ние ປະສົບການຕ້ານຢັນ ຢ່າງແຂງແຮງ

встреча́|ться, -юсь, -ешься, -ются *несов.*; **встре́|титься**, -чусь, -тишься, -тятся *сов.* **1** *обычно с кем* ພົບ, ພໍ້, ພໍ້ຫນ້າພໍ້ຕາ; встре́-титься в теа́тре ພົບກັນໃນໂຮງລະຄອນ; встре́-титься у подъе́зда ພໍ້ກັນຢູ່ຂ້າງປະຕູເຮືອນ; встре́титься с дру́гом ພົບກັບຫມູ່; друзья́ встре́-тились вновь че́рез не́сколько лет ຫມູ່ເພື່ອນ ໄດ້ພົບກັນໃຫມ່ສອງສາມປີຕໍ່ມາ, ອີກສອງ ສາມປີຫມູ່ເພື່ອນຈຶ່ງໄດ້ພົບກັນໃຫມ່; мы с ней ре́дко встреча́емся ຂ້ອຍກັບນາງພົບພໍ້ກັນຍາກ ຫລາຍ, ດົນໆພວກເຮົາຈຶ່ງພົບກັນເທື່ອຫນຶ່ງ **2** ແຂ່ງຂັນກັນ, ຊ່ອງເສັ ກັນ; сего́дня встреча́-ются две са́мые си́льные кома́нды ມື້ນີ້ການ ແຂ່ງຂັນລະຫວ່າງສອງຄະນະທີ່ເກັ່ງທີ່ສຸດ; на соревнова́ниях на́ши игроки́ встре́тятся со спорт-сме́нами други́х стран ໃນການແຂ່ງຂັນ ນັກ ກິລາຂອງຝ່າຍເຮົາຈະຊ່ອງເສັ ກັນກັບນັກກິ ລາຂອງປະເທດອື່ນໆ **3** (*1 и 2 л. не употр.*) ມີ, ເຫັນ, ພົບ; э́то расте́ние встреча́ется на ю́ге ຕົ້ນໄມ້ແນວນີ້ມີແຕ່ເຫັນຢູ່ພາກໃຕ້; мне то́лько оди́н раз встре́тилось э́то расте́ние

ຂ້ອຍໄດ້ເຫັນກິກໄມ້ຊະນິດນີ້ ພຽງແຕ່ເທື່ອດຽວເທົ່ານັ້ນ

вступа́|ть, -ю, -ешь, -ют *несов.*; **вступ|и́ть**, -лю́, встýп|ишь, -ят *сов.*; *во что* 1 ເຂົ້າ, ກ້າວເຂົ້າສູ່; войска́ вступи́ли в го́род ກອງທະຫານເຂົ້າໄປໃນຕົວເມືອງ 2 ເຂົ້າ; вступа́ть в па́ртию ເຂົ້າ [ເປັນສະມາຊິກ] ພັກ; вступи́ть в профсою́з ເຂົ້າເປັນສະມາຊິກກຳມະບານ 3 ລົງມື, ເລີ່ມຕົ້ນ, ເປີດ, ຮ່ວມ; вступа́ть (вступи́ть) в борьбу́ ເຂົ້າຮ່ວມການຕໍ່ສູ້; вступа́ть (вступи́ть) в перегово́ры ເປີດການເຈລະຈາ; вступа́ть (вступи́ть) в спор ເຂົ້າໄປຮ່ວມໃນການຜິດກຽງກັນ, ເຂົ້າໄປຜິດກຽງ; мне не хоте́лось вступа́ть в разгово́р ຂ້ອຍບໍ່ຢາກເຂົ້າໄປຮ່ວມການສົນທະນາ ◇ вступа́ть (вступи́ть) в брак *с кем* ເອົາເຂົາເປັນຜົວ(ເມຍ), ແຕ່ງດອງກັບເຂົາ; вступа́ть (вступи́ть) в де́йствие (в си́лу) ເກີດມີຜົນສັກສິດ; зако́н вступи́л в де́йствие ກົດໝາຍມີຜົນສັກສິດແລ້ວ; вступа́ть (вступи́ть) в строй ກ້າວເຂົ້າສູ່(ໃນ) ການຜະລິດ; в строй вступи́л но́вый комбина́т ໂຮງງານໂກມບິນາແຫ່ງໃຫມ່ກ້າວເຂົ້າສູ່ການຜະລິດແລ້ວ; вступи́ть на путь *чего или какой* ກ້າວເຂົ້າສູ່ເສັ້ນທາງ; э́та страна́ вступи́ла на путь строи́тельства социали́зма ປະເທດນີ້ໄດ້ກ້າວເຂົ້າສູ່ເສັ້ນທາງສ້າງສາສັງຄົມນິຍົມ

вступи́ть *см.* вступа́ть

вступле́ни|е, -я *с* ຄຳນຳ, ບົດນຳ; вступле́ние к рома́ну ຄຳ [ແນະ] ນຳນະວະນິຍາຍ; докла́дчик сде́лал небольшо́е вступле́ние ຜູ້ບັນຍາຍໄດ້ສະເຫນີຄຳແນະນຳຫຍໍ້ໆ

всхо|ди́ть, -жу́, всхо́д|ишь, -ят *несов.*; **взой|ти́**, -ду́, -дёшь, -ду́т (*прош.* взош|ёл, -ла́, -ло́, -ли́) *сов.* 1 ບິນຂຶ້ນ, ກ້າວຂຶ້ນ; всходи́ть на верши́ну горы́ ບິນຂຶ້ນຈອມພູ 2 (*1 и 2 л. не употр.*) ຂຶ້ນ; зимо́й со́лнце всхо́дит по́здно ຍາມຫນາວຕາເວັນຂຶ້ນຊ້າ; луна́ ещё́ не взошла́ ເດືອນຍັງບໍ່ທັນໄດ້ອອກ 3 (*1 и 2 л. не употр.*) ອອກ; огурцы́ уже́ всхо́дят ແກ່ນຫມາກແຕງພວມອອກ; пшени́ца хорошо́ взошла́ ເມັດເຂົ້າອອກ ອກຢ່າງດີແລ້ວ

всю́ду *нареч.* ທຸກບ່ອນທຸກທີ່, ທົ່ວເຖິງ; побыва́ть всю́ду ໄປຢາມທຸກບ່ອນທຸກທີ່; хоро́шие лю́ди есть всю́ду ຄົນດີມີຢູ່ທຸກບ່ອນທຸກທີ່

вся *см.* весь

вся́к|ий, -ая, -ое, -ие *мест.* 1 ແຕ່ລະ, ທຸກ; вся́кий раз ທຸກເທື່ອ; вся́кий челове́к зна́ет э́то ໃຜກໍ່ຮູ້ອັນນີ້, ຫນຶ່ງທຸກຄົນຮູ້ເລື່ອງນີ້ 2 ທຸກແນວ, ຕ່າງໆ; здесь быва́ют вся́кие лю́ди ມີຄົນທຸກປະເພດມາພົ້; у меня́ мно́го вся́ких дел ຂ້ອຍມີວຽກຮ້ອຍແປດພັນແນວ 3 ແຕ່ຫນ້ອຍດຽວ, ຈັກດີ, ເລີຍ; потеря́ть вся́кую наде́жду ຫມົດຫວັງເລີຍ, . ບໍ່ມີຫວັງ

ເລີຍ; слу́шать без вся́кого интере́са ຟັງຢ່າງ ບໍ່ມີຄວາມສົນໃຈຫຍັງເລີຍ ◇ во вся́ком слу́чае ຢ່າງໃດກໍ່ຕາມ; во вся́ком слу́чае рабо́ту на́до вы́полнить в срок ຢ່າງໃດກໍ່ຕາມ ວຽກນີ້ ຕ້ອງສຳເລັດທັນເວລາ; на вся́кий слу́чай ເພື່ອບໍ່ປະຫມາດ; возьми́те с собо́й на вся́кий слу́чай тёплое пальто́ ເອົາເສື້ອກັນຫນາວໄປນຳ ຕາມວາດ; я оста́влю вам свой а́дрес на вся́кий слу́чай ເພື່ອສະດວກ ຂ້ອຍ ຈະເອົາບ່ອນຢູ່ຂອງຕົນໃຫ້ເຈົ້າ

вто́рник, -а *м* ວັນອັງຄານ; он уезжа́ет во вто́рник ລາວຈະຈາກໄປໃນວັນອັງຄານ; экза́мен назна́чили на вто́рник ເພີ່ນນັດເຂົ້າສອບ ເສັງໃນວັນອັງຄານ; со вто́рника я свобо́ден ຂ້ອຍຫວ່າງຕັ້ງແຕ່ວັນອັງຄານ; по вто́рникам музе́й не рабо́тает ຫໍພິພິດທະພັນອັດໃນວັນ ອັງຄານ

втор|о́й, -а́я, -о́е, -ы́е *числ.* 1 ທີສອງ; второ́й день (год) ມື້ (ປີ) ທີສອງ; на второ́м этаже́ ຢູ່ຊັ້ນສອງ; сего́дня второ́е [число́] ມື້ ນີ້ [ເປັນ] ວັນທີສອງ; э́то случи́лось второ́го февраля́ ເລື່ອງນີ້ເກີດຂຶ້ນໃນວັນທີສອງເດືອນ ກຸມພາ 2 *в знач. сущ.* **втор|о́е**, -о́го *с* ເຢື່ອງ (ຈານ) ທີສອງ; на второ́е бы́ли котле́ты ເຢື່ອງ (ຈານ) ທີສອງກິນຊີ້ນປັ້ນ (ໂກດເລດ)

вуз, ву́за *м* (вы́сшее уче́бное заведе́ние) ໂຮງຮຽນຊັ້ນສູງ, ມະຫາວິທະຍາໄລ; посту-па́ть в вуз ເຂົ້າມະຫາວິທະຍາໄລ; учи́ться в ву́зе ຮຽນໃນມະຫາວິທະຍາໄລ

вход, вхо́да *м* 1 ການເຂົ້າ; вход запрещён ຫ້ານເຂົ້າ; пла́та за вход ຄ່າຜ່ານປະຕູ 2 ທາງ ເຂົ້າ, ປະຕູເຂົ້າ; вход в метро́ ທາງເຂົ້າໄປຫາ ລົດໃຕ້ດິນ; вход в парк ປະຕູເຂົ້າສວນ (ອຸ ທິຍານ); откры́ть (закры́ть) вход ໄຂ (ອັດ) ທາງເຂົ້າ; стоя́ть у вхо́да на перро́н ຢືນຢູ່ຂ້າງ ປະຕູເຂົ້າໄປຊານຊາລາ

вхо|ди́ть, -жу́, вхо́д|ишь, -ят *несов.*; **вой|ти́**, -ду́, -дёшь, -ду́т (*прош.* вош|ёл, -ла́, -ло́, -ли́) *сов.*; *во что* 1 [ຢ່າງ] ເຂົ້າ; входи́ть (войти́) в дом (в ко́мнату) ເຂົ້າເຮືອນ (ຫ້ອງ); входи́ть (войти́) в метро́ (в во́ду) ລົງລົດໃຕ້ດິນ (ນ້ຳ); кора́бль вхо́дит в порт ກຳປັ່ນເຂົ້າຫາທ່າເຮືອ; войди́те! ເຊີນເຂົ້າມາ! 2 (*1 и 2 л. не употр.*) ບັນຈຸ, ເອົາໃສ່; в чемода́н вошли́ все ну́жные ве́щи ຫີບຫນ່ວຍນີ້ຂ້ອຍເອົາເຄື່ອງທີ່ຈຳເປັນທັງ ຫມົດຍັດໃສ່ໄດ້; в портфе́ль вхо́дит мно́го книг ກະເປົາ (ກະຕາບ) ໃສ່ປຶ້ມໄດ້ຫລາຍ 3 ໄດ້ເປັນສະມາຊິກ; в коми́ссию вхо́дит пять челове́к ຄະນະກຳມະທິການປະກອບດ້ວຍຫ້າ ຄົນ; дире́ктор вошёл в соста́в парти́йного бюро́ ຜູ້ອຳນວຍການໄດ້ເຂົ້າເປັນສະມາຊິກຂອງ ຄະນະພັກ ◇ входи́ть (войти́) в дове́рие *к кому* ໄດ້ຮັບຄວາມໄວ້ວາງໃຈຈາກປະຊາຊົນ, ໄດ້ ຮັບຄວາມໄວ້ເນື້ອເຊື່ອໃຈ; входи́ть (войти́) в

мóду ເປັນທີ່ນິຍົມຂອງຄົນທົ່ວໄປ; входи́ть (войти́) в чьё-нибу́дь положе́ние ມີຄວາມເຫັນໃຈ(ເມດຕາກະລຸນາ)

вчера́ *нареч.* ມື້ວານນີ້; вчера́ бы́ло холодне́е, чем сего́дня ມື້ວານນີ້ອາກາດຫນາວກວ່າມື້ນີ້; мы прие́хали вчера́ ве́чером ພວກເຮົາໄດ້ເດີນທາງມາແຕ່ມື້ຄືນນີ້

. вчера́шн|ий, -яя, -ее, -ие ມື້ວານ; вчера́шний день ມື້ວານ; вчера́шние газе́ты ຫນັງສືພິມມື້ວານນີ້

въезд, въе́зда *м* ການເຂົ້າ, ທາງເຂົ້າ

въезжа́|ть, -ю, -ешь, -ют *несов.*; **въе́|хать,** -ду, -дешь, -дут *сов.* ເຂົ້າ; въезжа́ть в го́род ເຂົ້າໄປໃນຕົວເມືອງ; въе́хать во двор на ло́шади ຂີ່ມ້າອອກເດີ່ນ; маши́на въезжа́ет на пло́щадь ລົດແລ່ນອອກເດີ່ນ

въе́хать *см.* въезжа́ть

вы, вас, вам, вас, ва́ми, о вас *мест. 2 л. мн.* (*употр. при обращении к нескольким лицам, а тж. как форма вежливого обращения к одному человеку*) [ພວກ]ເຈົ້າ, ທ່ານ; вы настоя́щие друзья́ ພວກເຈົ້າເປັນເພື່ອນກັນຢ່າງແທ້ຈິງ; вы наш лу́чший друг ເຈົ້າເປັນຫມູ່ທີ່ດີທີ່ສຸດຂອງພວກເຮົາ; мы ча́сто вспомина́ем о вас ພວກເຮົາ[ຫວນ]ຄຶດຮອດເຈົ້າເລື້ອຍໆ; что с ва́ми случи́лось? ເຈົ້າເກີດເລື່ອງຫຍັງ?, ເຈົ້າເປັນຫຍັງ?

выбега́|ть, -ю, -ешь, -ют *несов.*; **вы́бе|жать,** -гу, -жишь, -гут *сов.* ແລ່ນອອກ; вы́бежать из ко́мнаты ແລ່ນອອກຈາກຫ້ອງ; он ча́сто выбега́ет на у́лицу без пальто́ ລາວມັກແລ່ນອອກໄປນອກເຮືອນ ບໍ່ນຸ່ງເສື້ອກັນຫນາວ

вы́бежать *см.* выбега́ть

выбира́|ть, -ю, -ешь, -ют *несов.*; **вы́брать,** вы́бер|у, -ешь, -ут *сов.* **1** *что* ເລືອກເອົາ, ຄັດເລືອກ, ຄັດຈ້ອນ; выбира́ть материа́л на пла́тье ເລືອກເອົາແພຫຍິບເສື້ອກະໂປງ; вы́брать себе́ шля́пу ເລືອກເອົາຫມວກດ້ວຍຕົນເອງ; тури́сты вы́брали для похо́да сло́жный маршру́т ນັກທ່ອງທ່ຽວເລືອກເອົາເສັ້ນທາງທີ່ສະຫລັບສັບຊ້ອນ **2** *кого* [ປ່ອນບັດ]ເລືອກຕັ້ງ; вы́брать делега́та на конфере́нцию ຄັດເລືອກຜູ້ແທນເຂົ້າຮ່ວມກອງປະຊຸມ; собра́ние выбира́ет председа́теля ກອງປະຊຸມເລືອກຕັ້ງປະທານ; вы́брать кого́-нибудь в прези́диум ຄັດເລືອກເຂົາເຂົ້າໃນຄະນະປະທານ

вы́бор, -а (*мн. нет*) *м* ການຄັດເລືອກ, ທາງເລືອກ; вы́бор поку́пки ການເລືອກເອົາສິນຄ້າ ◇ на вы́бор ຕາມໃຈມັກ; в гости́нице ему́ предложи́ли на вы́бор не́сколько номеро́в ຢູ່ໂຮງແຮມເພິ່ນສະເຫນີໃຫ້ລາວເລືອກເອົາຫ້ອງພັກຈັກສອງສາມບ່ອນຕາມໃຈມັກ

вы́бор|ы, -ов *мн.* ການປ່ອນບັດເລືອກຕັ້ງ; вы́боры в Верхо́вный Сове́т СССР ການປ່ອນບັດເລືອກຕັ້ງຜູ້ແທນສະພາໂຊວຽດສູງສຸດ; вы-

боры депута́тов в Сове́ты наро́дных депута́тов ການປ່ອນບັດເລືອກຕັ້ງຜູ້ແທນສະພາໂຊວຽດຜູ້ແທນປະຊາຊົນ; уча́стие в вы́борах ການເຂົ້າຮ່ວມໃນການປ່ອນບັດເລືອກຕັ້ງ; назна́чить вы́боры на коне́ц го́да ນັດການປ່ອນບັດເລືອກຕັ້ງໃນທ້າຍປີ

выбра́сыва|ть, -ю, -ешь, -ют *несов.*; **вы́бро|сить,** -шу, -сишь, -сят *сов.*; *что* ກຶ້ມອອກ, ໂຍນອອກ, ລະກຶ້ມ; вы́бросить сигаре́ту ກຶ້ມກອກຢາອອກ; вы́бросить что́-нибудь в окно́ (за окно́) ກຶ້ມຂອງອອກປ່ອງຢ້ຽມ; вы́бросить ста́рые тетра́ди ກຶ້ມປຶ້ມຂຽນເກົ່າອອກ; не выбра́сывайте э́ту газе́ту ຫນັງສືພິມສະບັບນີ້ຢ່າກຶ້ມເດີ ◇ вы́бросите из головы́ э́ту мысль! ຢ່າຄິດເລື່ອງນີ້!

вы́брать *см.* выбира́ть

вы́бросить *см.* выбра́сывать

вы́везти *см.* вывози́ть

вы́вести *см.* выводи́ть

вы́вод, -а *м* ຂໍ້ສະຫລຸບ, ຄວາມເຫັນ, ຄຳຕັດສິນ; ва́жный вы́вод ຄວາມເຫັນ (ຂໍ້ສະຫລຸບ) ສຳຄັນ; непра́вильный вы́вод ຂໍ້ສະຫລຸບ (ຄວາມເຫັນ) ຜິດພາດ; прийти́ к како́му-нибудь вы́воду ລົງຄວາມເຫັນ, ສະຫລຸບ, ຕັດສິນ; сде́лать вы́воды из свои́х наблюде́ний ສະຫລຸບຂໍ້ສັງເກດຂອງຕົນ, ກອດກອນບົດຮຽນຈາກຂໍ້ສັງເກດຂອງຕົນ

выво|ди́ть, -жу́, выво́д|ишь, -ят *несов.*; **вы́ве|сти,** -ду, -дешь, -дут (*прош.* вы́вел, -а, -о, -и) *сов.*; *кого-что* ນຳພາອອກ, ເອົາອອກ, ຈູງອອກ; выводи́ть больно́го в сад ນຳພາຄົນເຈັບອອກສວນ; вы́вести маши́ну из гаража́ ຂັບລົດອອກຈາກອູ່; вы́вести полк на пара́д ນຳພາກອງພັນໃຫຍ່ໄປສວນສະຫນາມ; вы́вести ло́шадь во двор ຈູງມ້າອອກເດີ່ນ ◇ выводи́ть (вы́вести) из себя́ *кого* ຍົວະໃຫ້ເພີ່ນເສຍຫົວ; выводи́ть (вы́вести) из стро́я *что* ມ້າງເພທຳລາຍ, ດັບສູນ, ປັດເຂ່ຍ; выводи́ть (вы́вести) из терпе́ния *кого* ຍົວະໃຫ້ຫມົດຄວາມອົດທົນ

вы́воз, -а (*мн. нет*) *м* ການນຳເອົາອອກ, ການກຶໄປ, ການເອົາໄປ; ຂາອອກ

выво|зи́ть, -жу́, выво́з|ишь, -ят *несов.*; **вы́вез|ти,** -у, -ешь, -ут (*прош.* вы́вез, -ла, -ло, -ли) *сов.*; *кого-что* ນຳເອົາອອກໄປ, ສົ່ງອອກ, ເອົາໄປ, ກຶໄປ; вывози́ть кирпи́ч со двора́ на маши́не ເອົາລົດຂົນດິນຈີ່ອອກໄປນອກ; вы́везти дете́й за́ город ເອົາລົດພາເດັກນ້ອຍໄປນອກເມືອງ; на́ша страна́ выво́зит за грани́цу маши́ны ປະເທດເຮົາສົ່ງເຄື່ອງຈັກອອກໄປຕ່າງປະເທດ

вы́гладить *см.* гла́дить II

вы́гля|деть, -жу, -дишь, -дят *несов.*, *как или каким, кем* ເບິ່ງ [ຊົງ] ຄື; сего́дня он хорошо́ вы́глядит ມື້ນີ້ເບິ່ງລາວຄືສະບາຍດີ; вы пло́хо вы́глядите ເບິ່ງເຈົ້າຄືວ່າບໍ່ສະບາຍ; он

вы́глядит больны́м (стари́ком) ເບິ່ງລາວຄືເປັນໄຂ້ (ຜູ້ເກົ່າ)

вы́гнать *см.* выгоня́ть

вы́говор, -а *м* ຄຳຕຳຫນິຕິຕຽນ; сде́лать де́тям вы́говор за плохо́е поведе́ние ຕຳຫນິຕິຕຽນເດັກນ້ອຍທີ່ມີກິລິຍາທ່າທາງບໍ່ດີ; объяви́ть сотру́днику вы́говор за наруше́ние дисципли́ны ກ່າວໂທດພະນັກງານທີ່ເຮັດຜິດລະບຽບວິໄນ; получи́ть вы́говор ຖືກຕຳຫນິຕິຕຽນ

вы́годн|ый, -ая, -ое, -ые; вы́год|ен, -на, -но, -ны ເປັນປະໂຫຍດ, ມີຜົນດີ; вы́годный догово́р ສັນຍາທີ່ມີຜົນປະໂຫຍດ; вы́годное де́ло ວຽກທີ່ມີຜົນດີ; э́ти усло́вия вы́годны для обе́их сторо́н ເງື່ອນໄຂເຫລົ່ານີ້ຕ່າງຝ່າຍຕ່າງມີຜົນ[ປະໂຫຍດ]

выгоня́|ть, -ю, -ешь, -ют *несов.*; **вы́гнать,** вы́гон|ю, -ишь, -ят *сов.*; *кого* ຂັບໄລ່, ໄລ່ອອກ, ສົ່ງອອກ; вы́гнать кого́-нибудь из до́ма ໄລ່ເຂົາອອກຈາກເຮືອນ; выгоня́ть соба́ку на у́лицу ໄລ່ຫມາອອກໄປນອກ; вы́гнать врага́ из го́рода ໄລ່ສັດຕູຫນີຈາກເມືອງ

выгружа́|ть, -ю, -ешь, -ют *несов.*; **вы́гру|зить,** -жу, -зишь, -зят *сов.*; *что* ຂົນລົງ, ເອົາລົງ; выгружа́ть ве́щи из маши́ны ຂົນເຄື່ອງຂອງລົງຈາກລົດ

вы́грузить *см.* выгружа́ть

выда|ва́ть, -ю́, -ёшь, -ю́т *несов.*; **вы́да|ть,** -м, -шь, -ст, -дим, -дите, -дут *сов.*; *что* 1

ເອົາໃຫ້, ອອກໃຫ້, ຍົກໃຫ້, ຈ່າຍໃຫ້, ປັນໃຫ້; ເບີກໃຫ້, ມອບໃຫ້; вы́дать зарпла́ту ເບີກເງິນເດືອນ; вы́дать кни́ги чита́телям ເອົາປຶ້ມໃຫ້ຜູ້ອ່ານ; вы́дать па́спорт (удостовере́ние) ອອກບັດປະຈຳຕົວ; вы́дать значки́ уча́стникам конфере́нции ຈ່າຍການໃຫ້ຜູ້ຮ່ວມປະຊຸມ 2 ເປີດເຜີຍ, ບໍ່ບອກ; вы́дать кому́-нибудь та́йну (секре́т) ເປີດເຜີຍຄວາມລັບ; её го́лос выдава́л волне́ние ສຽງປາກຂອງນາງບອກໃຫ້ຮູ້ເຖິງຄວາມກະວົນກະວາຍ ◇ выдава́ть (вы́дать) себя́ [с голово́й] ເສຍລັບ

вы́дать *см.* выдава́ть

вы́дач|а, `-и *ж* ການເບີກ, ການຈ່າຍ, ການມອບໃຫ້; вы́дача докуме́нтов ບ່ອນ(ການ)ຈ່າຍເອກະສານ

выдаю́щ|ийся, -аяся, -ееся, -иеся ດີເດັ່ນ, ໃຫຍ່ຫລວງ, ພົ້ນເດັ່ນ; выдаю́щийся учёный ນັກປາດຜູ້ດີເດັ່ນ; выдаю́щиеся успе́хи на́шей страны́ ຜົນສຳເລັດອັນໃຫຍ່ຫລວງຂອງປະເທດເຮົາ; выдаю́щееся собы́тие ເຫດການທີ່ສະຫງ່າງາມ

вы́делить *см.* выделя́ть

выделя́|ть, -ю, -ешь, -ют *несов.*; **вы́дел|ить,** -ю, -ишь, -ят *сов.*; *кого-что* ປັນໃຫ້, ເບີກໃຫ້, ຈ່າຍໃຫ້; ກຳນົດ, ເລືອກເອົາ; вы́делить де́ньги на поку́пки ເບີກເງິນໄປຊື້ຂອງ; вы́делить не́сколько челове́к для пое́здки ເລືອກເອົາສອງສາມຄົນໄປ ...

выделя́|ться, -юсь, -ешься, -ются *несов.* ถึ(เด่น)ลื่นหมู่, พ้นเด่น; выделя́ться свои́ми спосо́бностями มีความสามาถเด่นกว่าหมู่; он ничем не выделя́ется среди́ други́х ลาวพ่ำปะมานกับกับผู้อื่น; его́ го́лос выделя́лся в хо́ре สยงของลาวเด่นลื่นหมู่ในละบะร้องเพง

вы́держать *см.* выде́рживать

выде́ржива|ть, -ю, -ешь, -ют *несов.*; **вы́держ|ать**, -у, -ишь, -ат *сов.*; *что* 1 (*1 и 2 л. не употр.*) ทิน[หาน], ทินไหอ, อิดทิน; прибо́р выде́рживает высо́кую температу́ру กินจักทินหานอุนหะพูมสูงได้; доска́ не вы́держала тя́жести и слома́лась ไม้แป้นรับธองน้ำหนักบ่ได้จ๋งหัก 2 อิดไว้, ผ่านผ่า, ต้านหาน; полк вы́держал ата́ку проти́вника กองพันต้านหานการบุกโจมตีของสัดตูได้; больно́й не вы́держит опера́ции คินเจ็บลอดชีวิดในเวลาก๊ดผ่าตัดบ่ได้ ◇ вы́держать экза́мен (экза́мены) สอบสังได้; вы́держать экза́мены в институ́т เสังเฮ็ามะหาวิทะยาไลได้

вы́езд, -а *м* การออกเดินหาง, การออกจาก; вы́езд за́ город การออกนอกถิวเมือง

выезжа́|ть, -ю, -ешь, -ют *несов.*; **вы́е|хать**, -ду, -дешь, -дут *сов.* ออก[จาก], ออกเดินหาง; вы́ехать из ле́са на доро́гу ออกจากป่าสู่(ถ๊น)หาง; вы́ехать из го́рода ออกจากถิวเมือง; вы́ехать за грани́цу ออกเดินหางไปต่างปะเทด; по воскресе́ньям мы выезжа́ем за́ город ตามปิกะติพอกเฮาไปนอกเมืองในวันอาทิด

вы́ехать *см.* выезжа́ть

вы́звать *см.* вызыва́ть

выздора́влива|ть, -ю, -ешь, -ют *несов.*; **вы́здорове|ть**, -ю, -ешь, -ют *сов.* หายพะยาด, ดี, ได; мой знако́мый выздора́вливает мú друга́ мой знако́мый выздора́вливает ทมู่ข้อยไดแด่(ถ่อยเช้าไข้); мой брат уже́ вы́здоровел อ้ายของข้อยดี(เช้าไข้)แล้ว

вы́здороветь *см.* выздора́вливать

вы́зов, -а *м* การเอิ้น(ธงก)ใช้มา(ไป); вы́зов врача́ на́ дом การเอิ้นแพดมาเธือน; вы́зов свиде́телей в суд ธงกถิวพะยานไปสาน; без вы́зова не входи́ть! ห้ามเข้าห้องก่อนรับอะนุยาด!

вызыва́|ть, -ю, -ешь, -ют *несов.*; **вы́звать**, **вы́зов|у**, -ешь, -ут *сов.* 1 *кого-что* เอิ้นใช้มา(ไป), ธงกใช้มา(ไป), บอกใช้มา(ไป); вызыва́ть врача́ из поликли́ники เอิ้นแพดมาจากโธงหมอกอดพะยาด; вы́звать дире́ктора в министе́рство เอิ้นผู้อำนวยการไปกะสวง; вы́звать в суд ธงกไปสาน; вы́звать ученика́ к доске́ เอิ้นนักธงออกกะดานดำ, เชินนักธงไปหากะดานดำ 2 *кого на что и с неопр.* เชิน, สวน; вы́звать кого́-нибудь на соревнова́ние เชินสวนใช้เข้ามา

ແຂ່ງຂັນກັນ 3 *что* ເຮັດໃຫ້, ເປັນເຫດ, ພາໃຫ້ເກີດ; вызыва́ть (вы́звать) ра́дость ພາໃຫ້ເກີດຄວາມຊື່ນໃຈ; вызыва́ть (вы́звать) улы́бку ພາໃຫ້ຍິ້ມແຍ້ມ; вызыва́ть (вы́звать) любопы́тство (сочу́вствие) ພາໃຫ້ເກີດຄວາມຢາກຮູ້ຢາກເຫັນ (ຄວາມເຫັນອົກເຫັນໃຈ); его́ посту́пки вызыва́ют удивле́ние ກິລິຍາທ່າທາງຂອງຜູ້ນັ້ນເປັນຕາແປກປະຫລາດໃຈ; э́ти слова́ вы́звали смех в за́ле ຄວາມເວົ້າເຫລົ່ານີ້ເຮັດໃຫ້ຜູ້ຟັງຫົວ

вы́играть *см.* выи́грывать

выи́грыва|ть, -ю, -ешь, -ют *несов.*; **вы́игра|ть,** -ю, -ешь, -ют *сов.*; *что* ໄດ້ກີນ (ກິລາ); [ເອົາ]ຊະນະ; ກຶກ; вы́играть па́ртию в ша́хматы ຊະນະຫມາກເສີກ; вы́играть бой (сраже́ние) ເອົາຊະນະໃນການສູ້ຮັບ

вы́йти *см.* выходи́ть

выключа́|ть, -ю, -ешь, -ют *несов.*; **вы́ключ|ить,** -у, -ишь, -ат *сов.*; *что* ອັດ, ປິດ, ມອດ, ດັບ, ຫ້ານ, ຕັດ; выключа́ть (вы́ключить) мото́р ມອດຈັກ; выключа́ть (вы́ключить) ра́дио (телеви́зор) ປິດ (ອັດ) ວິທະຍຸ (ໂທລະພາບ); выключа́ть свет ມອດ (ອັດ) ໄຟຟ້າ; выключа́ть газ ອັດ (ປິດ) ອາຍໄຕ້

вы́ключить *см.* выключа́ть

вы́копать *см.* копа́ть 2, 3

вы́красить *см.* кра́сить

вы́купаться *см.* купа́ться

вылета́|ть, -ю, -ешь, -ют *несов.*; **вы́ле|теть,** -чу, -тишь, -тят *сов.* ບິນອອກ; пти́ца вы́летела из гнезда́ ນົກບິນອອກຈາກຮັງ; мы вылета́ем за́втра у́тром ພວກເຮົາຈະຂຶ້ນເຮືອບິນໄປມື້ອື່ນເຊົ້າ

вы́лететь *см.* вылета́ть

вы́лечить(ся) *см.* лечи́ть(ся)

вылива́|ть, -ю, -ешь, -ют *несов.*; **вы́лить,** вы́ль|ю, -ешь, -ют *сов.*; *что* ເຫຍັ້ນ, ຫຍົ້ນ, ເທ, ກອກ; вылива́ть во́ду из стака́на ເຫຍັ້ນນ້ຳອອກຈາກຈອກ

вы́лить *см.* вылива́ть

вы́мыть(ся) *см.* мы́ть(ся)

вы́нести *см.* выноси́ть

вынима́|ть, -ю, -ешь, -ют *несов.*; **вы́н|уть,** -у, -ешь, -ут *сов.*; *что* ເອົາອອກ, ຈົກເອົາ; вынима́ть де́ньги из кошелька́ ຈົກເອົາເງິນອອກຈາກກົງເງິນ; вы́нуть ключ из карма́на ຈົກເອົາກະແຈອອກຈາກກະເປົ້າ; вы́нуть газе́ты из почто́вого я́щика ເອົາຫນັງສືພິມອອກຈາກຕູ້ໄປສະນີ

выно|си́ть, -шу́, выно́с|ишь, -ят *несов.*; **вы́нес|ти,** -у, -ешь, -ут (*прош.* вы́нес, -ла, -ло, -ли) *сов.* **1** *кого-что* ເອົາອອກ; вы́нести ме́бель из ко́мнаты ເອົາເຄື່ອງເຮືອນອອກຈາກຫ້ອງ; вы́нести цветы́ на балко́н ເອົາດອກໄມ້ໄປໄວ້ລະບຽງ; носи́льщик выно́сит ве́щи из ваго́на ຄົນຂົນຂອງເອົາເຄື່ອງຂອງອອກຈາກຕູ້ **2** *что* ຜ່ານ, ສະແດງ, ຕັດສິນ; выноси́ть (вы́нести) благода́рность ສະແດງຄວາມຍ້ອງຍໍ

(ຊົມເຊີຍ); выноси́ть (вы́нести) постановле́ние ພ່ານມະຕິ, ອອກຄຳຕັດສິນ; выноси́ть (вы́нести) реше́ние ຕົກລົງ, ພ່ານຂໍ້ຕົກລົງ; выноси́ть (вы́нести) приго́вор ຕັດສິນ[ຄະດີ] 3 *что* ອົດ ກັ້ນ, ອົດທົນ, ທົນທານ, ພ່ານພ້ານ; вы́нести любо́е испыта́ние ພ່ານພ້ານການທົດສອບທຸກ ຮູບແບບ; он хорошо́ выно́сит жару́ ລາວອົດທົນ ຄວາມຮ້ອນໄດ້ດີ; я не выношу́ гру́бого то́на ຂ້ອຍອົດຕໍ່ຄຳເວົ້າທີ່ຫຍາບຊ້ຳບໍ່ໄດ້

выно́слив|ый, -ая, -ое, -ые ທີ່ອົດທົນໄດ້; вы́но́сливое живо́тное ສັດນ້ອົດທົນໄດ້ດີ

вы́нуть *см.* вынима́ть

вы́писать *см.* выпи́сывать

выпи́сыва|ть, -ю, -ешь, -ют *несов.*; **вы́пи|сать,** -шу, -шешь, -шут *сов.*; *что* 1 ຄັດຈ້ອນ ເອົາ, ເລືອກຈົດເອົາ, ກ່າຍເອົາ; выпи́сывать отде́льные да́нные из докла́да ກ່າຍເອົາຂໍ້ມູນບາງ ອັນອອກຈາກບົດລາຍງານ; выпи́сывать из те́кста незнако́мые слова́ ເລືອກຈົດເອົາຄຳສັບ ໃຫມ່ອອກຈາກບົດ 2 ຂຽນ, ເຮັດ; выпи́сывать (вы́писать) счёт ເຮັດບັນຊີ 3 ຈອງ; выпи́сывать газе́ты ຈອງຫນັງສືພິມ; вы́писать на́ год журна́л «Нау́ка и жизнь» ບອກເປັນສະມາ ຊິກວາລະສານ «ວິທະຍາສາດກັບຊີວິດ» ເປັນ ເວລາຫນຶ່ງປີ

вы́пить *см.* пить

выполне́ни|е, -я (*мн. нет*) *с* ການປະຕິບັດ, ການເຮັດຫລ້ອນ, ການສຳເລັດ; выполне́ние пла́на ການປະຕິບັດຕາມແຜນການ

вы́полнить *см.* выполня́ть

выполня́|ть, -ю, -ешь, -ют *несов.*; **вы́пол|нить,** -ю, -ишь, -ят *сов.*; *что* ປະຕິບັດ, ເຮັດຫລ້ອນ, ສຳເລັດ; выполня́ть (вы́полнить) зада́ние ເຮັດຫລ້ອນ(ສຳເລັດ) ຫນ້າທີ່; выполня́ть (вы́полнить) рабо́ту ເຮັດວຽກແລ້ວ; я вы́полню ва́ше поруче́ние ຂ້ອຍຈະປະຕິບັດ ຕາມຄວາມມອບຫມາຍຂອງເຈົ້າໃຫ້ໄດ້; он вы́полнил своё обеща́ние ລາວຮັກສາຄວາມເວົ້າ (ຄຳຫມັ້ນສັນຍາ)ຂອງຕົນໄດ້

вы́пуск, -а *м* ການຜະລິດ; увели́чить вы́пуск това́ров для населе́ния ເພີ່ມທະວີການຜະ ລິດສິນຄ້າສຳລັບປະຊາຊົນ

выпуска́|ть, -ю, -ешь, -ют *несов.*; **вы́пу|стить,** -щу, -стишь, -стят *сов.* 1 *кого-что* ປ່ອຍອອກ, ສົ່ງອອກ; вы́пустить ко́шку из ко́мнаты ປ່ອຍແມວອອກຈາກຫ້ອງ; выпуска́ть во́ду из ва́нны ປ່ອຍ (ລະບາຍ) ນ້ຳອອກ ຈາກອ່າງນ້ຳ 2 *кого* ສົ່ງ; институ́т выпуска́ет большо́е коли́чество специали́стов ມະຫາວິທະ ຍາໄລສົ່ງນັກຊ່ຽວຊານອອກ ເປັນຈຳນວນ ຫລາຍ; учи́лище выпуска́ет офице́ров ໂຮງ ຮຽນນ້ສົ່ງນາຍທະຫານ 3 *что* ຜະລິດ; выпуска́ть автомоби́ли ຜະລິດລົດ; заво́д вы́пустил телеви́зор но́вой ма́рки ໂຮງງານຜະລິດ

ເຄື່ອງໂທລະພາບຍີ່ຫໍ້ໃຫມ່ 4 *что* ພິມຈຳ ຫນ່າຍ ; выпуска́ть кни́ги (газе́ты, журна́лы) ພິມຈຳຫນ່າຍປື້ມ (ຫນັງສືພິມ, ວາລະສານ)

вы́пустить *см.* выпуска́ть

выраба́тыва|ть, -ю, -ешь, -ют *несов.*; **вы́работа|ть,** -ю, -ешь, -ют *сов.*; *что* 1 ຜະລິດ ; выраба́тывать электроэне́ргию ຜະລິດໄຟຟ້າ ; выраба́тывать проду́кцию отли́чного ка́чества ຜະລິດສິນຄ້າທີ່ມີຄຸນນະພາບດີເລີດ 2 ວາງ, ກຳນົດ ; полити́ческая ли́ния, вы́работанная съе́здом па́ртии ແນວທາງນະໂຍບາຍທີ່ກອງ ປະຊຸມໃຫຍ່ຂອງພັກໄດ້ວາງອອກ (ກຳນົດ)

вы́работать *см.* выраба́тывать

выража́|ть, -ю, -ешь, -ют *несов.*; **вы́ра|зить,** -жу, -зишь, -зят *сов.*; *что* 1 ສະແດງ, ບົ່ງ ບອກ, ເວົ້າເກຼິງ, ປະກົດ ; выража́ть (вы́разить) возмуще́ние ສະແດງຄວາມຄຽດແຄ້ນ ; её лицо́ выража́ло ра́дость ນາງຫນ້າຊື່ນຕາ ບານ, ສີຫນ້າຂອງນາງສະແດງຄວາມເບີກບານ ມ່ວນຊື່ນ 2 ສະແດງ, ອອກ ; выража́ть о́бщее мне́ние ສະແດງຄວາມເຫັນລວມ ; вы́разить свою́ мысль кра́тко и то́чно ສະແດງ (ອອກ) ຄວາມຄິດຂອງຕົນຢ່າງກະທັດລັດແລະຄັກແນ່ ; выража́ть благода́рность това́рищам ສະແດງ ຄວາມຂອບອົກຂອບໃຈມາຍັງຫມູ່ເພື່ອນ

выража́|ться, -юсь, -ешься, -ются *несов.*; **вы́ра|зиться,** -жусь, -зишься, -зятся *сов.* 1 (*1 и 2 л. не употр.*) ປະກົດ, ເຫັນ, ສະ ແດງອອກ ; на его́ лице́ вы́разилось удивле́ние ໃບຫນ້າຂອງລາວປະກົດແປກປະຫລາດ 2 ເວົ້າ, ອອກປາກ ; выража́ться то́чно и кра́тко ເວົ້າຢ່າງຫຍໍ້ໆແລະຊັດເຈນ

выраже́ни|е, -я *с* 1 ສີຫນ້າ, ແສງຕາ ; выраже́ние глаз ແສງຕາ, ແວວຕາ ; споко́йное выраже́ние лица́ ສີຫນ້າສະຫງົບສະຫງຽມ 2 ສຳນວນ, ທຳນອງເວົ້າ, ກ້ອຍຄຳ ; употребля́ть в свое́й ре́чи наро́дные выраже́ния ໃຊ້ ສຳນວນປະຊາຊົນໃນການເວົ້າຂອງຕົນ ◇ с выраже́нием ຢ່າງຈັບໃຈ ; чита́ть с выраже́нием ອ່ານເປັນວັກເປັນຕອນ, ອ່ານຢ່າງກຼົກທຳນອງ

вырази́тельно *нареч.* ຢ່າງຈັບໃຈ ; вырази́тельно чита́ть ອ່ານເປັນວັກເປັນຕອນ, ອ່ານ ຢ່າງກຼົກທຳນອງ

вырази́тельн|ый, -ая, -ое, -ые; вырази́телен, вырази́тельн|а, -о, -ы ທີ່ຈັບໃຈ, ທີ່ມີ ຄວາມຫມາຍ ; вырази́тельное лицо́ ໃບຫນ້າ ທີ່ມີຊີວິດຊີວາ ; вырази́тельные глаза́ ສາຍຕາ ທີ່ມີແວວ ; вырази́тельная речь ຄຳເວົ້າທີ່ມີໂຕງ ໂຕຍ

вы́разить(ся) *см.* выража́ть(ся)

вы́расти *см.* расти́

вы́растить *см.* выра́щивать

выра́щива|ть, -ю, -ешь, -ют *несов.*; **вы́ра|стить,** -щу, -стишь, -стят *сов.*; *кого-что* ປູກ, ລ້ຽງ, ລ້ຽງເກືອ, ລ້ຽງດູ, ບຳລຸງ ກໍ່ສ້າງ ; выра́щивать о́вощи (цветы́) ປູກຜັກ (ດອກໄມ້) ; вы́растить хоро́ший урожа́й ປູກເຂົ້າໄດ້ຜົນດີ ; вы́растить сы́на ລ້ຽງລູກ [ໃຫຍ່]

вы́рыть *см.* рыть

24/VII ภาษาลัยศิลปากร

вы́сморкаться *см.* сморка́ться

высо́к|ий, -ая, -ое, -ие; высо́к, высока́, высо́ко *и* высоко́, высоки́ *и* высо́ки (*сравн. ст.* вы́ше) 1 ສູງ, ໃຫຍ່, ໂຕ; высо́кие дома́ ເຮືອນສູງ; высо́кие дере́вья ກົກໄມ້ສູງ; высо́кая гора́ ພູສູງ; высо́кий лоб ຫນ້າຜາກສວຍ (ໃນ); высо́кий челове́к ຄົນສູງ; челове́к высо́кого ро́ста ຄົນຮູບຮ່າງສູງ 2 ສູງ; высо́кий урожа́й ຜົນລະປູກຫລາຍ; высо́кое давле́ние ຄວາມດັນສູງ; высо́кая температу́ра ອຸນຫະພູມສູງ; производи́тельность труда́ ста́ла вы́ше ສະມັດຖະພາບແຮງງານເພີ່ມຂຶ້ນກວ່າເກົ່າ 3 ສູງ; высо́кая оце́нка ຄະແນນສູງ, ການຕີລາຄາສູງ; това́ры высо́кого ка́чества ສິນຄ້າຄຸນນະພາບສູງ; высо́кое мастерство́ ຄວາມຊໍານານແບບນຸ່ນ 4 ສູງ, ອາວຸໂສ, ສູງສົ່ງ; высо́кая награ́да ລາງວັນສູງສຸດ; высо́кое зва́ние ນາມມະຍົດສູງ; высо́кое зва́ние Геро́я Социалисти́ческого Труда́ ນາມມະຍົດວິລະຊົນແຮງງານສັງຄົມນິຍົມ; высо́кие го́сти ແຂກຊັ້ນສູງ, ແຂກຊັ້ນອາວຸໂສ

высоко́ *и* **высо́ко** (*сравн. ст.* вы́ше) *нареч.* (*где? и куда?*) ຢູ່ສູງ; высоко́ над землёй ຢູ່ສູງເທິງຫນ້າດິນ; жить высоко́ в гора́х ຢູ່ດາມກຶ່ນພູສູງ; подня́ться высоко́ в го́ры ບິນຂຶ້ນເທິງພູສູງ; ла́мпа вися́т высоко́ над столо́м ໂຄມໄຟຫ້ອຍສູງເທິງຫນ້າໂຕະ

высот|а́, -ы́ (*мн. нет*) *ж* 1 ຄວາມ (ລວງ)ສູງ; высота́ до́ма ລວງສູງຂອງເຮືອນ; высота́ горы́ ຄວາມສູງຂອງພູ; де́рево высото́й в пять ме́тров ກົກໄມ້ສູງຫ້າແມັດ; изме́рить высоту́ ко́мнаты ແທກລວງສູງຂອງຫ້ອງ 2 ຄວາມສູງ; высота́ полёта ຄວາມສູງຂອງການບິນ, ເພດານບິນ; лете́ть на небольшо́й высоте́ ບິນບໍ່ສູງປານໃດ; находи́ться на высоте́ двух ты́сяч ме́тров ຢູ່ສູງສອງພັນແມັດ; па́дать с большо́й высоты́ ຕົກຈາກລະດັບສູງ

вы́сохнуть *см.* высыха́ть, со́хнуть

вы́сп|аться, -люсь, -ишься, -ятся *сов.* ນອນອີ່ມ; я не вы́спался ຂ້ອຍນອນບໍ່ອີ່ມ (ພໍ)

вы́ставк|а, -и (*мн.* вы́став|ки, -ок, -кам) *ж* ການວາງສະແດງ; худо́жественная вы́ставка ການວາງສະແດງສິລະປະ; Вы́ставка достиже́ний наро́дного хозя́йства в Москве́ ການວາງສະແດງຜົນສໍາເລັດຂອງເສດຖະກິດແຫ່ງຊາດຢູ່ໃນນະຄອນມົດສະກູ; откры́ть вы́ставку ເປີດ(ໄຂ) ການວາງສະແດງ; закры́ть вы́ставку ປິດ(ອັດ) ການວາງສະແດງ; пойти́ на вы́ставку ໄປຊົມການວາງສະແດງ; посети́ть вы́ставку ຢ້ຽມຢາມການວາງສະແດງ

вы́стирать *см.* стира́ть II

вы́стрел, -а *м* ການ (ສຽງ) ຍິງ; произвести́ вы́стрел ຍິງ[ນັດຫນຶ່ງ]; уби́ть зве́ря одни́м вы́стрелом ຍິງສັດໃຫ້ຕາຍນັດດຽວ; услы́шать гро́мкие вы́стрелы ໄດ້ຍິນສຽງປືນດັງໆ

вы́стрел|ить, -ю, -ишь, -ят *сов.* ยิง; вы́стрелить из ружья́ ยิง (ลั่น) ปืน

выступа́|ть, -ю, -ешь, -ют *несов.*; **вы́ступ|ить,** -лю, -ишь, -ят *сов.* **1** ก่าว, เว้า, ออก [ความเห็น], บันยาย, ปาไส, สะแดง; выступа́ть на собра́нии ก่าวต่ำกองปะชุม, ออกความเห็นต่ำหน้ากองปะชุม; выступа́ть с ле́кцией ก่าวคำบันยาย; выступа́ть с докла́дом สะเหนิ(อ่าน)ลายงาน; вы́ступить с конце́ртом สะแดงสิละปะอันนะถะกี; вы́ступить пе́ред микрофо́ном เว้าใส่มิกะโล; здесь выступа́ет изве́стная певи́ца นักร้องเพาผู้มีชื่อสะแดงอยู่ที่นี้; арти́сты вы́ступили с но́вой програ́ммой พวกสิละปะกอบได้สะแดงลายการใหม่ **2** ออก; отря́д вы́ступил в похо́д กองทะหานยิกทับไป

вы́ступить *см.* выступа́ть

выступле́ни|е, -я *с* บิก (คำ) ปาไส, สุนทอบพิด, คำก่าว, การสะแดง; интере́сное выступле́ние บิกปาไสที่หน้าสินใจ; выступле́ние мини́стра по ра́дио บิกปาไสทางวิทะยุของลัดกะมนตี; выступле́ние арти́стов การสะแดงของพวกสิละปะกอบ

вы́сушить *см.* суши́ть

вы́сш|ий, -ая, -ее, -ие **1** สูงสุด; вы́сший сорт ชะนิดดีที่สุด; вы́сшая оце́нка (награ́да) คะแนน (ลางวัน) สูงสุด; това́ры вы́сшего

ка́чества สินค้าคุนนะพาบสูงที่สุด **2** สูงสุด; вы́сший о́рган госуда́рственной вла́сти อิง การบิกคองสูงสุด; вы́сшее во́инское зва́ние ยิดทะหานสูงสุด **3** ชั้นสูง, ขั้นสูง; вы́сшая матема́тика วิชาเลกขั้นสูง; вы́сшее образова́ние การสึกสาชั้นสูง

высыха́|ть, -ю, -ешь, -ют *несов.*; **вы́сох|нуть,** -у, -ешь, -ут (*прош.* вы́сох, -ла, -ло, -ли) *сов.* เหือด, แห้ง; бельё вы́сохло เสื่องนุ่งแห้งแล้ว; лу́жи высыха́ют น้ำท้ำ ใกจะแห้ง

выта́скива|ть, -ю, -ешь, -ют *несов.*; **вы́тащ|ить,** -у, -ишь, -ат *сов.* **1** *кого-что* เอิ ออก, แก่ออก, ดึงออก, ทอนออก; вы́тащить ло́дку на бе́рег ดึงเรือขึ้นบก; вы́тащить шкаф из ко́мнаты ยกตู้ออกจากห้อง **2** *что* จกเอิ; выта́скивать ру́чку из портфе́ля จกเอิปากกาออกจากกะเป๋า; вы́тащить плато́к из карма́на จกเอิแพมิน ออกจากกางเสอ

вы́тащить *см.* выта́скивать

вы́тереть(ся) *см.* вытира́ть(ся)

вытира́|ть, -ю, -ешь, -ют *несов.*; **вы́тереть,** вы́тр|у, -ешь, -ут (*прош.* вы́тер, -ла, -ло, -ли) *сов.*; *кого-что* เช็ด, บัด; вытира́ть ру́ки полоте́нцем เอิผ้าเช็ดมือ; вытира́ть посу́ду เช็ดก้วยจาม; вытира́ть пыль со стола́ บัดฝุ่นออกโตะ; вытира́ть стол เช็ดโตะ

вытира́|ться, -юсь, -ешься, -ются *несов.*;

вы́тереться, вы́тр|усь, -ешься, -утся (*прош.* вы́тер|ся, -лась, -лось, -лись; *повел.* вы́трись) *сов.* ເຊັດຫນ້າ, ເຊັດຕົວ; вы́тереться полоте́нцем ເອົາຜ້າເຊັດຫນ້າ (ຕົວ)

вы́учить(ся) *см.* учи́ть(ся) 2

вы́ход, -а *м* 1 ການພິມອອກຈຳຫນ່າຍ, ການອອກ; вы́ход кни́ги ການພິມອອກຈຳຫນ່າຍປຶ້ມ 2 ທາງອອກ, ປະຕູອອກ; вы́ход из метро́ ທາງອອກຈາກລົດໃຕ້ດິນ; стоя́ть у вы́хода ຢືນຢູ່ຂ້າງປະຕູອອກ; вы́ход с вокза́ла в го́род—нале́во ທາງອອກຈາກສະຖານີລົດໄຟໄປສູ່ຕົວເມືອງຢູ່ເບື້ອງຊ້າຍ 3 ທາງອອກ, ການລອດຕົວ; иска́ть вы́ход из тру́дного положе́ния ຫາວິທີເອົາຕົວລອດຈາກຄວາມຍັດຕະຄັດ; найти́ вы́ход ຫາທາງອອກໄດ້

выхо|ди́ть, -жу́, выхо́д|ишь, -ят *несов.*; **вы́йти,** вы́йд|у, -ешь, -ут (*прош.* вы́ш|ел, -ла, -ло, -ли) *сов.* 1 ອອກ, ລົງ; выходи́ть (вы́йти) из до́ма (из ко́мнаты) ອອກຈາກເຮືອນ (ຫ້ອງ); выходи́ть (вы́йти) из авто́буса ລົງ [ຈາກ] ລົດເມ; охо́тники вы́шли из ле́са ນາຍພານອອກຈາກປ່າ 2 ອອກ, ຂຶ້ນ; вы́йти на бе́рег ຂຶ້ນບົກ; вы́йти в сад ອອກສວນ; выходи́ть на прогу́лку (на охо́ту) ອອກໄປຫລິ້ນ (ໄປລ່າເນື້ອ); арти́сты выхо́дят на сце́ну ນັກສະແດງອອກໂຮງ (ອອກເວທີ); кора́бль выхо́дит в мо́ре ກຳປັ່ນອອກທະເລ 3 (*1 и 2 л. не употр.*) ເກີດ, ມີຂຶ້ນ, ເປັນໄປ; вы́шла больша́я непри́ятность ເກີດເລື່ອງໃຫຍ່ຂຶ້ນ; всё вы́шло не так ທຸກສິ່ງທຸກຢ່າງບໍ່ເປັນແນວນັ້ນ, ທຸກສິ່ງທຸກຢ່າງບໍ່ສົມຫວັງ; из э́того ничего́ не вы́йдет ເລື່ອງນີ້ເປັນໄປບໍ່ໄດ້ 4 ໄດ້ເປັນ, ກາຍເປັນ; вы́йти победи́телем в соревнова́нии ໄດ້ເປັນຜູ້ຊະນະເລີດໃນການແຂ່ງຂັນ; из него́ вы́шел хоро́ший инжене́р ລາຍຜູ້ນັ້ນໄດ້ເປັນນັກວິສະວະກອນທີ່ດີ 5 ອອກຈຳຫນ່າຍ; журна́л выхо́дит ка́ждый ме́сяц ວາລະສານອອກຈຳຫນ່າຍທຸກເດືອນ; вы́шла из печа́ти но́вая кни́га ຫນັງສືໃຫມ່ອອກຈຳຫນ່າຍ (ວາງຕະຫລາດ) ແລ້ວ ◇ выходи́ть в отста́вку (на пе́нсию) ລາອອກຈາກຕຳແຫນ່ງ (ກິນເບ້ຍບຳນານ); выходи́ть (вы́йти) за́муж *за кого* ເອົາເຂົາເປັນເມຶຍ; она́ вы́шла за́муж за инжене́ра ນາງເອົາເມຶຍນັກວິສະວະກອນ; выходи́ть (вы́йти) из дове́рия ຫມົດຄວາມໄວ້ວາງໃຈ; выходи́ть (вы́йти) из мо́ды ພົ້ນສະໄຫມ; выходи́ть (вы́йти) из положе́ния ເອົາຕົວລອດ; выходи́ть (вы́йти) из себя́ ເສຍຫົວ, ເສຍອາລົມ; выходи́ть (вы́йти) из стро́я ຕົກຂັດ, ເພ; выходи́ть (вы́йти) из терпе́ния ຫມົດຄວາມອົດທົນ, [ເຫລືອອົກ] ເຫລືອໃຈ; выходи́ть (вы́йти) из употребле́ния ເຊົາໃຊ້; не́которые слова́ вы́шли из употребле́ния ບາງຄຳເຊົາໃຊ້ແລ້ວ; выходи́ть (вы́йти) на пе́рвое ме́сто ໄດ້ເປັນທີຫນຶ່ງ, ຊະນະເລີດ

выходн|о́й, -а́я, -о́е, -ы́е: выходно́й день ມື້ພັກ; в выходно́й день мы пойдём в теа́тр ພວກເຮົາຈະໄປເບິ່ງລະຄອນໃນມື້ພັກ; в Сове́тском Сою́зе два выходны́х дня — суббо́та и воскресе́нье ໃນສະຫະພາບໂຊວຽດມີມື້ພັກສອງມື້ຄືວັນເສົາແລະວັນອາທິດ

вы́честь *см.* вычита́ть

вы́чистить *см.* чи́стить 1

вычита́ни|е, -я (*мн. нет*) *с* ການລົບ; знать пра́вила сложе́ния и вычита́ния ຮູ້ກົດບວກ (ລົບ) ແລະລົບ; произвести́ вычита́ние ລົບ

вычита́|ть, -ю, -ешь, -ют *несов.*; **вы́честь**, вы́чт|у, -ешь, -ут (*прош.* вы́ч|ел, -ла, -ло, -ли) *сов.*; *что* ລົບ, ຫັກ; вы́честь из пяти́ два ຫ້າລົບສອງ

вы́ше *см.* высо́кий, высоко́

вы́яснить(ся) *см.* выясня́ть(ся)

выясня́|ть, -ю, -ешь, -ют *несов.*; **вы́ясн|ить**, -ю, -ишь, -ят *сов.*; *что* ສອບຖາມ, ສຳຫລວດ, ຊອກຮູ້; выясня́ть усло́вия ко́нкурса ສອບຖາມກົດລະບຽບການກວດສອບ; вы́яснить обстано́вку ສຳຫລວດເບິ່ງສະພາບການ

выясня́|ться, -ется, -ются *несов.*; **вы́ясн|иться**, -ится, -ятся *сов.* ເປັນອັນຄັກແນ່ (ຈະແຈ້ງ); всё вы́яснилось ທຸກສິ່ງທຸກຢ່າງຫາຍຄວາມສົງໄສແລ້ວ; вы́яснились подро́бности катастро́фы ລາຍລະອຽດຂອງອຸປະຕິເຫດຈະແຈ້ງແລ້ວ

вяза́ть, вяжу́, вя́ж|ешь, -ут *несов.*, *что* ຖັກ ຮ້ອຍ; вяза́ть ко́фту ຖັກຮ້ອຍເສື້ອ

Г

газ, га́за *м* 1 ອາຍ, ກ໊າດ; кислоро́д, водоро́д — э́то га́зы ອົກຊີແລະຮີໂດຼແມ່ນທາດອາຍ 2 ອາຍໄຕ້; провести́ в кварти́ру газ ນຳເອົາອາຍໄຕ້ເຂົ້າມາໃນເຮືອນ; включи́ть газ ເປີດ(ໄຂ) ອາຍ; вы́ключить газ ປິດ(ອັດ) ອາຍ; заже́чь (погаси́ть) газ ໄຕ້(ມອດ) ອາຍ

газе́т|а, -ы *ж* ຫນັງສືພິມ; ежедне́вная газе́та ຫນັງສືພິມລາຍວັນ; вече́рняя газе́та ຫນັງສືພິມ[ທ່ຽງ]ຕອນແລງ; выпи́сывать (чита́ть) газе́ту ຈອງ(ອ່ານ) ຫນັງສືພິມ; узна́ть из газе́т о полёте космона́втов ໄດ້ຮູ້ຂ່າວກ່ຽວກັບການບິນຂອງນັກບິນອະວະກາດຈາກຫນັງສືພິມ; постановле́ние опублико́вано в газе́те ມະຕິລະບຽບນີ້ລົງພິມໃນຫນັງສືພິມ

га́лстук, -а *м* ຜ້າພັນຄໍ, ກາລະຫວັດ; завя́зывать (носи́ть) га́лстук ມັດ(ໃສ່)ກາລະຫວັດ

◇ пионе́рский га́лстук ຜ້າພັນຄໍເຍົາວະຊົນບໍໂຊເນຍ



га́лстук



пионе́рский га́лстук

гара́ж, гаража́ (*мн.* гараж|и́, -е́й, -а́м) *м* ອູ່ລົດ; поста́вить маши́ну в гара́ж ຈອດລົດໄວ້ໃນອູ່; маши́на вы́ехала из гаража́ ລົດແລ່ນອອກຈາກອູ່

гара́нти|я, -и *ж* ການຮັບປະກັນ, ການຄ້ຳປະກັນ, ຫລັກປະກັນ; гара́нтия безопа́сности ຫລັກປະກັນຄວາມປອດໄພ; э́тот догово́р слу́жит гара́нтией ми́ра в Евро́пе ສົນທິສັນຍານີ້ເປັນຫລັກປະກັນສັນຕິພາບໃນເອີໂລບ

гардеро́б, -а *м* ຫ້ອງຝາກເຄື່ອງນຸ່ງ (ເສື້ອໃຫຍ່), ຕູ້ໃສ່ (ໄວ້) ເສື້ອ (ເຄື່ອງນຸ່ງ); разде́ться в гардеро́бе ຝາກເຄື່ອງໄວ້ໃນຫ້ອງຝາກເສື້ອ; оста́вить пальто́ в гардеро́бе ຝາກເສື້ອກັນຫນາວໃນຫ້ອງຝາກເຄື່ອງ; сдать пальто́ и шля́пу в гардеро́б ຝາກເສື້ອກັນຫນາວແລະຫມວກໄວ້ໃນຫ້ອງຝາກເຄື່ອງ; гардеро́б нахо́дится на пе́рвом этаже́ ຫ້ອງຝາກເຄື່ອງຢູ່ຊັ້ນຫນຶ່ງ (ຊັ້ນລຸ່ມ)

гарни́р, -а *м* ເຄື່ອງກິນໃສ່ນຳຊຶ້ນ (ປາ); овощно́й гарни́р ຜັກທີ່ກິນນຳຊຶ້ນ (ປາ); кот-ле́та с гарни́ром ຊຶ້ນປັ້ນໃສ່ຜັກ

ເອີ້ນລູກຊາຍເມືອເຮືອນ; звать кого́-нибудь
в го́сти (на прогу́лку) ເຊີນເຂົາມາຢາມ(ໄປ
ທ່ຽວ); позва́ть знако́мых в теа́тр ເຊີນຫມູ່ໄປ
ເບິ່ງລະຄອນ **2** (*тк. несов.*) ຊື່; как вас зову́т? *или* как вас звать? ເຈົ້າຊື່ຫຍັງ?, ເຈົ້າຊື່
ແນວໃດ?; меня́ зову́т Петро́м *или* меня́ зову́т Пётр ຂ້ອຍຊື່ປີໂອດ; её зва́ли А́нной
(А́нна) ນາງຊື່ອັນນາ

звезд|а́, -ы́ (*мн.* звёзды, звёзд) *ж* **1** ດາວ, ດາວາ; в а́вгусте на не́бе мно́го звёзд ໃນ
ເດືອນສິງຫາມີດວງດາວຫລາຍຢູ່ເທິງທ້ອງຟ້າ
2 ດາວ; нарисова́ть звезду́ ແຕ້ມຮູບດາວ; звёзды на ба́шнях Кремля́ в Москве́ ດາວຢູ່ເທິງ
ຫໍກະແລມແລ້ງໃນມົດສະກູ; «Золота́я Звезда́» — меда́ль Геро́я Сове́тского Сою́за «ດາວ
ຄຳ» ແມ່ນຫລຽນຄຳຂອງວິລະຊົນແຫ່ງສະ
ຫະພາບໂຊວຽດ; о́рден Кра́сной Звезды́
ຫລຽນໄຊ «ດາວແດງ»



звезда́

звен|е́ть, -и́т, -я́т *несов.* ດັງ; звени́т звоно́к ກະດິ່ງດັງ

зверь, зве́ря (*мн.* зве́ри, звере́й) *м* ສັດປ່າ; хи́щные зве́ри ສັດຮ້າຍ; я хочу́ посмотре́ть в
зоопа́рке звере́й ຂ້ອຍຢາກເບິ່ງສັດໃນສວນ
ສັດ

звон|и́ть, -ю́, -и́шь, -я́т *несов.*; **позвон|и́ть,** -ю́, -и́шь, -я́т *сов.* **1** ສັ່ນ, ບີບປຸ່ມ (ກະດິ່ງ);
откро́й дверь, кто́-то звони́т ໄຂປະຕູເດີ ມີຄົນ
ມາບີບປຸ່ມກະດິ່ງຢູ່ **2** ຕິ; звони́ть по телефо́ну
ຕິສາຍ, ໂທ[ລະສັບ]; я звони́л ему́ три ра́за, но не заста́л его́ до́ма ຂ້ອຍຕິສາຍຫາລາວ
ສາມເທື່ອແຕ່ວ່າລາວບໍ່ຢູ່; позвони́те мне от

трёх до четырёх часо́в ຕີສາຍຫາຂ້ອຍແຕ່ສາມ ຫາສີ່ໂມງແດ່

звóнк|ий, -ая, -ое, -ие; звóнок, звонкá, звóнк|о, -и (*сравн. ст.* звóнче) ກ້ອງ; звóнкий гóлос (смех) ສຽງປາກ(ຫົວ)ກ້ອງ; звóнкая пéсня ສຽງເພງກ້ອງ

звóнко (*сравн. ст.* звóнче) *нареч.* ດັງ, ກ້ອງ; звóнко петь (смеяться) ຮ້ອງເພງ(ຫົວ) ກ້ອງ

звон|óк, -кá *м* 1 ກະດິ່ງ; электри́ческий звонóк ກະດິ່ງໄຟຟ້າ; звонóк [у двере́й] не рабóтает ກະດິ່ງຕິດຂັດ 2 ສຽງກະດິ່ງ; шкóльный звонóк ສຽງກະດິ່ງໂຮງຮຽນ; звонóк к начáлу занáтий ສຽງກະດິ່ງຂຶ້ນຫ້ອງ; услы́шать звонóк ໄດ້ຍິນສຽງກະດິ່ງ; раздáлся звонóк ສຽງ ກະດິ່ງດັງຂຶ້ນ

звóнче *см.* звóнкий, звóнко

звук, звýка *м* [ນ້ຳ]ສຽງ; грóмкие звýки ສຽງດັງ; звук гóлоса ສຽງປາກ, ສຽງເວົ້າ; звук вы́стрела ສຽງປືນ; звук шагóв ສຽງບາດ ຕີນ; раздавáлись звýки мýзыки ມີສຽງດົນຕີ, ໄດ້ຍິນສຽງດົນຕີ

звуков|óй, -áя, -óе, -ы́е ສຽງ; звукови́й фильм ຮູບເງົາປາກ; звукови́е сигна́лы ສັນ ຍານສຽງ

звуч|áть, -и́т, -áт *несов.* ດັງຂຶ້ນ, ກ້ອງຂຶ້ນ, ໄດ້ຍິນ; грóмко звучи́т гитáра ໄດ້ຍິນສຽງກີ ຕ້າດັງໆ, ກີຕ້າສົ່ງສຽງດັງໆ; в кóмнате звучá-

ли голоса́ ໃນຫ້ອງໄດ້ຍິນສຽງປາກ; на у́лице звучи́т пе́сня ຂ້າງນອກໄດ້ຍິນສຽງເພງ

здáни|е, -я *с* ອາຄານ, ເຮືອນ, ໂຮງ, ຫໍ; обще́ственное здáние ເຮືອນສ່ວນລວມ, ໂຮງ ການ; ка́менное здáние ເຮືອນດິນ; здáние шко́лы ເຮືອນຂອງໂຮງຮຽນ; здáние в де́сять этаже́й ເຮືອນສິບຊັ້ນ; в э́том здáнии нахо́дится музе́й ເຮືອນນີ້ເປັນບ່ອນຕັ້ງພິພິດທະ ພັນ



здáние

здесь *нареч.* ທີ່ນີ້, ນີ້; я живу́ здесь давно́ ຂ້ອຍຢູ່ນີ້ດົນ; здесь о́чень краси́во ຢູ່ນີ້ງາມ ຫລາຍ; мо́жно оста́вить здесь свои́ ве́щи? ປະ ເຄື່ອງຂອງໄວ້ທີ່ນີ້ໄດ້ບໍ?

здоро́ва|ться, -юсь, -ешься, -ются *несов.*; **поздоро́ва|ться,** -юсь, -ешься, -ются *сов.* ທັກ ສະບາຍ, ທັກທາຍ; здоро́ваться за́ руку ຈັບມືສະບາຍກັນ; ученики́ поздоро́вались с учи́тельницей ນັກຮຽນທັກສະບາຍຄູ

здоро́в|ый, -ая, -ое, -ые; здоро́в, -а, -о, -ы ແຂງແຮງ, ສົມບູນ, ດີ; здоро́вый челове́к ຄົນແຂງແຮງ (ມີສຸຂະພາບດີ); здоро́вое се́рдце ຫົວໃຈທີ່ແຂງແຮງ; он до́лго боле́л, а тепе́рь здоро́в ລາວເຈັບດົນແຕ່ດຽວນີ້ດີແລ້ວ

здоро́вь|е, -я (*мн. нет*) *с* ສຸຂະພາບ; сла́бое здоро́вье ສຸຂະພາບອ່ອນເພຍ; бере́чь здоро́вье ຮັກສາສຸຂະພາບ; здоро́вье улучша́ется ສຸຂະພາບດີຂຶ້ນ(ໃຄຂຶ້ນ); как ва́ше здоро́вье? ເຈົ້າສະບາຍດີບໍ?

здра́вствуй[те] ສະບາຍດີ; здра́вствуй, Пётр ສະບາຍດີປີໂອດ; «Здра́вствуйте, ребя́та» — сказа́ла учи́тельница ຄູເວົ້າວ່າ «ສະບາຍດີນັກຮຽນ»

зелён|ый, -ая, -ое, -ые ຂຽວ; зелёная трава́ ຕົ້ນຫຍ້າສີຂຽວ; зелёный цвет ສີຂຽວ; зелёная кра́ска ນ້ຳສີຂຽວ; зелёное пла́тье ເສື້ອສີຂຽວ

земе́льн|ый, -ая, -ое, -ые ທີ່ດິນ; земе́льная рефо́рма ການປະຕິຮູບທີ່ດິນ

земледе́ли|е, -я (*мн. нет*) *с* ການເຮັດນາ, ການປູກຝັງ; занима́ться земледе́лием ເຮັດນາ, ປູກຝັງ

землетрясе́ни|е, -я *с* ແຜ່ນດິນໄຫວ; си́льное землетрясе́ние ແຜ່ນດິນໄຫວແຮງ; райо́н землетрясе́ния ເຂດກຶກແຜ່ນດິນໄຫວ; во вре́мя землетрясе́ния разру́шено мно́го домо́в ແຜ່ນດິນໄຫວເຮັດໃຫ້ເຮືອນເພັງຫລາຍຫລັງ

земл|я́, -и́, *вин.* зе́млю (*мн.* зе́мли, земе́ль, зе́млям) *ж* **1** (*мн. нет*) ຫນ່ວຍໂລກ; Земля́ дви́жется вокру́г Со́лнца и враща́ется вокру́г свое́й оси́ ຫນ່ວຍໂລກທັງຫມຸນວຽນອ້ອມພະອາທິດແລະປິ່ນຮອບຕົວ **2** (*мн. нет*) ດິນ [ນາ], ບົກ; земля́ и вода́ ດິນກັບນ້ຳ; моряки́ уви́дели зе́млю ລູກເຮືອໄດ້ເຫັນແຜ່ນດິນ **3** (*мн. нет*) ທີ່ດິນ; сесть на зе́млю ນັ່ງລົງຫນ້າດິນ; лежа́ть на земле́ ນອນດິນ, ນອນຢູ່ເທິງຫນ້າດິນ; обраба́тывать зе́млю ເຮັດນາ; паха́ть зе́млю ໄຖນາ; метро́ нахо́дится под землёй ລົດໃຕ້ດິນຢູ່ກ້ອງດິນ **4** ທີ່ດິນ, [ເຂດ]ນາ; колхо́зные зе́мли ເຂດນາຂອງສະຫະກອນ; владе́ть землёй ຍຶດຖືທີ່ດິນ

землян|о́й, -а́я, -о́е, -ы́е ດິນ; земляны́е рабо́ты ການຂຸດດິນ

земн|о́й, -а́я, -о́е, -ы́е ໂລກ; земно́й шар ຫນ່ວຍໂລກ; земна́я ось ແກນຫນ່ວຍໂລກ; земна́я пове́рхность ຫນ້າດິນ



земно́й шар

зе́ркал|о, -а (*мн.* зеркала́, зерка́л, зеркала́м) *с* ແວ່ນແຍງ; смотре́ть на себя́ в зе́ркало ສ່ອງແວ່ນແຍງເບິ່ງຕົນເອງ, ສ່ອງຫນ້າໃສ່ແວ່ນແຍງ; уви́деть себя́ в зе́ркале ເຫັນເງົາຂອງຕົນໃນແວ່ນແຍງ; зе́ркало виси́т на стене́ ແວ່ນແຍງຕິດຝາ

зерн|о́, -а́ (*мн.* зёр|на, -ен, -нам) *с* ເມັດ, ແກ່ນ, [ແນວ]ເຂົ້າ; зерно́ пшени́цы ເມັດເຂົ້າບະເລ; кру́пные (ме́лкие) зёрна ເມັດໃຫຍ່(ນ້ອຍ); ко́фе в зёрнах ແກ່ນກາເຟ

зим|á, -ы, *вин.* зи́му (*мн.* зи́мы, зим) *ж* ລະດູຫນາວ; до́лгая зима́ ຍາມຫນາວຍືນຍາວ; в э́том году́ холо́дная зима́ ລະດູຫນາວປີນີ້ອາກາດຫນາວຈັດ; зима́ наступи́ла ра́но ລະດູຫນາວມາໄວ; на́ зиму мно́гие пти́цы улета́ют на юг ນົກຫລາຍຊະນິດບິນຫນີໄປທາງພາກໃຕ້ພັກຍາມຫນາວ; мы всю зи́му ката́лись на лы́жах ພວກເຮົາຫລິ້ນສະກີຕະຫລອດລະດູຫນາວ

зи́мн|ий, -яя, -ее, -ие ຍາມຫນາວ; зи́мний ве́чер ຕອນແລງຍາມຫນາວ; зи́мнее вре́мя ຍາມຫນາວ; зи́мние кани́кулы ພັກຫນາວ (ພັກຮຽນຍາມຫນາວ); зи́мний спорт ກິລາຍາມຫນາວ; зи́мняя оде́жда ເຄື່ອງກັບຫນາວ

зимо́й *нареч.* ໃນລະດູຫນາວ; зимо́й бы́ло хо́лодно ໃນລະດູຫນາວອາກາດຫນາວຫລາຍ

зло, зла (*мн. нет*) *с* ຄວາມຮ້າຍ, ສິ່ງບໍ່ດີ; он никому́ не де́лает зла ລາວບໍ່ທຳຮ້າຍໃຜຈັກເທື່ອ

зло́б|а, -ы *ж* ຄວາມຫງຸດຫງິດ, ຄວາມຄຽດຮ້າຍ, ໂທສະ; испы́тывать зло́бу ຄຶດຄຽດ, ຄຶດຮ້າຍ

злой, зла́я, зло́е, злы́е; зол, зла, зло, злы 1 ຮ້າຍ [ກາດ], ໂຫດຮ້າຍ, ຊົ່ວຮ້າຍ; злой челове́к ຄົນໃຈຮ້າຍ; зла́я соба́ка ຫມາຮ້າຍ; зло́е лицо́ ໜ້າຮ້າຍ; зла́я насме́шка ການຫຍໍ້ຫຍັນ 2 (*тк. кратк. ф.*) ຄຽດ; я зол на него́ за его́ опозда́ние ຂ້ອຍຄຽດທີ່ລາວມາ

ຊ້າ; он зол на всех ລາວຄຽດໝົດທຸກຄົນ; сего́дня я о́чень зла ມື້ນີ້ຂ້ອຍຄຽດຮ້າຍຫລາຍ

зме|я́, -и́ (*мн.* зме́и, змеи́, зме́ям) *ж* ງູ; в траве́ ползёт змея́ ງູເລື້ອຢູ່ຕາມຫຍ້າ



змея́

знак, зна́ка *м* 1 [ເຄື່ອງ] ຫມາຍ, ກາ; знак сложе́ния (+) ຫມາຍບວກ (+); знак вычита́ния (—) ຫມາຍລົບ (-); знак деле́ния (:) ຫມາຍຫານ (:); знак умноже́ния (·) ຫມາຍຄູນ (·); поста́вить знак ра́венства (=) ຂຽນຫມາຍເທົ່າກັນ (=) ໄວ້; знак ка́чества проду́кции ການຄຸນນະພາບສິນຄ້າ; зна́ки отли́чия ຫລຽນກາ; зна́ки разли́чия ເຄື່ອງຫມາຍບອກຊັ້ນ; он рисова́л на листке́ каки́е-то зна́ки ລາວແຕ້ມເຄື່ອງຫມາຍໃດຫນຶ່ງໄວ້ເທິງຫນ້າເຈ້ຍ 2 ສັນຍານ; подава́ть знак руко́й ເຮັດສັນຍານດ້ວຍມື; де́лать зна́ки глаза́ми ເຮັດສັນຍານດ້ວຍຕາ; он сде́лал мне знак, что́бы я молча́л ລາວເຮັດສັນຍານບອກໃຫ້ຂ້ອຍນິ◇ в знак *чего* ເປັນອະນຸສອນ; в знак дру́жбы ເປັນອະນຸສອນມິດຕະພາບ; в знак проте́ста ເປັນການຄັດຄ້ານ, ເປັນການປະທ້ວງ; он кивну́л в знак согла́сия ລາວງຶກຫົວເຫັນດີນຳ

знако́м|иться, -люсь, -ишься, -ятся *несов.*; **познако́м|иться,** -люсь, -ишься, -ятся *сов.* 1 *с кем и без доп.* ລົ້ງ [ເຄີຍ], ຄົບກັບ, ລົ້ງແກ່ນ, ຮູ້ຈັກ; знако́миться с това́рищами по

рабóте ຮູ້ຈັກກັບເພື່ອນຮ່ວມງານ; онú познакóмились в экспедúции ພວກເຂົາລ້ຳເຄີຍກັນ ໃນເວລາທຳການສຳຫລວດ; мы познакóмились в прóшлом годý ພວກເຮົາຄົບກັນປີກາຍ 2 *с чем* ຊີມ, ເບິ່ງ, ຄົ້ນຄວ້າ; знакóмиться с гóродом ເບິ່ງຕົວເມືອງ; знакóмиться с услóвиями жúзни ຄົ້ນຄວ້າສະພາບການເປັນຢູ່; знакóмиться с обстанóвкой ສຳຫລວດສະພາບ ການ

знакóмств|о, -а *с* 1 ການລ້ຳເຄີຍ, ຄວາມ ຮູ້ຈັກ; прекращáть знакóмство с кéм-нибудь ເຊົາຄົບກັບເຂົາ; поддéрживать знакóмство с кéм-нибудь ຄົບກັບເຂົາ 2 ຄວາມຮູ້ຈັກ; знакóмство с рýсской литерáтурой ຄວາມຮູ້ຈັກວັນ ນະຄະດີລັດເຊຍ; знакóмство с мýзыкой ຄວາມ ຮູ້ຈັກດົນຕີ; знакóмство с истóрией нарóда ຄວາມຮູ້ຈັກປະຫວັດສາດຂອງປະຊາຊົນ

знакóм|ый, -ая, -ое, -ые; знакóм, -а, -о, -ы 1 ລ້ຳເຄີຍ, ລ້ຳແກ່ນ, ຮູ້ຈັກ; знакóмый человéк ຄົນລ້ຳເຄີຍ; знакóмая жéнщина ແມ່ ຍິງທີ່ລ້ຳເຄີຍ; мы знакóмы с дéтства ພວກ ເຮົາລ້ຳເຄີຍກັນແຕ່ໄວເດັກ; вы знакóмы с мои́м дрýгом? ເຈົ້າຮູ້ຈັກກັບຫມູ່ຂອຍ ບໍ? 2 *в знач. сущ.* **знакóм|ый,** -ого *м*; **знакóм|ая,** -ой *ж* ຄົນລ້ຳ [ເຄີຍ], ຄົນລ້ຳກັນ, ຫມູ່; встрéтить стáрого знакóмого ພົບຫມູ່ເກົ່າ; э́то моя́ знакóмая ນີ້ແມ່ນຜູ້ລ້ຳເຄີຍກັນກັບຂ້ອຍ; прú-

éхать к знакóмым ມາຢາມຫມູ່ທີ່ລ້ຳເຄີຍກັນ ທີ່ເຄີຍ; знакóмый гóрод ຕົວເມືອງທີ່ເຄີຍ ມາຢາມແລ້ວ; знакóмая мелóдия ທຳນອງ ເພງທີ່ເຄີຍໄດ້ຍິນແລ້ວ; знакóмое мéсто ບ່ອນ ທີ່ເຄີຍໄປແລ້ວ; э́та у́лица мне знакóма ຖະ ຫນົນນີ້ຂ້ອຍເຄີຍໄປແລ້ວ

знамени́т|ый, -ая, -ое, -ые ມີຊື່ສຽງ, ມີຊື່ ດັງດັງ, ລືຊາ, ລືຊື່; знамени́тый писáтель (путешéственник) ນັກປະພັນ (ນັກທ່ອງທ່ຽວ) ທີ່ລືຊື່; знамени́тый поэ́т ນັກກະວີຜູ້ມີຊື່ດັງ ດັງ; э́тот гóрод ничéм не знамени́т ເມືອງນີ້ ມີຊື່ສຽງຫຍັງ; наш гóрод знамени́т музéями ເມືອງຂອງພວກເຮົາລືຊື່ໃນດ້ານຫໍພິພິດທະ ພັນ

знáм|я, *род.*, *дат.*, *предл.* -ени, *твор.* -енем (*мн.* знамёна, знамён) *с* ທຸງ, ຄັນທຸງ, ຜືນທຸງ; крáсное знáмя ທຸງແດງ; нести́ знá-мя (знамёна) ຖືຄັນທຸງ; знáмя полкá (завóда) ຄັນທຸງປະຈຳກອງພົນນ້ອຍ (ປະຈຳໂຮງງານ); идти́ со знамёнами на демонстрáцию ແຫ່ຄັນ ທຸງເດີນຂະບວນ ◇ переходя́щее Крáсное знá-мя ທຸງໄຊຮອບວຽນ; завóд получи́л перехо-дя́щее Крáсное знáмя ໂຮງງານໄດ້ຮັບທຸງໄຊ ຮອບວຽນ

знáни|е, -я *с* 1 (*мн. нет*) ຄວາມເຂົ້າໃຈ, ຄວາມຮູ້ຈັກ; знáние жúзни страны́ ຄວາມເຂົ້າ ໃຈຊີວິດຂອງປະເທດ; рабóтать со знáнием

ЗНА

де́ла ເຮັດວຽກແບບຊຳນິຊຳນານ **2** (*тк. мн.*) ຄວາມຮູ້; нау́чные зна́ния ຄວາມຮູ້ທາງວິທະຍາສາດ; глубо́кие зна́ния в о́бласти иску́сства ຄວາມຮູ້ເລິກເຊິ່ງທາງດ້ານສິລະປະກຳ; получи́ть необходи́мые зна́ния ໄດ້ຮັບຄວາມຮູ້ທີ່ຈຳເປັນ; облада́ть зна́ниями ມີຄວາມຮູ້; переда-ва́ть свои́ зна́ния молоды́м специали́стам ຖ່າຍທອດຄວາມຮູ້ຂອງຕົນໃຫ້ນັກຊ່ຽວຊານ ຜູ້ຫນຸ່ມນ້ອຍ

знать, зна́|ю, -ешь, -ют *несов.* **1** *кого-что, о ком-чём* (*тж. со словами* где, когда́, куда́, кто, что *и т. п.*) ຮູ້, ຮູ້ຈັກ; я зна́ю а́дрес магази́на ຂ້ອຍຮູ້ບ່ອນຢູ່ຂອງຮ້ານຄ້າ; мы не зна́ем о после́дних собы́тиях ພວກເຮົາບໍ່ຮູ້ຂ່າວກ່ຽວກັບເຫດການໃຫມ່ໆ; он зна́ет, где мы живём ລາວຮູ້ວ່າ ພວກເຮົາຢູ່ບ່ອນໃດ, ລາວຮູ້ບ່ອນຢູ່ຂອງພວກເຮົາ; я зна́ю, что он прие́хал ຂ້ອຍຮູ້ວ່າລາວມາແລ້ວ **2** *кого-что* ຮູ້ຈັກ, ເຂົ້າໃຈ, ຮູ້; знать фи́зику ຮູ້ຈັກຟີຊິກ; знать литерату́ру и иску́сство ຮູ້ຈັກວັນນະຄະດີແລະສິລະປະກຳ; знать иностра́нные языки́ ຮູ້ພາສາຕ່າງປະເທດ; он хорошо́ знал устро́йство маши́ны ລາວຮູ້ລະບົບເຄື່ອງຈັກໄດ້ດີ **3** *кого* ຮູ້ຈັກ; мать зна́ет друзе́й сы́на ແມ່ຮູ້ຈັກຫມູ່ຄູ່ຂອງລູກຊາຍ; они́ давно́ зна́ют друг дру́га ພວກເຂົາຮູ້ຈັກກັນແຕ່ດົນ; я зна́ю его́ с де́тства ຂ້ອຍຮູ້ຈັກຄົນນັ້ນຕັ້ງແຕ່ຍັງເດັກ

значе́ни|е, -я *с* **1** ຄວາມຫມາຍ; значе́ние сло́ва ຄວາມຫມາຍຂອງຄຳ **2** (*мн. нет*) ຄວາມຫມາຍ, ຄວາມສຳຄັນ; истори́ческое значе́ние Вели́кой Октя́брьской социалисти́ческой револю́ции ຄວາມຫມາຍປະຫວັດສາດຂອງມະຫາປະຕິວັດສັງຄົມນິຍົມເດືອນຕຸລາ; име́ть большо́е значе́ние ມີຄວາມສຳຄັນຫລາຍ; э́то не име́ет значе́ния ອັນນີ້ບໍ່ມີຄວາມສຳຄັນ

значи́тельно *нареч.* (*при сравн. ст.*) ຫລາຍ; значи́тельно бо́льше ຫລາຍກວ່າ; значи́тельно ра́ньше ໄວກວ່າຫລາຍ, ເຊົ້າກວ່າຫລາຍ; значи́тельно ху́же ຊົ່ວກວ່າຫລາຍ; он значи́тельно ста́рше [своего́] дру́га ລາວມີອາຍຸລື່ນຫມູ່ຂອງຕົນຫລາຍ

значи́тельн|ый, -ая, -ое, -ые; значи́телен, значи́тельн|а, -о, -ы **1** ຫລາຍ; значи́тельная су́мма де́нег ເງິນກ້ອນໃຫຍ່; на значи́тельном расстоя́нии от го́рода ຫ່າງໄກຈາກຕົວເມືອງຫລາຍ; в значи́тельной ме́ре ຢ່າງຫລວງຫລາຍ, ສ່ວນຫລວງຫລາຍ **2** ສຳຄັນ; значи́тельные собы́тия ເຫດການສຳຄັນ; игра́ть значи́тельную роль ມີບົດບາດສຳຄັນ

зна́ч|ить, -ит, -ат *несов., что и без доп.* ຫມາຍຄວາມ; что зна́чит э́то сло́во? ຄຳນີ້ຫມາຍຄວາມວ່າຫຍັງ?

знач|о́к, -ка́ (*мн.* значк|и́, -о́в) *м* **1** ກາ (ເຄື່ອງຫມາຍ); комсомо́льский значо́к ກາກົມໂຊໂມນ; значо́к об оконча́нии университе́та ກາມະຫາວິທະຍາໄລ; он собира́л значки́

с гербáми городóв ລາວທ້ອນກາທີ່ມີເຄື່ອງ ຫມາຍຂອງຕົວເມືອງ 2 ເຄື່ອງຫມາຍ, ຂີດ ຫມາຍ; на листé бумáги бы́ли ци́фры и значки́ ຢູ່ເທິງຫນ້າເຈ້ຍຂຽນຕົວເລກແລະຂີດ ຫມາຍຕ່າງໆ



значóк

зóлот|о, -а (*мн. нет*) *с* ຄໍາ, ທອງ; добывáть зóлото ຂຸດຄໍາ; кольцó из зóлота ແຫວນ ຄໍາ ◇ на вес зóлота [ценúть] ແພງຄືຄໍາ

золот|óй, -áя, -óe, -ы́е ຄໍາ; золотáя медáль ຫລຽນຄໍາ; золотóе кольцó ແຫວນຄໍາ

зóн|а, -ы *ж* ເຂດ, ຂົງເຂດ; зóна лесóв, леснáя зóна ເຂດປ່າ; зóна óтдыха ເຂດພັກ ຜ່ອນ

зонт, -á *м* ຄັນຮົ່ມ, ຄັນຍູ, ຄັນຈ້ອງ; взять с собóй зонт ເອົາຄັນຮົ່ມໄປນໍາ; раскры́ть зонт ກາງຄັນຮົ່ມ; идти́ под зонтóм ຍ່າງກ້ັງຄັນຮົ່ມ


зонт

зóнтик, -а *м см.* зонт

зоологи́ческ|ий, -ая, -ое, -ие ສັດ; зоологи́ческий сад ສວນສັດ

зоолóги|я, -и (*мн. нет*) *ж* ສັດຕະວະສາດ; изучáть зоолóгию ຄົ້ນຄ້ວາສັດຕະວະສາດ

зре́л|ый, -ая, -ое, -ые 1 ສຸກ [ງອມ]; зре́лое я́блоко ຫມາກໂປມສຸກ 2 ຊໍານິຊໍານານ, ສົມບູນ; зре́лый челове́к ຄົນທີ່ເຕີບໃຫຍ່ ແລ້ວ; зре́лый ма́стер (худóжник) ນາຍຊ່າງ (ຊ່າງແຕ້ມຮູບ) ທີ່ຊໍານິຊໍານານ

зре́ни|е, -я (*мн. нет*) *с* ສາຍຕາ; хорóшее (плохóе) зре́ние ສາຍຕາດີ (ບໍ່ດີ); потеря́ть зре́ние ເສຍຕາ ◇ тóчка зре́ния ທັດສະນະ

зреть, зре́|ет, -ют *несов.*; **созре́|ть,** -ет, -ют *сов.* ສຸກ; я́блоки созре́ли ຫມາກໂປມສຸກແລ້ວ

зри́тел|ь, -я *м* ຜູ້ເບິ່ງ, ຜູ້ຊົມ, ແຂກ; встре́ча арти́стов со зри́телями ການພົບປະສັງ ສັນລະຫວ່າງນັກສະແດງກັບຜູ້ຊົມ; в теáтре бы́ло мнóго зри́телей ໃນໂຮງລະຄອນມີຜູ້ຊົມ ຫນາແຫນ້ນ; на плóщади собрала́сь толпá зри́телей ມີຝູງຊົນອັ່ງອໍຢູ່ກາງເດີ່ນ, ຢູ່ກາງ ເດີ່ນມີຝູງຊົນຫນາແຫນ້ນ

зря *нареч.* ລ້ວງ, ເປົ່າ, ບໍ່ໄດ້ຜົນ, ບໍ່ໄດ້ ການ; зря тра́тить вре́мя ເສຍເວລາລ້ວງ; он зря стара́лся ລາວໃຊ້ຄວາມພະຍາຍາມເສຍໄປ ລ້ວງ

зуб, зу́ба (*мн.* зу́бы, зубóв) *м* ແຂ້ວ; бе́лые зу́бы ແຂ້ວສີຂາວ; краси́вые зу́бы ແຂ້ວ ງາມ; чи́стить зу́бы ຜັກແຂ້ວ; боли́т зуб ເຈັບແຂ້ວ


зуб

зубн|о́й, -а́я, -о́е, -ы́е ແຂ້ວ; зубно́й врач ຫມໍ[ປິ]ແຂ້ວ; зубна́я боль ເຈັບແຂ້ວ; зубна́я щётка ຟອຍຜັກແຂ້ວ

И

и 1 *союз* ແລະ, ກັບ, ທັງ; оте́ц и де́ти ພໍ່ກັບລູກ, ພໍ່ແລະລູກ; он уме́ет чита́ть и писа́ть ລາວອ່ານໄດ້ຂຽນເປັນ; и в го́роде и в дере́вне ທັງໃນຕົວເມືອງແລະໃນຊົນນະບົດ; ко́мната была́ больша́я и све́тлая ຫ້ອງນີ້ທັງໃຫຍ່ແລະແຈ້ງ; ко́нчилось ле́то, и начали́сь дожди́ ລະດູຮ້ອນສິ້ນສຸດແລ້ວຝົນເລີ່ມຕົກ 2 *частица*: и как вы могли́ согласи́ться! ຈັ່ງແມ່ນເຈົ້າເຫັນດີຫວະ!; он и сам не рад ລາວເອງກໍບໍ່ພໍໃຈ; не могу́ и поду́мать об э́том ຈັ່ງແມ່ນຄິດແນວນີ້ກໍບໍ່ໄດ້

игл|а́, -ы́ (*мн.* и́глы, игл) *ж* 1 ເຂັມ; шить то́нкой игло́й ຫຍິບດ້ວຍເຂັມນ້ອຍ 2 ໃບ; сосно́вые и́глы ໃບໄມ້ແປກ

игол́к|а, -и (*мн.* игол́|ки, -ок, -кам) *ж см.* игла́; игол́ка с ни́ткой ເຂັມຮ້ອຍໄຫມຫຍິບ



игол́ка с ни́ткой

игр|а́, -ы́ (*мн.* и́гры, игр) *ж* 1 (*мн. нет*) ການຫລິ້ນ; игра́ с детьми́ ການຫລິ້ນກັບເດັກນ້ອຍ; игра́ арти́ста ການສະແດງຂອງສິລະປະກອນ; игра́ на роя́ле ການຫລິ້ນປີອາໂນ 2 ການຫລິ້ນ; де́тские и́гры ການຫລິ້ນເດັກນ້ອຍ; спорти́вные и́гры ການຫລິ້ນກິລາ; игра́ в хокке́й ການຫລິ້ນຕີຄີ (ນ້ຳກ້ອນ); игра́ на пе́рвенство страны́ по футбо́лу ການແຂ່ງຂັນເຕະບານຊິງຊະນະເລີດຂອງທົ່ວປະເທດ; соблюда́ть пра́вила игры́ ປະຕິບັດຕາມກົດລະບຽບການຫລິ້ນ (ແຂ່ງຂັນ)

игра́|ть, -ю, -ешь, -ют *несов.*; **сыгра́|ть,** -ю, -ешь, -ют *сов.* 1 (*тк. несов.*) ຫລິ້ນ; игра́ть с ко́шкой ຫລິ້ນກັບແມວ; игра́ть в ку́клы ຫລິ້ນກັບຕຸກກະຕາ; шко́льники игра́ют в саду́ ນັກຮຽນຫລິ້ນຢູ່ໃນສວນ 2 *во что* ຫລິ້ນ; игра́ть в волейбо́л ຫລິ້ນບານສົ່ງ; вы игра́ете в ша́хматы? ເຈົ້າຫລິ້ນຫມາກເລັກເປັນບໍ່? 3 *что, на чём* ຫລິ້ນ; игра́ть на гита́ре ຫລິ້ນ (ດີດ) ກີຕ້າ; игра́ть на скри́пке ສີຊໍ; сыгра́ть пе́рвый конце́рт Чайко́вского ຫລິ້ນເພງໂກນເຊັດທີຫນຶ່ງຂອງໄຊໂກບສະກີ 4 *что, в чём, на чём* ສະແດງ, ຫລິ້ນ; игра́ть в теа́тре ສະແດງໃນໂຮງລະຄອນ, ຫລິ້ນລະຄອນ; игра́ть на сце́не (в кино́) ສະແດງເທິງເວທີ (ໃນຮູບເງົາ); сыгра́ть гла́вную роль ເປັນພະເອກ, ສະແດງບົດບາດພະເອກ ◇ игра́ть (сыгра́ть) роль ຫລິ້ນ (ສະແດງ) ບົດບາດ

игро́к, игрока́ *м* ນັກຫລິ້ນ, ນັກສະແດງ; хоро́ший (плохо́й) игро́к ນັກຫລິ້ນເກັ່ງ (ບໍ່ດີ); игро́к в волейбо́л ນັກຫລິ້ນບານສົ່ງ; кома́нда из не́скольких игроко́в ຄະນະທີ່ປະກອບດ້ວຍນັກຫລິ້ນຫລາຍຄົນ

игру́шк|а, -и (*мн.* игру́ш|ки, -ек, -кам) *ж* ເຄື່ອງຫລິ້ນ, ຂອງຫລິ້ນ; де́тские игру́шки ເຄື່ອງຫລິ້ນເດັກນ້ອຍ; слома́ть игру́шку ເຮັດຂອງຫລິ້ນເພ (ແຕກ); купи́ть но́вую игру́шку ຊື້ເຄື່ອງຫລິ້ນໃຫມ່



игру́шки

идеа́л, -а *м* 1 ອຸດົມຄະຕິ; коммунисти́ческие идеа́лы ອຸດົມຄະຕິກອມມູນິດ 2 *чего и чей* ແບບຢ່າງ, ມາດ[ຕາ]ການ; идеа́л красоты́ ມາດ[ຕາ]ການຂອງຄວາມງາມ; э́тот челове́к — мой идеа́л ຄົນນີ້ເປັນແບບຢ່າງສໍາລັບຂ້ອຍ

идеали́зм, -а (*мн. нет*) *м* ຈິດຕະນິຍົມ

иде́йн|ый, -ая, -ое, -ые 1 ແນວຄິດ; иде́йная борьба́ ການຕໍ່ສູ້ທາງແນວຄິດ; иде́йное воспита́ние ການສຶກສາອົບຮົມທາງແນວຄິດ; иде́йный проти́вник ຜູ້ເປັນປໍລະປັກທາງແນວຄິດ, ຄູ່ແຂ່ງຂັນແນວຄິດ; высо́кий иде́йный у́ровень ລະດັບແນວຄິດອັນສູງ 2 ແນວຄິດ; иде́йное содержа́ние кни́ги ເນື້ອໃນທາງແນວຄິດຂອງປຶ້ມ

идеологи́ческ|ий, -ая, -ое, -ие ແນວຄິດ; идеологи́ческая борьба́ ການຕໍ່ສູ້ທາງແນວຄິດ; идеологи́ческое влия́ние ຜົນສະທ້ອນ (ອິດທິພົນ) ທາງແນວຄິດ; идеологи́ческие проти́вники ຜູ້ເປັນປໍລະປັກທາງແນວຄິດ, ຄູ່ແຂ່ງຂັນແນວຄິດ

идеоло́ги|я, -и *ж* ແນວຄິດ, ອຸດົມການ; маркси́стко-ле́нинская идеоло́гия ແນວຄິດມາກ-ເລນິນ; идеоло́гия пролетариа́та ແນວຄິດ (ອຸດົມການ)ຂອງຊົນຊັ້ນກໍາມາຊີບ

иде́|я, -и *ж* 1 ອຸດົມຄະຕິ, ອຸດົມການ, ຄວາມຄິດ; переде́вые иде́и ຄວາມຄິດກ້າວຫນ້າ; защища́ть иде́и революции ປົກປັກຮັກສາອຸດົມຄະຕິຂອງການປະຕິວັດ 2 ເນື້ອໃນ, ໃຈຄວາມ; иде́я рома́на (карти́ны, фи́льма) ເນື້ອໃນຂອງນະວະນິຍາຍ (ຮູບແຕ້ມ, ຮູບເງົາ)

идти́, иду́, идёшь, иду́т (*прош.* шёл, шла, шло, шли) *несов.* 1 ຍ່າງ, ເດີນ, ກ້າວ, ຍ່ອງ; идти́ бы́стро (ме́дленно) ຍ່າງໄວ (ຊ້າ); идти́ по у́лице (че́рез по́ле, вдоль бе́рега) ຍ່າງຕາມຖະຫນົນ (ຜ່ານທົ່ງ, ລງບຝັ່ງ); соба́ка шла за хозя́ином ຫມາຍ່າງຕາມຫລັງເຈົ້າຂອງ 2 (*1 и 2 л. не употр.*) ແລ່ນ, ລອຍ, ໄຫລ; по́езд идёт без остано́вок ລົດໄຟແລ່ນໄປບໍ່ຊ້າ; парохо́д шёл ме́дленно ກໍາປັ່ນແລ່ນຊ້າ; по ре-

ке́ идёт лёд ນ້ຳກ້ອນໄຫລຕາມກະແສນ້ຳ 3 ໄປ, ມາ; идти́ на рабо́ту ໄປການ; идти́ с рабо́ты ມາຈາກການ; идти́ в шко́лу ໄປໂຮງຮຽນ; идти́ из шко́лы ມາຈາກໂຮງຮຽນ; идти́ в теа́тр ໄປເບິ່ງລະຄອນ; идти́ в го́сти ໄປຢາມຫມູ່; идти́ гуля́ть ໄປທ່ຽວຫລິ້ນ; идти́ на охо́ту ໄປໂທ່ເນື້ອ; идти́ за я́годами ໄປເກັບຫມາກໄມ້; по́езд идёт че́рез час ອີກຊົ່ວໂມງຫນຶ່ງລົດໄຟຈະໄປ 4 ເດີນ [ທາງ]; идти́ по пути́ техни́ческого прогре́сса ເດີນຕາມເສັ້ນທາງແຫ່ງຄວາມກ້າວຫນ້າທາງດ້ານເຕັກນິກ; идти́ к наме́ченной це́ли ເດີນທາງໄປສູ່ເປົ້າຫມາຍທີ່ກຳນົດໄວ້ 5 (*1 и 2 л. не употр.*) ໄຫລ, ນອງ, ຮົ່ວ, ຂີ້ງ; кровь идёт из ра́ны ເລືອດໄຫລອອກຈາກບາດແຜ; от пе́чки шло тепло́ ເຕົາໄຟຂີ້ງອາຍອຸ່ນ 6 (*1 и 2 л. не употр.*) ເນັ່ງ, ໄປທາງ; доро́га идёт вверх ທາງຂຶ້ນ; грани́ца идёт по реке́ ຊາຍແດນເນັ່ງໄປຕາມລຳນ້ຳ; за ле́сом шло по́ле ທາງຫລັງປ່າໄມ້ມີທົ່ງນາ 7 (*1 и 2 л. не употр.*) ຜ່ານ, ໄປ; вре́мя идёт ме́дленно ເວລາຜ່ານໄປຊ້າ; го́ды иду́т ວັນປີຜ່ານໄປ; идёт втора́я неде́ля о́тпуска ເວລາພັກຜ່ອນກ້າວເຂົ້າອາທິດທີສອງແລ້ວ; шёл после́дний год войны́ ເປັນປີສຸດທ້າຍຂອງສົງຄາມ 8 (*1 и 2 л. не употр.*) ດຳເນີນ, ມີ; идёт разгово́р ມີການສົນທະນາ; ме́жду ни́ми идёт спор ພວກເຂົາກຳກຳລັງກັນ; в за́ле идёт собра́ние ໃນຫ້ອງໃຫຍ່ດຳເນີນກອງປະຊຸມ; рабо́та идёт хорошо́ ວຽກງານເປັນໄປດ້ວຍດີ; перегово́ры иду́т к концу́ ການເຈລະຈາໃກ້ຈະສິ້ນສຸດແລ້ວ; речь идёт о но́вом прое́кте ເວົ້າ(ຫມາຍ)ເຖິງໂຄງຮ່າງໃຫມ່ 9 (*1 и 2 л. не употр.*) ຕົກ; дождь идёт ຝົນຕົກ; шёл снег ຫິມະຕົກ 10 (*1 и 2 л. не употр.*) ສະແດງ, ສາຍ; в теа́тре идёт но́вая пье́са ໃນໂຮງລະຄອນສະແດງລະຄອນໃຫມ່; како́й фильм идёт сего́дня? ມື້ນີ້ສາຍຮູບເງົາເລື່ອງຫຍັງ? 11 (*1 и 2 л. не употр.*) *кому* ເຫມາະ; э́то пла́тье ей идёт ເສື້ອຜືນນີ້ເຫມາະກັບນາງ; шля́па ему́ не шла ຫມວກນັ້ນບໍ່ເຫມາะกับลาว

из *и* **изо** (*перед некоторыми словами с двумя согласными в начале*: изо рта, изо всех [сил] *и т. п.*) *предлог с род.* 1 ຈາກ, ແຕ່; выходи́ть из до́ма ອອກຈາກເຮືອນ; выходи́ть из авто́буса ລົງ [ຈາກ] ລົດເມ; выходи́ть из теа́тра ອອກຈາກໂຮງລະຄອນ; прие́хать из Москвы́ ມາແຕ່ມົດສະກູ; вы́нуть плато́к из карма́на ຈົກເອົາຜ້າເຊັດມືອອກຈາກກົງເສື້ອ, ຈົກເອົາຜ້າເຊັດມືຢູ່ກົງມາ; смотре́ть из окна́ ປ່ອນຫົວອອກປ່ອງຢ້ຽມເບິ່ງ 2 ຈາກ; узна́ть из газе́т ໄດ້ຮູ້ຈາກຫນັງສືພິມ; статья́ из журна́ла ບົດຄວາມຈາກວາລະສານ; карти́на из ча́стной колле́кции ຮູບແຕ້ມທີ່ມາຈາກເອກະຊົນ; он из рабо́чей семьи́ ຄົນນັ້ນກຳເນີດຈາກຄອບຄົວກຳມະກອນ; оте́ц его́ из Сиби́-

ри ພໍ່ຂອງລາວມາຈາກພາກຊີບີລີ 3 ໃນ; оди́н из мно́гих ຫນຶ່ງໃນຈຳນວນຫລາຍ; не́которые из това́рищей ສະຫາຍບາງຄົນ; ста́рший из бра́тьев ອ້າຍນ້ອງທີ່ມີອາຍຸແກ່ກວ່າຫມູ່ 4 ເຮັດດ້ວຍ; кры́ша из желе́за ຫລັງຄາມຸງສັງກະສີ; пла́тье из шёлка ເສື້ອໄຫມ; вари́ть из ви́шни варе́нье ເອົາຫມາກເຊລີຂ້ຽວຫມາກໄມ້ກວນ 5 ຍ້ອນ, ເພາະ; де́лать что́-нибудь из любви́ ເຮັດອັນໃດອັນຫນຶ່ງຍ້ອນຄວາມຮັກ; он э́то сде́лал из за́висти ລາວເຮັດແນວນີ້ຍ້ອນຄວາມອິດສາ

избега́|ть, -ю, -ешь, -ют *несов.*; **избе|жа́ть**, -гу́, -жи́шь, -гу́т *сов.* 1 *кого-чего* ຫລີກ [ເວັ້ນ], ຫລົບຫນີ, ບ່າຍບ່ຽງ; избега́ть знако́мых ຫລີກຫມູ່ເພື່ອນ; избега́ть вопро́сов ຫລີກຄຳຖາມ; избежа́ть встре́чи с ке́м-нибудь ຫລີກ (ຫລົບ) ຫນ້າເຂົາ 2 *чего* ຫລີກລ່ຽງ, ຫລີກພົ້ນ, ຫລົບຫລີກ, ບໍ່ [ຖື] ຊາ; избега́ть отве́тственности ຫລົບຫລີກຄວາມຮັບຜິດຊອບ; избежа́ть опа́сности (ава́рии) ຫລີກຫນີໄພອັນຕະລາຍ(ອຸປະຕິເຫດ); избега́ть неприя́тности ບໍ່ຊາຄວາມຍາກກັນ

избежа́ть *см.* избега́ть

избира́тел|ь, -я *м* ຜູ້ເລືອກຕັ້ງ; спи́сок избира́телей ບັນຊີລາຍຊື່ຜູ້ເລືອກຕັ້ງ

избира́тельн|ый, -ая, -ое, -ые ເລືອກຕັ້ງ; избира́тельное пра́во ສິດເລືອກຕັ້ງ

избира́|ть, -ю, -ешь, -ют *несов.*; **избра́ть**, избер|у́, -ёшь, -у́т (*прош.* избра́л, избрала́, избра́л|о, -и) *сов.*; *кого-что* ເລືອກຕັ້ງ, ຄັດເລືອກ; избира́ть депута́та в Верхо́вный Сове́т СССР ເລືອກຕັ້ງເອົາຜູ້ແທນສະພາໂຊວຽດສູງສຸດແຫ່ງ ສ.ສ.ສ.ຊ.; избра́ть почётный прези́диум ເລືອກຕັ້ງຄະນະປະທານກິດຕິມະສັກ; пра́во избира́ть и быть и́збранным ສິດເລືອກຕັ້ງແລະຮັບເລືອກຕັ້ງ; избра́ть делега́тов на съезд ຄັດເລືອກຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່

избра́ть *см.* избира́ть

изве́сти|е, -я *с* ຂ່າວ [ຄາວ]; хоро́шее (плохо́е) изве́стие ຂ່າວດີ (ບໍ່ດີ); получи́ть изве́стие и́з дому ໄດ້ຮັບຂ່າວຈາກບ້ານ; не име́ть изве́стий от родны́х ບໍ່ມີຂ່າວຈາກພີ່ນ້ອງ; слу́шать после́дние изве́стия по ра́дио ຟັງຂ່າວຫລ້າສຸດທາງວິທະຍຸ

изве́стно *в знач. сказ.* ຮູ້ [ກັນ], ໄດ້ຂ່າວ; ста́ло изве́стно, что он уе́хал ໄດ້ຂ່າວວ່າ ລາວຈາກໄປແລ້ວ; изве́стно ли вам об э́том? ເຈົ້າຮູ້ເລື່ອງນີ້ບໍ່?

изве́стн|ый, -ая, -ое, -ые; изве́ст|ен, -на, -но, -ны 1 ທີ່ຮູ້ກັນ, ມີຊື່ [ສຽງ]; изве́стные всем собы́тия ເຫດການທີ່ໃຜໆກໍຮູ້ດີ; челове́к, изве́стный свое́й справедли́востью ຜູ້ຄົນທີ່ມີຊື່ສຽງດ້ວຍຄວາມເປັນທຳຂອງຕົນ; э́ти места́ ему́ изве́стны ແຖວນີ້ລາວຮູ້ຈັກດີ 2 ມີຊື່ສຽງ;

изве́стный писа́тель (худо́жник, путеше́ственник) ນັກປະພັນ (ຊ່າງແຕ້ມຮູບ, ນັກທ່ອງທ່ຽວ) ທີ່ມີຊື່ສຽງ; изве́стная арти́стка (певи́ца) ນັກສະແດງ (ນັກຮ້ອງ) ທີ່ມີຊື່ສຽງ 3 (*тк. полн. ф.*) ບາງ, ແນ່ນອນ; в изве́стных слу́чаях ໃນບາງກໍລະນີ; при изве́стных усло́виях ໃນເງື່ອນໄຂແນ່ນອນ

извини́ть(ся) *см.* извиня́ть(ся)

извиня́|ть, -ю, -ешь, -ют *несов.*; **извин|и́ть**, -ю́, -и́шь, -я́т *сов.*; *кого-что* ຍົກໂທດ, ອະໄພ [ໂທດ]; извини́ за опозда́ние, извини́, что я опозда́л ຂໍໂທດທີ່ມາຊ້າ; извини́те, что отрыва́ю вас от де́ла ຂໍໂທດທີ່ມາລົບກວນເຈົ້າ; извини́те меня́, пожа́луйста ຂໍໂທດ; де́вушка извини́ла его́ за то, что он не пришёл на свида́ние ຜູ້ສາວຍົກໂທດ (ອະໄພ) ໃຫ້ລາວທີ່ຜິດນັດ

извиня́|ться, -юсь, -ешься, -ются *несов.*; **извин|и́ться**, -ю́сь, -и́шься, -я́тся *сов.* ຂໍໂທດ; извиня́ться пе́ред ке́м-нибудь ຂໍອະໄພໂທດນຳເຂົາ; извини́ться за опозда́ние ຂໍໂທດທີ່ມາຊ້າ; я до́лжен извини́ться, что прие́хал по́здно ຂ້ອຍຂໍອະໄພໂທດທີ່ມາຊ້າ

изгото́вить *см.* изготовля́ть

изготовля́|ть, -ю, -ешь, -ют *несов.*; **изгото́в|ить**, -лю, -ишь, -ят *сов.*; *что* ເຮັດ, ທຳ, ຜະລິດ, ສ້າງ; заво́д изготовля́ет прибо́ры ໃນໂຮງງານຜະລິດກົນຈັກ

изда|ва́ть, -ю, -ёшь, -ю́т *несов.*; **изда́|ть**,

-м, -шь, -ст, издад|и́м, -и́те, -у́т (*прош.* изда́л, издала́, изда́л|о, -и) *сов.*; *что* 1 ພິມຈຳຫນ່າຍ; издава́ть (изда́ть) кни́гу ພິມຈຳຫນ່າຍປຶ້ມ; издава́ть сочине́ния Пу́шкина ພິມຈຳຫນ່າຍປະມວນບົດປະພັນຂອງປູດຊະກິນ; по́весть и́здана отде́льной кни́гой ເລື່ອງສັ້ນນີ້ຈັດພິມເປັນຫົວຕ່າງຫາກ 2 ອອກ; издава́ть зако́ны ອອກກົດຫມາຍ; изда́ть но́вый зако́н ອອກກົດຫມາຍສະບັບໃຫມ່; изда́ть распоряже́ние ອອກຄຳສັ່ງ 3 ອອກ, ເປ່ງ; издава́ть гро́мкие зву́ки ເປ່ງສຽງດັງ; изда́ть крик ເປ່ງສຽງຮ້ອງ

издалека́ *см.* и́здали

и́здали *нареч.* ແຕ່ໄກ, ຢູ່ໄກ; смотре́ть и́здали ຫລຽວເບິ່ງຢູ່ໄກ; поздоро́ваться и́здали ໂບກມື (ງຶກຫົວ) ໃສ່ກັນຢູ່ໄກ; и́здали гора́ каза́лась небольшо́й ຢູ່ໄກເບິ່ງພູຄືບໍ່ສູງປານໃດ

изда́ни|е, -я *с* ສິ່ງພິມ, ການພິມ [ຈຳຫນ່າຍ]; пе́рвое изда́ние кни́ги ການພິມປຶ້ມຄັ້ງທຳອິດ; второ́е изда́ние ພິມຄັ້ງທີສອງ; ре́дкое изда́ние кни́ги ການພິມທີ່ຫາຍາກ; испра́вленное и допо́лненное изда́ние ສະບັບແກ້ໄຂແລະເພີ່ມຕື່ມ

изда́ть *см.* издава́ть.

изде́ли|е, -я *с* ຜະລິດຕະພັນ, ສິນຄ້າ, ເຄື່ອງ; гото́вое изде́лие ສິນຄ້າສຳເລັດຮູບ; фабри́чное изде́лие ສິນຄ້າຫລວງ; изде́лия из де́-

рева и ко́сти ເຄື່ອງໄມ້ແລະເຄື່ອງງາ ; изде́лия из зо́лота ເຄື່ອງຄຳ

из-за *предлог с род.* 1 (*откуда?*) ຈາກ ; вы́йти из-за угла́ ອອກມາຈາກແຈ ; смотре́ть из-за две́ри ສ່ອງປະຕູເບິ່ງ ; верну́ться из-за грани́цы ກັບມາຈາກຕ່າງປະເທດ ; встать из-за стола́ ລຸກຈາກໂຕະ 2 ຍ້ອນ , ເພາະ ; отсу́тствовать из-за боле́зни ຂາດ (ບໍ່ມາ) ຍ້ອນເຈັບ ; верну́ться домо́й из-за дождя́ ກັບມາເຮືອນ [ເພາະ] ຝົນຕົກ ; поссо́риться из-за пустяка́ ຜິດໜ້າກັນຍ້ອນເລື່ອງເລັກໆນ້ອຍໆ

излага́|ть, -ю, -ешь, -ют *несов.*; **излож|и́ть**, -у́, изло́ж|ишь, -ат *сов.*; *что* ບັນຍາຍ , ສະເໜີ , ສະແດງ ; излага́ть свой мы́сли ສະແດງຄວາມຄິດຂອງຕົນ , ສະເໜີຄວາມຄິດຂອງຕົນ ; изложи́ть про́сьбу на бума́ге ຈົດຄວາມຮ້ອງຂໍຂອງຕົນໄວ້ເປັນລາຍລັກອັກສອນ ; излага́ть содержа́ние статьи́ ກ່າຍເນື້ອໃນຂອງບົດຄວາມ

изложе́ни|е, -я (*мн. нет*) *с* ການບັນຍາຍ , ການສະເໜີ ; ບົດແຕ່ງເລື່ອງ ; объекти́вное изложе́ние фа́ктов ການບັນຍາຍ (ສະເໜີ) ຫລັກການຢ່າງຖືກຕ້ອງກັບຄວາມຈິງ , ການບັນຍາຍເຫດການຕົວຈິງຢ່າງພາວະວິໄສ

изложи́ть *см.* излага́ть

изме́н|а, -ы *ж* ການທໍລະຍົດ , ກະບົດ ; госуда́рственная изме́на ກະບົດຊາດ ; изме́на ро́дине ການຂາຍຊາດ ; изме́на де́лу рабо́чего кла́сса ການທໍລະຍົດຕໍ່ພາລະກິດຂອງຊົນຊັ້ນກຳມະກອນ

измене́ни|е, -я *с* ການປ່ຽນແປງ , ການຫັນປ່ຽນ ; измене́ние направле́ния ການຫັນທິດ ; измене́ние сло́ва ການແຈກຄຳ ; измене́ния в жи́зни о́бщества ການປ່ຽນແປງໃນຊີວິດຂອງສັງຄົມ ; внести́ измене́ния в текст ດັດແປງບົດ ; произошли́ больши́е измене́ния ເກີດມີການປ່ຽນແປງຫລາຍ

измени́ть I, II *см.* изменя́ть I, II

измени́ться *см.* изменя́ться

изменя́|ть I, -ю, -ешь, -ют *несов.*; **измен|и́ть**, -ю́, изме́н|ишь, -ят *сов.*; *кого-что* ປ່ຽນ [ແປງ] , ດັດແປງ , ດັດແກ້ , ຜັນແປ ; изменя́ть (измени́ть) план ປ່ຽນແຜນການ ; измени́ть фами́лию ປ່ຽນນາມສະກຸນ ; измени́ть (изменя́ть) назва́ние ປ່ຽນຊື່ ; измени́ть свой привы́чки ດັດແປງຄວາມລ້ຳເຄີຍຂອງຕົນ ; изменя́ть своё отноше́ние к кому́-нибудь ປ່ຽນທ່າທີຂອງຕົນຕໍ່ເຂົາ ; ве́тер измени́л направле́ние ລົມຫັນທິດ

изменя́|ть II, -ю, -ешь, -ют *несов.*; **измен|и́ть**, -ю́, изме́н|ишь, -ят *сов.*; *кому-чему* ທໍລະຍົດ , ຫັກຫລັງ ; измени́ть ро́дине ຂາຍຊາດ , ກະບົດຊາດ ; измени́ть до́лгу ທໍລະຍົດຕໍ່ຫນ້າທີ່

изменя́|ться, -юсь, -ешься, -ются *несов.*; **измен|и́ться**, -ю́сь, изме́н|ишься, -ятся *сов.*

ປ່ຽນ [ແປ] , ຜັນແປ; го́род изменя́ется ໂລກໜ້າຕົວເມືອງພວມປ່ຽນຢູ່; пого́да измени́лась ອາກາດປ່ຽນ; обстано́вка измени́лась к лу́чшему ສະພາບການດີຂຶ້ນກວ່າເກົ່າ (ປ່ຽນໄປໃນທາງດີ); за после́днее вре́мя он си́льно изменился ໃນເວລາຫລ້ຽງນີ້ລາວຕ່າງເກົ່າຫລາຍ

измере́ни|е, -я *с* ການແທກ, ການຕວງ; ລວງ

изме́рить *см.* измеря́ть

измеря́|ть, -ю, -ешь, -ют *несов.*; **изме́р|ить**, -ю, -ишь, -ят *сов.*; *кого-что* ແທກ, ຕວງ, ຜອງ; измеря́ть величину́ чего́-нибудь ແທກຂະໜາດ; изме́рить длину́ и ширину́ ко́мнаты ແທກລວງຍາວແລະລວງກ້ວາງຂອງຫ້ອງ; изме́рить глубину́ реки́ ຢັ່ງນ້ຳ; изме́рить высоту́ ба́шни ແທກລວງສູງຂອງຫໍ; изме́рить температу́ру ແທກອຸນຫະພູມ

изо *см.* из

изобража́|ть, -ю, -ешь, -ют *несов.*; **изобра|зи́ть**, -жу́, -зи́шь, -зя́т *сов.*; *кого-что* 1 ແຕ້ມ, ຂຽນ; изобрази́ть геометри́ческую фигу́ру ແຕ້ມຮູບເລຂາຄະນິດ 2 ພັນລະນາ, ວາດພາບ, ກ່າຍທອດ, ສະແດງເຖິງ; изобрази́ть в рома́не геро́ев войны́ ພັນລະນາເຖິງວິລະຊົນແຫ່ງສົງຄາມຢູ່ໃນນະວະນິຍາຍ; карти́на изобража́ет у́лицу ຮູບແຕ້ມສະແດງເຖິງຖະໜົນ, ຮູບແຕ້ມວາດພາບຖະໜົນ; изобража́ть жизнь дере́вни ກ່າຍທອດຊີວິດໃນຊົນນະບົດ

изображе́ни|е, -я *с* 1 (*мн. нет*) ການວາດພາບ, ການພັນລະນາ; изображе́ние в рома́не современной действи́тельности ການພັນລະນາເຖິງ (ວາດພາບ) ຊີວິດປັດຈຸບັນນີ້ຢູ່ໃນນະວະນິຍາຍ; изображе́ние на экра́не телеви́зора ຮູບທີ່ຢູ່ເທິງໜ້າໂທລະພາບ 2 ຮູບ, ພາບ; моне́та с изображе́нием госуда́рственного гербá ເງິນຫລຽນທີ່ມີຮູບເຄື່ອງໝາຍແຫ່ງຊາດ

изобрази́ть *см.* изобража́ть

изобрести́ *см.* изобрета́ть

изобрета́тел|ь, -я *м* ນັກປະດິດສ້າງ; тала́нтливый изобрета́тель ນັກປະດິດສ້າງຜູ້ມີພອນສະຫວັນ; изобрета́тель реакти́вного дви́гателя ນັກປະດິດສ້າງຈັກອາຍພົ່ນ

изобрета́|ть, -ю, -ешь, -ют *несов.*; **изобре|сти́**, -ту́, -тёшь, -ту́т (*прош.* изобре́л, изобре́л|а, -о́, -и́) *сов.*; *что* ປະດິດ [ສ້າງ]; изобрести́ но́вый стано́к ປະດິດສ້າງເຄື່ອງຈັກແບບໃຫມ່

изобрете́ни|е, -я *с* 1 (*мн. нет*) ການປະດິດ [ສ້າງ]; изобрете́ние но́вой маши́ны ການປະດິດສ້າງຈັກແບບໃຫມ່; изобрете́ние телеви́дения ການປະດິດສ້າງໂທລະພາບ 2 ຜົນປະດິດ [ສ້າງ]; ва́жное изобрете́ние ຜົນປະດິດອັນສຳຄັນ; но́вые изобрете́ния ຜົນປະດິດໃຫມ່

из-под *предлог с род.* 1 (*откуда?*) ຈາກ ກ້ອງ; вы́тащить чемода́н из-под крова́ти ດຶງຫີບອອກຈາກກ້ອງຕຽງ; доста́ть плато́к из-под поду́шки ຈົກເອົາຜ້ົນອອກຈາກກ້ອງຫມອນ 2: ба́нка из-под варе́нья ໂກ່ແກ້ວ

ຫມາກໄມ້ກອບເປົ່າ; коро́бка из-под конфе́т ກັບເຂົ້າຫນົມເປົ່າ

израсхо́довать *см.* расхо́довать

изуча́|ть, -ю, -ешь, -ют *несов.*; **изуч|и́ть**, -у́, изу́ч|ишь, -ат *сов.*; *что* 1 ຮຽນ; изуча́ть (изучи́ть) иностра́нный язы́к ຮຽນພາສາຕ່າງປະເທດ; изуча́ть (изучи́ть) матема́тику и фи́зику ຮຽນເລກແລະຟີຊິກ; изучи́ть ру́сский язы́к за не́сколько лет ຮຽນພາສາລັດເຊຍໄດ້ໃນໄລຍະສອງສາມປີ 2 ຄົ້ນຄວ້າ, ສຳຫລວດ; изучи́ть обстано́вку ສຳຫລວດເບິ່ງສະພາບການ; изуча́ть хара́ктер това́рища ຄົ້ນຄວ້ານິດໄສໃຈຄໍຂອງຫມູ່

изуче́ни|е, -я (*мн. нет*) *с* 1 ການ[ຮໍ່າ]ຮຽນ; изуче́ние литерату́ры (хи́мии) ການຮຽນວັນນະຄະດີ(ເຄມີ) 2 ການຄົ້ນຄວ້າ, ການສຳຫລວດ; изуче́ние обстано́вки ການສຳຫລວດສະພາບການ; изуче́ние материа́лов съе́зда ການຄົ້ນຄວ້າເອກະສານຂອງກອງປະຊຸມໃຫຍ່

изучи́ть *см.* изуча́ть

икр|а́, -ы́ (*мн. нет*) *ж* ໄຂ່ປາ; бутербро́д с икро́й ເຂົ້າຈີ່ຫນ້າໄຂ່ປາ

и́ли *союз* ຫລື[ວ່າ]; я и́ли он ຂ້ອຍຫລືລາວ; и́ли в четве́рг, и́ли в пя́тницу ໃນວັນພະຫັດຫລືໃນວັນສຸກ; сде́лать сейча́с и́ли никогда́ ເຮັດງວນີ້ຫລືວ່າບໍ່ເຮັດເລີຍ; да и́ли нет? ແມ່ນຫລືບໍ່?; вам нали́ть ко́фе и́ли ча́ю? ເຈົ້າຢາກໄດ້ກາເຟຫລືນ້ຳຊາ?

иллюстра́ци|я, -и *ж* ບັນຍາຍຮູບ, ພາບປະກອບ; кни́га с иллюстра́циями ປຶ້ມທີ່ມີພາບປະກອບ, ປຶ້ມທີ່ມີບັນຍາຍຮູບ

им *см.* он, они́, оно́

имени́тельный *см.* паде́ж

и́менно *частица* ແຫລະ, ເອງ; и́менно здесь ຢູ່ນີ້ແຫລະ; и́менно сего́дня, а не за́втра ມື້ນີ້ແຫລະບໍ່ແມ່ນມື້ອື່ນ; я обраща́юсь и́менно к вам ຂ້ອຍຮ້ອງຂໍຕໍ່ເຈົ້າເອງ; мне нужна́ и́менно э́та ру́чка ຂ້ອຍຕ້ອງການປາກການີ້ແຫລະ ◇ а и́менно ຄື, ເປັນຕົ້ນ; а и́менно Ивано́в, Петро́в... ຄື ສະຫາຍອີວານໂນບ, ເປຕໂລບແລະອື່ນໆ

име́|ть, -ю, -ешь, -ют *несов.* 1 *кого-что* ມີ, ໄດ້; име́ть дом (маши́ну) ມີເຮືອນ(ລົດ); име́ть большу́ю библиоте́ку ມີປຶ້ມຈຳນວນຫລວງຫລາຍ; име́ть друзе́й ມີຫມູ່ເພື່ອນ; не име́ть дете́й ບໍ່ມີລູກ; име́ть рабо́ту ມີວຽກເຮັດ; име́ть о́пыт ມີປະສົບການ, ມີຄວາມຊຳນານ 2 (*1 и 2 л. не употр.*): э́тот стол име́ет кру́глую фо́рму ໂຕະນີ້ມົນ; ко́мната име́ет два окна́ ຫ້ອງມີປ່ອງຢ້ຽມສອງປ່ອງ; бассе́йн име́л пятьдеся́т ме́тров длины́ ສະລອຍນ້ຳຍາວຫ້າສິບແມັດ 3 *что* ມີ, ໄດ້; име́ть влия́ние ມີອິດທິພົນ; име́ть наме́рение ມີຄວາມຕັ້ງໃຈ, ມີຈຸດປະສົງ, ມີເຈຕະນາ; не име́ть возраже́ний ບໍ່ຂັດຂ້ອງ ◇ име́ть де́ло *с кем-чем*

ກ່ຽວຂ້ອງກັບ, ພົວພັນກັບ; имéть мéсто ມີຂຶ້ນ, ເກີດຂຶ້ນ

имé|ться, -ется, -ются *несов.* ມີ; в гóроде имéется мнóго музéев ໃນຕົວເມືອງມີຫໍພິພິດທະພັນຫລາຍບ່ອນ; в библиотéке имéются книги по медицúне ໃນຫໍສະໝຸດມີປຶ້ມກ່ຽວກັບແພດສາດ

и́ми *см.* онú

империали́зм, -а (*мн. нет*) *м* ຈັກກະພັດນິຍົມ; вóйны эпóхи империали́зма ເສິກສົງຄາມໃນຍຸກສະໄຫມຈັກກະພັດນິຍົມ

империалисти́ческ|ий, -ая, -ое, -ие ຈັກກະພັດນິຍົມ; империалисти́ческие госудáрства ປະເທດຈັກກະພັດນິຍົມ

и́мпорт, -а (*мн. нет*) *м* ຂາເຂົ້າ; ການສັ່ງຊື້ຈາກພາຍນອກ; ສິນຄ້າຂາເຂົ້າ; и́мпорт товáров ການສັ່ງຊື້ສິນຄ້າຈາກຕ່າງປະເທດ

имýществ|о, -а (*мн. нет*) *с* ຊັບສິນ, ຊັບສົມບັດ; ли́чное имýщество ຊັບສົມບັດສ່ວນຕົວ; колхóзное имýщество ຊັບສົມບັດຂອງສະຫະກອນກະເສດ; общéственное имýщество ຊັບສົມບັດສ່ວນລວມ; имýщество шкóлы ຊັບສົມບັດຂອງໂຮງຮຽນ

и́мя, и́мени (*мн.* имена́, имён, имена́м) *с* 1 ຊື່, ນາມ; жéнское (мужскóе) и́мя ຊື່ແມ່ຍິງ (ຜູ້ຊາຍ); ребёнку дáли и́мя Пётр ເດັກນ້ອຍໃສ່ຊື່ປີໂອດ; и́мя дéвочки — Мари́я ເດັກນ້ອຍ

ສາວຊື່ມາລີຢາ; называ́ть по и́мени ເອີ້ນຊື່; знать всех по именáм ຮູ້ຈັກຊື່ທຸກຄົນ 2 *грам.*: «хлеб» — и́мя существи́тельное ຄຳວ່າ «ເຂົ້າຈີ່» ເປັນຄຳນາມ; «большóй», «у́мный» — имена́ прилага́тельные ຄຳວ່າ «ໃຫຍ່», «ສະຫລາດ» ເປັນຄຸນນາມ; «оди́н», «три», «дéсять» — имена́ числи́тельные ຄຳວ່າ «ໜຶ່ງ», «ສາມ», «ສິບ» ເປັນຄຸນນາມບອກຈຳນວນ ◇ парк и́мени Го́рького ສວນໂກກີ; теáтр и́мени Ки́рова ໂຮງລະຄອນກີໂລບ; канáл и́мени Москвы́ ຄອງມົສະກູ; во и́мя *кого-чего* ເພື່ອ; во и́мя дру́жбы ເພື່ອມິດຕະພາບ; во и́мя ми́ра во всём ми́ре ເພື່ອສັນຕິພາບໃນທົ່ວໂລກ; на и́мя *кого* ເຖິງ; написáть заявлéние на и́мя дирéктора ຂຽນໃບຄຳຮ້ອງເຖິງຜູ້ອຳນວຍການ; на вáше и́мя пришлá посы́лка ມີຫໍ່ຂອງມາຫາເຈົ້າ; от и́мени *кого* ໃນນາມ, ຕາງໜ້າ; говори́ть от и́мени отцá ຕາງໜ້າພໍ່ເວົ້າ, ເວົ້າໃນນາມຂອງພໍ່

ина́че *нареч.* ຄົນລະແນວ, ຄົນລະຢ່າງ, ແນວອື່ນ, ແບບໃຫມ່; сдéлать ина́че ເຮັດຄົນລະແນວ, ເຮັດຢ່າງອື່ນ, ເຮັດແບບໃຫມ່; написáть ина́че ຂຽນຄົນລະແນວ, ຂຽນຢ່າງອື່ນ, ຂຽນແບບໃຫມ່ ◇ ина́че говоря́ ເວົ້າອີກຢ່າງໜຶ່ງ

индивидуа́льн|ый, -ая, -ое, -ые; индивидуáлен, индивидуáльн|а, -о, -ы ສ່ວນຕົວ, ເອກະຊົນ, ເອກະເທດ, ສະເພາະ, ພິເສດ; инди-

видуа́льные осо́бенности ລັກສະນະສະເພາະ(ພິເສດ), ລັກສະນະສ່ວນຕົວ; индивидуа́льный план ແຜນການສ່ວນຕົວ, ແຜນການສະເພາະບຸກຄົນ; индивидуа́льное обслу́живание ການຮັບໃຊ້ສະເພາະ [ບຸກຄົນ]

и́не|й, -я (*мн. нет*) *м* ຫມອກກ້ານ, ຫມອກຂຸ້ນ; и́ней покры́л дере́вья ຫມອກກ້ານຫຸ້ມຕົ້ນໄມ້

инжене́р, -а (*мн.* инжене́р|ы, -ов) *м* [ນັກ]ວິສະວະກອນ; вое́нный инжене́р ວິສະວະກອນທະຫານ; инжене́р-строи́тель ວິສະວະກອນກໍ່ສ້າງ; рабо́тать инжене́ром на заво́де ເປັນວິສະວະກອນຢູ່ໂຮງງານ

инициати́в|а, -ы (*мн. нет*) *ж* ການລິເລີ່ມ, ຂໍ້ລິເລີ່ມ, ຄວາມຕັດສິນໃຈ, ນ້ຳໃຈບຸກເບີກ; прояви́ть инициати́ву в рабо́те ສະແດງນ້ຳໃຈລິເລີ່ມໃນວຽກງານ; сде́лать что́-нибудь по со́бственной инициати́ве ເຮັດອັນໃດອັນຫນຶ່ງຕາມຄວາມຕັດສິນໃຈຂອງຕົນເອງ

иногда́ *нареч.* ບາງເທື່ອ, ບາງຄັ້ງ, ບາງຄາວ; иногда́ он приходи́л к нам ລາວມາຫາພວກເຮົາບາງຄັ້ງບາງຄາວ; иногда́ мы встреча́емся ພວກເຮົາພົບພໍ້ກັນບາງຄັ້ງບາງຄາວ

ино́й, ина́я, ино́е, ины́е *мест.* ອື່ນ, ຕ່າງ; найти́ ино́е реше́ние вопро́са ແກ້ໄຂບັນຫາທາງ

иностра́н|ец, -ца *м* ຄົນຕ່າງປະເທດ, ຄົນຕ່າງດ້າວ; гости́ница для иностра́нцев ໂຮງແຮມສຳລັບຊາວຕ່າງປະເທດ; в гости́нице живёт мно́го иностра́нцев ໃນໂຮງແຮມມີຊາວຕ່າງປະເທດພັກຢູ່ຫລາຍຄົນ

иностра́нн|ый, -ая, -ое, -ые ຕ່າງປະເທດ, ຕ່າງດ້າວ; иностра́нное госуда́рство ຕ່າງປະເທດ; иностра́нные языки́ ພາສາຕ່າງປະເທດ

институ́т, -а *м* ມະຫາວິທະຍາໄລ, ສະຖາບັນ; сельскохозя́йственный институ́т ມະຫາວິທະຍາໄລກະເສດສາດ; зао́чный институ́т ມະຫາວິທະຍາໄລທາງໄປສະນີ; институ́т инже́неров железнодоро́жного тра́нспорта ມະຫາວິທະຍາໄລການລົດໄຟ; Институ́т ру́сского языка́ Акаде́мии нау́к ສະຖາບັນຄົ້ນຄວ້າພາສາລັດເຊຍສັງກັດລັດຖະບັນດິດສະພາ; поступи́ть в институ́т ເຂົ້າມະຫາວິທະຍາໄລ; учи́ться на пе́рвом ку́рсе институ́та ເປັນນັກສຶກສາປີທີຫນຶ່ງຂອງມະຫາວິທະຍາໄລ; зако́нчить институ́т ຈົບມະຫາວິທະຍາໄລ

инстру́кци|я, -и *ж* ຄຳສັ່ງ, ຫນັງສືແນະນຳ, ຫນັງສືອະທິບາຍ; подро́бная инстру́кция ຄຳແນະນຳ(ຫນັງສືແນະນຳ)ລະອຽດ; дава́ть инстру́кцию ໃຫ້ຄຳສັ່ງ, ໃຫ້ຄຳແນະນຳ; получа́ть инстру́кцию ຮັບຄຳສັ່ງ, ຮັບຄຳແນະນຳ;

дéйствовать по инструкции ปะติบัดตามคำสั่ง (คำแนะนำ)

инструмéнт, -а *м* 1 เถื่องมือ; молотóк, пилá, топóр — **инструмéнты** ค้อน, เลื่อย, ขวาน แม่นเถื่องมือ 2 เถื่องเสบ; пианúно, скрúпка, гитáра — **музыкáльные инструмéнты** ปีอาโน, ซุ, กีตา แม่นเถื่องเสบดินตี; оркéстр нарóдных инструмéнтов อิงดินตีพื้นเมือง

интеллигéнци|я, -и (*мн. нет*) *ж* ปันยาชีน, นักธงนรู้; совéтская (нарóдная) интеллигéнция ปันยาชีนโซวยด (ปะชาชีน)

интервью *нескл. с* การสำพาด, คำใช้สำพาด; дать интервью ใช้สำพาด [หนังสือพิม]; взять (получúть) интервью เอ้าสำพาด; газéта опубликовáла интервью журналúста с космонáвтами หนังสือพิมลิงบิดสำพาดที่นักข่าวได้รับนำนักบินอะวะกาด

интерéс, -а *м* 1 (*мн. нет*) ความสินใจ; проявлять интерéс к дéлу เอาใจใส่เฮ็ดงาน; слýшать доклáд без интерéса (с интерéсом) ฟังลายงานพ่ำใช้ผ่านไป (ด้วยความสินใจ); сообщéние газéты вызвало интерéс читáтелей ข่าวหนังสือพิมถืกเอาความสินใจของผู้อ่าน 2 (*тк. мн.*) ผินประโยด, สิดประโยด; лúчные интерéсы ผิน (สิด) ประโยดส่วนตัว; защищáть интерéсы государства ป้องกันผินประโยดของประเทดชาด;

э́то дéлается в вáших интерéсах เฮ็ดแนวนี้ก่เพื่อผินประโยดของเจ้า

интерéсно *нареч.* เบันตาฟัง, น่วนจิ๋น; интерéсно расскáзывать เล่าน่วน, เล่าเบันตาฟัง; мне не интерéсно егó слýшать ข้อยบ่หุละจิฟังมันเว้า, ข้อยบ่สินใจฟังลาวเว้า

интерéсн|ый, -ая, -ое, -ые; интерéс|ен, -на, -но, -ны น่วน, หน้าฟัง, เบันตาสินใจ; интерéсный рассказ เลื่องหน้าฟัง; интерéсный фильм ฮูบเงาเบันตาเบิ่ง; э́тот спектáкль интерéсен для молодёжи การละดงเลื่องนี้เบันที่สินใจสำลับไอหนุ่ม (ซาวหนุ่มไปเบิ่งน่วน)

интерес|ова́ть, -у́ю, -у́ешь, -у́ют *несов.*; **заинтерес|ова́ть**, -у́ю, -у́ешь, -у́ют *сов.*; *кого* สินใจ, จับใจ, ติดใจ; егó интересовáла нарóдная мýзыка ลาวสินใจเพาพื้นเมือง; что вас интересýет? เจ้าสินใจหยัง?; он заинтересовáл меня́ своúм рассказом เลื่องที่ลาวเล่าสู่ฟังจับใจข้อย

интерес|ова́ться, -у́юсь, -у́ешься, -у́ются *несов.*; **заинтерес|ова́ться**, -у́юсь, -у́ешься, -у́ются *сов.*; *кем-чем* สินใจ, เอาใจใส่, เอาหัวซา; интересовáться литературóй и искýсством สินใจ [ใน] อันนะคะดีและสิละปะกำ; интересовáться политúкой สินใจการเมือง; все заинтересовáлись э́тим откры́тием ใผๆก็สินใจในการค้นพบนี้

интернационали́зм, -а (*мн. нет*) *м* ລັດທິສາກົນ, ສາກົນນິຍົມ; пролета́рский интернационали́зм ລັດທິສາກົນກຳມາຊີບ

интернациона́льн|ый, -ая, -ое, -ые ສາກົນ, ລະຫວ່າງຊາດ, ຕ່າງປະເທດ; интернациона́льная дру́жба ມິດຕະພາບສາກົນ; интернациона́льные свя́зи ການພົວພັນລະຫວ່າງຊາດ; интернациона́льная солида́рность трудя́щихся ຄວາມສາມັກຄີສາກົນລະຫວ່າງປະຊາຊົນຜູ້ອອກແຮງງານ; интернациона́льный конгре́сс ກອງປະຊຸມສາກົນ(ລະຫວ່າງຊາດ, ນານາຊາດ)

информа́ци|я, -и *ж* ຂ່າວ[ສານ], ຂ່າວຄາວ; дать информа́цию в газе́те ລົງຂ່າວໃນຫນັງສືພິມ; получи́ть то́чную информа́цию ໄດ້ຮັບຂ່າວແທ້ຈິງ; бюро́ техни́ческой информа́ции ຫ້ອງການຂ່າວເຕັກນິກ

иска́ть, ищу́, и́щешь, и́щут *несов.*, *кого-что* 1 ຄົ້ນ, ຊອກ, ຫາ, ສະແຫວງ; иска́ть ключ ຊອກກະແຈ; иска́ть перча́тки в шкафу́ ຊອກຖົງມືໃນຕູ້; иска́ть тропи́нку в лесу́ ຊອກເບິ່ງຫາຍ່າງໃນປ່າ; иска́ть знако́мого в толпе́ ຊອກເບິ່ງຫມູ່ໃນຝູງຊົນ 2 *тж. чего* ຊອກຫາ, ຕາມຫາ; иска́ть себе́ рабо́ту ຊອກຫາວຽກເຮັດ; иска́ть помо́щника ຊອກຫາຜູ້ຊ່ວຍ; иска́ть защи́ты ຊອກຫາທີ່ເພິ່ງ ◇ иска́ть глаза́ми *кого-что* ຫລຽວຊອກ, ຫລຽວຫາ

исключа́|ть, -ю, -ешь, -ют *несов.*; **исключ|и́ть**, -у́, -и́шь, -а́т *сов.*; *кого* ຂ້າອອກ, ຂີດອອກ; ໄລ່ອອກ, ຕັດອອກ; исключа́ть (исключи́ть) кого́-нибудь из спи́сков ຂ້າຊື່ເຂົາອອກຈາກບັນຊີລາຍຊື່; исключа́ть (исключи́ть) кого́-нибудь из шко́лы (из институ́та) ໄລ່ເຂົາອອກຈາກໂຮງຮຽນ(ມະຫາວິທະຍາໄລ); исключа́ть (исключи́ть) кого́-нибудь из па́ртии ໄລ່ເຂົາອອກຈາກພັກ

исключе́ни|е, -я *с* ຂໍ້ຍົກເວັ້ນ, ກໍລະນີພິເສດ; де́лать исключе́ние для кого́-нибудь ໃຫ້ການຍົກເວັ້ນເຂົາ; нет пра́вил без исключе́ния ກົດເກນໃດກໍມີຂໍ້ຍົກເວັ້ນ; в ви́де исключе́ния вам разреши́ли сдава́ть экза́мен второ́й раз ເພິ່ນຍອມໃຫ້ເຈົ້າສອບເສັງຄືນໃຫມ່ເປັນພິເສດ ◇ за исключе́нием *кого-чего* ເວັ້ນເສຍແຕ່, ເວັ້ນໄວ້ແຕ່; на собра́нии прису́тствовали все сотру́дники, за исключе́нием больны́х ພະນັກງານມາປະຊຸມຫມົດທຸກຄົນເວັ້ນເສຍແຕ່ຄົນເຈັບ

исключи́ть *см.* исключа́ть

и́скренне *и* **и́скренно** *нареч.* ຢ່າງຈິງໃຈ, ຢ່າງ[ສຸດອົກ]ສຸດໃຈ; я и́скренно рад ва́шим успе́хам ຂ້ອຍດີໃຈນຳຜົນງານຂອງເຈົ້າຢ່າງຈິງໃຈ; говори́ть и́скренне ເວົ້າຢ່າງເປີດອົກເປີດໃຈ

и́скренн|ий, -яя, -ее, -ие; и́скрен|ен, -на, -но, -ны ຈິງໃຈ, ສຸດຈະຫລຶດໃຈ, ເປີດອົກເປີດໃຈ; и́скренний челове́к ຄົນໃຈຈິງ; и́скреннее призна́ние ການຮັບຮູ້ຢ່າງຈິງໃຈ, ການສາລະພາບຢ່າງເປີດອົກເປີດໃຈ; и́скренняя

дру́жба ມິດຕະພາບອັນຈົງໃຈ (ຜຸດຜ່ອງ, ສິດໃສ); я бу́ду и́скренна с ва́ми ຂ້ອຍຊື່ເວົ້າຢ່າງເປີດອົກເປີດໃຈນຳເຈົ້າ, ຊື່ເວົ້າຊື່ນຳເຈົ້າ

иску́сственн|ый, -ая, -ое, -ые ທຽມ, ປອມ, ວິທະຍາສາດ, ບໍ່ຈິງ; иску́сственные цветы́ ດອກໄມ້ປອມ; иску́сственный спу́тник Земли́ ດາວທຽມ; иску́сственное освеще́ние ແສງແດດວິທະຍາສາດ; пла́тье из иску́сственного шёлка ເສື້ອເຮັດດ້ວຍແພໄຫມທຽມ (ວິທະຍາສາດ)

иску́сств|о, -а (*мн. нет*) *с* **1** ສິລະປະ; наро́дное иску́сство ສິລະປະພື້ນເມືອງ; произведе́ние иску́сства ສິລະປະກຳ, ຜະລິດຕະພັນທາງດ້ານສິລະປະ; занима́ться иску́сством ຮຽນສິລະປະ **2** ສິລະປະ, ສີໄມ້ລາຍມື, ຄວາມສາມາດ; владе́ть иску́сством воспита́ния ຮູ້ຈັກສິລະປະສຶກສາອົບຮົມ; показа́ть своё иску́сство в та́нцах ສະແດງລວດລາຍຂອງຕົນໃນການຟ້ອນ; буке́т соста́влен с большим иску́сством ພວກດອກໄມ້ນີ້ແຕ່ງຢ່າງມີສິລະປະຫລາຍ

испе́чь *см.* печь II

исполне́ни|е, -я (*мн. нет*) *с* **1** ການປະຕິບັດ, ການເຮັດ; исполне́ние прика́за ການປະຕິບັດຕາມຄຳສັ່ງ **2** ການຫລິ້ນ, ການສະແດງ; исполне́ние гла́вной ро́ли в кинофи́льме ການສະແດງບົດບາດພະເອກໃນຮູບເງົາ

исполни́тельн|ый, -ая, -ое, -ые ບໍລິຫານ [ງານ], ປະຕິບັດງານ; исполни́тельный коми-

тет ຄະນະບໍລິຫານງານ; исполни́тельная власть ອຳນາດບໍລິຫານ [ງານ]

испо́лнить(ся) *см.* исполня́ть(ся)

исполня́|ть, -ю, -ешь, -ют *несов.*; **испо́л-н|ить**, -ю, -ишь, -ят *сов.*; *что* **1** ປະຕິບັດຕາມ, ເຮັດຕາມ; исполня́ть (испо́лнить) прика́з (поруче́ние) ປະຕິບັດຕາມຄຳສັ່ງ (ຄວາມມອບຫມາຍ) **2** ຫລິ້ນ, ສະແດງ; испо́лнить стихотворе́ние ອ່ານບົດກອນ; испо́лнить та́нец ຟ້ອນ; исполня́ть на роя́ле конце́рт Чайко́вского ຫລິ້ນເພງໄຊໂກບສະກີດ້ວຍປີອາໂນ; ро́ли в спекта́кле исполня́ют изве́стные арти́сты ແມ່ນສິລະປະກອນຜູ້ມີຊື່ດັງຫລິ້ນ (ສະແດງ) ບົດບາດໃນການສະແດງນີ້

исполня́|ться, -ется, -ются *несов.*; **испо́л-н|иться**, -ится, -ятся *сов.* **1** ປະກົດເປັນຈິງ, ກາຍເປັນຄວາມຈິງ; испо́лнились его́ наде́жды ຄວາມຫວັງຂອງເຂົາປະກົດເປັນຈິງ; жела́ние моё испо́лнилось ຄວາມມຸ່ງມາດປາດຖະຫນາຂອງຂ້ອຍກາຍເປັນຄວາມຈິງ **2** ຄົບຮອບ; испо́лнилось сто лет со дня рожде́ния писа́теля ວັນເກີດຂອງນັກປະພັນຄົບຮອບຮ້ອຍປີ **3** *безл.*, *кому* ໄດ້, ຄົບ; ему́ испо́лнилось со́рок лет ລາວອາຍຸໄດ້ສີ່ສິບປີ

испо́льзовани|е, -я (*мн. нет*) *с* ການຫມູນໃຊ້; испо́льзование те́хники в наро́дном хозя́йстве ການຫມູນໃຊ້ເຕັກນິກໃນເສດຖະກິດແຫ່ງຊາດ

испо́льз|овать, -ую, -уешь, -уют *несов. и сов.*, *кого-что* [ຫມູນ] ໃຊ້, ສວຍໃຊ້, ຈົ່ມໃຊ້; испо́льзовать о́пыт передовы́х рабо́чих ຫມູນໃຊ້ບົດຮຽນຂອງກຳມະກອນຜູ້ດີເດັ່ນ; испо́льзовать те́хнику в се́льском хозя́йстве ນຳເອົາເຄື່ອງຈັກມາໃຊ້ໃນການກະເສດ; испо́льзовать в докла́де но́вые да́нные нау́ки ຫມູນໃຊ້ຂໍ້ມູນວິທະຍາສາດໃຫມ່ເຂົ້າໃນບົດລາຍງານ

испо́льз|оваться, -уется, -уются *несов.* ໃຊ້ກັນ; мета́лл испо́льзуется в промы́шленности ເຫລັກໃຊ້ກັນຢູ່ໃນອຸດສາຫະກຳ

испо́ртить(ся) *см.* по́ртить(ся)

испра́вить *см.* исправля́ть

исправля́|ть, -ю, -ешь, -ют *несов.*; **испра́в|ить**, -лю, -ишь, -ят *сов.*; *что* 1 ແກ້ [ໄຂ], [ປົວ] ແປງ; исправля́ть оши́бки ແປງຄຳຜິດ; испра́вить оши́бку ແກ້ຜິດ, ແປງຄວາມຜິດ; изда́ние второ́е, испра́вленное и допо́лненное ພິມຄັ້ງທີສອງແກ້ໄຂເພີ່ມຕື່ມ 2 [ຊ້ອມ] ແປງ, ແກ້; исправля́ть замо́к ແປງກະແຈ

испуга́ть(ся) *см.* пуга́ть(ся)

испыта́ни|е, -я *с* 1 ການທົດລອງ; испыта́ние мото́ра (самолёта) ການທົດລອງຈັກ (ເຮືອບິນ); провести́ испыта́ние ດຳເນີນການທົດລອງ 2 ການທົດສອບ; боле́знь ма́тери была́ для него́ тяжёлым испыта́нием ແມ່ເຈັບເຮັດໃຫ້ລາວຕ້ອງຜ່ານການທົດສອບອັນຫນັກຫນ່ວງ; на его́ до́лю пришло́сь мно́го испыта́ний ຄົນນັ້ນປະສົບການທົດສອບຫລາຍ

испыта́ть *см.* испы́тывать

испы́тыва|ть, -ю, -ешь, -ют *несов.*; **испыта́|ть**, -ю, -ешь, -ют *сов.* 1 *кого-что* ທົດລອງ; испы́тывать самолёт ທົດລອງເຮືອບິນ 2 *что* ຮູ້ສຶກ, ຄຶດ, ປະສົບ; испы́тывать нужду́ ປະສົບ (ມີ) ຄວາມທຸກຍາກ; испы́тывать го́рдость ຮູ້ສຶກພາກພູມໃຈ; испы́тывать ра́дость ຮູ້ສຶກປື້ມໃຈ (ດີອົກດີໃຈ); испы́тывать удово́льствие (отча́яние, страх) ຮູ້ສຶກພໍໃຈ (ທຸກໃຈ, ຢ້ານກົວ); испы́тывать сомне́ние [ມີຄວາມ] ສົງໄສ; испы́тывать уве́ренность ຮູ້ສຶກເຊື່ອຫມັ້ນ; испы́тывать чу́вство оби́ды ຄຶດຄຽດ

иссле́довани|е, -я *с* ການຄົ້ນຄວ້າ

иссле́д|овать, -ую, -уешь, -уют *несов. и сов.*, *что* ຄົ້ນຄວ້າ, ຊອກຄົ້ນ; иссле́довать зако́ны приро́ды ຄົ້ນຄວ້າກົດເກນທຳມະຊາດ

и́стин|а, -ы *ж* ຄວາມຈິງ, ສັດຈະທຳ; узна́ть и́стину ໄດ້ຮູ້ຄວາມຈິງ, ຮັບຮູ້ຄວາມຈິງ; стремле́ние к и́стине ຢາກໄດ້ຄວາມຈິງ, ມຸ່ງຫນ້າໄປຫາຄວາມຈິງ

истори́ческ|ий, -ая, -ое, -ие ປະຫວັດສາດ, ປະຫວັດການ; истори́ческие све́дения (фа́кты) ຂໍ້ຄວາມທາງ (ຂໍ້ມູນທາງ) ປະຫວັດສາດ; истори́ческий докуме́нт ເອກະສານທີ່ມີຄວາມຫມາຍປະຫວັດສາດ; истори́ческая эпо́ха ຍຸກສະໄຫມປະຫວັດສາດ; истори́ческие собы́тия ເຫດການອັນເປັນປະຫວັດການ

истóри|я, -и *ж* 1 ປະຫວັດສາດ; истóрия СССР ປະຫວັດສາດຂອງ ສ.ສ.ສ.ຊ.; изучáть истóрию ຄົ້ນຄ້ວາ(ຮຽນ)ປະຫວັດສາດ 2 ປະຫວັດ, ຄວາມເປັນມາ; истóрия литературы ປະຫວັດວັນນະຄະດີ ◇ войти́ в истóрию ກາຍເປັນປະຫວັດສາດ; э́то событие войдёт в истóрию ເຫດການນີ້ຄົງຈະກາຍເປັນປະຫວັດສາດ

истóчник, -а *м* 1 ບໍ່ນ້ຳ, ນ້ຳບໍ່; минера́льный истóчник ບໍ່ນ້ຳແຮ່; пить вóду из истóчника ດື່ມນ້ຳຢູ່ນ້ຳບໍ່ 2 ບໍ່ເກີດ, ກົກເຄົ້າ, ຮາກເຫງົ້າ; ຕົ້ນເຫດ, ແຫລ່ງ; истóчник информа́ции ແຫລ່ງຂ່າວ; истóчник дохóда ບໍ່ເກີດລາຍໄດ້(ກຳໄລ); кни́га — истóчник зна́ний ປຶ້ມແມ່ນບໍ່ເກີດຄວາມຮູ້

истра́тить *см.* тра́тить

исчеза́|ть, -ю, -ешь, -ют *несов.*; **исче́зн|уть,** -у, -ешь, -ут (*прош.* исче́з, -ла, -ло, -ли) *сов.* [ສູນ]ຫາຍ, ສູນເສຍ, ຫມົດ, ສິ້ນ; ມ້ວຍ; к утрý тума́н исче́з ຮອດຍາມເຊົ້ານ້ຳໝອກເຫີຍໄປ; со́лнце исче́зло за горизо́нтом ຕາເວັນລັບຂອບຟ້າ; он исче́з в толпе́ ລາວຫາຍຫນ້າ(ຕົວ)ໄປໃນຝູງຊົນ

исчезнозе́ни|е, -я *с* ການສູນເສຍ, ການຫາຍໄປ; внеза́пное исчезнове́ние ການສູນເສຍໄປໂດຍກະທັນຫັນ

исче́знуть *см.* исчеза́ть

ита́к *союз* ໄດ້ແລ້ວ, ດັ່ງນັ້ນ, ຈັ່ງຊັ້ນ, ລວມຄວາມວ່າ; ита́к, всё решено́ ໄດ້ແລ້ວ ຕັດສິນຫມົດ; ита́к, мы уезжа́ем ໄດ້ແລ້ວ ພວກເຮົາຊິຈາກໄປ

и так да́лее (и т. д.) ແລະອື່ນໆ, ແລະຕໍ່ໆໄປ

итóг, -а *м* ຜົນຮັບ, ຜົນໄດ້ຜົນເສຍ, ຜົນ; итóги развúтия наро́дного хозя́йства за́ год ຜົນຂອງການພັດທະນາເສດຖະກິດແຕ່ງຊາດພາຍໃນປີຫນຶ່ງ; итóги перегово́ров ме́жду государствами ຜົນຂອງການເຈລະຈາລະຫວ່າງປະເທດ

и тому́ подóбное (и т. п.) ແລະອື່ນໆ

их 1 *см.* они́ **2** *нескл.* ຂອງເຂົາ; их óбувь ເກີບຂອງພວກເຂົາ; э́то их ко́мната ນີ້ແມ່ນຫ້ອງຂອງເຂົາ; их оте́ц — врач ພໍ່ຂອງເຂົາເປັນແພດ

ию́л|ь, -я *м* ເດືອນກໍລະກົດ; с ию́ля по сентя́брь ແຕ່ເດືອນກໍລະກົດຫາເດືອນກັນຍາ; в ию́ле ме́сяце ໃນເດືອນກໍລະກົດ

ию́льск|ий, -ая, -ое, -ие ກໍລະກົດ; ию́льская жара́ ຄວາມຮ້ອນຂອງເດືອນກໍລະກົດ

ию́н|ь, -я *м* ເດືອນເມສຸນ; в ию́не студе́нты сда́ли экза́мены ນັກຮຽນໄດ້ສອບເສັງແລ້ວແຕ່ເດືອນເມສຸນ

ию́ньск|ий, -ая, -ое, -ие ເມສຸນ; ию́ньские но́чи коротки́ ຍາມມືດໃນເດືອນເມສຸນສັ້ນໆ

К

к *и* **ко** (*перед некоторыми словами с двумя согласными в начале*: ко всем, ко лбу *и т.д.*) *предлог с дат.* **1** (*куда?*) ໃກ້, ແປະ, ຫາ, ຂ່; подойти́ к окну́ ເຂົ້າໄປຫາປ່ອງຢ້ຽມ; поста́вить стол к стене́ ຍ້າຍໂຕະເຂົ້າໄປແປະຝາ; плыть к бе́регу ລອຍໄປຫາຝັ່ງ; пое́хать к бра́ту ໄປຫາອ້າຍ; позва́ть к телефо́ну ເອີ້ນມາຮັບໂທລະສັບ **2** ກ່ອນຮອດ, ກ່ອນເຖິງ; прийти́ к двена́дцати часа́м ມາ [ກ່ອນ] ສິບສອງໂມງ; пригото́вить отчёт к концу́ ме́сяца ແຕ່ງບົດລາຍງານກ່ອນຫມົດເດືອນ; к ве́черу дождь прекрати́лся [ຮອດ]ມື້ແລງຝົນເຊົາຕົກ **3** ຫາ, ເຖິງ, ຕໍ່; гото́виться к экза́мену ກຽມສອບເສັງ; обрати́ться с вопро́сом к учи́телю ຖາມຄູ, ຕັ້ງບັນຫານໍາຄູ; письмо́ к дру́гу ຈົດຫມາຍເຖິງຫມູ່ເພື່ອນ; любо́вь к ро́дине ຄວາມຮັກ [ຕໍ່ປະເທດ] ຊາດ; не́нависть к врагу́ ຄວາມຄຽດຊັງສັດຕູ

каби́н|а, **-ы** *ж* ຫ້ອງ; каби́на самолёта ຫ້ອງເຮືອບິນ; войти́ в кабину́ ли́фта ເຂົ້າໃນຫ້ອງຂຶ້ນໄດໄຟຟ້າ

кабине́т, **-а** *м* ຫ້ອງການ, ຫ້ອງເຮັດວຽກ; рабо́чий кабине́т учёного ຫ້ອງເຮັດວຽກຂອງນັກປາດ; кабине́т зубно́го врача́ ຫ້ອງຂອງແພດ [ປົວ] ແຂ້ວ; заседа́ние в кабине́те ректора ການປະຊຸມໃນຫ້ອງເຮັດວຽກຂອງຜູ້ອໍານວຍການ; уро́к проходи́л в физи́ческом кабине́те ຮໍ່າຮຽນໃນຫ້ອງທົດລອງຟີຊິກ

каблу́к, **каблука́** *м* ສົ້ນເກີບ; широ́кий (ни́зкий) каблу́к ສົ້ນໃຫຍ່ (ຕ່ໍາ); ту́фли на высо́ких каблука́х ເກີບສົ້ນສູງ; ту́фли без каблуко́в ເກີບບໍ່ມີສົ້ນ

ка́жд|ый, **-ая**, **-ое** (*мн.* ка́жд|ые, **-ых** *употр. тк. с сущ., которые не имеют ед. числа*: ка́ждые су́тки *и т. д., или сущ., при которых есть числ.*: ка́ждые два часа́ *и т. д.*) *мест.* **1** ທຸກ, ຈຸ່, ຄຸ່; ка́ждый челове́к ທຸກຄົນ; на ка́ждой у́лице ຢູ່ຖະຫນົນທຸກສາຍ; в ка́ждом до́ме ຢູ່ເທິງເຮືອນທຸກຫລັງ; ка́ждый день ຄຸ່ມື້; ка́ждый год ທຸກໆປີ; ка́ждое ле́то ທຸກຍາມຮ້ອນ **2** *в знач. сущ.* **ка́жд|ый**, **-ого** *м* ທຸກຄົນ; ка́ждый из уча́стников соревнова́ний ຜູ້ເຂົ້າຮ່ວມໃນການແຂ່ງຂັນທຸກຄົນ; э́то зна́ет ка́ждый ທຸກຄົນຮູ້ເລື່ອງນີ້, ໃຜໆກໍຮູ້ເລື່ອງນີ້ ◇ на ка́ждом шагу́ ທຸກທີ່ທຸກບ່ອນ, ທຸກຫນທຸກແຫ່ງ

каза́ться, кажу́сь, ка́ж|ешься, **-утся** *несов.*; **пока|за́ться**, **-жу́сь**, пока́ж|ешься, **-утся** *сов.* **1** *кем-чем и каким* ເບິ່ງ [ຈຶ່ງ] ຄື; каза́ться у́мным (весёлым, уста́лым) ເບິ່ງຄືສະຫລາດ (ມ່ວນ, ເມື່ອຍ); он ка́жется ребёнком (старико́м) ເບິ່ງລາວຄືເດັກນ້ອຍ (ຜູ້ເກົ່າ); она́ ка́жется моло́же свои́х лет ເບິ່ງນາງຄືມີອາຍຸນ້ອຍກວ່າອາຍຸ

ແທ້ ; вода́ показа́лась ему́ холо́дной ລາວເບິ່ງ ນ້ຳຄືເຢັນ **2** *в знач. вводн. сл.* **ка́жется** ເບິ່ງຄື ວ່າ ; ка́жется, пойдёт дождь ເບິ່ງຄືວ່າຝົນຈະ ຕົກ ; он, ка́жется, зна́ет э́того челове́ка ເບິ່ງ ຄືວ່າ ລາວຮູ້ຈັກຄົນນັ້ນ

как 1 *нареч.* ແນວໃດ , ຈັ່ງໃດ ; как э́то сде́лать? ວຽກນີ້ເຮັດໄດ້ຈັ່ງໃດ? ; как вы сюда́ попа́ли? ເຈົ້າມາຮອດພື້ນແນວໃດ? ; скажи́те, как пройти́ на на́бережную? ຂໍໂທດ , ໄປແຄມຝັ່ງ ນ້ຳທາງໃດ? ; не зна́ю, как ему́ помо́чь ບໍ່ຈັກ ວ່າ ຊ່ວຍລາວໄດ້ແນວໃດ ; как вы живёте? ເຈົ້າ ເປັນແນວໃດ? ; врач спроси́л, как себя́ чу́вствует больно́й ແພດຖາມວ່າ ຄົນເຈັບຮູ້ສຶກ ເປັນແນວໃດ **2** *нареч.* ເກີນວ່າ, ຈັ່ງແມ່ນ; как я рад вас ви́деть! ຂ້ອຍເກີນວ່າດີໃຈທີ່ໄດ້ພົບ ເຈົ້າ! ; как краси́в го́род! ເມືອງນີ້ຈັ່ງແມ່ນ (ເກີນວ່າ) ງາມແທ້! ; как жаль, что он не пришёл ເກີນວ່າເສຍດາຍທີ່ລາວບໍ່ໄດ້ມາ **3** *союз* ຄື , ເຫມືອນ , ດັ່ງ , ປານ ; кра́сный как кровь ແດງຄືເລືອດ ; широ́кий как мо́ре ກ້ວາງ ເຫມືອນທະເລ; бе́лый как снег ຂາວຄືຫິມະ; снег блести́т как серебро́ ຫິມະເຫລື້ອມ ມາບຄືເງິນ **4** *союз* ເຫມືອນດັ່ງ, ຄືກັນກັບວ່າ; ເປັນ; говорю́ с ва́ми как с дру́гом ຂ້ອຍເວົ້າ ນຳເຈົ້າເຫມືອນດັ່ງເວົ້ານຳເພື່ອນ; он поступи́л как че́стный челове́к ລາວເຮັດຄືຄົນຊື່; газ ис-

по́льзуют как то́пливо ເຂົາໃຊ້ອາຍໄຕ້ເປັນເຊື້ອ ໄຟ **5** *союз* (*обычно в составе сложных союзов*: тогда́ как, в то вре́мя как, по́сле того́ как, с тех по́р как, пе́ред те́м как, как то́лько *и т. п.*) ທີ່; прошёл уже́ год, как он уе́хал ລາວຈາກໄປ ໄດ້ປີຫນຶ່ງແລ້ວ ; в то вре́мя как начала́сь война́, я жил в Ленингра́де ໃນເວລາທີ່ເກີດສົງ ຄາມຂຶ້ນ ຂ້ອຍຢູ່ໃນນະຄອນເລນິນກະລາດ ; по́сле того́ как ушли́ го́сти, он лёг спать ພາຍ ຫລັງທີ່ແຂກໄປແລ້ວ ລາວເຂົ້ານອນ; с тех по́р как он ко́нчил шко́лу, прошло́ мно́го лет ລາວ ຈົບໂຮງຮຽນໄດ້ຫລາຍປີແລ້ວ; как то́лько раздала́сь звоно́к, все вошли́ в зал ພໍແຕ່ສຽງກະ ດິ່ງດັ່ງຂຶ້ນໃຜໆກໍເຂົ້າໃນຫ້ອງ ◇ как бу́дто ເຫມືອນດັ່ງ, ຄ້າຍກັບວ່າ , ເບິ່ງຄື

ка́к-нибудь *нареч.* ວິທີໃດວິທີຫນຶ່ງ , ຢ່າງ ໃດຢ່າງຫນຶ່ງ ; на́до ка́к-нибудь вы́йти из затрудне́ния ຕ້ອງຊອກຫາວິທີໃດວິທີຫນຶ່ງເພື່ອ ໃຫ້ພົ້ນຈາກຄວາມຫຍຸ້ງຍາກ ; он ка́к-нибудь найдёт нас ເທິງຢ່າງໃດກໍຕາມລາວຊອກຫາ ພວກເຮົາໄດ້

приво|ди́ть, -жу́, приво́д|ишь, -ят *несов.*; **приве|сти́,** -ду́, -дёшь, -ду́т (*прош.* привёл, привел|а́, -о́, -и́) *сов.* **1** *кого-что* ນຳມາ, ພາມາ; привести́ больно́го к врачу́ ພາຄົນເຈັບ ມາຫາແພດ; капита́н привёл кора́бль в порт ນາຍເຮືອນຳເອົາກຳປັ່ນເຂົ້າທ່າເຮືອ **2** *к чему* ເຮັດໃຫ້, ພາໃຫ້; ນຳໄປ; привести́ к пораже́нию (к ги́бели) ນຳໄປສູ່ການປະລາໄຊ (ຫາຍະນະ), ເຮັດໃຫ້ປະລາໄຊ (ສູນຫາຍ); иссле́дование привело́ к ва́жному откры́тию ການຄົ້ນຄວ້ານຳໄປສູ່ການຄົ້ນພົບອັນສຳຄັນ, ການຄົ້ນຄວ້າພາໃຫ້ຄົ້ນພົບສິ່ງສຳຄັນ **3** *кого-что во что* ເຮັດໃຫ້; приводи́ть к исполне́нию ປະຕິບັດໃຫ້ປະກົດເປັນຈິງ; приводи́ть маши́ну в движе́ние ເຮັດໃຫ້ຈັກຕົດ; привести́ механи́зм в де́йствие ເຮັດໃຫ້ຈັກແລ່ນ; приводи́ть кого́-нибудь в отча́яние ເຮັດໃຫ້ເພິ່ນ ຫມົດບັນຍາ; привести́ ве́щи в поря́док ຈັດ ແຈງເຄື່ອງຂອງ; привести́ стол в поря́док ປັດໂຕະ **4** *что* ສະເຫນີ, ອ້າງ, ຍົກ; приводи́ть приме́ры ຍົກຕົວຢ່າງ; привести́ да́нные о ро́сте промы́шленности ສະເຫນີຂໍ້ມູນກ່ຽວກັບ ການເຕີບໃຫຍ່ຂອງອຸດສາຫະກຳ

приво|зи́ть, -жу́, приво́з|ишь, -ят *несов.*; **привез|ти́,** -у́, -ёшь, -у́т (*прош.* привёз, привезл|а́, -о́, -и́) *сов.*; *кого-что* ນຳມາ, ເອົາມາ; привести́ тури́стов в столи́цу ນຳເອົານັກທ່ອງ ທ່ຽວມາຍັງນະຄອນຫລວງ; привезти́ о́вощи на ры́нок ນຳເອົາຜັກມາຂາຍຢູ່ຕະຫລາດ

привыка́|ть, -ю, -ешь, -ют *несов.*; **привы́к|нуть,** -у, -ешь, -ут (*прош.* привы́к, -ла, -ло, -ли) *сов.*; *с неопр. и к кому-чему* ລ້ຽງເຄີຍ, ຊີນເຄີຍ, ລ້ຽງແກ່ນ; привы́кнуть ра́но вставать ເຄີຍຕື່ນແຕ່ເຊົ້າ; привыка́ть к обстано́вке ລ້ຽງກັບສະພາບການ; привыка́ть кури́ть ຕິດຢາສູບ

привы́кнуть *см.* привыка́ть

привы́ч|ка, -и (*мн.* привы́ч|ки, -ек, -кам) *ж* ນິດໄສ, ຄວາມລ້ຽງເຄີຍ; хоро́шая (плоха́я, вре́дная) привы́чка ນິດໄສດີ (ຊົ່ວ, ທີ່ມີຜົນ ຮ້າຍ); де́лать что́-нибудь по привы́чке ເຮັດ ຕາມຄວາມລ້ຽງເຄີຍ

привяза́ть *см.* привя́зывать

привя́зыва|ть, -ю, -ешь, -ют *несов.*; **привя|за́ть,** -жу́, привя́ж|ешь, -ут *сов.*; *кого-что* ຜູກ, ມັດ, ລ່ຳ; привяза́ть ло́шадь к де́реву ລ່ຳ ມ້ຳໃສ່ຕົ້ນໄມ້

пригласи́ть *см.* приглаша́ть

приглаша́|ть, -ю, -ешь, -ют *несов.*; **пригла|си́ть,** -шу́, -си́шь, -ся́т *сов.*; *кого* ເຊີນ; приглаша́ть (пригласи́ть) госте́й ເຊີນແຂກ; пригласи́ть дру́га в го́сти ເຊີນຫມູ່ມາຢາມ; пригласи́ть на конце́рт ເຊີນໄປເບິ່ງການສະແດງ; меня́ пригласи́ли пое́хать за́ город ເຂົາເຈົ້າ ເຊີນຂ້ອຍໄປທ່ຽວນອກເມືອງ

приглаше́ни|е, -я *с* ຄຳ[ເຊື້ອ]ເຊີນ; получи́ть приглаше́ние в теа́тр ໄດ້ຮັບຄຳເຊີນໄປເບິ່ງລະຄອນ; посла́ть приглаше́ние на торже́ственное заседа́ние ສົ່ງຄຳເຊີນເຂົ້າຮ່ວມພິທີສະເຫລີມສະຫລອງ; получи́ть приглаше́ние на конце́рт ໄດ້ຮັບເຊີນໄປເບິ່ງການສະແດງ; приня́ть приглаше́ние ຮັບຄຳເຊີນ; отказа́ться от приглаше́ния ປະຕິເສດບໍ່ຍອມຮັບຄຳເຊີນ

приговó́р, -а *м* ຄຳຕັດສິນ; справедли́вый (суро́вый) приговóр ຄຳຕັດສິນອັນຊອບທຳ(ເຄັ່ງຂຶມ); вы́нести приговóр ຕັດສິນ; привести́ приговóр в исполне́ние ປະຕິບັດຕາມຄຳຕັດສິນ

приго|ди́ться, -жу́сь, -ди́шься, -дя́тся *сов.* ໃຊ້ໄດ້, ໃຊ້ການໄດ້; ста́рый зонт ещё приго-ди́тся ຄັນຮົ່ມເກົ່າຍັງໃຊ້ໄດ້; мне пригоди́лся твой сове́т ຂ້ອຍເຮັດຕາມຄຳແນະນຳຂອງເຈົ້າ

при́город, -а *м* ຊານເມືອງ; при́город Москвы́ ຊານເມືອງມົດສະກູ; жить в при́городе ຢູ່ຊານເມືອງ

при́городн|ый, -ая, -ое, -ые ຊານເມືອງ; при́городный по́езд ລົດໄຟຊານເມືອງ

пригото́вить(ся) *см.* гото́вить(ся)

приду́мать *см.* приду́мывать

приду́мыва|ть, -ю, -ешь, -ют *несов.*; **приду́ма|ть,** -ю, -ешь, -ют *сов.*; *что* ຄິດຫາ, ຄົ້ນພົ້, ຄິດສ້າງ; приду́мать вы́ход из положе́ния ຄົ້ນພົ້ທາງອອກ; приду́мать но́вую игру́ ຄິດສ້າງການຫລິ້ນແນວໃຫມ່

прие́зд, -а *м* ການເດີນທາງມາ; прие́зд в го́род ການເດີນທາງມາເມືອງ; сообщи́ть о своём прие́зде ສົ່ງຂ່າວວ່າຈະມາ; по прие́зде он зашёл ко мне ພໍມາຮອດເພິ່ນກໍມາຫາຂ້ອຍ

приезжа́|ть, -ю, -ешь, -ют *несов.*; **прие́|хать,** -ду, -дешь, -дут *сов.* ມາຮອດ; прие́хать к роди́телям ມາຫາພໍ່ແມ່; прие́хать домо́й ມາບ້ານ, ມາເຮືອນ; прие́хать в дере́вню ມາຊົນນະບົດ; прие́хать на парохо́де (в авто́бусе, на такси́) ຂີ່ກຳປັ່ນ(ລົດເມ, ລົດຕັກຊີ)ມາ; ка́ждый год я приезжа́ю в Ленингра́д ຂ້ອຍມານະຄອນເລນິນກະລາດທຸກໆປີ

прие́м, -а *м* 1 ການຮັບ; прие́м лека́рств ການກິນຢາ; прие́м в па́ртию ການຮັບເຂົ້າພັກ 2 ການຕ້ອນຮັບ, ການຮັບຮອງ, ງານລ້ຽງ; быть на прие́ме у врача́ ໄປ(ມາ)ຫາແພດ; прису́тствовать на дипломати́ческом прие́ме ເຂົ້າຮ່ວມການຕ້ອນຮັບ(ງານຮັບຮອງ)ທາງການທູດ; устро́ить прие́м в честь высо́кого го́стя ຈັດງານລ້ຽງຕ້ອນຮັບເປັນກຽດແກ່ແຂກເມືອງ

прие́мник, -а *м* [ເຄື່ອງຮັບ]ວິທະຍຸ; включи́ть (вы́ключить) прие́мник ເປີດ(ປິດ)ວິທະຍຸ

прие́хать *см.* приезжа́ть

приз, при́за (*мн.* приз|ы́, -о́в) *м* ລາງວັນ; получи́ть приз на ко́нкурсе пиани́стов ໄດ້ຮັບ

ລາງວັນໃນການເສັງປີອາໂນ; вручáть призы́ ມອບລາງວັນ

призвáть *см.* призывáть

приземлéни|е, -я *с* ການລົງສູ່ດິນ

приземли́ться *см.* приземля́ться

приземля́|ться, -юсь, -ешься, -ются *несов.*; **приземл|и́ться,** -ю́сь, -и́шься, -я́тся *сов.* ລົງດິນ; самолёт приземля́ется ເຮືອບິນພວມລົງ; космонáвты приземли́лись в укáзанном райóне ນັກບິນອະວະກາດ ໄດ້ລົງສູ່ດິນໃນບໍລິເວນທີ່ຫມາຍໄວ້ກ່ອນ

призна|вáть, -ю́, -ёшь, -ю́т *несов.*; **признá|ть,** -ю, -ешь, -ют *сов.*; *что* ຮັບຮູ້, ຮັບຮອງ, ຖື, ຍອມຮັບ; признавáть чьи́-нибудь правá ຮັບຮູ້ສິດທິຂອງເພີ່ນ; признáть постýпок прáвильным ຖືການກະທຳຂອງເຂົາຖືກ; признáть свою́ оши́бку ຍອມຮັບຄວາມຜິດ

призна|вáться, -ю́сь, -ёшься, -ю́тся *несов.*; **признá|ться,** -юсь, -ешься, -ются *сов.*; *в чём* ສາລະພາບ; признáться в свои́х оши́бках ສາລະພາບຄວາມຜິດ; признáться в винé ຮັບໂທດ; признáться дéвушке в любви́ ສາລະພາບຄວາມຮັກຕໍ່ຜູ້ສາວ

при́знак, -а *м* ລັກສະນະ, ສັນຍາລັກ, ວີ່ແວວ; характéрный при́знак ລັກສະນະສະເພາະ; при́знаки болéзни ສະມຸດຖານຂອງພະຍາດ; пéрвые при́знаки весны́ ວີ່ແວວທຳອິດຂອງລະດູໃບໄມ້ປົ່ງ

признáни|е, -я *с* 1 ການສາລະພາບ, ຄຳສາລະພາບ; признáние своéй вины́ ການຮັບໂທດ; признáние в любви́ ການສາລະພາບຄວາມຮັກ; доби́ться от когó-нибудь признáния ບັງຄັບໃຫ້ເພີ່ນສາລະພາບ; услы́шать чьё-нибудь признáние ໄດ້ຍິນຄຳສາລະພາບ 2 ຄວາມນິຍົມ [ຊົມຊອບ]; заслужи́ть признáние ໄດ້ຮັບຄວາມນິຍົມຊົມຊອບ; пóльзоваться ширóким признáнием ເປັນທີ່ນິຍົມອັນກວ້າງຂວາງ; пьéса получи́ла признáние пýблики ບົດລະຄອນເລື່ອງນີ້ໄດ້ຮັບຄວາມນິຍົມຊົມຊອບຂອງຜູ້ຊົມ

признáть(ся) *см.* признавáть(ся)

призы́в, -а *м* ຄຳຮຽກຮ້ອງ, ຄຳຂວັນ; призы́в к борьбé ຄຳຮຽກຮ້ອງໃຫ້ລຸກຂຶ້ນຕໍ່ສູ້; Призы́вы ЦК КПСС к прáзднику Пéрвого мáя ຄຳຂວັນຂອງສູນກາງ ພ.ກ.ສ.ຊ. ຕ້ອນຮັບບຸນວັນທີຫນຶ່ງເດືອນຫ້າ; обрати́ться к нарóду с призы́вом ຮຽກຮ້ອງປະຊາຊົນ

призывá|ть, -ю, -ешь, -ют *несов.*; **призвáть,** призов|ý, -ёшь, -ýт (*прош.* призвáл, призвалá, призвáл|о, -и) *сов.*; *кого-что* ຮຽກຮ້ອງ, ຂໍຮ້ອງ, ຊວນ, ເອີ້ນ; призывáть на пóмощь ຮ້ອງ(ເອີ້ນ)ມາຊ່ວຍ; призывáть нарóд к борьбé (на борьбý) с врагóм ຮຽກຮ້ອງໃຫ້ປະຊາຊົນລຸກຂຶ້ນຕໍ່ສູ້ກັບສັດຕູ; призвáть зри́телей к соблюдéнию поря́дка (к поря́дку) ຮຽກຮ້ອງໃຫ້ຜູ້ເຂົ້າຊົມຮັກສາຄວາມສະຫງົບ

прийти́(сь) *см.* приходи́ть(ся)

прика́з, -а *м* ຄຳສັ່ງ; прика́з дире́ктора ຄຳສັ່ງຂອງຜູ້ອຳນວຍການ; прика́з по полку́ ຄຳສັ່ງປະຈຳກອງພັນໃຫຍ່; получи́ть прика́з ໄດ້ຮັບຄຳສັ່ງ; вы́полнить прика́з ປະຕິບັດຕາມຄຳສັ່ງ; яви́ться по прика́зу командира ມາລາຍງານຕົວຕາມຄຳສັ່ງຂອງຜູ້ບັນຊາການ; отдава́ть прика́з ອອກຄຳສັ່ງ

приказа́ть *см.* прика́зывать

прика́зыва|ть, -ю, -ешь, -ют *несов.*; **прика|за́ть,** -жу́, прика́ж|ешь, -ут *сов.*; *кому с неопр.* ອອກຄຳສັ່ງ; приказа́ть войска́м нача́ть наступле́ние ອອກຄຳສັ່ງໃຫ້ກອງທະຫານບຸກໂຈມຕີ

приключе́ни|е, -я *с* ການຜະຈົນໄພ, ການສ່ຽງໄຊ, ການສ່ຽງໄພ, ເລື່ອງ; смешно́е приключе́ние ເລື່ອງຊວນຫົວ, ເລື່ອງຕະຫລົກ; стра́нное приключе́ние ເລື່ອງແປກປະຫລາດ; кни́га о приключе́ниях ປຶ້ມເລື່ອງຜະຈົນໄພ; в доро́ге с на́ми произошло́ приключе́ние ພວກເຮົາພົບພໍ້ເຄາະອັນຕະລາຍກາງທາງ

прикрепи́ть *см.* прикрепля́ть

прикрепля́|ть, -ю, -ешь, -ют *несов.*; **прикре|п|и́ть,** -лю́, -и́шь, -я́т *сов.*; *что* ຕິດ; прикрепля́ть до́ску гвоздя́ми к забо́ру ເອົາຕາປູຕອກແປ້ນໃສ່ຮົ້ວ; прикрепи́ть по́лку к стене́ ເອົາກ້ານໃສ່ປຶ້ມຕິດຝາ; прикрепи́ть значо́к на пиджа́к ເອົາກາຄັດເສື້ອ

прила́в|ок, -ка *м* ໂຕະວາງສິນຄ້າ; ຮ້ານຂາຍຂອງ; подойти́ к прила́вку ໄປຫາໂຕະ

ຂາຍຂອງ; взять поку́пку с прила́вка ເອົາຂອງອອກຈາກໂຕະ; продаве́ц стои́т за прила́вком ຜູ້ຂາຍຢືນຢູ່ຂ້າງໂຕະ(ຮ້ານ)ຂາຍເຄື່ອງ

прилага́тельн|ое, -ого *с* ຄຳຄຸນນາມ; по́лные прилага́тельные, по́лные фо́рмы прилага́тельных ຄຳຄຸນນາມຮູບເຕັມ; кра́ткие прилага́тельные, кра́ткие фо́рмы прилага́тельных ຄຳຄຸນນາມຮູບຫຍໍ້

прилага́|ть, -ю, -ешь, -ют *несов.*; **прило|ж|и́ть,** -у́, прило́ж|ишь, -ат *сов.*; *что* ໃຊ້; приложи́ть все си́лы ໃຊ້ທຸກກຳລັງ, ສຸມກຳລັງ; прилага́ть мно́го уси́лий, что́бы ко́нчить рабо́ту в срок ໃຊ້ຄວາມພະຍາຍາມຫລາຍເພື່ອເຮັດວຽກໃຫ້ແລ້ວທັນເວລາ(ຕາມເວລາກຳນົດ)

прилета́|ть, -ю, -ешь, -ют *несов.*; **приле|те́ть,** -чу́, -ти́шь, -тя́т *сов.* ບິນມາ; прилете́ть на самолёте в Москву́ ຂີ່ເຮືອບິນມາມົດສະກູ; самолёт прилете́л ເຮືອບິນມາແລ້ວ; весно́й пти́цы прилета́ют с ю́га ໃນລະດູໃບໄມ້ປົ່ງຝູງນົກບິນມາແຕ່ທາງໃຕ້

прилете́ть *см.* прилета́ть

прили́чи|я, -й *мн.* (*ед.* прили́чи|е, -я *с*) ມາລະຍາດ; соблюда́ть прили́чия ຮັກສາມາລະຍາດ

прили́чно *нареч.* ດີ, ສຸພາບ; вести́ себя́ прили́чно ປະພຶດດີ

прили́чн|ый, -ая, -ое, -ые; прили́ч|ен, -на, -но, -ны ສຸພາບ, ສຸຂຸມ; прили́чное поведе́ние ກິລິຍາສຸຂຸມ, ກິລິຍາມາລະຍາດີ

приложи́ть *см.* прилага́ть

применéни|е, -я (*мн. нет*) *с* ການຫມຸນໃຊ້, ການນຳມາໃຊ້; применéние тéхники в сéльском хозя́йстве ການນຳເຄື່ອງຈັກມາໃຊ້ໃນກະສິກຳ, ການນຳໃຊ້ເຄື່ອງຈັກເຂົ້າໃນກະສິກຳ

применя́ть *см.* применя́ть

применя́|ть, -ю, -ешь, -ют *несов.*; **приме-н|и́ть,** -ю, приме́н|ишь, -ят *сов.*; *что* ໃຊ້, ຫມຸນໃຊ້, ນຳໃຊ້, ຈົມໃຊ້; применя́ть но́вые ле-ка́рства ໃຊ້ຢາຊະນິດໃຫມ່; примени́ть зна́ния на пра́ктике ຫມຸນໃຊ້ຄວາມຮູ້ເຂົ້າໃນຊີວິດປະຈຳວັນ (ພາກຕົວຈິງ)

приме́р, -а *м* **1** ຕົວຢ່າງ; приме́ры из исто́рии ຕົວຢ່າງຈາກປະຫວັດສາດ; привести́ приме́р ຍົກຕົວຢ່າງ; объясни́ть пра́вило на не́скольких приме́рах ເອົາສອງສາມຕົວຢ່າງອະທິບາຍຫລັກເກນ **2** ແບບຢ່າງ, ແບບສະບັບ; сле́довать приме́ру отца́ ເອົາແບບຢ່າງຂອງພໍ່; быть приме́ром для други́х ສ້າງແບບຢ່າງໃຫ້ຜູ້ອື່ນ; его́ посту́пок — приме́р му́жества ການກະທຳຂອງເພິ່ນເປັນແບບຢ່າງຂອງຄວາມກ້າວຫານ ◇ подава́ть (пода́ть) *или* пока́зывать (показа́ть) приме́р *кому* ສ້າງແບບຢ່າງໃຫ້ເພິ່ນ

приме́рить *см.* примеря́ть

приме́рно *нареч.* ປະມານ, ກະວ່າ; ему́ приме́рно со́рок лет ຄົນນັ້ນອາຍຸປະມານ (ກະວ່າ) ສີ່ສິບປີ; я уе́ду приме́рно че́рез ме́сяц ຍັງອີກປະມານເດືອນຫນຶ່ງຂ້ອຍຈະຈາກໄປ

примеря́|ть, -ю, -ешь, -ют *несов.*; **приме́-р|ить,** -ю, -ишь, -ят *сов.*; *что* ລອງ; примеря́ть (приме́рить) ту́фли (шля́пу) ລອງໃສ່ເກີບ (ຫມວກ); примеря́ть (приме́рить) костю́м ລອງນຸ່ງຊຸດ [ໂສ້ງເສື້ອ]

примири́ться *см.* мири́ться 2

принадлеж|а́ть, -у́, -и́шь, -а́т *несов.* **1** (*1 и 2 л. не употр.*) *кому* (ເປັນຂອງ); в СССР фа́брики и заво́ды принадлежа́т госуда́рству ໃນສ.ສ.ສ.ຊ.ໂຮງງານແລະໂຮງຈັກລ້ວນແຕ່ເປັນຂອງລັດ; дом принадлежи́т отцу́ ເຮືອນຫລັງນີ້ [ເປັນ]ຂອງພໍ່ **2** (*1 и 2 л. не употр.*) *кому-чему*: карти́на принадлежи́т изве́стному худо́жнику ຮູບແຕ້ມນີ້ເປັນສີໄມ້ລາຍມືຂອງຊ່າງແຕ້ມຮູບຜູ້ມີຊື່ສຽງ; на́шему госуда́рству принадлежи́т ва́жная роль в борьбе́ за мир ປະເທດເຮົາມີບົດບາດສຳຄັນໃນການຕໍ່ສູ້ເພື່ອສັນຕິພາບ **3** *к чему* ເປັນ; он принадлежи́т к числу́ тала́нтливых писа́телей ລາວເປັນນັກປະພັນຜູ້ມີພອນສະຫວັນຜູ້ຫນຶ່ງ

принести́ *см.* приноси́ть

принима́|ть, -ю, -ешь, -ют *несов.*; **приня́ть,** приму́, при́м|ешь, -ут (*прош.* при́нял, приняла́, при́нял|о, -и) *сов.* **1** *что* ຮັບ; приня́ть пода́рок, принима́ть пода́рки ຮັບເອົາຂອງຂວັນ; принима́ть (приня́ть) телегра́мму ຮັບໂທລະເລກ; принима́ть (приня́ть) сообще́ние по ра́дио ຮັບຂ່າວທາງວິທະຍຸ; принима́ть зака́зы

на ремо́нт оде́жды ຮັບສ້ອມແປງເສື້ອ 2 *кого* ຮັບເຂົ້າ; бра́та при́няли в университе́т ເພິ່ນຮັບນ້ອງຊາຍເຂົ້າມະຫາວິທະຍາໄລ; меня́ при́няли на рабо́ту ເພິ່ນຮັບຂ້ອຍເຂົ້າເຮັດວຽກ; принима́ть (приня́ть) кого́-нибудь на до́лжность дире́ктора ຮັບເພິ່ນເຮັດວຽກເປັນຜູ້ອຳນວຍການ; приня́ть комсомо́льца в па́ртию ຮັບເອົາຊາວຫນຸ່ມກົມໂຊໂມນເຂົ້າພັກ *кого* ຮັບ; принима́ть посети́телей ຮັບແຂກ; принима́ть госте́й ຮັບແຂກ; врач принима́ет больны́х в своём кабине́те ແພດຮັບຄົນເຈັບຢູ່ໃນຫ້ອງຂອງຕົນ 4 *что* ຜ່ານ, ຮັບຮອງ, ຮັບເອົາ, ຍອກ; принима́ть но́вые зако́ны ຜ່ານ(ອອກ)ກົດຫມາຍໃຫມ່; приня́ть прое́кт (предложе́ние) ຮັບເອົາໂຄງຮ່າງ(ຂໍ້ສະເຫນີ) 5 *что*: принима́ть реше́ние ຜ່ານມະຕິ(ການຕົກລົງ); принима́ть уча́стие ເຂົ້າຮ່ວມ; приня́ть необходи́мые ме́ры ໃຊ້ມາດຕາການອັນຈຳເປັນ 6 *что*: принима́ть серьёзный вид ເຮັດຫນ້າຂຶມ; приня́ть фо́рму ша́ра ກາຍເປັນຮູບມົນ; приня́ть горизонта́льное положе́ние ຢູ່ໃນທ່ານອນ 7 *что* ກິນ; принима́ть ка́пли ກິນຢານ້ຳ; приня́ть порошо́к от ка́шля ກິນຢາຝຸ່ນດີໄອ ◇ приня́ть (принима́ть) бой ຮັບມືກັບ; приня́ть (принима́ть) ва́нну ອາບນ້ຳ; принима́ть (приня́ть) душ ໃຊ້ບົວອາບນ້ຳ, ອາບນ້ຳ[ສາຍ]ບົວ

принима́|ться, -юсь, -ешься, -ются *несов.*; **приня́ться,** приму́сь, при́м|ешься, -утся (*прош.* принялся́ *и* приня́лся, принял|а́сь, -о́сь, -и́сь) *сов.*; *за что и с неопр.* ລົງມື, ເລີ່ມຕົ້ນ; принима́ться (приня́ться) за уро́ки (за рабо́ту) ລົງມືຄົ້ນຄວ້າບົດສອນ(ເຮັດວຽກ); принима́ться (приня́ться) чита́ть (писа́ть письмо́) ລົງມືອ່ານຫນັງສື(ຂຽນຈົດຫມາຍ)

прино|си́ть, -шу́, прино́с|ишь, -ят *несов.*; **принес|ти́,** -у́, -ёшь, -у́т (*прош.* принёс, принесл|а́, -о́, -и́) *сов.* 1 *кого-что* ເອົາມາ; носи́ть жене́ цветы́ ເອົາດອກໄມ້ມາຕ້ອນເມຍ; принести́ чемода́н из ка́меры хране́ния ເອົາຫີບມາຈາກຫ້ອງຝາກເຄື່ອງ; принести́ в ко́мнату не́сколько сту́льев ຍົກເອົາຕັ່ງອີ້ມາໃນຫ້ອງສອງສາມຫນ່ວຍ 2 *что* ນຳມາ, ພາໃຫ້ເກີດ; приноси́ть по́льзу (вред) ນຳຜົນດີ(ຮ້າຍ)ມາ; принести́ дохо́д ນຳກຳໄລມາ 3 *что*: приноси́ть кля́тву ສາບານຕົວ; приноси́ть благода́рность ຍ້ອງຍໍສັນລະເສີນ

при́нцип, -а *м* 1 ຫລັກການ; при́нципы маркси́зма-ленини́зма ຫລັກການລັດທິມາກ-ເລນິນ 2 ຫລັກຫມັ້ນ; твёрдые при́нципы ຫລັກຫມັ້ນ; отказа́ться от чего́-нибудь из при́нципа ປະຕິເສດບໍ່ຍອມເຮັດອັນໃດອັນຫນຶ່ງ ຍ້ອນຝືນກັບທັດສະນະຫລັກຫມັ້ນ ◇ в при́нципе ໂດຍຫລັກການ; в при́нципе я согла́сен ຂ້ອຍເຫັນດີໂດຍຫລັກການ

принципиа́льн|ый, -ая, -ое, -ые; принципиа́-

лен, принципиа́льн|а, -о, -ы 1 ຫລັກການ; принципиа́льный вопро́с ບັນຫາຫລັກຫມັ້ນ; принципиа́льная ра́зница ຄວາມແຕກຕ່າງທາງຫລັກການ; не име́ть принципиа́льного значе́ния ບໍ່ມີຄວາມຫມາຍທາງຫລັກການ 2 ຫລັກຫມັ້ນ; принципиа́льный челове́к ຄົນມີຫລັກຫມັ້ນ; принципиа́льная поли́тика ນະໂຍບາຍທີ່ມີລັກສະນະເປັນຫລັກການ

приня́ть(ся) *см.* принима́ть(ся)

приобрести́ *см.* приобрета́ть

приобрета́|ть, -ю, -ешь, -ют *несов.*; **приобре|сти́,** -ту́, -тёшь, -ту́т (*прош.* приобрёл, приобрел|а́, -о́, -и́) *сов.* 1 *кого-что* ໄດ້; приобрести́ маши́ну ໄດ້ລົດ 2 *что* ໄດ້ມາ; ко́мната приобрела́ пра́здничный вид ຫ້ອງໄດ້ມີລັກສະນະຄຶກຄື້ນບຸນ; отноше́ния приобрели́ дру́жеский хара́ктер ການພົວພັນໄດ້ມີລັກສະນະແບບເພື່ອນມິດ 3 *что* ໄດ້ຮັບ; приобрета́ть зна́ния ໄດ້ຄວາມຮູ້; приобрета́ть жи́зненный о́пыт ໄດ້ຮັບບົດຮຽນທາງຊີວິດ; приобрести́ специа́льность сле́саря ຮຽນຮູ້ອາຊີບເປັນຊ່າງເຫລັກ

приро́д|а, -ы (*мн. нет*) *ж* ທໍາມະຊາດ; явле́ния приро́ды ປະກົດການຂອງທໍາມະຊາດ; изуча́ть приро́ду ຄົ້ນຄວ້າທໍາມະຊາດ; се́верная (ю́жная) приро́да ທໍາມະຊາດພາກເຫນືອ (ພາກໃຕ້); краси́вая приро́да ທໍາມະຊາດງົດງາມ; любова́ться приро́дой ຊົມທໍາມະຊາດ

приро́дн|ый, -ая, -ое, -ые ທໍາມະຊາດ; приро́дный газ ອາຍໄຕ [ທໍາມະຊາດ]; приро́дные бога́тства ຊັບພະຍາກອນທໍາມະຊາດ; изуче́ние приро́дных усло́вий страны́ ຄົ້ນຄວ້າສະພາບທໍາມະຊາດຂອງປະເທດ

присва́ива|ть, -ю, -ешь, -ют *несов.*; **присво́|ить,** -ю, -ишь, -ят *сов.* 1 *кого-что* ຍຶດເອົາ [ເປັນກໍາມະສິດ], ຣິບໂຮມ; присво́ить чужу́ю вещь ຍຶດເອົາຂອງຜູ້ອື່ນ 2 *что кому-чему* ມອບ, ຕັ້ງ; присво́ить зва́ние наро́дного арти́ста СССР ມອບນາມມະຍົດສິລະປິນປະຊາຊົນຂອງສ.ສ.ສ.ຊ.; теа́тру присво́или и́мя вели́кого писа́теля ໂຮງລະຄອນໄດ້ຮັບການຕັ້ງຊື່ຕາມຊື່ນັກປະພັນຜູ້ຍິ່ງໃຫຍ່

присвое́ни|е, -я (*мн. нет*) *с* 1 ການຍຶດເອົາເປັນກໍາມະສິດ; присвое́ние чужо́й со́бственности ຍຶດເອົາຊັບສົມບັດຂອງຜູ້ອື່ນມາເປັນກໍາມະສິດຂອງຕົນ 2 ການມອບ; присвое́ние во́инского зва́ния ການມອບຍົດທະຫານ

присво́ить *см.* присва́ивать

присла́ть *см.* присыла́ть

присни́ться *см.* сни́ться

присоедини́ть(ся) *см.* присоединя́ть(ся)

присоединя́|ть, -ю, -ешь, -ют *несов.*; **присоедин|и́ть,** -ю́, -и́шь, -я́т *сов.*; *что к чему* ເອົາ...ເຂົ້າ, ເອົາ...ໂຮມເຂົ້າ; присоедини́ть э́тот райо́н к друго́й о́бласти ເອົາເມືອງນີ້ໄປຂຶ້ນກັບແຂວງອື່ນ; к про́сьбе моего́ дру́га я присоединя́ю свою́ ຂ້ອຍເອົາຄໍາຂໍຮ້ອງຂອງຂ້ອຍໂຮມເຂົ້າກັບຄໍາຂໍຮ້ອງຂອງຫມູ່ຂ້ອຍ

присоедини́|ться, -юсь, -ешься, -ются *несов.*; **присоедин|и́ться,** -ю́сь, -и́шься, -я́тся *сов.*; *к кому-чему* ຮ່ວມ, ເຂົ້າ; присоедини́ться к гру́ппе тури́стов ຮ່ວມກັບຫມູ່ນັກທ່ອງທ່ຽວ; я присоединя́юсь к ва́шему мне́нию ຂ້ອຍເຫັນພ້ອມກັບຄວາມເຫັນຂອງເຈົ້າ

приспоса́блива|ть, -ю, -ешь, -ют *несов.*; **приспосо́б|ить,** -лю, -ишь, -ят *сов.*; *кого-что* ຫມູນ[ໃຊ້], ດັດແປງ, ປັບ; приспосо́бить помеще́ние под гара́ж ຫມູນໃຊ້ເຮືອນໃຫ້ເປັນຮູ່ລົດ

приспоса́блива|ться, -юсь, -ешься, -ются *несов*; **приспосо́б|иться,** -люсь, -ишься, -ятся *сов.* ປັບຕົວ, ຫມູນຕົວ; приспосо́биться к окружа́ющей среде́ ປັບຕົວເຂົ້າກັບສິ່ງແວດລ້ອມ; приспосо́биться к холо́дному кли́мату ຫມູນຕົວໃຫ້ສອດຄ່ອງໄປຕາມອາກາດຫນາວ

приспосо́бить(ся) *см.* приспоса́бливать(ся)

при́стан|ь, -и (*мн.* при́стани, пристане́й) *ж* ທ່າ[ເຮືອ], ບ່ອນຈອດ; подойти́ к при́стани ໄປຫາທ່າເຮືອ; останови́ться у при́стани ຈອດທ່າ, ຈອດທ່າ

прису́тстви|е, -я (*мн. нет*) *с* ການມີຫນ້າ, ການເຂົ້າຮ່ວມ; прису́тствие на заседа́нии ການເຂົ້າຮ່ວມການປະຊຸມ ◇ в прису́тствии *кого, чьём* ຊ້ອງຫນ້າ; разгово́р был в прису́тствии друзе́й ສົນທະນາກັບຊ້ອງຫນ້າເພື່ອນຝູງ

прису́тств|овать, -ую, -уешь, -уют *несов.* ຮ່ວມ, ເຂົ້າຮ່ວມ, ມີຫນ້າ; прису́тствовать на собра́нии ຮ່ວມ[ກອງ]ປະຊຸມ; прису́тствовать при разгово́ре ເຂົ້າຮ່ວມໃນການສົນທະນາ

прису́тствующ|ие, -их *мн.* ຄົນທີ່ມາຮ່ວມ(ປະຊຸມແລະອື່ນ), ຄົນທີ່ຢູ່ໃນຫ້ອງ; спи́сок прису́тствующих на собра́нии ບັນຊີລາຍຊື່ຂອງຜູ້ມາຮ່ວມປະຊຸມ; все прису́тствующие в за́ле вста́ли ຄົນທີ່ຢູ່ໃນຫ້ອງລຸກຢືນຂຶ້ນຫມົດທຸກຄົນ

присыла́|ть, -ю, -ешь, -ют *несов.*; **присла́ть,** пришл|ю́, -ёшь, -ю́т *сов.*; *кого-что* ສົ່ງ, ມາຝາກ; присыла́ть пи́сьма (телегра́мму) ສົ່ງຈົດຫມາຍ(ໂທລະເລກ)ມາ; присла́ть пода́рок ສົ່ງຂອງຂວັນມາໃຫ້

прихо|ди́ть, -жу́, прихо́д|ишь, -ят *несов.*; **прийти́,** прид|у́, -ёшь, -у́т (*прош.* приш|ёл, -ла́, -ло́, -ли́) *сов.* 1 ມາ; прийти́ в институ́т (в магази́н) ມາມະຫາວິທະຍາໄລ(ຮ້ານຄ້າ); прийти́ на рабо́ту ມາການ; прийти́ к ро́дственникам ມາຫາພີ່ນ້ອງ; прийти́ в го́сти к роди́телям ມາຢາມພໍ່ແມ່; приходи́ть ка́ждый день к девяти́ часа́м ມາເກົ້າໂມງທຸກມື້; прийти́ с рабо́ты домо́й ໄປເຮັດວຽກມາເຮືອນ 2 (*1 и 2 л. не употр.*) ມາຮອດ, ມາເຖິງ; по́езд прихо́дит ра́но у́тром ລົດໄຟມາແຕ່ເຊົ້າໆ; пришла́ телегра́мма от отца́ ມີໂທລະເລກຂອງພໍ່ມາ; пришёл отве́т ມີຄໍາຕອບມາ 3 (*1 и 2 л. не употр.*) ຮອດ, ເຖິງ; пришла́ весна́ ເຖິງລະດູ

ใบไม้บิ่ง; прихо́дит вре́мя проща́ться ເຖິງເວລາລ່ຳລາກັນ 4 *к чему* ບັນລຸ; приходи́ть к пра́вильному реше́нию ຕົກລົງ(ຕົດສິນ)ໄດ້ຢ່າງຖືກຕ້ອງ; прийти́ к оши́бочному вы́воду ລົງຄວາມເຫັນຜິດ 5 *во что* ເກີດຂຶ້ນ (ຄວາມຮູ້ສຶກ, ຄວາມຄິດ); приходи́ть (прийти́) в волне́ние (в восто́рг) ເກີດຄວາມຫົນຫວຍ (ຄວາມປິຕິຊົມຊື່ນ)ຂຶ້ນ; прийти́ в движе́ние ເລີ່ມຕົ້ນເຄື່ອນໄຫວ ◇ приходи́ть (прийти́) в себя́ (в созна́ние, в чу́вство) ຮູ້ເນື້ອຄົ້ງຂຶ້ນ; ра́неный пришёл в себя́ и попроси́л воды́ ຄົນຖືກບາດເຈັບຊວາດເນື້ອແລ້ວຂໍກິນນ້ຳ; больно́й у́мер, не приходя́ в созна́ние ຄົນເຈັບຕາຍບໍ່ຟື້ນຄືນ; приходи́ть (прийти́) на по́мощь *кому* ມາຊ່ວຍ; ему́ пришла́ мысль (иде́я) ລາວມີຄວາມຄິດອັນໜຶ່ງເກີດຂຶ້ນ

приходи́ться, прихо́дится *несов.*; **прийти́сь,** придётся (*прош.* пришло́сь) *сов.*; *безл., с неопр.* ຈຳເປັນຕ້ອງ; ему́ пришло́сь уе́хать ລາວຈຳເປັນຕ້ອງເມືອ; прихо́дится согласи́ться ຈຳເປັນຕ້ອງບອມຮັບ

причáсти|е, -я *с* ກຳມະວິເສດ

причеса́ть(ся) *см.* причёсывать(ся)

причёск|а, -и (*мн.* причёс|ки, -ок, -кам) *ж* ຊົງຜົມ; краси́вая (высо́кая) причёска ຊົງຜົມສວຍງາມ(ສູງ); сде́лать причёску в парикма́херской ແຕ່ງຜົມໃນຮ້ານຕັດຜົມ; измени́ть причёску ແຕ່ງຜົມແບບໃຫມ່

причёсыва|ть, -ю, -ешь, -ют *несов.*; **приче|са́ть,** -шу́, причёш|ешь, -ут *сов.*; *кого-что* ຫວີ; причёсывать во́лосы ຫວີຜົມ; причеса́ть ребёнка ຫວີຜົມໃຫ້ລູກ

причёсыва|ться, -юсь, -ешься, -ются *несов.*; **приче|са́ться,** -шу́сь, причёш|ешься, -утся *сов.* ຫວີຜົມ; причёсываться пе́ред зе́ркалом ຫວີຜົມແຍງແວ່ນ

причи́н|а, -ы *ж* 1 ສາຍເຫດ, ຕົ້ນເຫດ, ເຄົ້າ; причи́на ссо́ры ສາຍເຫດຂອງການຜິດກຽງກັນ; причи́ной его́ боле́зни была́ просту́да ສາຍເຫດທີ່ຄົນນັ້ນເຈັບປ່ວຍແມ່ນເປັນຫວັດ 2 ເຫດຜົນ; серьёзная (ва́жная) причи́на ເຫັດຜົນສຳຄັນ; пла́кать без причи́ны ໄຫ້ບໍ່ມີເຫດຜົນ; найти́ причи́ну для отка́за ອ້າງເຫດຜົນເພື່ອປະຕິເສດ

причини́ть *см.* причиня́ть

причиня́|ть, -ю, -ешь, -ют *несов.*; **причи|ни́ть,** -ю́, -и́шь, -я́т *сов.*; *что* ເຮັດໃຫ້, ພາໃຫ້, ເປັນເຫດໃຫ້, ສ້າງ; причиня́ть го́ре ເຮັດໃຫ້ທຸກ ໂສກ, ສ້າງຄວາມທຸກ; причиня́ть вред ພາໃຫ້ເກີດຄວາມເສຍຫາຍຂຶ້ນ, ນຳຄວາມເສຍຫາຍມາໃຫ້; причини́ть ма́тери мно́го страда́ний ເຮັດໃຫ້ແມ່ປະສົບຄວາມເດືອດຮ້ອນຫລາຍ; ра́на причиня́ет ему́ си́льную боль ບາດແຜເຮັດໃຫ້ລາວເຈັບປວດແຮງ

пришива́|ть, -ю, -ешь, -ют *несов.*; **приши́ть,** пришь|ю, -ёшь, -ю́т *сов.*; *что* ຫຍິບໃສ່; при-

шива́ть пу́говицы к пальто́ ຫຍິບກະດຸມໃສ່ເສື້ອ

приши́ть *см.* пришива́ть

прия́тно *нареч.* (*часто в знач. сказ., с неопр.*) ຢ່າງກຶກໃຈ, ສົມໃຈ, ເພີ່ງພໍໃຈ; они́ прия́тно провели́ ве́чер у друзе́й ຕອນແລງພວກເຂົາໄດ້ຢູ່ນຳຫມູ່ຢ່າງເພີ່ງພໍໃຈ; мне бы́ло прия́тно с ва́ми познако́миться ຂ້ອຍຍິນດີລົ້ງແກວ່ນກັບທ່ານ

прия́тн|ый, -ая, -ое, -ые; прия́т|ен, -на, -но, -ны 1 ກຶກໃຈ, ສົມໃຈ, ເພີ່ງພໍໃຈ; прия́тный за́пах ກິ່ນຫອມ; прия́тная встре́ча ການພົບປະທີ່ພໍອົກພໍໃຈ; прия́тная прогу́лка ການທ່ຽວທີ່ພໍອົກພໍໃຈ; прия́тная но́вость ຂ່າວທີ່ຫນ້າເພີ່ງພໍໃຈ 2 ຫນ້າຮັກ; прия́тный челове́к ຄົນຫນ້າຮັກ; прия́тный го́лос ສຽງອອນຊອນ; у него́ прия́тное лицо́ ຄົນນັ້ນມີຫນ້າເປັນຕາຮັກ

про *предлог с вин.* ເລື່ອງ, ກ່ຽວກັບ; ска́зка про во́лка ນິທານເລື່ອງຫມາໄນ

пробега́|ть, -ю, -ешь, -ют *несов.*; **пробе|жа́ть,** -гу́, -жи́шь, -гу́т *сов.*; *что и без. доп.* ແລ່ນ [ຜ່ານ]; пробега́ть по́лем ແລ່ນຜ່ານທົ່ງຫຍ້າ; пробега́ть че́рез пло́щадь ແລ່ນຜ່ານເດີ່ນ; пробега́ть ми́мо до́ма ແລ່ນກາຍເຮືອນ; пробежа́ть по доро́ге ແລ່ນຕາມທາງ; пробежа́ть сто ме́тров за де́сять секу́нд ແລ່ນຮ້ອຍແມັດຕໍ່ສິບວິນາທີ

пробежа́ть *см.* пробега́ть

про́бк|а, -и (*мн.* про́б|ки, -ок, -кам) *ж* [ກະ]ດອນ; закры́ть буты́лку про́бкой ເອົາກະດອນອັດແກ້ວ (ຂວດ)



про́бка

пробле́м|а, -ы *ж* ບັນຫາ, ຂອດ; ва́жная пробле́ма ບັນຫາສຳຄັນ; сло́жная пробле́ма ບັນຫາສັບສົນ; пробле́ма воспита́ния ບັນຫາສຶກສາອົບຮົມ; пробле́мы совреме́нной нау́ки ບັນຫາຂອງວິທະຍາສາດປັດຈຸບັນ; поста́вить пробле́му ຕັ້ງບັນຫາຂຶ້ນ; реши́ть пробле́му ແກ້ໄຂບັນຫາ, ປົດແກ້ຂອດ; рабо́тать над интере́сной пробле́мой ຄົ້ນຄວ້າບັນຫາທີ່ຫນ້າສົນໃຈ

про́б|овать, -ую, -уешь, -уют *несов.*; **попро́б|овать,** -ую, -уешь, -уют *сов.* 1 *что* ຊີມ [ເບີ່ງ], ລອງ; попро́бовать суп ຊີມແກງ; попро́буйте э́то вино́ ເຊີນລອງກິນເຫລົ້າຊະນິດນີ້ 2 *с неопр.* ພະຍາຍາມ, ລອງ; он попро́бовал писа́ть стихи́ ລາວພະຍາຍາມ (ລອງ) ແຕ່ງບົດກອນ; ты уста́л, попро́буй усну́ть ເຈົ້າເມື່ອຍ ພະຍາຍາມນອນໃຫ້ຫລັບເດີ

прове́рить *см.* проверя́ть

прове́рк|а, -и (*мн.* прове́р|ки, -ок, -кам) *ж* ການກວດ, ການທົດລອງ, ການທົດສອບ; прове́рка докуме́нтов ການກວດເອກະສານ;

прове́рка рабо́ты механи́зма ການທົດລອງຈັກ; производи́ть прове́рку ກວດ, ທົດລອງ

проверя́|ть, -ю, -ешь, -ют *несов.*; **прове́р|ить,** -ю, -ишь, -ят *сов.*; *кого-что* 1 ກວດ [ກາ]; проверя́ть рабо́ту учрежде́ния ກວດກາການດຳເນີນວຽກງານຂອງສຳນັກງານ (ຫ້ອງການ); прове́рить годово́й отчёт ກວດບົດສະຫລຸບປະຈຳປີ, ກວດບັນຊີປະຈຳປີ; прове́рить биле́ты при вхо́де ກວດປີ້ເຂົ້າປະຕູ; проверя́ть часы́ ທຽບໂມງ; проверя́ть фа́кты ພິສູດຂໍ້ມູນ 2 ກວດ, ທົດສອບ, ສືບສວນ, ພິສູດ; проверя́ть ка́чество проду́кции ກວດ (ພິສູດ) ຄຸນນະພາບສິນຄ້າ; прове́рить зна́ния уча́щихся ທົດສອບຄວາມຮູ້ຂອງນັກຮຽນ

провести́ *см.* проводи́ть I

прово|ди́ть I, -жу́, прово́д|ишь, -ят *несов.*; **прове|сти́,** -ду́, -дёшь, -ду́т (*прош.* провёл, провел|а́, -о́, -и́) *сов.* 1 *кого-что* ພາ, ນຳ, ສົ່ງ; провести́ госте́й в ко́мнату ພາແຂກເຂົ້າຫ້ອງ; провести́ отря́д че́рез го́ры ພາກອງທະຫານຜ່ານພູດອຍ 2 *чем по чему* ລູບ; проводи́ть руко́й по волоса́м ເອົາມືລູບຜົມ 3 *что* ຂີດ, ຫມາຍ; проводи́ть пряму́ю ли́нию ຂີດເສັ້ນຊື່; провести́ грани́цу ຫມາຍເຂດແດນ 4 *что* [ນຳ] ເອົາ... ເຂົ້າ; проводи́ть желе́зную доро́гу ກໍ່ສ້າງທາງລົດໄຟ; провести́ телефо́н в дом ເອົາໂທລະສັບເຂົ້າເຮືອນ; провести́ электри́чество в дере́вню ເອົາໄຟຟ້າເຂົ້າບ້ານ; провести́ газ в го́род ເອົາອາຍໄຕ້ເຂົ້າເມືອງ 5 *что* ໃຊ້ເວລາ; проводи́ть ле́то в дере́вне ພັກຮ້ອນຢູ່ຊົນນະບົດ, ໃຊ້ເວລາຍາມຮ້ອນຢູ່ຊົນນະບົດ; провести́ воскресе́нье у друзе́й ພັກວັນອາທິດຢູ່ນຳຫມູ່, ໃຊ້ເວລາວັນອາທິດຢູ່ນຳຫມູ່ 6 *что* ຈັດ, ດຳເນີນ; проводи́ть (провести́) собра́ние ຈັດກອງປະຊຸມ; прозоди́ть (провести́) большу́ю рабо́ту ດຳເນີນວຽກງານອັນໃຫຍ່ຫລວງ; проводи́ть миролюби́вую поли́тику ດຳເນີນນະໂຍບາຍຮັກຫອມສັນຕິພາບ

проводи́ть II *см.* провожа́ть

проводи́ться, прово́д|ится, -ятся *несов.* 1 [ນຳ] ເອົາ... ເຂົ້າ; в но́вые дома́ прово́дится газ ເພີ່ນເອົາອາຍໄຕ້ເຂົ້າເຮືອນໃຫມ່ 2 ຈັດ, ດຳເນີນ; в э́том за́ле прово́дятся собра́ния ຫ້ອງນີ້ໃຊ້ສຳລັບຈັດກອງປະຊຸມ

проводни́к, проводника́ *м* ພະນັກງານຮັບຜິດຊອບຕູ້ລົດໄຟ; его́ оте́ц рабо́тает проводнико́м ພໍ່ຂອງລາວເປັນພະນັກງານຕູ້ລົດໄຟ

провожа́|ть, -ю, -ешь, -ют *несов.*; **прово|ди́ть,** -жу́, прово́д|ишь, -ят *сов.*; *кого* ສົ່ງ, ພາ; провожа́ть госте́й на вокза́л ສົ່ງແຂກເຖິງສະຖານີລົດໄຟ; проводи́ть де́вушку домо́й ສົ່ງ (ພາ) ຜູ້ສາວເຖິງເຮືອນ; проводи́ть делега́цию в Москву́ ສົ່ງຄະນະຜູ້ແທນໄປມົດສະກູ

провозгласи́ть *см.* провозглаша́ть

провозглаша́|ть, -ю, -ешь, -ют *несов.*; **провозгла|си́ть,** -шу́, -си́шь, -ся́т *сов.*; *что* ປະກາດ;

провозглаша́ть независи́мость ປະກາດເອກະລາດ

про́волок|а, -и *ж* ສາຍລວດ; стальна́я про́волока ສາຍລວດເຫລັກກ້າ; кле́тка из про́волоки ຕຸ້ມ(ຄອກ)ເຮັດດ້ວຍສາຍລວດ

проглоти́ть *см.* глота́ть

проголосова́ть *см.* голосова́ть

програ́мм|а, -ы *ж* 1 ໂຄງການ, ແຜນການ; програ́мма разви́тия промы́шленности ໂຄງການພັດທະນາອຸດສະຫະກຳ; програ́мма строи́тельства коммуни́зма ໂຄງການສ້າງສາລະບອບກອມມູນິດ 2 ໂຄງການ; Програ́мма КПСС ໂຄງການການເມືອງຂອງ ພ. ກ. ສ. ຊ. 3 ຫລັກສູດ; програ́мма по литерату́ре ຫລັກສູດວັນນະຄະດີ 4 ລາຍການ, ໜາຍກຳນົດ; програ́мма конце́рта (литерату́рного ве́чера) ລາຍການຂອງການສະແດງ (ຊຸມນຸມວັນນະຄະດີ); програ́мма переда́ч по ра́дио [ປະມວນ]ລາຍການວິທະຍຸ

прогре́сс, -а *м* ຄວາມກ້າວໜ້າ, ຄວາມຈະເລີນ; обще́ственный прогре́сс ຄວາມກ້າວໜ້າທາງສັງຄົມ; прогре́сс нау́ки ຄວາມຈະເລີນຂອງວິທະຍາສາດ; идти́ по пути́ прогре́сса ເດີນຕາມເສັ້ນທາງຂອງຄວາມກ້າວໜ້າ

прогресси́вн|ый, -ая, -ое, -ые; прогресси́в|ен, -на, -но, -ны ກ້າວໜ້າ; прогресси́вный де́ятель ບຸກຄົນກ້າວໜ້າ; прогресси́вные иде́и ແນວຄິດກ້າວໜ້າ; прогресси́вные взгля́ды ທັດສະນະກ້າວໜ້າ

прогу́лк|а, -и (*мн.* прогу́л|ки, -ок, -кам) *ж* ການທ່ຽວ[ຫລິ້ນ]; прогу́лка по па́рку ການທ່ຽວໃນສວນກິກໄມ້; прогу́лка на лы́жах ການທ່ຽວຫລິ້ນສະກີ; соверши́ть прогу́лку на ло́дке ໄປຂີ່ເຮືອຫລິ້ນ; отпра́виться на прогу́лку ໄປທ່ຽວ

прода|ва́ть, -ю, -ёшь, -ю́т *несов.*; **прода́|ть,** -м, -шь, -ст, продад|и́м, -и́те, -у́т (*прош.* про́дал *и* прода́л, продала́, про́дало *и* прода́ло, про́дали *и* прода́ли) *сов.*; *кого-что* ຂາຍ; продава́ть о́вощи на ры́нке ຂາຍຜັກຢູ່ຕະຫລາດ; продава́ть фру́кты до́рого ຂາຍຫມາກໄມ້ດ້ວຍລາຄາແພງ; продава́ть цветы́ дёшево ຂາຍດອກໄມ້ດ້ວຍລາຄາຖືກ; в магази́не продаю́т тка́ни ໃນຮ້ານຄ້າຂາຍແພ່ນແພ

продав|е́ц, -ца́ *м* ຜູ້ຂາຍ, ພໍ່ຄ້າ; рабо́тать продавцо́м в универма́ге ເປັນຜູ້ຂາຍໃນຮ້ານສັບພະສິນຄ້າ



продаве́ц за прила́вком

продавщи́ц|а, -ы *ж* ຜູ້ຂາຍ(ຍິງ), ແມ່ຄ້າ

прода́ж|а, -и (*мн. нет*) *ж* ການ[ຄ້າ]ຂາຍ; прода́жа све́жих овоще́й ການຂາຍຜັກສົດ

прода́ть *см.* продава́ть

продово́льстви|е, -я (*мн. нет*) *с* ສະບຽງ, ອາຫານ; запа́сы продово́льствия ສະບຽງອາຫານທີ່ແຮ່ໄວ້; снабжа́ть го́род продово́льствием ສະຫນອງສະບຽງອາຫານໃຫ້ຕົວເມືອງ

продолжа́|ть, -ю, -ешь, -ют *несов.*; **продо́л|жить,** -у, -ишь, -ат *сов.*; *что* (*несов. тж. с неопр.*) ສືບຕໍ່, ຕໍ່ໄປ; продолжа́ть (продо́лжить) разгово́р ສືບຕໍ່ສົນທະນາກັນ, ລົມກັນຕໍ່ໄປ; продолжа́ть (продо́лжить) борьбу́ ສືບຕໍ່ການຕໍ່ສູ້, ຕໍ່ສູ້ຕໍ່ໄປ; продолжа́ть (продо́лжить) свою́ речь ກ່າວບົດປາໄສຂອງຕົນຕໍ່ໄປ; продолжа́ть путь ເດີນທາງຕໍ່ໄປ; я продолжа́ю рабо́тать на заво́де ຂ້ອຍຍັງຄົງເຮັດວຽກຢູ່ໂຮງງານຄື ເກົ່າ

продолжа́|ться, -ется, -ются *несов.* ໃຊ້ເວລາ, ກິນເວລາ; уро́к продолжа́ется со́рок пять мину́т ໂມງຮຽນໃຊ້ເວລາສີ່ສິບຫ້ານາທີ; экза́мены продолжа́лись ме́сяц ການສອບເສັງໃຊ້ເວລາເດືອນຫນຶ່ງ; совеща́ние продолжа́лось три дня ການປະຊຸມດຳເນີນມາເປັນເວລາສາມມື້; строи́тельство продолжа́ется ການກໍ່ສ້າງຍັງດຳເນີນຢູ່

продолже́ни|е, -я *с* 1 ການສືບຕໍ່; продолже́ние разгово́ра ການສົນທະນາກັນ, ການເວົ້າກັນຕໍ່ 2 ພາກຕໍ່ໄປ; продолже́ние рома́на в сле́дующем но́мере журна́ла ນະວະນິຍາຍເລື່ອງນີ້ອ່ານຕໍ່ໃນສະບັບຫນ້າ

продо́лжить *см.* продолжа́ть

проду́кт, -а *м* 1 ຜະລິດຕະພັນ, ຜົນຜະລິດ; проду́кты се́льского хозя́йства ຜະລິດຕະພັນກະສິກຳ 2 (*тк. мн.*) ອາຫານ, ຂອງກິນ; моло́чные и мясны́е проду́кты ອາຫານປະເພດນົມແລະຊີ້ນ; све́жие проду́кты ຂອງສົດ; проду́кты пита́ния ຂອງກິນ, ເຄື່ອງກິນ

проду́кци|я, -и (*мн. нет*) *ж* ຜົນຜະລິດ; промы́шленная проду́кция ຜົນຜະລິດອຸດສາຫະກຳ; проду́кция заво́да (фа́брики) ຜົນຜະລິດຂອງໂຮງຈັກ(ໂຮງງານ)

проезжа́|ть, -ю, -ешь, -ют *несов.*; **прое́|хать,** -ду, -дешь, -дут *сов.* 1 ຂີ່ລົດໄປ; проезжа́ть по бе́регу реки́ ໄປລຽບຝັ່ງນ້ຳ; проезжа́ть лесно́й доро́гой ໄປຕາມທາງປ່າ; прое́хать че́рез двор ໄປຜ່ານເດີ່ນ, ລັດເດີ່ນໄປ; прое́хать сто киломе́тров ຂີ່ລົດໄປຮ້ອຍຫລັກ 2 *тж. что* ຂີ່ລົດໄປກາຍ; проезжа́ть ми́мо до́ма ໄປກາຍເຮືອນ; прое́хать поворо́т доро́ги ໄປກາຍທາງລ້ຽວ

прое́кт, -а *м* 1 [ໂຄງ]ຮ່າງ, ແຜນການ, ແຜນຮ່າງ, ແບບ; прое́кт моста́ ແຜນຮ່າງຂົວ; созда́ть прое́кт ວາງໂຄງຮ່າງ; рабо́тать над прое́ктом ຄົ້ນຄວ້າກຽມໂຄງຮ່າງ; дом постро́ен по прое́кту изве́стного архите́ктора ເຮືອນຫລັງນີ້ໄດ້ປຸກຂຶ້ນຕາມແບບຂອງສະຖາປະນິກທີ່ລືຊື່ 2 ຮ່າງ; прое́кт зако́на ຮ່າງກົດຫມາຍ; подгото́вить прое́кт догово́ра ກຽມ(ຫ້ຳ)ຮ່າງສັນຍາ

прое́хать *см.* проезжа́ть

прожи́ть, прожив|у́, -ёшь, -у́т (*прош.* про́жил *и* прожи́л, прожила́, про́жило *и* прожи́ло, про́жили *и* прожи́ли) *сов.* ຢູ່, ມີຊີວິດຢູ່

ไก้; прожи́ть во́семьдесят лет ມີຊີວິດຢູ່ໄດ້ ແປດສິບປີ; прожи́ть всю жизнь в дере́вне ຢູ່ໃນຊົນນະບົດຕະຫລອດຊີວິດ; я про́жил неде́лю в Москве́ ຂ້ອຍພັກເຊົາຢູ່ມົດສະກູອາ ທິດຫນຶ່ງ

про́з|а, -ы (*мн. нет*) *ж* [ບົດ]ຮ້ອຍແກ້ວ, ລີລິດ; худо́жественная про́за ປຶ້ມອ່ານຄຳ ຮ້ອຍແກ້ວ; писа́ть про́зой ຂຽນຄຳຮ້ອຍແກ້ວ; изуча́ть поэ́зию и про́зу ຄົ້ນຄວ້າບົດກະວີແລະ ບົດຮ້ອຍແກ້ວ

прозра́чн|ый, -ая, -ое, -ые; прозра́ч|ен, -на, -но, -ны 1 ສ່ອງຊອດ, ສ່ອງໃສ, ຜ່ອງໃສ; прозра́чная ткань (што́ра) ແພ່ນແພ(ຜ້າກັ້ງ) ສ່ອງຊອດ; стака́н из прозра́чного стекла́ ຈອກ ຂາວ 2: прозра́чная вода́ ນ້ຳສ່ອງໃສ

проигра́ть *см.* пройгрывать

пройгрыва|ть, -ю, -ешь, -ют *несов.*; **проигра́|ть,** -ю, -ешь, -ют *сов.*; *что* ເສຍ[ໄຊ], ຜ່າຍແພ້, ປະລາໄຊ; проигра́ть па́ртию в ша́хматы ຫລິ້ນ[ຫມາກ]ເສິກເສຍຮອບຫນຶ່ງ; проигра́ть сраже́ние ເສຍໄຊໃນການສູ້ຣົບ; проигра́ть встре́чу по футбо́лу ເຕະບານເສຍ

произведе́ни|е, -я *с* ຜະລິດຕະພັນ, ຜົນງານ. [ປະດິດແຕ່ງ]; литерату́рное произведе́ние ບົດ ປະພັນ, ບົດນິພົນ, ວັນນະກຳ; худо́жественное произведе́ние ປຶ້ມເລື່ອງຈິດຕະກຳ; тала́нтливое произведе́ние ບົດປະພັນດີເດັ່ນ; произведе́ние иску́сства ສິລະປະກຳ, ຜະລິດຕະພັນ

ທາງສິລະປະ; произведе́ния Л. Толсто́го ບົດ ປະພັນຂອງ ລ. ໂຕນສະໂຕຍ

произвести́ *см.* производи́ть

производи́тельност|ь, -и (*мн. нет*) *ж* ສະ ມັດກະພາບ, ປະສິດທິພາບ; высо́кая производи́тельность труда́ ສະມັດກະພາບຂອງແຮງ ງານ

произво|ди́ть, -жу́, произво́д|ишь, -ят *несов.*; **произве|сти́,** -ду́, -дёшь, -ду́т (*прош.* произвёл, произвел|а́, -о́, -и́) *сов.*; *что* 1 (*чаще несов.*) ຜະລິດ, ສ້າງ; заво́д производи́т станки́ ໂຮງ ງານຜະລິດເຄື່ອງຈັກ 2 ເຮັດ, ທຳ; производи́ть о́пыты ເຮັດການທົດລອງ; произвести́ деле́ние ຫານ(ເລກ); произвести́ умноже́ние ຄູນ(ເລກ); произвести́ в до́ме ремо́нт [ສ້ອມ] ແປງເຮືອນ ◇ производи́ть (произвести́) впечатле́ние *на кого* ຈັບໃຈ, ປະທັບໃຈ; пье́са произвела́ на зри́телей большо́е впечатле́ние ບົດລະຄອນຈັບໃຈຜູ້ຊົມຫລາຍ

производи́ться, произво́д|ится, -ятся *несов.* 1 ຜະລິດ; на заво́де производя́тся станки́ ໃນ ໂຮງງານນີ້ຜະລິດເຄື່ອງຈັກ 2 [ສ້ອມ]ແປງ; в до́ме производи́тся ремо́нт ຢູ່ໃນເຮືອນພວມ ສ້ອມແປງຢູ່

произво́дственн|ый, -ая, -ое, -ые ຜະລິດ; произво́дственный проце́сс ຂະບວນວິວັດການ ຜະລິດ; произво́дственный план ແຜນການ ການຜະລິດ; произво́дственное зада́ние ວຽກ ງານ(ຄວາມມອບຫມາຍ)ການຜະລິດ

произво́дств|о, -а (*мн. нет*) *с* ການຜະລິດ; произво́дство ста́ли (маши́н, станко́в) ການຜະລິດເຫລັກກ້າ (ລິດໂອໂຕ, ເຄື່ອງຈັກ); увели́чить произво́дство това́ров для населе́ния ເພີ່ມທະວີການຜະລິດສິນຄ້າສຳລັບປະຊາຊົນ

произво́л, -а (*мн. нет*) *м* ການເຮັດຕາມລຳພັງໃຈ (ຕາມອຳເພີໃຈ), ການບຽດບຽນ, ການບັງບຽດ; произво́л власте́й ການບຽດບຽນຂອງອຳນາດການປົກຄອງ; боро́ться с произво́лом ຕໍ່ສູ້ຕ້ານການບຽດບຽນຕາມອຳເພີໃຈ ◇ оста́вить (бро́сить) на произво́л судьбы́ *кого-что* ປະລະຕາມຍະຖາກຳ; оста́вить дете́й на произво́л судьбы́ ປະເດັກນ້ອຍໄວ້ຕາມຍະຖາກຳ (ຕາມມີຕາມເກີດ)

произнести́ *см.* произноси́ть

произно|си́ть, -шу́, произно́с|ишь, -ят *несов.*; **произнес|ти́**, -у́, -ёшь, -у́т (*прош.* произнёс, произнесл|а́, -о́, -и́) *сов.*; *что* ອອກສຽງ; с трудо́м произноси́ть звук «р» ອອກສຽງ «р» ຍາກ; пра́вильно произноси́ть сло́во ອອກສຽງຄຳຖືກ; произноси́ть (произнести́) речь ກ່າວຄຳປາໄສ

произноше́ни|е, -я (*мн. нет*) *с* ການອອກສຽງ; пра́вильное произноше́ние ການອອກສຽງຖືກ; пра́вила литерату́рного произноше́ния ກົດການອອກສຽງແບບມາດຕາຖານ

произойти́ *см.* происходи́ть

происходи́ть, происхо́д|ит, -ят *несов.*; **произой|ти́**, -дёт, -ду́т (*прош.* произош|ёл, -ла́, -ло́, -ли́) *сов.* ເກີດຂຶ້ນ, ມີຂຶ້ນ, ປະກົດຂຶ້ນ; произошло́ несча́стье ມີເຫດຮ້າຍເກີດຂຶ້ນ; что здесь происхо́дит? ມີຫຍັງເກີດຂຶ້ນຢູ່ນີ້?, ຢູ່ນີ້ ມີຫຍັງເກີດຂຶ້ນ?; что с ва́ми произошло́? ເຈົ້າ ເກີດເລື່ອງຫຍັງຂຶ້ນ?, ມີເລື່ອງຫຍັງເກີດຂຶ້ນ ກັບເຈົ້າ?; со мной произошёл интере́сный слу́чай ຂ້ອຍມີເລື່ອງທີ່ຫນ້າສົນໃຈເກີດຂຶ້ນ

происхожде́ни|е, -я (*мн. нет*) *с* ການກຳເນີດ; происхожде́ние челове́ка ການກຳເນີດຂອງມະນຸດ; происхожде́ние жи́зни на Земле́ ການກຳເນີດຊີວິດຢູ່ໃນຫນ່ວຍໂລກນີ້

происше́стви|е, -я *с* ເລື່ອງ, ເຫດ [ຮ້າຍ], ອຸບັດເຫດ, ອຸປະຕິເຫດ; случи́лось происше́ствие на у́лице ມີເລື່ອງ (ອຸບັດເຫດ) ເກີດຂຶ້ນຢູ່ກາງຖະຫນົນ; мы дое́хали без происше́ствий ພວກເຮົາໄດ້ເດີນທາງມາດ້ວຍຄວາມປອດໄພ

пройти́ *см.* проходи́ть

проконтроли́ровать *см.* контроли́ровать

пролетариа́т, -а *м* ຊົນຊັ້ນກຳມາຊີບ; борьба́ пролетариа́та за свою́ свобо́ду ການຕໍ່ສູ້ຂອງ ຊົນຊັ້ນກຳມາຊີບເພື່ອອິດສະຫລະພາບຂອງ ຕົນ

пролета́рск|ий, -ая, -ое, -ие ຊົນຊັ້ນກຳມາ ຊີບ; пролета́рская революция ການປະຕິວັດ ຂອງຊົນຊັ້ນກຳມາຊີບ

промежу́т|ок, -ка *м* ໄລຍະທາງ, ໄລຍະເວ ລາ, ລະຫວ່າງ; промежу́ток ме́жду о́кнами ລະຫວ່າງປ່ອງຢ້ຽມ; промежу́ток в де́сять лет ໄລຍະເວລາສິບປີ

промы́шленност|ь, -и (*мн. нет*) *ж* ອຸດສາຫະກຳ; автомоби́льная (го́рная) промы́шленность ອຸດສາຫະກຳພະລິດລິດ (ບໍ່ແຮ); развива́ть промы́шленность ເສີມຂະຫຍາຍອຸດສາຫະກຳ

промы́шленн|ый, -ая, -ое, -ые ອຸດສາຫະກຳ; промы́шленный го́род (райо́н) ເມືອງ(ເຂດ)ອຸດສາຫະກຳ; промы́шленная проду́кция ຜະລິດຕະພັນອຸດສາຫະກຳ; промы́шленные това́ры ເຄື່ອງເບັດຕະເລັດ, ເຄື່ອງໃຊ້ຂອງສອຍ

проника́|ть, -ю, -ешь, -ют *несов.*; **прони́к|нуть,** -у, -ешь, -ут (*прош.* прони́к, -ла, -ло, -ли) *сов.* 1 ຊຶມ, ສ່ອງ, ລອດ, ຊອດ; сквозь што́ры проника́ют лучи́ со́лнца ແສງແດດລອດຜ້າກັ້ງເຂົ້າຫ້ອງ; в ко́мнату прони́к за́пах бензи́на ກິ່ນນ້ຳມັນລອຍເຂົ້າໃນຫ້ອງ; вода́ прони́кла в подва́л ນ້ຳຊຶມເຂົ້າກ້ອງລ່າງ(ຫລຸມໃຕ້ດິນ) 2 ລອບເຂົ້າ; проника́ть в тыл врага́ ລັກລອບເຂົ້າແນວຫລັງຂອງສັດຕູ; прони́кнуть в дом че́рез окно́ [ລັກ]ເຂົ້າເຮືອນທາງປ່ອງຢ້ຽມ

прони́кнуть *см.* проника́ть

пропага́нд|а, -ы (*мн. нет*) *ж* ການໂຄສະນາ; полити́ческая (парти́йная) пропага́нда ການໂຄສະນາທາງການເມືອງ(ທາງພັກ); вести́ пропага́нду нау́чных зна́ний ໂຄສະນາເຜີຍແຜ່ຄວາມຮູ້ທາງດ້ານວິທະຍາສາດ

пропада́|ть, -ю, -ешь, -ют *несов.*; **пропа́сть,** пропад|у́, -ёшь, -у́т (*прош.* пропа́л, -а, -о, -и)

сов. 1 ຫາຍ, ເສຍ, ເສຍຫາຍ, ສູນຫາຍ, у меня́ пропа́ли часы́ ໂມງຂ້ອຍເສຍ; пропа́ла соба́ка ໝາເສຍ 2 (*1 и 2 л. не употр.*) ເສຍ[ລ້າງ]; пропа́л весь день ເສຍ(ເຄິກ)ເວລາຫມົດມື້; ваш труд не пропадёт ວຽກຂອງເຈົ້າບໍ່ເສຍໄປລ້າງ

пропа́сть *см.* пропада́ть

пропуска́|ть, -ю, -ешь, -ют *несов.*; **пропу|сти́ть,** -щу́, пропу́ст|ишь, -ят *сов.* 1 *кого-что* ປ່ອຍ; пропуска́ть в зри́тельный зал ປ່ອຍໃຫ້ຜູ້ຊົມເຂົ້າຫ້ອງ; пропусти́ть же́нщин вперёд ຫລີກທາງໃຫ້ແມ່ຍິງໄປກ່ອນ 2 (*1 и 2 л. не употр.*) *что* ຊຶມ; э́та бума́га пропуска́ет черни́ла ເຈ້ຍແນວນີ້ຊຶມນ້ຳຫມຶກ; гря́зное стекло́ пло́хо пропуска́ет свет ແວ່ນເປິເປື້ອນແສງແດດຜ່ານຍາກ 3 *что* ບໍ່ສົງເກດເຫັນ; ເວັ້ນ, ຂ້າມ, ຕົກບາ; пропусти́ть оши́бку ບໍ່ສົງເກດເຫັນຄຳຜິດ; пропусти́ть стро́чку при чте́нии ອ່ານຂ້າມບັນທັດ(ແຖວ)ຫນຶ່ງ; пропусти́ть авто́бус ເສຍລົດເມໄປຄັ້ງຫນຶ່ງ, ເສຍຄັ້ງລົດເມໄປລ້າງ 4 *что* ຂາດ, ບໍ່ມາ; пропуска́ть уро́ки (заня́тия) ຂາດໂຮງຮຽນ; пропусти́ть ле́кцию ບໍ່ມາຟັງຄຳບັນຍາຍ

пропусти́ть *см.* пропуска́ть

просвеще́ни|е, -я (*мн. нет*) *с* ການສຶກສາ[ອົບຮົມ]; полити́ческое просвеще́ние масс ການສຶກສາອົບຮົມການເມືອງແກ່ມວນຊົນ; министе́рство просвеще́ния ກະຊວງສຶກສາ

про|си́ть, -шу́, про́с|ишь, -ят *несов.*; **попро|си́ть,** -шу́, попро́с|ишь, -ят *сов.*; *кого-что и чего, о ком-чём и с неопр.* ຂໍ, ຮ້ອງຂໍ, ອ້ອນວອນ, [ເຊື້ອ] ເຊີນ; проси́ть дру́га о по́мощи ຮ້ອງຂໍຫມູ່ມາຊ່ວຍ, ວານຫມູ່ມາຊ່ວຍ; попроси́ть по́мощи у дру́га ຂໍການຊ່ວຍເຫລືອນຳຫມູ່; проси́ть (попроси́ть) проще́ния ຂໍໂທດ, ຂໍອະໄພໂທດ, ຂໍຍົກໂທດ; проси́ть (попроси́ть) разреше́ния войти́ ຂໍອະນຸຍາດເຂົ້າຂ້າງໃນ; попроси́ его́ прийти́ ເຊີນລາວມາ; прошу́ соблюда́ть тишину́ ຂໍໃຫ້ມີດແດ່

просну́ться *см.* просыпа́ться

проспе́кт, -а *м* ຖະຫນົນຫລວງ; Не́вский проспе́кт в Ленингра́де ຖະຫນົນຫລວງແນບສະກີຢູ່ນະຄອນເລນິນກະລາດ; он живёт на проспе́кте Ми́ра ເພີ່ນຢູ່ໃນຖະຫນົນຫລວງ «ສັນຕິພາບ»

простира́|ться, -ется, -ются *несов.* ແຜ່ອອກ, ແຜ່ຄຸມ, ຢັງຢາຍ; леса́ здесь простира́ются на мно́го киломе́тров ປ່າແຖວນີ້ຢັງຢາຍໄປຫລາຍຫລັກ; до са́мого горизо́нта простира́лось мо́ре ນ້ຳທະເລແຜ່ຄຸມໄປຈົນສຸດຂອບຟ້າ

прости́ть(ся) *см.* проща́ть(ся)

про́сто *нареч.* (*сравн. ст.* про́ще) ງ່າຍ; аппара́т устро́ен о́чень про́сто ຈັກນີ້ແກ້ງ່າຍ

прост|о́й, -а́я, -о́е, -ы́е; прост, -а́, про́сто, просты́ (*сравн. ст.* про́ще) 1 ງ່າຍ, ງ່າຍດາຍ, ເບົາງ່າຍ; просто́й вопро́с ບັນຫາງ່າຍໆ; проста́я рабо́та ວຽກງານງ່າຍ; проста́я зада́ча ເລກໂຈດງ່າຍ 2 ທຳມະດາ, ສາມັນ; просто́й челове́к ຄົນທຳມະດາ, ສາມັນຊົນ

просто́р, -а *м* ພື້ນດິນ (ນ້ຳ) ກວ້າງໃຫຍ່; морско́й просто́р ວັງທະເລ; просто́ры степе́й ທີ່ງຫຍ້າກວ້າງໃຫຍ່ໄພສານ; на просто́рах ро́дины ພື້ນແຜ່ນດິນກວ້າງໃຫຍ່ໄພສານຂອງບ້ານເມືອງ

просто́рн|ый, -ая, -ое, -ые; просто́р|ен, -на, -но, -ны ກວ້າງໃຫຍ່, ໂອ່ໂຖງ; просто́рный дом ເຮືອນກວ້າງໃຫຍ່; просто́рная кварти́ра ບ່ອນຢູ່ (ຫ້ອງຊຸດ) ກວ້າງໃຫຍ່; просто́рное помеще́ние ຫ້ອງໂອ່ໂຖງ

простра́нств|о, -а *с* ລະຫວ່າງ [ກາງ]; ເນື້ອທີ່; свобо́дное простра́нство ລະຫວ່າງ; простра́нство ме́жду столо́м и кни́жным шка́фом ລະຫວ່າງໂຕະກັບຕູ້ໄວ້ປື້ມ; возду́шное простра́нство ເວຫາ, ກາງຫາວ, ເຂດອາກາດ, ນ່ານອາກາດ; сте́пи на ю́ге СССР занима́ют большо́е простра́нство ເຂດທີ່ງຫຍ້າຢູ່ພາກໃຕ້ຂອງ ສ.ສ.ສ.ຊ. ກິນເນື້ອທີ່ອັນກວ້າງຂວາງ

просту́д|а, -ы *ж* ເປັນຫວັດ; си́льная просту́да ເປັນຫວັດແຮງ; лечи́ться от просту́ды ປົວຫວັດ

простуди́ться *см.* простужа́ться

простужа́|ться, -юсь, -ешься, -ются *несов.*; **просту|ди́ться,** -жу́сь, просту́д|ишься, -ятся *сов.* ເປັນຫວັດ, ເປັນໄຂ້, ຫນາວ; простуди́ться

во вре́мя прогу́лки ເປັນໄຂ້ຫນາວໃນເວລາໄປທ່ຽວ

простын|я́, -и́ (*мн.* про́стыни, просты́нь, простыня́м) *ж* ຜ້າ(ແພ)ປູບ່ອນນອນ, ຜ້າ(ແພ)ປູເສື່ອ

просыпа́|ться, -юсь, -ешься, -ются *несов.*; **просн|у́ться**, -у́сь, -ёшься, -у́тся *сов.* ຕື່ນນອນ; ра́но просыпа́ться ຕື່ນແຕ່ເດິກ(ແຕ່ເຊົ້າໆ); по́здно просыпа́ться ຕື່ນສວາຍ; просну́ться в де́вять часо́в ຕື່ນນອນເກົ້າໂມງ

про́сьб|а, -ы *ж* ຄຳຮ້ອງຂໍ; испо́лнить про́сьбу дру́га ສະຫນອງຄຳຮ້ອງຂໍຂອງຫມູ່; обрати́ться с про́сьбой о по́мощи ຂໍແຮງ, ຂໍການຊ່ວຍເຫລືອ; у меня́ к вам больша́я про́сьба ຂ້ອຍມາຂໍຄວາມຊ່ວຍເຫລືອນຳເຈົ້າ

проте́ст, -а *м* ຄຳປະທ້ວງ, ການຄັດຄ້ານ; проте́ст про́тив войны́ ການຄັດຄ້ານສົງຄາມ; демонстра́ция проте́ста ການແຫ່ຂະບວນຄັດຄ້ານ; вы́разить (заяви́ть) проте́ст ຍື່ນຄຳປະທ້ວງ, ຄັດຄ້ານ; вы́ступить с проте́стом ສະແດງຄວາມຄັດຄ້ານ, ປະທ້ວງ

протест|ова́ть, -у́ю, -у́ешь, -у́ют *несов.* ປະທ້ວງ, ຄັດຄ້ານ; протестова́ть про́тив войны́ ຄັດຄ້ານຕ້ານສົງຄາມ

про́тив *предлог с род.* 1 ຕໍ່ຫນ້າ, ທາງຫນ້າ; сад про́тив до́ма ສວນກົກໄມ້ຕໍ່ຫນ້າເຮືອນ; стоя́ть про́тив окна́ ຢືນຫັນຫນ້າຫາປ່ອງຢ້ຽມ 2 ຕ້ານ, ທວນ; плыть про́тив тече́ния ລອຍຕ້ານນ້ຳ [ທວນນ້ຳ]; идти́ про́тив ве́тра ຍ່າງຕ້ານລົມ 3 ຕ້ານ; боро́ться про́тив врага́ ຕໍ່ສູ້ຕ້ານກັບສັດຕູ; он голосова́л про́тив моего́ предложе́ния ທ້າວນັ້ນລົງຄະແນນສຽງຄັດຄ້ານຂໍ້ສະເຫນີຂອງຂ້ອຍ; поступа́ть про́тив со́вести ຜິນໃຈເຮັດ 4 ດີ, ປົວ; лека́рство про́тив гри́ппа ຢາດີໄຂ້ຫວັດໃຫຍ່

проти́вник, -а *м* 1 ຝ່າຍກົງກັນຂ້າມ, ຄູ່ອະລິ, ຄູ່ແຂ່ງຂັນ, ປໍລະປັກ; полити́ческий проти́вник ຄູ່ແຂ່ງຂັນທາງການເມືອງ; победи́ть проти́вника в спо́ре ເອົາຊະນະຄູ່ກຸກກຸຽງ(ອະພິປາຍ); у спортсме́на оказа́лся си́льный проти́вник ນັກກີລາຄົນນີ້ ປະກົດມີຄູ່ແຂ່ງຂັນແຂງແຮງ 2 (*мн. нет*) ສັດຕູ, ຂ້າເສີກ; разби́ть проти́вника в бою́ ຜາບແພ້ສັດຕູໃນການສູ້ຮົບ

противополо́жн|ый, -ая, -ое, -ые; противополо́ж|ен, -на, -но, -ны 1 (*тк. полн. ф.*) ກົງກັນຂ້າມ, ຄົນລະ; противополо́жный бе́рег реки́ ຄົນລະຟາກຝັ່ງ; в противополо́жном углу́ ко́мнаты ໃນຄົນລະແຈຫ້ອງ; в противополо́жной стороне́ ຄົນລະທິດຄົນລະທາງ 2 ແຕກຕ່າງກັນ; противополо́жное мне́ние ຄວາມຄິດເຫັນທີ່ແຕກຕ່າງກັນ; противополо́жные при́знаки ລັກສະນະຕ່າງກັນ

противопоста́вить *см.* противопоставля́ть

24/VII

противопоставля́|ть, -ю, -ешь, -ют *несов.*; **противопоста́в|ить,** -лю, -ишь, -ят *сов.*; *кого-что* ເອົາ...ໄປຕ້ານ, ຝືນກັບ, ສູ້ຢັນ; противопоставля́ть вы́воды ເອົາຂໍ້ສະຫລຸບໄປຝືນກັນ; противопоста́вить одну́ тео́рию друго́й ເອົາທິດສະດີແນວຫນຶ່ງໄປຕ້ານທິດສະດີອີກແນວຫນຶ່ງ

противоре́чи|е, -я *с* ຄວາມຂັດແຍ່ງກັນ, ຄວາມແຕກຕ່າງກັນ, ຄວາມບໍ່ຖືກຕ້ອງກັນ; противоре́чие во взгля́дах ຄວາມເຫັນທີ່ແຕກຕ່າງກັນ; противоре́чие ме́жду слова́ми и поступка́ми ເວົ້າແນວຫນຶ່ງ ເຮັດແນວຫນຶ່ງ, ຄວາມບໍ່ຖືກຕ້ອງກັນລະຫວ່າງຄຳເວົ້າກັບການກະທຳ; противоре́чия ме́жду стра́нами ຄວາມຂັດແຍ່ງລະຫວ່າງຊາດ

протя́гива|ть, -ю, -ешь, -ют *несов.*; **протян|у́ть,** -у́, протя́н|ешь, -ут *сов.* **1** *что* ເນ່ງ, ຢັ້ງ; протяну́ть верёвку ме́жду дере́вьями ເນ່ງເຊືອກລະຫວ່າງກົກໄມ້ **2** *кого-что* ເດ່, ຢຽດ, ຍື່ນ; протя́гивать ру́ку това́рищу ເດ່ມືຫາຫມູ່; протяну́ть сигаре́ту спу́тнику ຍື່ນກອຍາໃຫ້ຜູ້ຮ່ວມທາງ

протяну́ть *см.* протя́гивать

профессиона́льн|ый, -ая, -ое, -ые ວິຊາຊີບ; профессиона́льный писа́тель ນັກຂຽນອາຊີບ ◇ профессиона́льный сою́з ກຳມະບານ

профе́сси|я, -и *ж* ວິຊາຊີບ, ອາຊີບ; интере́сная профе́ссия ວິຊາຊີບທີ່ຢາກເຮັດ; тру́дная профе́ссия ວິຊາຊີບທີ່ຫຍຸ້ງຍາກ; получи́ть профе́ссию инжене́ра ໄດ້ຮັບວິຊາຊີບເປັນວິສະວະກອນ; он врач по профе́ссии ລາວເປັນແພດອາຊີບ

профе́ссор, -а (*мн.* профессор|а́, -о́в) *м* ສາດສະດາຈານ, ອາຈານ; профе́ссор университе́та ສາດສະດາຈານມະຫາວິທະຍາໄລ; получи́ть зва́ние профе́ссора ໄດ້ຮັບນາມມະຍົດເປັນສາດສະດາຈານ; слу́шать ле́кции изве́стных профессоро́в ຟັງຄຳບັນຍາຍຂອງສາດສະດາຈານທີ່ມີຊື່ສຽງ

профсою́з, -а *м* ກຳມະບານ; член профсою́за ສະມາຊິກກຳມະບານ; вступи́ть в профсою́з ເຂົ້າກຳມະບານ

профсою́зн|ый, -ая, -ое, -ые ກຳມະບານ; профсою́зная организа́ция ອົງການຈັດຕັ້ງກຳມະບານ; профсою́зное собра́ние ກອງປະຊຸມກຳມະບານ

прохла́дно *безл. в знач. сказ.* [ເຢືອກ]ເຢັນ; в ко́мнате бы́ло прохла́дно ຢູ່ໃນຫ້ອງເຢັນ; сего́дня на у́лице прохла́дно ມື້ນີ້ນອກຊຸ່ມເຢັນ; ста́ло прохла́дно ອາກາດເຢັນລົງ

прохла́дн|ый, -ая, -ое, -ые [ເຢືອກ]ເຢັນ, ຊຸ່ມເຢັນ; прохла́дный ве́чер ຍາມແລງຊຸ່ມເຢັນ; прохла́дная пого́да ອາກາດເຢືອກເຢັນ

прохо́д, -а *м* **1** ການຜ່ານ; прохо́д суде́в че́рез кана́л ການເດີນເຮືອຜ່ານຄອງ; здесь

прохо́д запрещён ຫ້າມຜ່ານ 2 ທາງຜ່ານ, ທາງເດີນ, ທາງຍ່າງ; широ́кий прохо́д ме́жду ряда́ми в теа́тре ທາງຍ່າງກ້ອງລະຫວ່າງແຖວບ່ອນນັ່ງໃນໂຮງລະຄອນ; останови́ться у прохо́да ຢຸດຢູ່ທີ່ທາງຍ່າງ

прохо|ди́ть, -жу́, прохо́д|ишь, -ят *несов.*; **пройти́,** -ду́, -дёшь, -ду́т (*прош.* прош|ёл, -ла́, -ло́, -ли́) *сов.* 1 ໄປ, ຍ່າງ; проходи́ть по у́лицам ໄປຕາມຖະໜົນຫົນທາງ; пройти́ че́рез сад ໄປລັດ(ຜ່ານ)ສວນ; пройти́ к вы́ходу ໄປສູ່ທາງອອກ; проходи́те, пожа́луйста (*приглашение вошедшему*) ເຊີນເຂົ້າມາ; по не́бу прошла́ ту́ча ເຜື້ອລອຍໄປຕາມທ້ອງຟ້າ 2 *что* ຍ່າງ, ແລ່ນ; пройти́ не́сколько шаго́в ຍ່າງສອງສາມບາດກ້າວ; пройти́ полови́ну пути́ ຍ່າງໄດ້ເຄິ່ງທາງ; по́езд прошёл пятьдеся́т киломе́тров ລົດໄຟແລ່ນໄດ້ຫ້າສິບຫລັກ 3 *тж. что* ກາຍ, ຜ່ານ; проходи́ть ми́мо кинотеа́тра ຍ່າງກາຍໂຮງຮູບເງົາ; пройти́ ну́жный дом ຍ່າງກາຍເຮືອນທີ່ຕ້ອງການ; вы прошли́ поворо́т к вокза́лу ເຈົ້າໄດ້ຍ່າງກາຍທາງລ້ຽວໄປສູ່ສະຖານີລົດໄຟ; по́езд уже́ прошёл ста́нцию ລົດໄຟໄປກາຍປ້າຍແລ້ວ 4 (*1 и 2 л. не употр.*) ໄປ; доро́га прохо́дит че́рез лес ຫົນທາງຕັດຜ່າປ່າໄມ້; здесь прохо́дит госуда́рственная грани́ца ຊາຍແດນປະເທດຢູ່ນີ້ 5 (*1 и 2 л. не употр.*) ຜ່ານ, ລ່ວງ; прохо́дят го́ды ເດືອນປີພົ້ນຜ່ານໄປ;

прошёл то́лько час ເວລາຜ່ານໄປຊົ່ວໂມງດຽວ; гроза́ ско́ро пройдёт ບໍ່ດົນ ຟ້າຈະເຊົາຮ້ອງ; оби́да прошла́ ຄວາມຄຽດຫາຍໄປ 6 (*1 и 2 л. не употр.*) ຈັດຂຶ້ນ, ມີຂຶ້ນ; конгре́сс проходи́л в Москве́ ກອງປະຊຸມໄດ້ຈັດຂຶ້ນຢູ່ມົດສະກູ; представле́ние прошло́ уда́чно ການສະແດງສຳເລັດໄປຢ່າງດີ; экза́мены прошли́ хорошо́ ການສອບເສັງພົ້ນໄປຢ່າງດີ 7 (*1 и 2 л. не употр.*) ສ່ອງ; ຊຸມ, ລອດ, ຊອດ; свет прохо́дит в ко́мнату че́рез окно́ ແສງແດດສ່ອງເຂົ້າຫ້ອງທາງປ່ອງຢ້ຽມ; в подва́л прошла́ вода́ ນ້ຳຊຶມເຂົ້າຫ້ອງໃຕ້ດິນ

проце́нт, -а *м* 1 ສ່ວນຮ້ອຍ, ເປີເຊັນ; се́мьдесят проце́нтов ученико́в ເຈັດສິບສ່ວນຮ້ອຍຂອງນັກຮຽນ; вы́полнить план на 150% ປະຕິບັດແຜນການໄດ້ 150% 2 ດອກເບ້ຍ

проце́сс, -а *м* ຂະບວນວິວັດ, ຂະບວນການ; производ́ственный проце́сс ຂະບວນວິວັດການຜະລິດ; проце́сс ро́ста организ́ма ຂະບວນວິວັດການເຕີບໃຫຍ່ຂອງຮ່າງກາຍ ◇ в проце́ссе *чего* ໃນເວລາ; приобрести́ о́пыт в проце́ссе рабо́ты ໄດ້ຮັບຄວາມຊຳນິຊຳນານໃນການປະຕິບັດງານຕົວຈິງ

про́ч|ий, -ая, -ее, -ие ອື່ນ; про́чие лю́ди ຄົນອື່ນ, ຜູ້ອື່ນ; пла́тье, пальто́ и про́чая оде́жда ເສື້ອກະໂປງ, ເສື້ອກັນຫນາວແລະອື່ນໆ ◇ и про́чее (и проч., и пр.) ແລະອື່ນໆ

прочита́ть *см.* чита́ть

про́чн|ый, -ая, -ое, -ые; про́чен, прочна́, про́чн|о, -ы ຫມັ້ນ[ຫນ່ຽວ], ແຂ໋ງ[ແກ່ນ], ຄົງທົນ, ທົນທານ; **про́чный замо́к** ກະແຈແຂ໋ງ; **про́чная о́бувь** ເກີບຫມັ້ນ; **про́чная ме́бель** ເຄື່ອງເຮືອນທົນທານ; **про́чная ткань** ແພຫມັ້ນ

прошéдш|ий, -ая, -ое, -ие ທີ່ຜ່ານມາ, ທີ່ແລ້ວມາ ◇ **прошéдшее врéмя** ອະດີດການ

прошепта́ть *см.* шепта́ть

про́шл|ый, -ая, -ое, -ые **1** ທີ່ຜ່ານມາ, ທີ່ແລ້ວ; **в про́шлом году́** ປີກາຍ; **на про́шлой неде́ле** ອາທິດທີ່ແລ້ວ; **[в] про́шлый раз** ເທື່ອທີ່ແລ້ວ; **про́шлой о́сенью** ໃນລະດູໃບໄມ້ຫລົ່ນທີ່ຜ່ານມາ **2** *в знач. сущ.* **про́шл|ое, -ого** *с* ອະດີດ, ຄວາມເກົ່າ, ຄວາມຫລັງ; **вспомина́ть далёкое про́шлое** ຄຶດຮອດຄວາມຫລັງອັນເຫົ່ງນານ ◇ **в про́шлом** ໃນເມື່ອກ່ອນ, ແຕ່ກ່ອນ; **в про́шлом он был моряко́м** ແຕ່ກ່ອນລາວເປັນທະຫານເຮືອ

проща́й[те] ລາກ່ອນ, ຂໍລາໄປ; **прощáй, мы уви́димся не ско́ро** ລາກ່ອນເຫົ່ງນານຈຶ່ງພົບກັນໃຫມ່

проща́ни|е, -я (*мн. нет*) *с* ການລາ, ການອໍາລາ

проща́|ть, -ю, -ешь, -ют *несов.*; **про|сти́ть,** -щу́, -сти́шь, -стя́т *сов.*; *кого-что* ຍົກໂທດ, ອະໄພໂທດ; **не проща́ть никому́ изме́ны** ບໍ່ຍົກໂທດໃຫ້ຜູ້ໃດທີ່ທັກຫລັງ; **он меня́ оби́дел, но я его́ прости́л** ທ້າວນັ້ນເຮັດໃຫ້ຂ້ອຍຄຽດແຕ່ຂ້ອຍຍົກໂທດໃຫ້ລາວ; **прости́те, я опозда́л** ຂໍໂທດ ຂ້ອຍມາຊ້າ

проща́|ться, -юсь, -ешься, -ются *несов.*; **про|сти́ться,** -щу́сь, -сти́шься, -стя́тся *сов.*; *с кем* ລົ່ງລາ, ອໍາລາ; **прости́ться с друзья́ми** ອໍາລານໍາຫມູ່; **уйти́ не проща́ясь** ໄປບໍ່ລາມາບໍ່ຄອບ; **на вокза́ле они́ прости́лись** ຢູ່ສະຖານີລົດໄຟພວກເຂົາລາກັນ

про́ще *см.* просто́й, про́сто

прощéни|е, -я *с* ການຍົກໂທດ, ການອະໄພໂທດ; **проси́ть прощéния** ຂໍອະໄພໂທດ; **заслужи́ть прощéние** ເປັນການອະໄພໂທດ, ເຮັດບຸນແກ້ບາບ

прояви́ть(ся) *см.* проявля́ть(ся)

проявля́|ть, -ю, -ешь, -ют *несов.*; **прояв|и́ть,** -лю́, прояв|ишь, -ят *сов.*; *что* **1** ສະແດງ, ສໍາແດງ; **проявля́ть (прояви́ть) му́жество в бою́** ສະແດງນໍ້າໃຈກ້າຫານໃນການສູ້ຮົບ; **проявля́ть (прояви́ть) инициати́ву** ສະແດງນໍ້າໃຈບຸກເບີກ, ເປັນຕົວຕັ້ງຕົວຕີ; **проявля́ть (прояви́ть) забо́ту о ко́м-нибудь** ສະແດງຄວາມເອົາໃຈໃສ່ຕໍ່; **проявля́ть (прояви́ть) интере́с к чте́нию** ສະແດງຄວາມສົນໃຈໃນການອ່ານຫນັງສື **2** ລ້າງ; **прояви́ть плёнку** ລ້າງຟິມ

проявля́|ться, -ется, -ются *несов.*; **прояви́ть-ся, прояв|ится,** -ятся *сов.* ສະແດງອອກ, ປະກົດ; ສ່ອງແສງອອກ; **у ю́ноши прояви́лись**

спосо́бности к матема́тике ຊາວຫນຸ່ມຄົນນີ້ປະກົດມີແອວໃນວິຊາເລກ

пруд, -á *и* пру́да, *предл.* о пру́де, в (на) пруду́ *м* ຫນອງນ້ຳ, ສະນ້ຳ; вы́копать пруд ຂຸດສະນ້ຳ; лови́ть ры́бу в пруду́ ຕຶກເບັດຢູ່ໃນຫນອງ



пруд

пры́га|ть, -ю, -ешь, -ют *несов.*; **пры́гн|уть,** -у, -ешь, -ут *сов.* ໂດດ, ໂຕນ, ເຕັ້ນ; пры́гать с парашю́том ໂດດ(ໂຕນ)ຈ້ອງ; пры́гнуть с бе́рега в во́ду ໂຕນຜ່ຳນຸດນ້ຳ; пры́гнуть че́рез забо́р ເຕັ້ນຂ້າມຮົ້ວ; пры́гать на одно́й ноге́ ເຕັ້ນຂາດຽວ

пры́гнуть *см.* пры́гать

прыж|о́к, -ка́ *м* ການໂຕນ, ການໂດດ, ການເຕັ້ນ; прыжо́к из окна́ (с моста́) ການໂຕນປ່ອງຢ້ຽມ(ຂົວ); прыжки́ че́рез препя́тствия ໂດດຂ້າມຮົ້ວ, ເຕັ້ນຂ້າມຮົ້ວ; прыжки́ с парашю́том ການໂດດ(ໂຕນ)ຈ້ອງ; сде́лать прыжо́к ໂດດ, ໂຕນ

пря́мо *нареч.* 1 ຊື່, ກົງ; идти́ пря́мо ໄປຊື່(ກົງ) 2 ໂດຍກົງ; обрати́ться пря́мо к дире́ктору ໄປຫາຜູ້ອຳນວຍການໂດຍກົງ; спать пря́мо на полу́ ນອນພື້ນລ້ຽງ; вы идёте пря́мо домо́й? — Нет, снача́ла я зайду́ в библиоте́ку ເມືອເຮືອນເລີຍບໍ?-ບໍ່ແມ່ນ, ຈະແວ່ເຂົ້າໄປຫໍສະຫມຸດກ່ອນ 3 ຊື່, ຈິງໃຈ, ກົງໄປກົງມາ; скажи́те пря́мо — вы не лю́бите э́того челове́ка? ເວົ້າຊື່ໆເບິ່ງ ເຈົ້າບໍ່ມັກຄົນນີ້ຫວະ?

прям|о́й, -а́я, -о́е, -ы́е 1 ຊື່, ກົງ; прямо́й ли́ния ເສັ້ນຊື່; прямо́й доро́га ທາງຊື່; прямы́е у́лицы ຖະຫນົນຊື່ 2 ໂດຍກົງ; прямо́й телефо́нная связь ສາຍໂທລະສັບໂດຍກົງ; прямо́е возду́шное сообще́ние ສາຍການບິນໂດຍກົງ; име́ть прямо́е отноше́ние к де́лу ກ່ຽວຂ້ອງເລື່ອງໂດຍກົງ 3 ຊື່, ໃຈຊື່; он челове́к прямо́й ລາວເປັນຄົນໃຈຊື່ ◇ прямо́й у́гол ມຸມສາກ

прямоуго́льник, -а *м* ຮູບສີ່ຫລ່ຽມ; ко́мната в фо́рме прямоуго́льника ຫ້ອງຮູບສີ່ຫລ່ຽມ



прямоуго́льник

тече́ни|е, -я *с* ກະແສ, ການໄຫລ; тече́ние реки́ ກະແສນ້ຳ; бы́строе тече́ние ກະແສ ນ້ຳໄວ, ນ້ຳໄຫລໄວ; морски́е тече́ния ກະແສ ນ້ຳທະເລ; плыть по тече́нию ລອຍຕາມກະ ແສນ້ຳ, ລ່ອງນ້ຳ ◇ в тече́ние *чего* ພາຍໃນ, ໃນລະຫວ່າງ; в тече́ние двух дней ພາຍໃນ ສອງມື້; в тече́ние ме́сяца (го́да) ພາຍໃນ ເດືອນ(ປີ) ຫນຶ່ງ

течь, течёт, теку́т (*прош.* тёк, текл|а́, -о́, -и́) *несов.* ໄຫລ, ຫລັ່ງໄຫລ, ຮົ່ວ; река́ течёт с се́вера на юг ນ້ຳໄຫລແຕ່ທາງເຫນືອ ຫາທາງໃຕ້; вода́ течёт из кра́на ນ້ຳໄຫລ ຈາກກ້ອກ, ນ້ຳກ້ອກຮົ່ວ; слёзы теку́т по щека́м ນ້ຳຕາຍ້ອຍອາບຫນ້າ (ແກ້ມ)

тигр, ти́гра *м* ເສືອ



тигр

тип, ти́па *м* ແບບ, ຊະນິດ, ແນວ; самолёт но́вого ти́па ເຮືອບິນແບບໃຫມ່; ти́пы произво́дственных отноше́ний ແບບການພົວ ພັນທາງການຜະລິດ

типи́чн|ый, -ая, -ое, -ые; типи́ч|ен, -на, -но, -ны ທີ່ເປັນແບບສະບັບ, ທີ່ເປັນຂອງທຳມະ ດາ, ທີ່ເປັນແບບແຜນ; типи́чная оши́бка ຄວາມຜິດທຳມະດາ; типи́чное явле́ние ປະ ກົດການທຳມະດາ; Со́чи — типи́чный ю́жный го́род ເມືອງໂຊຊີເປັນເມືອງແບບສະບັບຢູ່ ພາກໃຕ້; така́я пого́да типи́чна для се́вера ອາກາດແນວນີ້ເປັນຂອງທຳມະດາສຳລັບ ພາກເຫນືອ

ти́х|ий, -ая, -ое, -ие; тих, -а́, ти́х|о, -и (*сравн. ст.* ти́ше) 1 ຄ່ອຍ, ແຜ່ວ, ເບົາ; ти́хий го́лос ສຽງຄ່ອຍ, ສຽງແຜ່ວເບົາ; ти́хий смех ສຽງຫົວຄ່ອຍໆ; ти́хая му́зыка ສຽງເພງ

ຄ່ອຍໆ; ти́хое пе́ние ສຽງຮ້ອງເພງຄ່ອຍໆ; разгово́р стал ти́ше ສຽງປາກຄ່ອຍໆລົງ 2 ສະຫງົບ [ສະຫງ່ຽມ], ມິດ, ງຽບ; ти́хий посёлок ຄຸ້ມ (ບ້ານ) ມິດງຽບ; ти́хая жизнь ຊີວິດສະຫງົບ [ງຽບ]; ти́хое у́тро ຕອນເຊົ້າງຽບ [ສະຫງັດ] 3 ຄ່ອຍໆ, ຊ້າໆ; ти́хий ход ຍ່າງ (ແລ່ນ) ຊ້າໆ; идти́ ти́хим ша́гом ຍ່າງບາດຊ້າໆ

ти́хо (*сравн. ст.* ти́ше) *нареч.* 1 ຄ່ອຍ; ти́хо петь ຮ້ອງເພງຄ່ອຍໆ; ти́хо смея́ться ຫົວຍຸ້ມ; говори́те ти́ше! ເວົ້າຄ່ອຍໆເດີ!; ти́хо е́хать ແລ່ນຊ້າໆ 2 *безл. в знач. сказ.* ມິດ, ງຽບ; в до́ме ти́хо ຢູ່ໃນເຮືອນມິດງຽບ

ти́ше *см.* ти́хий, ти́хо

тишин|а́, -ы́ (*мн. нет*) *ж* ຄວາມມິດງຽບ, ຄວາມສະຫງັດ; по́лная тишина́ ງຽບສະຫງັດມິດຊິດ; соблюда́ть (наруша́ть) тишину́ ຮັກສາ (ທຳລາຍ) ຄວາມມິດງຽບ; в до́ме тишина́ ຢູ່ໃນເຮືອນມິດຊ້ອຍມ້ອຍ

ткань, тка́ни *ж* ຜ້າ, ແພ, ແຜ່ນແພ; шёлковая ткань ແພໄຫມ; костю́м из дорого́й тка́ни ຊຸດຕັດດ້ວຍແພລາຄາແພງ

то *союз* 1: то... то... ບຶດດຽວ ...ບຶດດຽວ; то снег, то дождь [идёт] ບຶດດຽວຝົນຕົກບຶດດຽວຫິມະຕົກ; то в одно́м ме́сте, то в друго́м ບຶດຫນຶ່ງຢູ່ບ່ອນນີ້ບຶດຫນຶ່ງຢູ່ບ່ອນນັ້ນ; то здесь, то там ບຶດດຽວຢູ່ພີ້ບຶດດຽວຢູ່ພູ້ນ; она́ то пла́чет, то смеётся ນາງຈັກຫນ້ອຍໄຫ້ ຈັກຫນ້ອຍຫົວ, ນາງບຶດດຽວໄຫ້ ບຶດດຽວຫົວ 2 (*в сложном предложении*) ກໍ; е́сли успе́ю, то приду́ ຫາກວ່າທັນກໍຊິມາ

тобо́й *см.* ты

това́р, -а *м* (*ед. обычно употр. в знач. мн.*) ສິນຄ້າ; хоро́ший това́р ສິນຄ້າດີໆ; дешёвый това́р ສິນຄ້າລາຄາຖືກ; промы́шленные това́ры ສິນຄ້າອຸດສາຫະກຳ; прода́жа това́ров населе́нию ຂາຍສິນຄ້າໃຫ້ປະຊາຊົນ; показа́ть това́р покупа́телю ເອົາສິນຄ້າມາໃຫ້ລູກຄ້າເບິ່ງ

това́рищ, -а (*мн.* това́рищ|и, -ей) *м* 1 ຫມູ່, ເພື່ອນ, ສ່ຽວ; шко́льный това́рищ ເພື່ອນຮ່ວມໂຮງຮຽນ; хоро́ший (ве́рный) това́рищ ເພື່ອນທີ່ດີ (ໄວ້ໃຈໄດ້); това́рищи по рабо́те ເພື່ອນຮ່ວມວຽກງານ; у него́ нет това́рищей ລາວບໍ່ມີຫມູ່ຄູ່ 2 (*обычно в обращении, тж. к женщине*) ສະຫາຍ; това́рищи, разреши́те откры́ть собра́ние ສະຫາຍທັງຫລາຍ, ຂໍອະນຸຍາດເປີດ (ໄຂ) ກອງປະຊຸມ; това́рищ Ивано́в (това́рищ Петро́ва), вас про́сят к телефо́ну ສະຫາຍອີວາໂນບ (ນາງເປດໂລວາ) ມີໂທລະສັບຫາເຈົ້າ; това́рищ капита́н, разреши́те обрати́ться ຂໍຮຽນທ່ານຮ້ອຍເອກ

тогда́ *нареч.* 1 ເວລານັ້ນ, ຍາມນັ້ນ; мы жи́ли тогда́ в дере́вне ເວລານັ້ນພວກເຮົ້າຢູ່ໃນຊົນນະບົດ; тогда́ была́ хоро́шая пого́да

ເວລານັ້ນອາກາດດີ 2 ເມື່ອນັ້ນ; когда́ прочита́ю кни́гу, тогда́ дам её тебе́ ເມື່ອໃດ (ເວລາໃດ) ອ່ານປື້ມສຸດແລ້ວ ເມື່ອນັ້ນ (ເວລານັ້ນ) ຂ້ອຍຈະໃຫ້ເຈົ້າຍືມ

то́ есть (т. е.) *союз* ຄືວ່າ; до ста́нции ещё со́рок киломе́тров, то́ есть час езды́ ຍັງອີກສີ່ສິບຫລັກຈຶ່ງຈະຮອດສະຖານີລົດໄຟຫມາຍຄວາມວ່າ ຍັງຕ້ອງໃຊ້ເວລາເດີນທາງອີກຊົ່ວໂມງຫນຶ່ງ

то́же *нареч.* ຄືກັນ, ເຫມືອນກັນ; мы то́же уста́ли ພວກເຮົາເມື່ອຍຄືກັນ; подожди́те, я то́же иду́ ຖ້າບຶດດຽວຂ້ອຍຈະໄປດ້ວຍ (ນຳ)

ток, то́ка *м* ກະແສ; электри́ческий ток ກະແສໄຟຟ້າ; включи́ть (вы́ключить) ток ເປີດ (ປິດ) ໄຟຟ້າ

то́кар|ь, -я (*мн.* то́кар|и, -ей) *м* ຊ່າງປິ່ນ, ຊ່າງຊ່ຽນ; рабо́тать то́карем ເປັນຊ່າງປິ່ນ (ຊ່າງຊ່ຽນ)

толка́|ть, -ю, -ешь, -ют *несов.*; **толкн|у́ть,** -у́, -ёшь, -у́т *сов.*; *кого-что* ຊຸກ, ຍູ້, ດັນ, ຕຳ, ຊູນ, ແຫຍ້, ບຽດ; толкну́ть сосе́да ло́ктем ເອົາສອກເດີຫມູ່; случа́йно толкну́ть пассажи́ра ຕຳຊູນຜູ້ໂດຍສານໂດຍບັງເອີນ

толкну́ть *см.* толка́ть

толко́в|ый, -ая, -ое, -ые ເກັ່ງ, ດີ, ເດັ່ນ ◇ толко́вый слова́рь ວັດຈະນານຸກົມ

толп|а́, -ы́ (*мн.* то́лпы, толп) *ж* ຝູງ; толпа́ люде́й ຝູງຊົນ; на пло́щади собрала́сь больша́я толпа́ ຢູ່ເດີ່ນມີຄົນຄັບຄາຫນາແຫນ້ນ (ອັ່ງອໍ, ແອອັດ, ອັດແຫຍ້)

то́лст|ый, -ая, -ое, -ые; толст, -а́, то́лст|о, -ы (*сравн. ст.* то́лще) 1 ຫນາ; то́лстый ствол ຕົ້ນໄມ້ໃຫຍ່; то́лстая кни́га ປື້ມຫນາ; то́лстое стекло́ ແວ່ນຫນາ 2 ພີ, ອ້ວນ, ຕຸ້ຍ; то́лстый челове́к ຄົນຕຸ້ຍ, ຄົນພີ; то́лстые но́ги ຂາຕຸ້ຍ

то́лще *см.* то́лстый

толщин|а́, -ы́ (*мн. нет*) *ж* ຄວາມ (ລວງ) ຫນາ; толщина́ ствола́ де́рева ລວງຫນາຂອງຕົ້ນໄມ້

то́лько 1 *частица* [ພຽງ] ແຕ່; говори́ть то́лько пра́вду ເວົ້າແຕ່ຄວາມຈິງ; он то́лько посмотре́л ລາວພຽງແຕ່ເຫລືອດຕາເບິ່ງ; прошёл то́лько ме́сяц ເວລາຜ່ານໄປແຕ່ເດືອນດຽວ; то́лько ты зна́ешь э́то ມີແຕ່ເຈົ້າຮູ້ເລື່ອງນີ້ 2 *союз* ແຕ່ວ່າ; я всё сде́лаю, то́лько не сейча́с ຂ້ອຍຈະເຮັດທຸກສິ່ງທຸກຢ່າງແຕ່ວ່າບໍ່ແມ່ນດຽວນີ້ 3 *частица* (*употр. с частицей* «бы») ທະແນມແຕ່, ຢາກແຕ່; то́лько бы уе́хать! ຢາກແຕ່ເມືອແນວດຽວ!; то́лько бы он был до́ма! ຢາກແຕ່ພົບລາວຢູ່ເຮືອນແນວດຽວ!, ທະແນມແຕ່ໃຫ້ລາວຢູ່ເຮືອນ! ◇ то́лько что ຫາກໍ; вам то́лько что звони́ли

24/VII ห้ามจัดพ่าย

ຫາກໍມີໂທລະສັບຫາເຈົ້າ, ຫາກໍມີຄົນໂທ ຫາເຈົ້າ

том, то́ма (*мн.* том|á, -о́в) *м* ຫົວ, ເຫລັ້ມ; второ́й том сочине́ний Пу́шкина ຊຸມນຸມ (ປະ ມວນ) ບົດປະພັນຂອງປຸດຊະກິນຫົວທີສອງ; собра́ние сочине́ний в пяти́ томáх ຊຸມນຸມບົດ ປະພັນຫ້າຫົວ

тон, то́на *м* ນ້ຳສຽງ, ທາງສຽງ, ສຽງ ເວົ້າ; дру́жеский тон ສຽງເວົ້າແບບຫມູ່; говори́ть серди́тым то́ном ເວົ້າ [ດ້ວຍສຽງ] ຮ້າຍ; измени́ть тон ປ່ຽນສຽງເວົ້າ

то́нк|ий, -ая, -ое, -ие; то́нок, тонка́, то́нко, тонки́ *и* то́нки (*сравн. ст.* то́ньше) ບາງ; то́нкий ствол ຕົ້ນໄມ້ຮຽວ; то́нкая ткань ແພບາງ; то́нкая та́лия ແອວກິ່ວ, ແອວບາງ

то́нн|а, -ы *ж* ໂຕນ; де́сять тонн у́гля ຖ່ານ ຫົນສິບໂຕນ

тон|у́ть, -у́, то́н|ешь, -ут *несов.*; **утон|у́ть,** -у́, утóн|ешь, -ут *сов.* ຈົມ, ທລົ້ມ; де́рево не то́нет в воде́ ໄມ້ບໍ່ຈົມນ້ຳ; кора́бль то́нет ກຳປັ່ນທລົ້ມ; ма́льчик утону́л в реке́ ເດັກ ຊາຍຕາຍດຶກນ້ຳ

то́ньше *см.* то́нкий

топ|и́ть, -лю́, то́п|ишь, -ят *несов., что* ດັງ ໄຟ; топи́ть печь ດັງໄຟ (ໃນເຕົາ) ໃຫ້ອຸ່ນ

то́плив|о, -а (*мн. нет*) *с* ເຊື້ອໄຟ; жи́дкое то́пливо ເຊື້ອໄຟແຫລວ (ນ້ຳມັນ)

топо́р, топора́ *м* ຂວານ; руби́ть де́рево топоро́м ຟັນໄມ້ດ້ວຍຂວານ



топо́р

торг|ова́ть, -у́ю, -у́ешь, -у́ют *несов., чем, с кем-чем* [ຄ້າ] ຂາຍ; торгова́ть хле́бом (овощáми) ຂາຍເຂົ້າຈີ່ (ຜັກ); торгова́ть со мно́гими стра́нами ຄ້າຂາຍກັບຫລາຍປະເທດ

торго́вл|я, -и (*мн. нет*) *ж* ການຄ້າ; госуда́рственная торго́вля ການຄ້າຂອງລັດ; торго́вля овощáми ການຂາຍຜັກ; торго́вля с сéдними стра́нами ການຄ້າຂາຍກັບປະເທດ ໃກ້ຄຽງ; развива́ть торго́влю ເສີມຂະຫຍາຍ ການຄ້າ

торже́ственно *нареч.* ຢ່າງສະຫງ່າຜ່າເຜີຍ; торже́ственно обеща́ть что́-нибудь ປະຕິຍານ ຢ່າງສະຫງ່າຜ່າເຜີຍ

торже́ственн|ый, -ая, -ое, -ые 1 ມະ ໂຫລານ, ຄຶກຄື້ນ; торже́ственный день ມື້ ມຸນມະໂຫລານ, ວັນສີລີມຸງຄຸນ; торже́ственное собра́ние ພິທີປະຊຸມ [ມະໂຫລານ] 2 ສະ ຫງ່າຜ່າເຜີຍ; торже́ственный вид ຫນ້າຕາສະ ຫງ່າຜ່າເຜີຍ; торже́ственная му́зыка ສຽງດົນ ຕີກຶກກ້ອງ; говори́ть торже́ственным го́лосом ເວົ້າດ້ວຍສຽງສະຫງ່າລາສີ

торжеств|ó, -á (*мн.* торжествá, торжéств, торжествáм) *с* 1 ບຸນ [ມະໂຫລານ], ງານມະໂຫລານ; семéйное торжествó ບຸນເຮືອນ; Октя́брьские торжествá ບຸນມະໂຫລານເດືອນຕຸລາ 2 (*мн. нет*) ໄຊຊະນະໃຫຍ່, ມະຫາໄຊ; торжествó справедли́вости ໄຊຊະນະຂອງຄວາມເປັນທຳ; торжествó лéнинских идéй ໄຊຊະນະໃຫຍ່ຫລວງຂອງແນວຄຶດເລນິນ

тороп|и́ться, -лю́сь, торóп|ишься, -ятся *несов.* ຟ້າວ [ຟັ່ງ], ຮີບຮ້ອນ, ຂ້ຽວ; торопи́ться на рабóту ຟ້າວ [ຟັ່ງ] ໄປການ; торопи́ться в теáтр ຟ້າວໄປເບິ່ງລະຄອນ; торопи́ться на пóезд ຟ້າວໄປຫາລົດໄຟ

торопли́во *нареч.* ຮີບຮ້ອນ, ຟ້າວຟັ່ງ, ກະຟຶດກະຟາດ; торопли́во прости́ться с това́рищем ອຳລານຳໜ້າໝູ່ຢ່າງກະຟຶດກະຟາດ

торопли́в|ый, -ая, -ое, -ые ຮີບຮ້ອນ, ຟ້າວຟັ່ງ, ກະຟຶດກະຟາດ; торопли́вый шаг ບາດຢ່າງແບບຟ້າວຟັ່ງ; торопли́вые движéния ການເຫນັງຕີງແບບກະຟຶດກະຟາດ

торт, тóрта *м* ເຂົ້າຫນົມເຄກ; шокола́дный торт ເຄກໂອບໂຊໂກລາ; пить чай с тóртом ກິນນ້ຳຊາກັບເຂົ້າຫນົມເຄກ



торт

тоск|á, -и́ (*мн. нет*) *ж* ຄວາມໂສກເສົ້າ, ຄວາມເຫງົາໃຈ; тоскá по рóдине ຄວາມຄຶດຮອດບ້ານເກີດເມືອງນອນ; им овладéла тоскá ລາວຮູ້ສຶກໂສກເສົ້າຫງ່ອມເຫງົາ

тот, того́ *м*; та, той *ж*; то, того́ *с* (*мн.* те, тех) *мест.* 1 ນັ້ນ; перейти́ на тот бéрег ຂ້າມຟາກ; в э́том дóме живу́ я, а в том — мои́ роди́тели ເຮືອນນີ້ຂອງຂ້ອຍ, ເຮືອນນັ້ນຂອງພໍ່ແມ່ຂ້ອຍ; на той недéле я егó ви́дел ອາທິດທີ່ແລ້ວຂ້ອຍໄດ້ພົບລາວ 2 ນັ້ນ, ເຫລົ່ານັ້ນ; на те дéньги он купи́л часы́ ລາວໃຊ້ເງິນນັ້ນຊື້ໂມງ; он зáнят той рабóтой, котóрую емý поручи́ли ລາວເຮັດວຽກທີ່ເພິ່ນໄດ້ມອບຫມາຍໃຫ້ 3 ນັ້ນແຫລະ; э́то та сáмая статья́, о котóрой ты говори́л ບົດຄວາມສະບັບນີ້ແຫລະທີ່ເຈົ້າໄດ້ເວົ້າເຖິງ; он сел не в тот вагóн ລາວຂຶ້ນຕູ້ລົດໄຟຜິດ; э́то и́менно тот человéк ແມ່ນຄົນນັ້ນແຫລະ 4 (*с частицей* «же») ເກົ່າ; на нём бы́ло то же пальтó ລາວນຸ່ງເສື້ອກັນຫນາວຜືນເກົ່າ; они́ живу́т в том же дóме ພວກເຂົາຢູ່ໃນເຮືອນຫລັງເກົ່າ ◇ дéло в том, что ເລື່ອງມີຢູ່ວ່າ, ເລື່ອງຢູ່ບ່ອນວ່າ; вмéсто того́, что́бы ແທນທີ່ຈະ; вмéсто того́, что́бы идти́ по дорóге, они́ пошли́ лéсом ແທນທີ່ຈະຍ່າງຕາມທາງ ພວກເຂົາລັດປ່າໄປ; для того́, что́бы ເພື່ອ [ໃຫ້], ຢາກ [ໃຫ້]; для того́, что́бы прийти́ вóвремя, ну́жно торопи́ться ຢາກມາທັນເວລາ ຕ້ອງຟ້າວ; поста́вить скамéйки для того́, что́бы

посети́тели могли́ отдохну́ть ຕັ້ງແປ້ນນ້ຳເພື່ອ ໃຫ້ແຂກມີບ່ອນນັ່ງເອົາແຮງ; к тому́ же ຍັງ, ອີກດ້ວຍ; к тому́ же он ещё́ и худо́жник ຄົນນັ້ນທັງ(ຍັງ)ເປັນຊ່າງແຕ້ມຮູບອີກດ້ວຍ; до того́, что ຈົນ[ວ່າ]; рабо́тал до того́, что уста́л ເຮັດວຽກຈົນເມື່ອຍ; и без того́ ແລ້ວ; здесь и без того́ хо́лодно, а ты хо́чешь откры́ть окно́ ຢູ່ນີ້ຫນາວພໍແຮງແລ້ວ ເຈົ້າຍັງຢາກໄຂປະຕູອີກລະບໍ່; чем..., тем... ແຮ່ງ... ແຮ່ງ, ຍິ່ງ... ຍິ່ງ; чем скоре́е, тем лу́чше ແຮ່ງໄວແຮ່ງດີ; тем бо́лее ແຮ່ງ, ຍິ່ງ; он тем бо́лее нужда́ется в по́мощи ຄົນນັ້ນ ແຮ່ງຕ້ອງການຄວາມຊ່ວຍເຫລືອ; вме́сте с тем ພ້ອມກັນນັ້ນ; и без того́ интере́сно ບໍ່ມີ... ກໍ່ນ່ວນ; и тому́ подо́бное (и т. п.) ແລະອື່ນໆ

то́тчас *нареч.* ທັນທີ, ໂລດ, ໃນທັນໃດນັ້ນ; когда́ прие́ду, я то́тчас вам позвоню́ ພໍ ເມື່ອເຮືອນແລ້ວໃນທັນໃດນັ້ນຂ້ອຍຈະຕີ ສາຍຫາເຈົ້າໂລດ

то́чк|а, -и (*мн.* то́ч|ки, -ек, -кам) *ж* 1 ຈຸດ, ເມັດ, ດ່າງ; стекло́ в чёрных то́чках ແວ່ນ ດ່າງ 2 ບ່ອນ, ທີ່; са́мая се́верная то́чка на земно́м ша́ре ບ່ອນເຫນືອສຸດຂອງໂລກ 3 ຈໍ້າ; поста́вить то́чку в конце́ предложе́ния ຫມາຍ ຈໍ້າຢູ່ທ້າຍປະໂຫຍກ

то́чно *нареч.* ພໍດີ, ທ່ຽງ, ກົງ, ກຶກ, ຈັບ, ເປ໊ຍ; часы́ иду́т то́чно ໂມງເດີນກົງ(ທ່ຽງ); прийти́ то́чно в пять [часо́в] ມາຫ້າໂມງເປ໊ຍ (ຈັບ)

то́чност|ь, -и (*мн. нет*) *ж* ຄວາມກຶກຕ້ອງ; то́чность перево́да ຄວາມກຶກຕ້ອງຂອງບົດແປ

то́чн|ый, -ая, -ое, -ые; то́чен, точна́, то́чно, точны́ *и* то́чны ກຶກ[ຕ້ອງ], ທ່ຽງ, ກົງ, ພໍດີ; то́чный перево́д ບົດແປທີ່ກຶກຕ້ອງກັບຕົ້ນສະບັບ; то́чное описа́ние ຄຳອະທິບາຍຢ່າງຈະແຈ້ງ; то́чное вре́мя ເວລາກົງພໍດີ

трав|а́, -ы́ *ж* ຕົ້ນຫຍ້າ; зелёная (густа́я, высо́кая) трава́ ຫຍ້າຂຽວ(ດົກ, ສູງ); лежа́ть на траве́ ນອນເທິງຫຍ້າ; идти́ по траве́ ຜ່ານ ຫຍ້າໄປ, ຍ່າງຢຽບຫຍ້າ



трава́

тра́ктор, -а (*мн.* тра́ктор|ы, -ов *и* трактор|а́, -о́в) *м* ລົດຕະລັກເຕີ, ລົດໄຖ



тра́ктор

тракторист, -а *м* ຄົນຂັບລົດໄຖ; рабо́тать трактори́стом в колхо́зе ເປັນຄົນຂັບລົດໄຖຢູ່ ໃນສະຫະກອນກະເສດ

тра́кторн|ый, -ая, -ое, -ые ຕະລັກເຕີ, ລົດໄກ; тра́кторный заво́д ໂຮງງານຜະລິດລົດ ຕະລັກເຕີ(ລົດໄກ)

трамва́|й, -я *м* ລົດລາງ; е́хать на трамва́е (трамва́ем) ຂີ່ລົດລາງ; сесть в (на) трамва́й ຂຶ້ນລົດລາງ; вы́йти из трамва́я ລົງລົດລາງ



трамва́й

трамва́йн|ый, -ая, -ое, -ые ລົດລາງ; трамва́йная остано́вка ບ່ອນຈອດລົດລາງ

тра́нспорт, -а *м* ຍວດຍານພາຫະນະ, ພາຫະນະຂົນສົ່ງ, ການຂົນສົ່ງ, ການເດີນລົດ; железнодоро́жный тра́нспорт ພາຫະນະຂົນສົ່ງລົດໄຟ, ການຂົນສົ່ງທາງລົດໄຟ, ຂະແໜງລົດໄຟ; во́дный тра́нспорт ພາຫະນະຂົນສົ່ງທາງນ້ຳ, ການຂົນສົ່ງທາງນ້ຳ; возду́шный тра́нспорт ພາຫະນະຂົນສົ່ງທາງອາກາດ, ການຂົນສົ່ງທາງອາກາດ; пассажи́рский тра́нспорт ຍວດຍານໂດຍສານ, ການຂົນສົ່ງໂດຍສານ; рабо́та городско́го тра́нспорта ການເດີນລົດເທດສະບານ; всем ви́дам тра́нспорта он предпочита́ет возду́шный ລາວມັກໃຊ້ຍວດຍານພາຫະນະທາງອາກາດ(ເຮືອບິນ)ຫລາຍກວ່າຍວດຍານພາຫະນະຊະນິດອື່ນໆ

тра́|тить, -чу, -тишь, -тят *несов.*; **истра́|тить,** -чу, -тишь, -тят *сов.*; *что* ຈ່າຍ, ໃຊ້, ເສຍ; истра́тить все де́ньги ໃຊ້ເງິນຫມົດ; тра́тить си́лы ໃຊ້ກຳລັງແຮງ, ອອກເຫື່ອເຫແຮງ; тра́тить мно́го вре́мени напра́сно ເສຍເວລາຫລາຍລ້ຳໆ, ເຄິກເວລາ

тре́бовани|е, -я *с* ການຫວງ, ຄວາມຮຽກຮ້ອງຕ້ອງການ; вы́полнить чьё-нибудь тре́бование ປະຕິບັດຕາມຄວາມຕ້ອງການຂອງ(ຂໍ); сде́лать что́-нибудь по пе́рвому тре́бованию ເຮັດຕາມຄວາມຮຽກຮ້ອງທັນທີ

тре́б|овать, -ую, -уешь, -уют *несов.*; **потре́б|овать,** -ую, -уешь, -уют *сов.* 1 *кого-что, чего и с союзом* «что́бы» ຫວງ, ຮຽກຮ້ອງ, ຢາກໄດ້; тре́бовать себе́ помо́щника ຢາກໄດ້ຜູ້ຊ່ວຍ; тре́бовать у кого́-нибудь объясне́ний ຫວງໃຫ້ຊີ້ແຈງອະທິບາຍ; потре́бовать у кого́-нибудь спра́вку ຢາກໄດ້ໃບຢັ້ງຢືນ; тре́бовать, что́бы верну́ли долг ຫວງຫນີ້(ເງິນ) 2 (*1 и 2 л. не употр.*) *чего* ຕ້ອງການ; де́ти тре́буют забо́ты ເດັກນ້ອຍຕ້ອງການຄວາມເອົາໃຈໃສ່; э́та рабо́та потре́бует мно́го сил и вре́мени ວຽກງານນີ້ຕ້ອງໃຊ້ເວລາແລະເຫື່ອແຮງຫລາຍ

тре́б|оваться, -уется, -уются *несов.*; **потре́б|оваться,** -уется, -уются *сов.* ຕ້ອງການ, ຢາກໄດ້; заво́ду тре́буются рабо́чие ໂຮງງານຕ້ອງການແຮງງານ; на э́то потре́буется мно́го сил

и вре́мени ວຽກນີ້ຕ້ອງການທັງເຫື່ອແຮງ ແລະເວລາຫລາຍ

трево́г|а, -и *ж* 1 ຄວາມເປັນຫ່ວງເປັນໄຍ, ຄວາມກັງວົນໃຈ; постоя́нная трево́га за жизнь дете́й ເປັນຫ່ວງເປັນໄຍເກຶງລູກເຕົ້າ; быть в трево́ге ກັງວົນໃຈ, ວຸ່ນວາຍໃຈ; с трево́гой ждать отве́та ລໍຖ້າຄຳຕອບດ້ວຍຄວາມກັງວົນໃຈ; состоя́ние больно́го вызыва́ет трево́гу ອາການຂອງຄົນເຈັບເປັນຕາວິຕົກ [ກັງວົນ] 2 ໄພ; возду́шная трево́га ໄພອາກາດ

трево́ж|ить, -у, -ишь, -ат *несов.*; **встрево́ж|ить,** -у, -ишь, -ат *сов.*; *кого-что* ລົບກວນ, ວົນ [ວາຍ], ວຸ່ນ [ວາຍ], ເຮັດໃຫ້ກັງວົນໃຈ, ເຮັດໃຫ້ຫົນຫວຍ; меня́ трево́жит отсу́тствие пи́сем ບໍ່ມີຈົດຫມາຍ ເຮັດໃຫ້ຂ້ອຍກັງວົນໃຈ; телегра́мма его́ встрево́жила ໂທລະເລກສະບັບນີ້ເຮັດໃຫ້ລາວກັງວົນໃຈ

трево́жн|ый, -ая, -ое, -ые; трево́ж|ен, -на, -но, -ны 1 ທີ່ສະແດງຄວາມກັງວົນໃຈ; трево́жный взгляд (го́лос) ສາຍຕາ (ນຳສຽງ) ກະວົນກະວາຍ 2 ເປັນຕາຕົກໃຈ; трево́жные све́дения (изве́стия) ຂ່າວຄາວທີ່ເປັນຕາຕົກໃຈ

тре́зв|ый, -ая, -ое, -ые; трезв, -а́, тре́зво, трезвы́ *и* тре́звы 1 ບໍ່ເມົາເຫລົ້າ; тре́звый челове́к ຄົນບໍ່ເມົາເຫລົ້າ 2 ມີເຫດມີຜົນ, ແທດເຫມາະ; тре́звый взгляд на собы́тия ເບິ່ງຄວາມເປັນໄປຢ່າງແທດເຫມາະ; тре́звый подхо́д к де́лу ເບິ່ງວຽກງານຢ່າງມີເຫດມີຜົນ, ມີທັດສະນະຢ່າງກົງໄປກົງມາຕໍ່ວຽກງານ

тре́тий, тре́тья, тре́тье, тре́тьи *числ.* 1 ທີສາມ; тре́тий день ມື້ທີສາມ; тре́тий дом от угла́ ເຮືອນທີສາມນັບແຕ່ແຈຖະຫນົນໄປ 2 *в знач. сущ.* **тре́ть|е,** -его *с* ເຍື່ອງທີສາມ; на тре́тье по́дали компо́т ສຳລັບເຍື່ອງທີສາມເອົານ້ຳຫມາກໄມ້ມາສູ່ກິນ

треуго́льник, -а *м* ຮູບສາມແຈ, ຮູບສາມຫລ່ຽມ



треуго́льник

треуго́льн|ый, -ая, -ое, -ые ສາມແຈ

трёхсо́т|ый, -ая, -ое, -ые *числ.* ທີສາມຮ້ອຍ; на трёхсо́той страни́це ຫນ້າທີສາມຮ້ອຍ

три, трёх *числ.* ສາມ; три челове́ка ສາມຄົນ; три окна́ ປ່ອງຢ້ຽມສາມປ່ອງ; с тремя́ това́рищами ກັບຫມູ່ສາມຄົນ

тридца́т|ый, -ая, -ое, -ые *числ.* ທີສາມສິບ; тридца́тая страни́ца ຫນ້າທີສາມສິບ; на тридца́тый день ໃນມື້ທີສາມສິບ

три́дцать, тридцати́ *числ.* ສາມສິບ; три́дцать челове́к ສາມສິບຄົນ; в тридцати́ ме́трах от до́ма ຫ່າງຈາກເຮືອນສາມສິບແມັດ

трина́дцат|ый, -ая, -ое, -ые *числ.* ທີສິບສາມ; он роди́лся трина́дцатого ма́рта ລາວໄດ້ເກີດວັນທີສິບສາມເດືອນມີນາ

трина́дцат|ь, -и *числ.* สิบสาม; дом в трина́дцать этаже́й เรือนสิบสามชั้น

три́ста, трёхсо́т *числ.* สามร้อย; три́ста ме́тров สามร้อยแม้ก; в трёхста́х киломе́трах от Москвы́ ห่างจากมิดสะกูสามร้อยหลัก

тро́га|ть, -ю, -ешь, -ют *несов.*; **тро́н|уть,** -у, -ешь, -ут *сов.* 1 *кого-что* แตะต้อง, ลูบ, บาย; тро́гать во́лосы рука́ми เอามือลูบผม; тро́нуть това́рища за плечо́ ถือบ่าขมู่ 2 (*чаще с* «не») *что* จับ; не тро́гай мой фотоаппара́т ย่าจับก้องก่ายรูบของข้อย 3 *кого* เฮ้น; его́ не тро́гают чужи́е страда́ния ลาว บ่เฮ้นความทุกทำละมานของผู้อื่น; меня́ тро́нула судьба́ ребёнка ชาตากำของเด็กเร้ดให้ข้อยสะเทือนใจ

тролле́йбус, -а *м* ลิดเมไฟฟ้า; е́хать на (в) тролле́йбусе (тролле́йбусом) ขี่ลิดเมไฟฟ้า; сесть в тролле́йбус ขึ้นลิดเมไฟฟ้า; вы́йти из тролле́йбуса ลิงลิดเมไฟฟ้า



троллéйбус

тро́нуть *см.* тро́гать

тропи́нк|а, -и (*мн.* тропи́н|ки, -ок, -кам) *ж* ทางร่อม, ทางน้อย; лесна́я тропинка

ทางร่อมในป่า; идти́ по тропи́нке ย่างตามทางร่อม; тропи́нка шла вдоль реки́ ทางร่อมเวาะฝั่ง

тротуа́р, -а *м* แถบทาง; идти́ по тротуа́ру ย่างตามแถบทาง



тротуа́р

труб|а́, -ы́ (*мн.* тру́бы, труб) *ж* ท่อ; тру́бы водопрово́да ท่อน้ำประปา; из заводско́й трубы́ шёл дым ควันก๋มออกจากท่อไฟของโรงงาน



труба́

тру́бк|а, -и (*мн.* тру́б|ки, -ок, -кам) *ж* 1 ก้อง; หลอด 2 ตู; снять телефо́нную тру́бку ยิบ (จับ) ตูโทละสับขึ้น 3 กอก; кури́ть тру́бку ดูดกอก (ยา)



тру́бка

труд, -а́ *м* 1 (*мн. нет*) แรงงาน, การออกแรงงาน; физи́ческий труд แรงงานทางกาย; производи́тельность труда́ สามัก

ກະພາບແຮງງານ; ору́дия труда́ ເຄື່ອງມືອອກແຮງງານ; пла́та за труд ຄ່າແຮງງານ, ຄ່າຈ້າງ 2 ຍາກ; он с трудо́м встал ລາວລຸກ(ຂຶ້ນ)ຍາກ; она́ без труда́ реши́ла зада́чу ລາວແກ້ເລກໂຈດໄດ້ງ່າຍ 3 ບົດຂຽນ, ຜົນງານ; нау́чные труды́ ບົດຄົ້ນຄວ້າທາງວິທະຍາສາດ

тру|ди́ться, -жу́сь, тру́д|ишься, -ятся *несов.* ອອກແຮງງານ; трудя́щ|ийся, -аяся, -ееся, -иеся 1 ອອກແຮງງານ; трудя́щийся челове́к ຜູ້ອອກແຮງງານ; трудя́щееся населе́ние страны́ ປະຊາຊົນຜູ້ອອກແຮງງານຂອງປະເທດ 2 *в знач. сущ.* **трудя́щ|иеся,** -ихся *мн.* ຜູ້ອອກແຮງງານ; акти́вное уча́стие трудя́щихся в жи́зни страны́ ການເຂົ້າຮ່ວມຢ່າງຫ້າວຫັນຂອງຊາວຜູ້ອອກແຮງງານໃນພາລະກິດຂອງປະເທດຊາດ

трудя́щ|иеся, -ихся *мн.* ຜູ້ອອກແຮງງານ; ак-

ти́вное уча́стие трудя́щихся в жи́зни страны́ ການເຂົ້າຮ່ວມຢ່າງຫ້າວຫັນຂອງຊາວຜູ້ອອກແຮງງານໃນພາລະກິດຂອງປະເທດຊາດ

труп, тру́па *м* [ຊາກ]ສົບ

трус, тру́са *м* ຄົນໃຈອ່ອນ, ຄົນຂີ້ຢ້ານ, ຂີ້ໂຍ່ຍ

трусли́в|ый, -ая, -ое, -ые; трусли́в, -а, -о, -ы ຂີ້ຢ້ານ, ຂີ້ໂຍ່ຍ; трусли́вый челове́к ຄົນໃຈອ່ອນ, ຄົນຂີ້ຢ້ານ; он о́чень трусли́в ລາວເປັນຄົນຂີ້ຢ້ານທີ່ສຸດ

трус|ы́, -о́в *мн.* ໂສ້ງຊັ້ນໃນ; трусы́ и ма́йка ໂສ້ງແລະເສື້ອຊັ້ນໃນ



трусы́

тря́пк|а, -и (*мн.* тря́п|ки, -ок, -кам) *ж* ຜ້າ, ແພ; вытира́ть пыль тря́пкой ເອົາແພປັດຝຸ່ນ

тряс|ти́, -у́, -ёшь, -у́т (*прош.* тряс, трясл|а́, -о́, -и́) *несов., кого-что* ສັ່ນ, ຄອນ; трясти́ де́рево ສັ່ນກົກໄມ້; трясти́ кого́-нибудь за плечо́ ຈັບບ່າເຂົາສັ່ນ

туале́т, -а *м* ຫ້ອງນ້ຳ; мужско́й (же́нский) туале́т ຫ້ອງນ້ຳຊາຍ(ຍິງ)

туда́ *нареч.* ທີ່ນັ້ນ, ຫັ້ນ, ພູ້ນ; я собира́юсь туда́ пое́хать ຂ້ອຍຢາກໄປທີ່ນັ້ນ; оте́ц сейча́с на рабо́те, позвони́те ему́ туда́ ເວລານີ້ພໍ່ຢູ່ໃນໂຮງການ ຕິສາຍຫາເພີ່ນຢູ່ຫັ້ນ; вы не туда́ идёте ເຈົ້າໄປທາງຜິດ

ту́ловищ|е, -а *с* ລຳຄີງ, ເລົາຄີງ, ຕົນຕົວ, ຮ່າງກາຍ

тума́н, -а *м* ນ້ຳຫມອກ; тума́н над реко́й ນ້ຳຫມອກປົກຄຸມແມ່ນ້ຳ; сего́дня на у́лице тума́н ມື້ນີ້ຂ້າງນອກມີນ້ຳຫມອກ

туп|о́й, -а́я, -о́е, -ы́е; туп, -а́, ту́п|о, -ы ບໍ່ເຂົ້າ, ປູ້; тупо́й нож ມີດບໍ່ເຂົ້າ(ປູ້); тупы́е но́жницы ມີດຕັດບໍ່ເຂົ້າ

тури́зм, -а (*мн. нет*) *м* ການທ່ອງທ່ຽວ, ຂະແຫນງທ່ອງທ່ຽວ; междунаро́дный тури́зм ການທ່ອງທ່ຽວລະຫວ່າງຊາດ; разви́тие тури́зма ການຂະຫຍາຍຕົວຂອງການທ່ອງທ່ຽວ

тури́ст, -а *м* ນັກທ່ອງທ່ຽວ; гру́ппа тури́стов ຄະນະນັກທ່ອງທ່ຽວ

тури́стск|ий, -ая, -ое, -ие ທ່ອງທ່ຽວ; тури́стская ба́за ຄ້າຍທ່ອງທ່ຽວ

тут *нареч.* ຢູ່ນີ້, ຢູ່ພີ້; мы тут живём ພວກເຮົາຢູ່ພີ້; подожди́те меня́ тут ຖ້າຂ້ອຍຢູ່ນີ້ເດີ

ту́ф|ли, -ель, -лям *мн.* (*ед.* ту́фл|я, -и *ж*) ເກີບສຸບ; ко́жаные ту́фли ເກີບຫນັງ; дома́шние ту́фли ເກີບແຕະ; наде́ть (снять) ту́фли ສຸບ(ປົດ)ເກີບ; носи́ть ту́фли на высо́ком каблуке́ ໃສ່ເກີບສົ້ນສູງ



ту́фли

ту́ч|а, -и *ж* ເມກ; чёрная ту́ча ເມກມືດ, ເຝື້ອດຳ; по не́бу шли ту́чи ມີກ້ອນເມກໄຫລຕາມທ້ອງຟ້າ

туш|и́ть, -у́, ту́ш|ишь, -ат *несов.*; **потуш|и́ть,** -у́, поту́ш|ишь, -ат *сов.*; *что* ມອດ, ອັດ; туши́ть (потуши́ть) ого́нь ມອດໄຟ; туши́ть (потуши́ть) свет ມອດ(ປິດ)ໄຟ

ты, тебя́, тебе́, тебя́, тобо́й, о тебе́ *мест. 2 л. ед.* ເຈົ້າ, ໂຕ, ທ່ານ, ສະຫາຍ; что ты де́лаешь? ເຈົ້າເຮັດຫຍັງ?; мы придём к тебе́ ພວກເຮົາຈະມາຫາເຈົ້າ; он тебя́ зна́ет ຄົນນັ້ນຮູ້ຈັກເຈົ້າ

тыл, ты́ла (*мн.* тыл|ы́, -о́в) *м* ແນວຫລັງ; отпра́вить ра́неных в тыл ສົ່ງຄົນຖືກບາດເຈັບໄປແນວຫລັງ; рабо́тать в тылу́ ເຮັດວຽກຢູ່ແນວຫລັງ

ты́сяч|а, -и, *твор.* ты́сячей *и* ты́сячью *ж* ພັນ; ты́сяча киломе́тров ພັນຫລັກ; две ты́сячи лет ສອງພັນປີ

ты́сячн|ый, -ая, -ое, -ые ທີພັນ

тюрьм|а́, -ы́ (*мн.* тю́рьмы, тю́рем, тю́рьмам) *ж* ຄຸກ; сиде́ть в тюрьме́ ຢູ່ໃນຄຸກ; посади́ть престу́пника в тюрьму́ ເອົານັກໂທດໃສ່ຄຸກ

тяжело́ *нареч. и безл. в знач. сказ.* 1 ຫນັກ; ему́ тяжело́ нести́ э́тот чемода́н ລາວ ຖືຫີບນີ້ຫນັກ 2 ຫນັກໃຈ; на него́ тяжело́ смотре́ть ເບິ່ງຄົນນັ້ນເຮັດໃຫ້ຫນັກໃຈ 3 ຍາກ; вам с ним бу́дет тяжело́ ຢູ່ນໍາຄົນນັ້ນຍາກເອົາແທ້ເອົາວ່າ

тяжёл|ый, -ая, -ое, -ые; тяжёл, тяжел|á, -ó, -ы́ 1 ຫນັກ [ຫນ່ວງ]; тяжёлый чемода́н (я́щик) ຫີບຫນັກ; тяжёлый груз ຂອງຫນັກ; тяжёлые ве́щи ເຄື່ອງຂອງຫນັກ 2 ຫນັກ [ຫນ່ວງ]; тяжёлый труд ການອອກແຮງງານຫນັກຫນ່ວງ; тяжёлая рабо́та ວຽກຫນັກ 3 ຫຍຸ້ງຍາກ; тяжёлая жизнь ຊີວິດຫຍຸ້ງຍາກ; тяжёлая обя́занность [ພາລະ] ຫນ້າທີ່ຫນັກຫນ່ວງ; тяжёлые времена́ ເວລາຫຍຸ້ງຍາກ; у него́ бы́ло тяжёлое де́тство ໃນເວລາຍັງນ້ອຍລາວຫຍຸ້ງຍາກລໍາບາກ 4 ຫນັກ; тяжёлое преступле́ние ໂທດຫນັກ; тяжёлое наказа́ние ການລົງໂທດຫນັກ 5 ອ່າຍາກ; тяжёлый хара́ктер ນິດໄສອ່າຍາກ; тяжёлый человек ຄົນອ່າຍາກ ◇ **тяжёлая промы́шленность** ອຸດສາຫະກໍາຫນັກ

тян|у́ть, -у́, тя́н|ешь, -ут *несов.*, *кого-что* ແກ່, ດຶງ, ລາກ, ຊັກ; тяну́ть верёвку ດຶງເຊືອກ; тяну́ть ло́дку на бе́рег ແກ່ເຮືອຂຶ້ນຝັ່ງ; парохо́д тя́нет за собо́й ло́дку ກໍາປັ່ນແກ່ເຮືອພວງ

тяну́ться, тя́н|ется, -утся *несов.* 1 ຍືດ; рези́на хорошо́ тя́нется ເສັ້ນຢາງຍືດງ່າຍ 2 ມີ, ເນັ່ງ, ຍັງຢາຍ; за дере́вней тя́нется лес ທາງຫລັງບ້ານມີປ່າໄມ້ຍາວອອກໄປ; тропи́нка тя́нется вдоль реки́ ທາງຮ່ອມເວາະຝັ່ງນ້ໍາ 3 ໄປ [ຊ້ໍາ]; вре́мя тя́нется ме́дленно ເວລາໄປຊ້ໍາ 4 ໄຫລ [ຊ້ໍາ]; по не́бу тя́нутся чёрные ту́чи ມີກ້ອນເມກມືດໄຫລຊ້ໍາຕາມທ້ອງຟ້ໍາ

У

у *предлог с род.* 1 ໃກ້, ນໍ, ແປະ, ຂ້າງ, ຫນ້ໍາ; стоя́ть у окна́ ຢືນຢູ່ແປະປ່ອງຢ້ຽມ; останови́ться у две́ри ຢຸດຢູ່ຂ້າງປະຕູ; жить у бе́рега мо́ря ຢູ່ແຄມທະເລ 2 ກັບ; рабо́тать у станка́ ເຮັດວຽກຢູ່ກັບຈັກ; стоя́ть у руля́ ຖືທ້າຍ 3 ນໍາ, ກັບ; отдыха́ть у друзе́й ພັກຜ່ອນກັບຫມູ່; жить у роди́телей ຢູ່ນໍາພໍ່ແມ່; учи́ться у профе́ссора ຮຽນຫນັງສືນໍາອາຈານ 4: у меня́ есть э́та статья́ ຂ້ອຍມີບົດຄວາມນີ້;

у ба́бочки краси́вые кры́лья ແມງກະເບື້ອມີປີກງາມ; ру́чка у две́ри слома́лась ຢ່ອງ(ມື) ປະຕູຫັກ 5 ນິ້ວ; взять сигаре́ту у това́рища ຢືມກອກຢານຳຫມູ່; получи́ть зада́ние у бригади́ра ຮັບວຽກນຳຫົວໜ້າຫນ່ວຍ

убега́|ть, -ю, -ешь, -ют *несов.*; **убе|жа́ть,** -гу́, -жи́шь, -гу́т *сов.* 1 ແລ່ນ[ຫນີ], ໂດນ[ຫນີ], ປົບ[ຫນີ], ຜ່ານ[ຫນີ]; убега́ть от соба́ки ແລ່ນຜ່ານໝາ; убежа́ть в лес [ລັກ]ຫນີເຂົ້າປ່າ; убежа́ть к реке́ ຫນີໄປຫາແມ່ນ້ຳ 2 ຫນີ; убега́ть и́з дому [ລັກ]ຫນີຈາກເຮືອນ; убежа́ть из пле́на ລັກຫນີອອກຈາກຄຸກ, ໂດນຄຸກ

убеди́ть(ся) *см.* убежда́ть(ся)

убежа́ть *см.* убега́ть

убежда́|ть, -ю, -ешь, -ют *несов.*; **убед|и́ть,** (*1 л. ед. не употр.*), -и́шь, -я́т *сов.*; *кого в чём и с неопр.* ຊວນ[ເຊື່ອ], ຂົນຂວາຍ, ໂອບລົມ; убеди́ть това́рища в необходи́мости пое́здки ຊວນ(ຂົນຂວາຍ)ຫມູ່ໄປ; убеди́ть кого́-нибудь в справедли́вости реше́ния ຊວນເຂົາເຊື່ອຄວາມຍຸດຕິທຳຂອງຄຳຕັດສິນ; врач убеди́л больно́го лечь в больни́цу ແພດຊວນຄົນເຈັບເຂົ້ານອນໂຮງຫມໍ

убежда́|ться, -юсь, -ешься, -ются *несов.*; **убед|и́ться** (*1 л. ед. не употр.*), -и́шься, -я́тся *сов.*; *в чём и с союзом* «что» ເຫັນແຈ້ງ, ເຊື່ອໃຈ; убежда́ться в чём-нибудь на своём о́пыте ເຫັນແຈ້ງຈາກປົດຮຽນຂອງຕົນ; я убеди́лся, что вы бы́ли пра́вы ຂ້ອຍເຫັນແຈ້ງວ່າ ເຈົ້າເວົ້າຖືກ

убежде́ни|е, -я *с* 1 ການຊັກຊວນ, ການລໍ້ລວງ; де́йствовать убежде́нием ໃຊ້ການລໍ້ລວງ(ຊັກຊວນ) 2 (*обычно мн.*) ທັດສະນະຫລັກຫມັ້ນ, ຄວາມເຫລື້ອມໃສ, ຄວາມເຊື່ອຫມັ້ນ; полити́ческие убежде́ния ທັດສະນະຫລັກຫມັ້ນທາງການເມືອງ

убива́|ть, -ю, -ешь, -ют *несов.*; **уби́ть,** уб|ью, -ёшь, -ьёт (*повел.* убе́й) *сов.*; *кого* ຂ້າ[ຕາຍ]; уби́ть во́лка ຂ້າຫມາໃນຕາຍ

убира́|ть, -ю, -ешь, -ют *несов.*; **убра́ть,** убер|у́, -ёшь, -у́т (*прош.* убра́л, убрала́, убра́л|о, -и) *сов.*; *что* 1 ເອົາ...ໄວ້, ເອົາ...ໃສ່, ເກັບ, ມ້ຽນ, ມ້ຽນມັດ; убра́ть оде́жду в шкаф ເອົາເຄື່ອງນຸ່ງໄວ້ໃນຕູ້; убра́ть тетра́ди со стола́ ເອົາປຶ້ມຂຽນອອກຈາກໂຕະ 2 ເກັບກ່ຽວ, ເກັບກູ້, ຂຸດ, ເກັບ; убира́ть урожа́й ເກັບກ່ຽວ(ເກັບກູ້)ພືນລະປູກ; убра́ть пшени́цу ເກັບກ່ຽວເຂົ້າບະເລ 3 ຈັດແຈ, ມ້ຽນ, ບ່ອລະບົດ, ແພ້ວພາດ; убира́ть ко́мнату ມ້ຽນ(ບ່ອລະບົດ)ຫ້ອງ; убра́ть крова́ть (посте́ль) ແຕ່ງ(ແປງ, ປັດ)ບ່ອນນອນ

уби́ть *см.* убива́ть

убо́р, -а *м*: головно́й убо́р ຫມວກ; снять (оде́ть) головно́й убо́р ປົດ(ສວມ)ຫມວກ

убо́рк|а, -и (*мн.* убо́р|ки, -ок, -кам) *ж* 1 ການບ່ອລະບົດ, ການຈັດແຈ, ການແພ້ວ

ກວາດ; убóрка помещéния ການບໍລະບັດຫ້ອງ 2 ການເກັບກ່ຽວ; убóрка урожáя ການເກັບກ່ຽວຜົນລະປູກ 3 ການອະນາໄມ; сдéлать убóрку ເຮັດອະນາໄມ

убóрн|ая, -ой *ж* ຫ້ອງນ້ຳ; ຫ້ອງແຕ່ງຕົວ

убрáть *см.* убирáть

уважáем|ый, -ая, -ое, -ые 1 ທີ່ເຄົາຣົບ[ນັບຖື]; мой друг — уважáемый человéк ເພື່ອນຂ້ອຍເປັນຄົນທີ່ໄດ້ຮັບຄວາມເຄົາຣົບນັບຖື 2 (*употр. как форма официального обращения*) ທີ່[ເຄົາຣົບ]ນັບຖື; уважáемый Иван Ивáнович! ທ່ານ ອີວານ ອີວານໂນວິດ ທີ່ນັບຖື!; уважáемая Мария Ивáновна! ນາງສາວ ອີວານໂນບນາ ທີ່ນັບຖື!; уважáемые товáрищи! ສະຫາຍທີ່ນັບຖືທັງຫລາຍ!

уважá|ть, -ю, -ешь, -ют *несов., кого-что* ນັບຖື, ເຄົາຣົບ; уважáть родúтелей ນັບຖືພໍ່ແມ່

уважéни|е, -я (*мн. нет*) *с* ຄວາມ[ເຄົາລົບ]ນັບຖື, ຄາລະວະ; взаúмное уважéние ຄວາມນັບຖືຊຶ່ງກັນແລະກັນ; пóльзоваться уважéнием товáрищей ໄດ້ຮັບຄວາມເຄົາລົບນັບຖືຂອງໝູ່

увезтú *см.* увозúть

увеличéни|е, -я (*мн. нет*) *с* ການເພີ່ມ[ຕື່ມ]; увеличéние скóрости ການເລ່ງຄວາມໄວ; увеличéние зарплáты ການເພີ່ມເງິນເດືອນ

увели́чива|ть, -ю, -ешь, -ют *несов.*; **увели́ч|ить,** -у, -ишь, -ат *сов.*; *что* ເພີ່ມ[ຫຼຸບ], ຫະວີ, ຂະຫຍາຍ; увели́чить (увели́чивать) пло́щадь под ле́сом ຂະຫຍາຍເນື້ອທີ່ປູກກ້ກໄມ້; увели́чить (увели́чивать) число́ рабо́чих ເພີ່ມຈຳນວນກຳມະກອນ; увели́чить (увели́чивать) вы́пуск това́ра ເພີ່ມ[ຫະວີ]ການຜະລິດສິນຄ້າ; увели́чить (увели́чивать) ско́рость по́езда ເລ່ງລັດຄວາມໄວຂອງລົດໄຟ

увели́чива|ться, -ется, -ются *несов.*; **увели́ч|иться,** -ится, -атся *сов.* ເພີ່ມ[ຕື່ມ], ຫະວີ, ຂະຫຍາຍຕົວ; увели́читься в объёме ເພີ່ມບໍລິມາດ; число́ студе́нтов увели́чивается с ка́ждым го́дом ຈຳນວນນັກສຶກສາເພີ່ມຂຶ້ນທຸກໆປີ

увели́чить(ся) *см.* увели́чивать(ся)

уве́ренно *нареч.* ຫມັ້ນໃຈ, ຫນັກແຫນ້ນ; уве́ренно отвеча́ть (говори́ть) ຕອບ(ເວົ້າ)ຢ່າງຫມັ້ນໃຈ(ຫນັກແຫນ້ນ, ດ້ວຍຄວາມເຊື່ອຫມັ້ນ)

уве́ренност|ь, -и (*мн. нет*) *ж* ຄວາມເຊື່ອຫມັ້ນ, ຄວາມຫມັ້ນໃຈ; уве́ренность в свои́х си́лах ຄວາມເຊື່ອຫມັ້ນໃນກຳລັງຂອງຕົນ; чу́вство уве́ренности ຄວາມເຊື່ອຫມັ້ນ, ຄວາມຫມັ້ນໃຈ

уве́ренн|ый, -ая, -ое, -ые 1 (*кратк. ф.* уве́рен, -а, -о, -ы) ເຊື່ອຫມັ້ນ, ຫມັ້ນໃຈ; быть уве́ренным в успе́хе ເຊື່ອຫມັ້ນຕໍ່ຜົນສຳເລັດ; мы уве́рены в побе́де ພວກເຮົາເຊື່ອຫມັ້ນຕໍ່

ໃຊ້ຈະນະ; я уве́рен, что он прав ຂ້ອຍຫມັ້ນໃຈວ່າ ລາວຖືກ 2 (*кратк. ф.* уве́рен, -на, -но, -ны) ຫນັກແຫນ້ນ; уве́ренный отве́т ຄຳຕອບຫມັ້ນຫນຽວ; уве́ренные де́йствия ການກະທຳຫນັກແຫນ້ນ; его́ движе́ния бы́ли быстры́ и уве́ренны ລາວເຄື່ອນໄຫວ່ອ່ອງໄວແລະຫນັກແຫນ້ນ

уве́рить *см.* уверя́ть

уверя́|ть, -ю, -ешь, -ют *несов.*; **уве́р|ить,** -ю, -ишь, -ят *сов.*; *кого в чём и с союзом* «что» ຊວນເຊື່ອ; он уверя́л, что э́то пра́вда ລາວຊວນໃຫ້ເຊື່ອວ່າອັນນີ້ເປັນຄວາມຈິງ

увести́ *см.* уводи́ть

уви́деть(ся) *см.* ви́деть(ся)

увлека́|ться, -юсь, -ешься, -ются *несов.*; **увле́чься,** увле|ку́сь, -чёшься, -ку́тся (*прош.* увлёкся, увлекл|а́сь, -о́сь, -и́сь) *сов.*; *чем* ມັກ, ຕິດ, ເຫີ, ມີ; увлека́ться ша́хматами (му́зыкой) ມັກຫລິ້ນຫມາກເລັກ (ດົນຕີ); увле́чься кни́гой ມີອ່ານປຶ້ມ; увле́чься рабо́той ມີວຽກ

увлече́ни|е, -я *с* ການຕິດໃຈ, ການເພີດເພີນ; увлече́ние теа́тром ການຕິດໃຈລະຄອນ, ມັກເບິ່ງລະຄອນ; увлече́ние футбо́лом ມີເມົາຫລິ້ນ(ເບິ່ງ)ເຕະບານ; занима́ться чем-нибудь с увлече́нием ເຮັດດ້ວຍຄວາມເພີດເພີນ

увле́чься *см.* увлека́ться

уво|зи́ть, -жу́, уво́з|ишь, -ят *несов.*; **увез|ти́,** -у́, -ёшь, -у́т (*прош.* увёз, увезл|а́, -о́, -и́) *сов.*; *кого-что* ຂົນໄປ, ເອົາໄປ, ພາໄປ; увози́ть дете́й на да́чу ພາລູກຂີ່ລົດໄປຢູ່ເຮືອນພັກນອກເມືອງ; увезти́ с собо́й часть вещей ເອົາເຄື່ອງຂອງໄປນຳຈຳນວນຫນຶ່ງ; увезти́ ме́бель на маши́не ຂົນເຄື່ອງເຮືອນໃສ່ລົດໄປ

уво́лить *см.* увольня́ть

увольня́|ть, -ю, -ешь, -ют *несов.*; **уво́л|ить,** -ю, -ишь, -ят *сов.*; *кого* ປົດ; уво́лить с рабо́ты (с до́лжности) ປົດອອກຈາກວຽກ(ຕຳແຫນ່ງ)

угнета́|ть, -ю, -ешь, -ют *несов.*, *кого* ກົດຂີ່, ບຽດບຽນ

угнете́ни|е, -я (*мн. нет*) *с* ການກົດຂີ່; борьба́ про́тив угнете́ния ການຕໍ່ສູ້ຕ້ານກັບການກົດຂີ່

угова́рива|ть, -ю, -ешь, -ют *несов.*; **уговор|и́ть,** -ю́, -и́шь, -я́т *сов.*; *кого с неопр.* [ຊັກ]ຊວນ, ລະດົມ, ລຸລ່ຽ; я уговори́л друзе́й пое́хать за́ город ຂ້ອຍໄດ້ຊວນຫມູ່ໄປທ່ຽວນອກເມືອງ

уго́дно *частица* (*употр. после мест. и нареч.*): где уго́дно ບ່ອນໃດກໍໄດ້; как уго́дно ແນວໃດກໍໄດ້, ຕາມໃຈ; како́й уго́дно ອັນໃດກໍໄດ້; когда́ уго́дно ຍາມໃດກໍໄດ້; кто уго́дно ຜູ້ໃດກໍໄດ້; куда́ уго́дно ໃສກໍໄດ້; ско́лько уго́дно ເທົ່າໃດກໍໄດ້

у́гол, угла́, *предл.* на (в) углу́ *м* 1 ແຈ, ຫລ່ຽມ; у́гол до́ма ແຈເຮືອນ; у́гол стола́ ແຈໂຕະ; углы́ платка́ ແຈຜ້າຖຸ້ມ; в углу́ ко́мнаты ຢູ່ແຈຫ້ອງ; на углу́ у́лицы ຢູ່ແຈຖະໜົນ; из-за угла́ появи́лась маши́на ລົດແລ່ນອອກມາຈາກແຈ 2 ສາກ, ມຸມ; пря́мо́й у́гол ມຸມຕັ້ງສາກ

у́голь, у́гля *м* ຖ່ານ; ка́менный у́голь ຖ່ານຫີນ; запа́сы у́гля ແຫລ່ງຖ່ານຫີນ; добы́ча у́гля ການຂຸດຖ່ານຫີນ

угости́ть *см.* угоща́ть

угоща́|ть, -ю, -ешь, -ют *несов.*; **уго|сти́ть,** -щу́, -сти́шь, -стя́т *сов.*; *кого чем* ເອີ້ນມາສູ່ກິນ, ເອີ້...ຕ້ອນ, ຫາ...ໃຫ້, ລ້ຽງ; угоща́ть (угости́ть) кого́-нибудь пирого́м (ча́ем) ເອີ້ນຂະໜົມ(ນ້ຳຊາ)ມາສູ່ເຂົາກິນ; угоща́ть (угости́ть) кого́-нибудь обе́дом (фру́ктами) ລ້ຽງເຂົ້າງາຍ(ໝາກໄມ້)ເຂົາ

угрожа́|ть, -ю, -ешь, -ют *несов.* 1 *кому чем* ນາບຂູ່, ຂົ່ມຂູ່; угрожа́ть кому́-нибудь суде́м ຂູ່ເຂົາວ່າຈະຟ້ອງສານ 2 (*1 и 2 л. не употр.*) *кому* ເປັນໄພ[ອັນຕະລາຍ]; ему́ угрожа́ла опа́сность ລາວປະສົບໄພ[ອັນຕະລາຍ]

угро́з|а, -ы *ж* 1 ການນາບຂູ່, ການຂົ່ມຂູ່; боя́ться угро́з ຢ້ານການນາບຂູ່(ຂົ່ມຂູ່); сказа́ть что́-нибудь с угро́зой ເວົ້າ[ໃນທຳນອງ]ນາບຂູ່ 2 ໄພ, ອັນຕະລາຍ; вое́нная угро́за ໄພສົງຄາມ; угро́за сме́рти ໄພເກີງຕາຍ

угрю́мо *нареч.* ເສົ້າໜອງ, ເຄັ່ງຂຶມ; угрю́мо смотре́ть на кого́-нибудь ເຫລືອບເບິ່ງເຂົາດ້ວຍແສງຕາເສົ້າໜອງ

угрю́м|ый, -ая, -ое, -ые ເສົ້າໜອ່ງ, ໜ່ວມເຫງົາ, ເຄັ່ງຂຶມ; угрю́мый взгляд ແສງຕາເສົ້າໜອງ; у него́ сего́дня угрю́мый вид ມື້ນີ້ຄົນນັ້ນໜ້າເສົ້າ(ຂຶມ, ບຶ້ງ)

уда|ва́ться, -ётся, -ю́тся *несов.*; **уда́|ться,** -стся, удаду́тся (*прош.* уда́лся, удал|а́сь, -о́сь, -и́сь) *сов.* 1 ສຳເລັດຜົນ, ໄດ້ຜົນ; о́пыт уда́лся ການທົດລອງໄດ້ຜົນ 2 *безл., кому с неопр.* ມີໂອກາດ; нам не удало́сь встре́титься ພວກເຮົາບໍ່ໄດ້ມີໂອກາດພົບກັນ

удали́ть(ся) *см.* удаля́ть(ся)

удаля́|ть, -ю, -ешь, -ют *несов.*; **удал|и́ть,** -ю́, -и́шь, -я́т *сов.* 1 *что* ທັບມ້ຽງ, ລົບລ້ຽງ; удали́ть препя́тствие ທັບມ້ຽງອຸປະສັກ; удаля́ть пя́тна с костю́ма ລຶບຮອຍດ່າງອອກຈາກຊຸດໂສ້ງເສື້ອ 2 *кого* ໄລ່ອອກ, ໃຫ້ອອກ; удали́ть всех из ко́мнаты ໃຫ້ຫມົດທຸກຄົນອອກຈາກຫ້ອງ

удаля́|ться, -юсь, -ешься, -ются *несов.*; **удал|и́ться,** -ю́сь, -и́шься, -я́тся *сов.* ຫ່າງ[ເຫີນ]; удали́ться от до́ма ຫ່າງເຫີນ(ອອກ)ຈາກເຮືອນ; по́езд ме́дленно удаля́лся от го́рода ລົດໄຟຄ່ອຍໆຫ່າງຈາກຕົວເມືອງ

уда́р, -а *м* ບາດຄ້ອນ, ການ[ໂຈມ]ຕີ; си́льный уда́р по голове́ ຕີຫົວຢ່າງແຮງ, ໂມ່ງບາດຄ້ອນໃສ່ຫົວຢ່າງແຮງ

уда́рить(ся) *см.* ударя́ть(ся)

уда́рник, -а *м* ພະນັກງານຕະລຸມບອນ; уда́рник коммунисти́ческого труда́ ພະນັກງານຕະລຸມບອນຂອງແຮງງານກອມມູນິດ

ударя́|ть, -ю, -ешь, -ют *несов.*; **уда́р|ить,** -ю, -ишь, -ят *сов.*; *кого-что чем, по чему, во что* ຕີ, ຕົບ, ຕ່ອຍ, ເຕະ; уда́рить кого́-нибудь ຕ່ອຍ(ຕົ) ເຂົາ; уда́рить ного́й в дверь ເຕະປະຕູ

ударя́|ться, -юсь, -ешься, -ются *несов.*; **уда́р|иться,** -юсь, -ишься, -ятся *сов.* ຕຳ, ພົບ; уда́риться голово́й об у́гол две́ри ຫົວຕຳຂອບປະຕູ; уда́риться коле́ном о ка́мень ຫົວເຂົ່າຕຳກ້ອນຫີນ

уда́ться *см.* удава́ться

уда́ч|а, -и *ж* ໂຊກດີ, ໂຊກລາບ; больша́я уда́ча ມີໂຊກຫລາຍ; жела́ть кому́-нибудь уда́чи ອວຍພອນໃຫ້ເຂົາມີໂຊກ

уда́чно *нареч.* ຢ່າງມີຜົນ, ສົມຫວັງ, ສົມພອນ; пое́здка прошла́ уда́чно ການເດີນທາງເທື່ອນີ້ໄດ້ຜົນຫລາຍ

уда́чн|ый, -ая, -ое, -ые; уда́ч|ен, -на, -но, -ны ໄດ້ຜົນ, ໄດ້ການ; уда́чный похо́д ການເດີນທາງຢ່າງມີຜົນດີ; уда́чный рису́нок ຮູບແຕ້ມທີ່ຫນ້າພໍໃຈ; уда́чная пое́здка ການເດີນທາງຢ່າງມີຜົນດີ; уда́чная фотогра́фия ຮູບຖ່າຍທີ່ສົມໃຈ; уда́чное нача́ло учёбы ການເລີ່ມຕົ້ນຮໍ່າຮຽນຢ່າງມີຜົນດີ

удиви́тельно *нареч.* ຜິດປົກກະຕິ; она́ была́ удиви́тельно краси́ва ນາງຜູ້ນັ້ນງາມພິລຶກ

удиви́тельн|ый, -ая, -ое, -ые; удиви́телен, удиви́тельн|а, -о, -ы ເປັນຕາງຶດງໍ້, ຫນ້າແປກປະຫລາດໃຈ, ມະຫັດສະຈັນ, ພິລຶກ; удиви́тельный челове́к ຄົນແປກປະຫລາດ; удиви́тельное здоро́вье ສຸຂະພາບອ້ອນກ້ອນສົມບູນ; нет ничего́ удиви́тельного в том, что он не сдал экза́мены ການທີ່ຄົນນັ້ນເສັງຕົກນັ້ນບໍ່ເປັນຕາງຶດງໍ້ອັດສະຈັນປະການໃດ

удиви́ть(ся) *см.* удивля́ть(ся)

удивле́ни|е, -я (*мн. нет*) *с* ຄວາມແປກປະຫລາດໃຈ, ຄວາມງຶດງໍ້; выража́ть удивле́ние ສະແດງຄວາມແປກປະຫລາດໃຈ; смотре́ть (слу́шать) с удивле́нием ຫລຽວເບິ່ງ(ຟັງ) ດ້ວຍຄວາມງຶດງໍ້ອັດສະຈັນ; приходи́ть в удивле́ние ແປກປະຫລາດໃຈ

удивля́|ть, -ю, -ешь, -ют *несов.*; **удив|и́ть,** -лю́, -и́шь, -я́т *сов.*; *кого* ເຮັດໃຫ້ງຶດງໍ້(ຕື່ນເຕັ້ນ), ເຮັດໃຫ້ງົງ (ປະຫລາດໃຈ); удиви́ть всех свои́ми зна́ниями ຄວາມຮູ້ຂອງເຂົາເຮັດໃຫ້ທຸກຄົນງຶດງໍ້(ຕື່ນເຕັ້ນ); вы удиви́ли меня́ свои́м вопро́сом ເຈົ້າຖາມແນວນີ້ເຮັດໃຫ້ຂ້ອຍງົງ(ປະຫລາດໃຈ); меня́ удивля́ет ва́ше отноше́ние ທັດສະນະຂອງເຈົ້າເຮັດໃຫ້ຂ້ອຍງົງ(ປະຫລາດໃຈ)

удивля́|ться, -юсь, -ешься, -ются *несов.*; **удив|и́ться,** -лю́сь, -и́шься, -я́тся *сов.* ງຶດງໍ້, ຕື່ນເຕັ້ນ, [ແປກ]ປະຫລາດໃຈ, ອັດສະຈັນ

ใจ; удиви́ться неожи́данной встре́че ແປກປະຫລາດໃຈທີ່ໄດ້ພົບກັນຢ່າງບໍ່ນຶກບໍ່ຝັນ

удо́бно *нареч., часто безл. в знач. сказ.* ສະດວກ[ສະບາຍ], ສະຫວາດສະເຫວີຍ; удо́бно лечь ນອນຢ່າງສະບາຍ; он удо́бно сиде́л в кре́сле ລາວນັ່ງຕັ່ງອີ້ນອນຢ່າງສະບາຍ; вам удо́бно здесь? ຢູ່ນີ້ເຈົ້າສະບາຍບໍ?

удо́бн|ый, -ая, -ое, -ые; удо́б|ен, -на, -но, -ны ສະດວກ[ສະບາຍ]; удо́бная кварти́ра ຫ້ອງຊຸດສະດວກ; удо́бная о́бувь ເກີບທີ່ໃສ່ສະບາຍ; удо́бное кре́сло ຕັ່ງອີ້ນອນທີ່ນັ່ງສະບາຍ; заня́ть удо́бное положе́ние ເຮັດທ່າສະດວກສະບາຍ

удо́бств|о, -а *с* ຄວາມສະດວກ; кварти́ра со все́ми удо́бствами ຫ້ອງຊຸດທີ່ມີຄວາມສະດວກທຸກຢ່າງ

удовлетворе́ни|е, -я (*мн. нет*) *с* 1 ການ[ຕອບ]ສະໜອງ; удовлетворе́ние материа́льных и культу́рных потре́бностей трудя́щихся ການຕອບສະໜອງຄວາມຮຽກຮ້ອງຕ້ອງການທາງດ້ານວັດຖຸແລະວັດທະນະທຳຂອງປະຊາຊົນ 2 ຄວາມເພິ່ງພໍໃຈ; испы́тывать мора́льное удовлетворе́ние ຮູ້ສຶກພໍອົກພໍໃຈທາງສິນທຳ, ຮູ້ສຶກເພິ່ງພໍໃຈ

удовлетвори́ть *см.* удовлетворя́ть

удовлетворя́|ть, -ю, -ешь, -ют *несов.*; **удовлетвор|и́ть**, -ю́, -и́шь, -я́т *сов.*; *кого-что* [ຕອບ]ສະໜອງ; ເຮັດໃຫ້...ພໍໃຈ, ເຮັດໃຫ້...ເພິ່ງພໍໃຈ(ຊື່ນຊົມ); удовлетвори́ть про́сьбу чита́теля ຕອບສະໜອງຄວາມຕ້ອງການຂອງຜູ້ອ່ານ; ваш отве́т меня́ не удовлетворя́ет ຄຳຕອບຂອງເຈົ້າບໍ່ນ້ອຍບໍ່ພໍໃຈຈັກດີ (ບໍ່ຕອບສະໜອງຂ້ອຍ)

удово́льстви|е, -я *с* ຄວາມຊື່ນຊົມຍິນດີ, ຄວາມປິຕິຍິນດີ, ຄວາມເພີດເພີນ; с удово́льствием прочита́ть кни́гу ອ່ານປຶ້ມດ້ວຍຄວາມເພີດເພີນ(ຊື່ນຊົມຍິນດີ); без удово́льствия смотре́ть фильм ເບິ່ງຮູບເງົາບໍ່ຕິດໃຈ; конце́рт доста́вил мне большо́е удово́льствие ການສະແດງເຮັດໃຫ້ຂ້ອຍຊື່ນຊົມຍິນດີຫລາຍ

удостовере́ни|е, -я *с* ບັດປະຈຳຕົວ; получи́ть (показа́ть) удостовере́ние ຮັບ(ແຈ້ງ)ບັດປະຈຳຕົວ

уезжа́|ть, -ю, -ешь, -ют *несов.*; **уе́хать**, уе́д|у, -ешь, -ут *сов.* ອອກເດີນທາງ, ຂີ່ລົດໄປ, ຈາກໄປ; уезжа́ть из до́ма ອອກຈາກເຮືອນໄປ; уе́хать на не́сколько дней в Москву́ ອອກໄປນິດສະກູ ເປັນເວລາສອງສາມມື້; он уе́хал отдыха́ть ລາວໄປພັກຜ່ອນ

уе́хать *см.* уезжа́ть

уж *см.* уже́

у́жас, -а *м* ຄວາມສະຫຍົດສະຫຍອງ, ຄວາມຫວາດສຽວ; привести́ в у́жас ເຮັດໃຫ້ຂົນຫົວລຸກຂຶ້ນ; его́ охвати́л у́жас ລາວຂົນພອງສະຫຍອງເກົ້າ, ລາວຕົກໃຈຫວາມ

ужа́сн|ый, -ая, -ое, -ые; ужа́с|ен, -на, -но, -ны 1 ຮ້າຍແຮງ, ສະຫຍົດສະຫຍອງ; ужа́сный слу́чай ເລື່ອງສະຫຍົດສະຫຍອງ; ужа́с-

ное происше́ствие ເຫດຮ້າຍ 2 ຮ້າຍແຮງ; ужа́сная пого́да ອາກາດຮ້າຍແຮງ(ຂີ້ຮ້າຍ); ужа́сное состоя́ние ອາການຮ້າຍແຮງ, ອາລົມ ຫມຸດຫມັດ

у́же *см.* у́зкий

уже́ *и* **уж** *нареч.* ແລ້ວ; он уже́ уе́хал ລາວ ອອກໄປແລ້ວ; ты уже́ взро́слый ເຈົ້າໃຫຍ່ ຂຶ້ນແລ້ວ; ему́ уже́ со́рок лет ລາວອາຍຸໄດ້ ສີ່ສິບປີແລ້ວ

у́жин, -а *м* ເຂົ້າແລງ; гото́вить у́жин ແຕ່ງ ເຂົ້າແລງ; я позвоню́ тебе́ по́сле у́жина ກິນ ເຂົ້າແລງແລ້ວ ຂ້ອຍຈະຕິສາຍຫາເຈົ້າ

у́жина|ть, -ю, -ешь, -ют *несов.*; **пообу́жина|ть,** -ю, -ешь, -ют *сов.* ກິນເຂົ້າແລງ; у́жинать в во́семь часо́в ве́чера ກິນເຂົ້າແປດໂມງແລງ

у́зел, узла́ *м* 1 ຂອດ, ເງື່ອນ; завяза́ть (развяза́ть) у́зел ມັດ(ແກ້)ຂອດ 2 ພົກ; узлы́ с вещами ພົກໃສ່ເຄື່ອງ



у́зел

у́зк|ий, -ая, -ое, -ие; у́зок, узка́, у́зко, узки́ *и* у́зки (*сравн. ст.* у́же) 1 ຄັບ, ແຄບ; у́зкий по́яс ສາຍແອວຄັບ; у́зкая дверь ປະຕູ ແຄບ; у́зкая доро́га (река́, у́лица) ທາງ(ລຳ ນ້ຳ, ຖະຫນົນ)ແຄບ 2 (*обычно кратк. ф.*) *кому* ຄັບ; пиджа́к ему́ у́зок ເສື້ອນີ້ຄັບລາວ

узна|ва́ть, -ю, -ёшь, -ю́т *несов.*; **узна́|ть,** -ю, -ешь, -ют *сов.*; *кого-что* 1 ຈື່[ຫນ້າ]; узна́ть шко́льного това́рища ຈື່ຫນ້າຮ່ວມໂຮງຮຽນ; узна́ть знако́мого по го́лосу ຈື່ສຽງຫມໍ; он не узнава́л свой ста́рый дом ລາວບໍ່ຈື່[ຈຳ]ເຮືອນ ເກົ່າຂອງຕົນ 2 *тж. о ком-чём* ໄດ້ຮູ້, ຮູ້ຈັກ; узна́ть интере́сную но́вость ໄດ້ຮູ້ຂ່າວດີ; узна́ть а́дрес магази́на ຮູ້ຈັກບ່ອນຢູ່ຂອງຮ້ານຄ້າ; со вре́менем я узна́л его́ лу́чше ເທົ່ງໄປຂ້ອຍຮູ້ ຈັກລາວດີຂຶ້ນ

узна́ть *см.* узнава́ть

уйти́ *см.* уходи́ть

ука́з, -а *м* [ລັດຖະ]ດຳລັດ; Ука́з Президиума Верхо́вного Сове́та СССР ລັດຖະດຳລັດ ຂອງຄະນະປະທານແຫ່ງສະພາໂຊວຽດສູງ ສຸດແຫ່ງ ສ.ສ.ສ.ຊ.

указа́ни|е, -я *с* ຄຳສັ່ງ, ຄຳຊີ້ນຳ; получи́ть (дава́ть) указа́ние ໄດ້ຮັບ(ອອກ)ຄຳສັ່ງ

указа́ть *см.* ука́зывать

ука́зыва|ть, -ю, -ешь, -ют *несов.*; **ука|за́ть,** -жу́, ука́ж|ешь, -ут *сов.* 1 *на кого-что* ຊີ້; указа́ть руко́й (па́льцем) на что́-нибудь ຊີ້ (ນິ້ວ)ໃສ່... 2 *кого-что* ຊີ້; ука́зывать путь (доро́гу) ຊີ້ທາງ 3 *что* ບອກ, ຈົດ; ука́зывать свою́ фами́лию, и́мя и во́зраст ບອກ(ຈົດ)ນາມ ສະກຸນ, ຊົ່ວໂມງ; указа́ть на конве́рте обра́тный а́дрес ຂຽນບ່ອນຢູ່ຂອງຜູ້ສົ່ງຢູ່ເທິງ ຫນ້າຊອງຈົດຫມາຍ

укла́дыва|ть, -ю, -ешь, -ют *несов.*; **улож|и́ть,** -у́, уло́ж|ишь, -ат *сов.* 1 *кого* ໃຫ້ນອນ; уло-

жи́ть ребёнка спать ໃຫ້ເດັກນອນ **2** *что во что* ເອົາ... ໃສ່; укла́дывать кни́ги в шкаф ເອົາປຶ້ມໃສ່ຕູ້, ມ້ຽນປຶ້ມໄວ້ໃນຕູ້; уложи́ть ве́щи в чемода́н ມ້ຽນເຄື່ອງຂອງໄວ້ໃນຫີບ

уко́л, -а *м* ການສັກຢາ; уко́л от гри́ппа ສັກຢາກັນໄຂ້ຫວັດໃຫຍ່; сде́лать больно́му два уко́ла ສັກຢາໃຫ້ຄົນເຈັບສອງເຂັມ

укра́сить *см.* украша́ть

укра́сть *см.* красть

украша́|ть, -ю, -ешь, -ют *несов.*; **укра́|сить**, -шу, -сишь, -сят *сов.*; *кого-что чем* ຕົບແຕ່ງ, ເອ້ຍ້ອງ, ປະດັບ[ປະດາ]; укра́сить дом ເອ້ເຮືອນ; украша́ть пло́щадь фла́гами ປະດັບປະດາສະຫນາມດ້ວຍຄັນທຸງ

украше́ни|е, -я *с* ເຄື່ອງເອ້, ເຄື່ອງປະດັບປະດາ; дорого́е украше́ние ເຄື່ອງເອ້ທີ່ມີຄ່າ; носи́ть украше́ния ໃສ່ເຄື່ອງເອ້; купи́ть украше́ния для ёлки ຊື້ເຄື່ອງເອ້ກົກບຸນປີໃຫມ່

укрепи́ть *см.* укрепля́ть

укрепля́|ть, -ю, -ешь, -ют *несов.*; **укреп|и́ть**, -лю́, -и́шь, -я́т *сов.* **1** *что* ເຮັດໃຫ້ຫມັ້ນ(ແຫ້ນ); укрепля́ть забо́р ແປງຮົ້ວໃຫ້ມັ້ນແຫ້ນ; укрепи́ть по́лку на стене́ ແປງຫິ້ງຢູ່ຝາໃຫ້ມັ້ນແຫ້ນ **2** *кого-что* ບັບປຸງ, ບຳລຸງ, ສົ່ງເສີມ; укрепля́ть здоро́вье ບຳລຸງສຸຂະພາບ **3** *что* ບັບປຸງ, ຮັດແຫ້ນ; укрепля́ть дру́жбу ເຮັດແຫ້ນມິດຕະພາບ

укуси́ть *см.* куса́ть

улета́|ть, -ю, -ешь, -ют *несов.*; **уле|те́ть**, -чу́, -ти́шь, -тя́т *сов.* ບິນໄປ; самолёт улете́л у́тром ເຮືອບິນອອກໄປຕອນເຊົ້າ; пти́цы улета́ют на юг ຝູງນົກບິນໄປພາກໃຕ້

улете́ть *см.* улета́ть

у́лиц|а, -ы *ж* **1** ຖະຫນົນ; широ́кая (у́зкая) у́лица ຖະຫນົນກ້ວາງ(ແຄບ); переходи́ть у́лицу ຂ້າມຖະຫນົນ; жить на у́лице Го́рького ຢູ່ຖະຫນົນກ໊ອກກີ; гуля́ть по у́лице ທ່ຽວຕາມຖະຫນົນ **2** (на у́лицу, на у́лице, с у́лицы) ຂ້າງນອກ, ທາງນອກ; вы́йти на у́лицу ອອກນອກ; прийти́ с у́лицы ມາແຕ່ຂ້າງນອກ; на у́лице бы́ло хо́лодно ຂ້າງນອກ[ອາກາດ]ຫນາວ

у́личн|ый, -ая, -ое, -ые ຖະຫນົນ, ທາງນອກ; у́личный шум ສຽງສະຫນັ່ນຈາກຖະຫນົນ; у́личное движе́ние ການສັນຈອນຕາມຖະຫນົນຫົນທາງ, ການຈໍລະຈອນ

уложи́ть *см.* укла́дывать

улучша́|ть, -ю, -ешь, -ют *несов.*; **улу́чш|ить**, -у, -ишь, -ат *сов.*; *что* ບັບປຸງ, ໃຫ້ດີກວ່າເກົ່າ, ປັບແປງ; улучша́ть ка́чество проду́кции ບັບປຸງຄຸນນະພາບຜະລິດຕະພັນໃຫ້ດີຂຶ້ນ; улу́чшить рабо́ту тра́нспорта ບັບປຸງການແລ່ນ(ເດີນ)ລົດໃຫ້ດີຂຶ້ນ

улучша́|ться, -ется, -ются *несов.*; **улу́чш|ить-ся**, -ится, -атся *сов.* ດີຂຶ້ນ, ໄຄຂຶ້ນ; пого́да улучша́ется ອາກາດດີຂຶ້ນ; настрое́ние улу́ч-

шилось ອາລົມດີຂຶ້ນ; здоро́вье улу́чшилось ສຸຂະພາບໄດ້ຂຶ້ນ

улучше́ни|е, -я *с* [ການປັບປຸງໃຫ້]ດີຂຶ້ນ; забо́титься об улучше́нии жи́зни наро́да ເອົາໃຈໃສ່ບົ່ອແປງຊີວິດການເປັນຢູ່ຂອງປະຊາຊົນ; принима́ть ме́ры по улучше́нию жили́щных усло́вий ຈັດການແກ້ໄຂບ່ອນຢູ່ທີ່ກິນ(ເຄຫະສົງເຄາະ); для улучше́ния здоро́вья ну́жно регуля́рно занима́ться физкульту́рой ຢາກໃຫ້ສຸຂະພາບດີຂຶ້ນ ຕ້ອງຫັດກາຍຍະບໍລິຫານເລື້ອຍໆ

улу́чшить(ся) *см.* улучша́ть(ся)

улыба́|ться, -юсь, -ешься, -ются *несов.*; **улыбн|у́ться,** -у́сь, -ёшься, -у́тся *сов.* ຍິ້ມ, ຍິ້ມຫົວ; ве́село улыба́ться ຍິ້ມແຍ້ມ; улыбну́ться кому́-нибудь ຍິ້ມໃສ່ເຂົາ

улы́бк|а, -и (*мн.* улы́б|ки, -ок, -кам) *ж* ຮອຍຍິ້ມ; весёлая улы́бка ການຍິ້ມແຍ້ມ; насме́шливая улы́бка ການຍິ້ມເຍາະເຍີ້ຍ; говори́ть с улы́бкой ເວົ້າຍິ້ມ

улыбну́ться *см.* улыба́ться

ум, ума́ *м* ສະຕິ, ປັນຍາ, ຫົວ; о́стрый ум ປັນຍາແຫລມຄົມ; приро́дный ум ປັນຍາທີ່ມີແຕ່ກຳເນີດ; облада́ть умо́м ມີປັນຍາ, ມີຫົວ; челове́к большо́го ума́ ຄົນທີ່ມີປັນຍາຫລາຍ

уме́л|ый, -ая, -ое, -ые ຊຳນານ, ກະຫນັດ, ສັນທັດ, ຄ່ອງແຄ້ວ; уме́лый ма́стер (рабо́чий) умéлых рук ຊ່ຽວຊານ; уме́лый ма́стер (рабо́чий) умéлых рук ຊ່ຽວຊານ

ນາຍຊ່າງ(ກຳມະກອນ)ທີ່ຊຳນິຊຳນານ; уме́лое руково́дство ການນຳພາທີ່ຫລັກແຫລມ; уме́лые де́йствия ການເຄື່ອນໄຫວຢ່າງຄ່ອງແຄ້ວ; у него́ уме́лые ру́ки ຄົນນັ້ນມີສີໄມ້ລາຍມືດີ, ລາວກະຫນັດທຸກຢ່າງ

уме́ни|е, -я (*мн. нет*) *с* ການຊ່ຽວເຮັດ, ການຮູ້ເຮັດ, ສີໄມ້ລາຍມື, ຄວາມຊຳນານ; уме́ние петь ຄວາມຊຳນານໃນການຮ້ອງເພງ; уме́ние чита́ть ຮູ້ອ່ານ, ອ່ານເປັນ; с уме́нием взя́ться за де́ло ລົງມືເຮັດວຽກຢ່າງຊຳນິຊຳນານ

уменьша́|ть, -ю, -ешь, -ют *несов.*; **уме́ньш|ить,** -у, -ишь, -ат *сов.*; *что* ເຮັດໃຫ້ນ້ອຍລົງ, ລົດ, ຫລຸດ, ຜ່ອນ; уменьша́ть (уме́ньшить) ско́рость ຫລຸດ(ຜ່ອນ)ຄວາມໄວ; уменьша́ть (уме́ньшить) давле́ние ຜ່ອນ(ຄາຍ)ຄວາມກົດດັນ; уменьша́ть (уме́ньшить) расхо́ды ຕັດ(ຜ່ອນ)ລາຍຈ່າຍ

уменьша́|ться, -ется, -ются *несов.*; **уме́ньш|иться,** -ится, -атся *сов.* ລົດລົງ, ຫລຸດລົງ, ຕ່ຳລົງ, ນ້ອຍລົງ; ско́рость уменьша́ется ຄວາມໄວຫລຸດລົງ; вес уме́ньшился ນ້ຳຫນັກຫລຸດລົງ

уменьше́ни|е, -я (*мн. нет*) *с* ການຫລຸດລົງ, ການຜ່ອນລົງ; уменьше́ние ско́рости ການຫລຸດຜ່ອນຄວາມໄວ

уме́ньшить(ся) *см.* уменьша́ть(ся)

уме́ренно *нареч.* ພໍປານກາງ, ພໍດີ

уме́ренн|ый, -ая, -ое, -ые; уме́рен, -на, -но, -ны ພໍປານກາງ, ພໍດີ; уме́ренный аппети́т ກິນພໍດີ; уме́ренная температу́ра ອຸນຫະພູມ ພໍດີ; уме́ренная пла́та ຄ່າພໍປານກາງ; уме́ренная ско́рость ຄວາມໄວປານກາງ

умере́ть *см.* умира́ть

уме́|ть, -ю, -ешь, -ют *несов., с неопр.* ຊ່າງ, ຮູ້, ເປັນ, ໄດ້; уме́ть петь (чита́ть) ຮ້ອງເພງ (ອ່ານ) ເປັນ; уме́ть рисова́ть ຊ່າງແຕ້ມ; уме́ть пла́вать ລອຍນ້ຳເປັນ

умира́|ть, -ю, -ешь, -ют *несов.*; **умере́ть,** умр|у́, -ёшь, -у́т (*прош.* у́мер, умерла́, у́мерл|о, -и) *сов.* ຕາຍ, ເກຶງແກ່ກຳ; умере́ть от ра́ны ຕາຍຍ້ອນບາດເຈັບ; умере́ть по́сле тяжёлой боле́зни ຕາຍຍ້ອນເຈັບຫນັກ; его́ оте́ц давно́ у́мер ພໍ່ຂອງລາວຕາຍດົນແລ້ວ

умножа́|ть, -ю, -ешь, -ют *несов.*; **умно́ж|ить,** -у, -ишь, -ат *сов.*; *что* ຄູນ; умно́жить два на три ເອົາສອງຄູນສາມ

умноже́ни|е, -я (*мн. нет*) *с* ການຄູນ (ເລກ); табли́ца умноже́ния ບັ້ງສູດເລກຄູນ; произво́ди́ть умноже́ние ຄູນ

умно́жить *см.* умножа́ть

у́мн|ый, -ая, -ое, -ые; умён, умн|а́, -о́ -ы́ 1 ສະຫລາດ, ເກັ່ງ, ຫລັກແຫລມ; у́мный челове́к ຄົນສະຫລາດ; у́мные глаза́ ແສງຕາຫລັກແຫລມ 2 ມີເນື້ອໃນເລິກເຊິ່ງ; у́мный докла́д ບົດລາຍງານທີ່ມີເນື້ອໃນເລິກເຊິ່ງ; у́мный сове́т ຄຳແນະນຳທີ່ເປັນຕາຟັງ; у́мная мысль ຄວາມຄິດຫລັກແຫລມ; у́мное реше́ние ຄຳຕັດສິນທີ່ສະຫລາດສະຫລຽວ

у́мственн|ый, -ая, -ое, -ые ທາງປັນຍາ, ທາງສະຫມອງ; у́мственный труд ແຮງງານທາງສະຫມອງ; у́мственные спосо́бности ຄວາມສາມາດທາງມັນສະຫມອງ

умыва́|ться, -юсь, -ешься, -ются *несов.*; **умы́ться,** умо́|юсь, -ешься, -ются *сов.* ລ້າງຫນ້າ, ສວ່າຍຫນ້າ; умыва́ться холо́дной водо́й ລ້າງຫນ້າດ້ວຍນ້ຳເຢັນ; умы́ться с мы́лом ລ້າງຫນ້າເອົາສະບູ

умы́ться *см.* умыва́ться

унести́ *см.* уноси́ть

универма́г, -а *м* ຮ້ານ [ສັບພະສິນ] ຄ້າ; де́тский универма́г ຮ້ານຄ້າຂາຍເຄື່ອງເດັກ; центра́льный универма́г ຮ້ານສັບພະສິນຄ້າກາງ; купи́ть пальто́ в универма́ге ຊື້ເສື້ອກັນຫນາວໃນຮ້ານສັບພະສິນຄ້າ

университе́т, -а *м* 1 ມະຫາວິທະຍາໄລ [ສັບພະວິຊາ]; Моско́вский госуда́рственный университе́т ມະຫາວິທະຍາໄລແຫ່ງລັດປະຈຳມົດສະກູ; поступи́ть в университе́т ເຂົ້າມະຫາວິທະຍາໄລ [ສັບພະວິຊາ]; учи́ться в университе́те ຮຽນໃນມະຫາວິທະຍາໄລ 2 ໂຮງຮຽນ; вече́рний университе́т культу́ры ໂຮງຮຽນບຳລຸງວັດທະນະທຳພາກແລງ

уничтожа́|ть, -ю, -ешь, -ют *несов.*; **уничто́ж|ить,** -у, -ишь, -ат *сов.*; *кого-что* ລົບລ້າງ,

ทำลาย, ดับสูน, ฆ่า[เพ], กำจัด; уничтожа́ть мух ปาบแมงวัน; уничто́жить эксплуата́цию ลิบล้างการกิดขี่ขูดรีด

уничтоже́ни|е, -я (*мн. нет*) *с* การลิบล้าง, การทำลาย, การดับสูน, การกำจัด

уно|си́ть, -шу́, уно́с|ишь, -ят *несов.*; **унес|ти́,** -у́, -ёшь, -у́т (*прош.* унёс, унесл|а́, -о́, -и́) *сов.*; *кого-что* เอาไป, นำไป; унести́ ла́мпу เอาตะกงไป; унести́ стол в другу́ю ко́мнату เอาโตะไปห้องอื่น

упа́д|ок, -ка (*мн. нет*) *м* การลุดโลม, การตกต่ำ; экономи́ческий упа́док เสถะกิดตกต่ำ; упа́док сил อ่อนแรง, อ่อนเพย, อ่อนใจ; хозя́йство пришло́ в упа́док บ้านแตกสะแหลกลาก, เสถะกิดตกต่ำ

упа́сть *см.* па́дать

упо́рно *нареч.* ดุหมั่น, พากพงน, แข็ง แก่น, ละหยับยั้นแข็ง; упо́рно сопротивля́ться ขุ้นข้องต้านยัน; упо́рно труди́ться ออกแรงงานย่างดุหมั่น; упо́рно добива́ться свое́й це́ли บุกหน้าบึนตีอไปสู่เป้าหมาย ของตัน

упо́рн|ый, -ая, -ое, -ые; упо́р|ен, -на, -но, -ны ดุหมั่น, พากพงน, แข็งแก่น; упо́рный челове́к คันละหยับยั้นแข็ง; упо́рный труд การออกแรงงานย่างดุหมั่น; упо́рная борьба́ การต่สู้ย่างหำละหิดอิดหิน

употреби́ть *см.* употребля́ть

употребле́ни|е, -я (*мн. нет*) *с* การใช้; употребле́ние лека́рства การใช้ยา (บ็อพะยาด)

употребля́|ть, -ю, -ешь, -ют *несов.*; **употреб|и́ть,** -лю́, -и́шь, -я́т *сов.*; *что* [หมูน]ใช้, จิมใช้; употребля́ть в пи́щу о́вощи ใช้ผัก เบ็นอาหาร, กินผัก; употреби́ть де́ньги на поку́пку велосипе́да ใช้เงินซื้อลิดกีบ

употребля́|ться, -ется, -ются *несов.* ใช้; э́та ры́ба не употребля́ется в пи́щу ปาจะบิด บีกินบ่ได้

управле́ни|е, -я *с* 1 (*мн. нет*) การคุ้ม ดอ, การบันจา, การกำกับ, การบิกดอ; управле́ние су́дном การกีห้ายเรือ; управле́ние госуда́рством การบิกดอปะเทด 2 กิม, ห้องการ, พะแนก, กอ); управле́ние желе́зной доро́ги กิมอำนวยการ ทางลิดไฟ; рабо́тать в управле́нии เฮ็ดงานยู่ในกิม

управля́|ть, -ю, -ешь, -ют *несов.*, *кем-чем* 1 บันจา, กำกับ; управля́ть ло́шадью กีบัา ทงนม้า; управля́ть маши́ной ขับลิด 2 คุ้ม ดอ, บิกดอ; управля́ть страно́й บิกดอปะเทด; управля́ть хозя́йством (заво́дом) คุ้ม ดอเสถะกิด (โรงาน)

упражне́ни|е, -я *с* การหัด, บิดเผิกหัด; упражне́ние для рук การหัดแขน; де́лать

упражне́ние (упражне́ния) [ເຝິກ] ຫັດ, ຫັດແອບ; вы́полнить упражне́ние по грамма́тике (по ру́сскому языку́) ເຮັດບົດເຝິກຫັດໄວຍາກອນ (ພາສາລັດເຊຍ)

упражня́|ться, -юсь, -ешься, -ются *несов.* ເຝິກຫັດ, ຫັດແອບ; упражня́ться в игре́ на роя́ле ແອບຫລິ້ນປີອາໂນ

упрёк, -а *м* ຄຳຕຳຫນິ [ຕິຕຽນ]; справедли́вый упрёк ຄຳຕຳຫນິຢ່າງຖືກຕ້ອງ; говори́ть с упрёком ເວົ້າຕຳຫນິ; смотре́ть с упрёком ຫລັບຕາຊັງ ◇ броса́ть (бро́сить) упрёк *кому* ກຶ້ມໂທດໃສ່, ໂຍນຄວາມຜິດໃສ່; ста́вить (поста́вить) в упрёк *кому что* ກ່າວຫາ, ຕູ່ຫາ, ຕຳຫນິ

упрека́|ть, -ю, -ешь, -ют *несов.*; **упрекн|у́ть,** -у́, -ёшь, -у́т *сов.*; *кого* ຕຳຫນິ, ກ່າວຫາ; упрека́ть кого́-нибудь в ле́ни ຕຳຫນິ [ຕິຕຽນ] ເຂົາວ່າເປັນຄົນຂີ້ຄ້ານ

